# ກະຊວງອຸດສາຫະກຳ ແລະ ການຄ້າ
# ກົມການນຳເຂົ້າ ແລະ ສົ່ງອອກ

# ການປະເມີນການຈັດຕັ້ງປະຕິບັດແຜນດຳເນີນງານ ວຽກອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ປີ 2017-2022

**ມັງກອນ 2023**

ສະໜັບສະໜູນໂດຍ:

# ບົດນຳ

ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ໄລຍະ 5 ປີ (2011-2015) ສະບັບທຳອິດ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ ຕາມດຳລັດ ເລກທີ 213/ລບ, ລົງວັນທີ 18 ກັນຍາ 2011 ຊຶ່ງໄດ້ກຳນົດຫຼາຍມາດຕະການຍຸດທະສາດ ແລະ ໜຶ່ງໃນນັ້ນແມ່ນການຈັດຕັ້ງປະຕິບັດບັນດາຂໍ້ຜູກມັດທີ່ ສປປ ລາວ ຕ້ອງໄດ້ປະຕິບັດ ເພື່ອກະກຽມເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ໂດຍສະເພາະແມ່ນການປັບປຸງຂັ້ນຕອນ ແລະ ລະບຽບການທາງດ້ານການຄ້າໃຫ້ມີຄວາມກະທັດຮັດ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍ ເພື່ອສົ່ງເສີມການແຂ່ງຂັນທາງດ້ານການຄ້າ. ຕໍ່ມາ, ໄດ້ມີແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າໄລຍະ 5 ປີ (2017-2022) ຊຶ່ງເປັນສະບັບທີສອງ ແລະ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຕາມຂໍ້ຕົກລົງເລກທີ 0051/ກຂອຄ, ລົງວັນທີ 25 ກັນຍາ 2017. ໃນນີ້, ໄດ້ກຳນົດ 7 ມາດຕະການຍຸດທະສາດ ແລະ 13 ວິທີການຈັດຕັ້ງປະຕິບັດ ຊຶ່ງມີຈຸດປະສົງເພື່ອຫຼຸດຜ່ອນເວລາໃນການນຳເຂົ້າ ແລະ ສົ່ງອອກ ໃຫ້ໄດ້ຢ່າງໜ້ອຍ 50%, ຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເອກະສານໃຫ້ໄດ້ຢ່າງໜ້ອຍ 30%.

ເລີ່ມແຕ່ປີ 2022 ເປັນຕົ້ນມາ, ສປປ ລາວ ໄດ້ພົບກັບສິ່ງທ້າທາຍໃໝ່ຫຼາຍຢ່າງ ເປັນຕົ້ນແມ່ນ ການຂາດແຄນທາງດ້ານພະລັງງານ ໂດຍສະເພາະນ້ຳມັນເຊື້ອໄຟ, ການຂາດແຄນເງິນຕາຕ່າງປະເທດ ແລະ ຄ່າເງິນກີບອ່ອນຄ່າລົງຕ່ຳທີ່ສຸດເປັນຄັ້ງປະຫວັດສາດ ຊຶ່ງສົ່ງຜົນໃຫ້ລາຄາສິນຄ້າຖີບຕົວຂຶ້ນສູງສອງເທົ່າ. ລັດຖະບານ ໄດ້ມີນະໂຍບາຍ ແລະ ມາດຕະການຕ່າງໆເພື່ອແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຊຶ່ງໜຶ່ງໃນນັ້ນແມ່ນວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາໃນການນຳເຂົ້າ-ສົ່ງອອກ ແລະ ເຄື່ອນຍ້າຍສິນຄ້າ. ຄຽງຄູ່ກັນ, ປີ 2022 ເປັນປີສຸດທ້າຍຂອງການຈັດຕັ້ງປະຕິບັດແຜນດຳເນີນງານອຳນວຍຄວາມສະດວກທາງດ້ານການຄ້າ 2017-2022, ກົມການນຳເຂົ້າ ແລະ ສົ່ງອອກ ຈຶ່ງໄດ້ສົມທົບກັບຊ່ຽວຊານພາຍໃນ ແລະ ຕ່າງປະເທດ ດຳເນີນການປະເມີນຄືນການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວ ໃນເດືອນ ກໍລະກົດ 2022 ໂດຍໄດ້ນຳໃຊ້ແບບສອບຖາມເພື່ອເກັບກຳຂໍ້ມູນ ແລະ ປຶກສາຫາລື ກັບ ຂະແໜງການທີ່ກ່ຽວຂ້ອງ. ຜົນຂອງການປະເມີນໃນຄັ້ງນີ້, ກົມນຳເຂົ້າ ແລະ ສົ່ງອອກ ໄດ້ນຳສະເໜີຜ່ານກອງປະຊຸມສຳຄັນຕ່າງໆຈຳນວນຫຼາຍຄັ້ງ ໂດຍໄດ້ຮັບຄຳເຫັນ ແລະ ຂໍ້ສະເໜີທີ່ເປັນປະໂຫຍດຈາກພາກລັດ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ຫົວໜ່ວຍທຸລະກິດ, ຊ່ຽວຊານພາຍໃນ ແລະ ຕ່າງປະເທດ. ບັນດາຄຳເຫັນດັ່ງກ່າວ ໄດ້ຖືກຊຶບຊ້ອນເຂົ້າໃນບົດລາຍງານການປະເມີນເປັນທີ່ຮຽບຮ້ອຍ ຊຶ່ງເຮັດໃຫ້ບົດລາຍງານມີເນື້ອໃນຄົບຖ້ວນ ແລະ ສົມບູນຂຶ້ນຫລາຍກວ່າເກົ່າ.

ກົມການນຳເຂົ້າ ແລະ ສົ່ງອອກ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງ ມາຍັງໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCT) ທີ່ໄດ້ສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ ໃຫ້ແກ່ການປະເມີນຄືນການຈັດຕັ້ງປະຕິບັດແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ 2017-2022 ຄັ້ງນີ້. ພ້ອມດຽວກັນ, ກໍສະແດງຄວາມຂອບໃຈ ມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມື, ເອົາໃຈໃສ່ຄົ້ນຄວ້າ, ປະສານສົມທົບເຊິ່ງກັນ ແລະ ກັນ ແລະ ປະກອບຄຳຄິດເຫັນ ຢ່າງກົງໄປກົງມາ ແລະ ສ້າງສັນ. ພວກເຮົາຫວັງວ່າບົດປະເມີນສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໄປຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານການອຳນວຍຄວາມສະດວກທາງດ້ານການຄ້າທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃນອະນາຄົດ. ຖ້າມີຂໍ້ຜິດພາດ ຫຼື ຂໍ້ບົກຜ່ອງປະການໃດ, ພວກເຮົາຍິນດີຮັບເອົາຄຳຕຳໜິຕິຊົມ ໄປປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ ໃນການປະເມີນຄັ້ງຕໍ່ໄປ.

ຫົວໜ້າກົມ

ປ. ມະນີວອນ ວົງໄຊ

# ບົດສະຫຼຸບຫຍໍ້

ບົດລາຍງານສະບັບນີ້ ແມ່ນເພື່ອປະເມີນຜົນສຳເລັດ ແລະ ຜົນກະທົບຂອງການຈັດຕັ້ງປະຕິບັດແຜນດຳເນີນງານ ວຽກອຳນວຍຄວາມສະດວກທາງດ້ານການຄ້າ (Trade Facilitation Road Map: TFRM) ຂອງ ສປປ ລາວ ປີ 2017-2022. ແຜນດຳເນີນງານ TFRM ໄດ້ຖືກຮັບຮອງໃນເດືອນ ກັນຍາ 2017 ແລະ ມີວິໄສທັດ ເພື່ອປັບປຸງ ຂັ້ນຕອນການກວດປ່ອຍສິນຄ້າໃຫ້ມີຄວາມກະທັດຮັດ ເພື່ອເພີ່ມທະວີການໃຫ້ບໍລິການທາງດ້ານການຄ້າ ແນໃສ່ ປັບປຸງຄວາມສາມາດໃນການແຂ່ງຂັນທາງການຄ້າຂອງປະເທດ ໂດຍການຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ທີ່ເກີດ ຂຶ້ນໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ. ການປັບປຸງດັ່ງກ່າວ ຈະບັນລຸໄດ້ໂດຍຜ່ານການຈັດຕັ້ງປະຕິບັດບັນດາ ວຽກງານທີ່ກຳນົດໄວ້ໃນ 7 ເສົາຄ້ຳຍຸດທະສາດຂອງແຜນດຳເນີນງານ ຊຶ່ງປະກອບມີ ໂຄງສ້າງທາງດ້ານສະຖາບັນ, ການປັບປຸງການບໍລິຫານຈັດການຢູ່ຂັ້ນແຂວງ, ການປະສານສົມທົບກັບພາກທຸລະກິດ, ການລຶບລ້າງມາດຕະການ ທາງດ້ານການຄ້າທີ່ບໍ່ແມ່ນພາສີ (Non-Tariff Measures: NTMs), ບັນດາມາດຕະການບູລິມະສິດ, ການເຊື່ອມ ໂຍງກັບພາກພື້ນ ແລະ ການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ຂອງສັນຍາ ວ່າດ້ວຍການອຳນວຍຄວາມສະດວກທາງດ້ານ ການຄ້າໃນຂອບອົງການການຄ້າໂລກ (WTO-TFA).

ເພື່ອວັດແທກໝາກຜົນການຈັດຕັ້ງປະຕິບັດ, ແຜນດຳເນີນງານ ໄດ້ກຳນົດເປົ້າໝາຍສຳຄັນ ເຊັ່ນ: ການຫຼຸດຜ່ອນເວລາ ໃນການນຳເຂົ້າ ແລະ ສົ່ງອອກ ໃຫ້ໄດ້ 50% ແລະ ຄ່າໃຊ້ຈ່າຍທາງດ້ານທຸລະກຳ ໃຫ້ໄດ້ 30% ໃນປີ 2022. ເພື່ອ ປັບປຸງຕົວຊີ້ວັດທີ່ສຳຄັນເຫຼົ່ານີ້, ຈະຕ້ອງໄດ້ປັບປຸງຕົວຊີ້ວັດການຄ້າຂ້າມແດນຂອງ ສປປ ລາວ ທີ່ຢູ່ໃນອັນດັບຕ່ຳ ຕາມບົດສຶກສາຄວາມສະດວກໃນການດຳເນີນທຸລະກິດຂອງທະນາຄານໂລກ ທີ່ເຜີຍແຜ່ໃນແຕ່ລະປີ ຊຶ່ງເປັນທີ່ ຍອມຮັບຢ່າງກວ້າງຂວາງວ່າເປັນດັດສະນີໂລກ ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າໃນເວລານັ້ນ. ໃນປີ 2017, ສປປ ລາວ ໄດ້ຖືກຈັດຢູ່ອັນດັບທີ 124 ສຳລັບຕົວຊີ້ວັດການຄ້າຂ້າມແດນ ແລະ ໃນແຜນດຳເນີນງານ ໄດ້ກຳນົດເປົ້າໝາຍທີ່ທ້າທາຍ ເພື່ອຍົກອັນດັບຂຶ້ນໃຫ້ເຫຼືອພຽງ 2 ຕົວເລກ ຄື: ອັນດັບທີ 99 ຫຼື ດີກວ່າ.

ໂດຍລວມແລ້ວ, ສປປ ລາວ ມີຄວາມຄືບໜ້າທີ່ດີສົມຄວນໃນການຈັດຕັ້ງປະຕິບັດແຜນດຳເນີນງານ ຊຶ່ງຈະສາມາດ ປະຕິບັດໄດ້ດີກວ່ານີ້, ແຕ່ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ຫຼາຍວຽກງານໄດ້ຢຸດສະງັກເປັນ ເວລາຫຼາຍກວ່າສອງປີ. ໂດຍສະເພາະໄດ້ສົ່ງຜົນກະທົບຕໍ່ຂະແໜງການທີ່ຕ້ອງການການຊ່ວຍເຫຼືອທາງດ້ານວິຊາການ ເນື່ອງຈາກຊ່ຽວຊານສາກົນ ບໍ່ສາມາດເດີນທາງມາ ສປປ ລາວ ໄດ້ ຍ້ອນຂໍ້ຈຳກັດທາງດ້ານວີຊາ ແລະ ການເດີນທາງ. ກອງປະຊຸມສຳມະນາສ້າງຂີດຄວາມສາມາດ ແລະ ກອງປະຊຸມປຶກສາຫາລື ບໍ່ສາມາດຈັດຂຶ້ນໄດ້ແບບເຊິ່ງໜ້າ ເນື່ອງ ຈາກຂໍ້ຈຳກັດທາງດ້ານການເດີນທາງ. ສະນັ້ນ, ໂດຍລວມແລ້ວ ແຜນດຳເນີນງານມີເວລາໃນການຈັດຕັ້ງປະຕິບັດ ແບບເຕັມກຳລັງ ໜ້ອຍກວ່າສາມປີ.

ເຖິງວ່າຈະມີຂໍ້ຈຳກັດເຫຼົ່ານີ້, ແຜນດຳເນີນງານ ໄດ້ປະສົບຜົນສຳເລັດໃນດ້ານການສ້າງຕັ້ງໂຄງສ້າງທາງດ້ານສະຖາບັນ ທີ່ເຂັ້ມແຂງ ໃນການຊີ້ນຳ ແລະ ຕິດຕາມ ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ທັງໃນຂັ້ນສູນກາງ ແລະ ຂັ້ນແຂວງ. ໂຄງສ້າງຢູ່ໃນຂັ້ນສູນກາງ ແມ່ນຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກຂັ້ນສູນກາງ (NTFC) ໂດຍແມ່ນທ່ານ ຮອງນາຍົກລັດຖະມົນຕີ ເປັນຜູ້ຊີ້ນຳ ຊຶ່ງມີປະສິດທິພາບຢ່າງຍິ່ງໃນການຂັບເຄື່ອນວຽກ ງານການອຳນວຍຄວາມສະດວກທາງດ້ານການຄ້າ. ການສ້າງຄວາມເຂັ້ມແຂງໃນການບໍລິຫານຈັດການຢູ່ຂັ້ນແຂວງ ແມ່ນເສົາຄ້ຳອີກອັນໜຶ່ງທີ່ປະສົບຄວາມສຳເລັດເຊັ່ນດຽວກັນ ໂດຍການສ້າງຄະນະກຳມະການອຳນວຍຄວາມສະ ດວກທາງດ້ານການຄ້າ ຂັ້ນແຂວງ (PTFC) ຢູ່ແຕ່ລະແຂວງ ພາຍໃຕ້ການຊີ້ນຳຂອງທ່ານ ຮອງເຈົ້າແຂວງ, ຮອງ ເຈົ້າຄອງນະຄອນຫຼວງວຽງຈັນ.

ເສົາຄໍ້າການປະສານສົມທົບກັບພາກທຸລະກິດ ສ່ວນໃຫຍ່ແມ່ນຈັດຕັ້ງປະຕິບັດໂດຍກົມການນໍາເຂົ້າ ແລະ ສົ່ງອອກ ຊຶ່ງໃຫ້ພາກທຸລະກິດມີສ່ວນຮ່ວມໃນກອງປະຊຸມຕ່າງໆ ຢ່າງສະໝໍ່າສະເໝີ. ເຖິງຢ່າງໃດກໍ່ຕາມ, ບໍ່ມີກົມໃດ ນໍາເອົາຂໍ້ຄິດລິເລີ່ມດັ່ງກ່າວ ໃນການມີສ່ວນຮ່ວມກັບພາກທຸລະກິດ. ກົມທີ່ກ່ຽວຂ້ອງ ບໍ່ທັນສ້າງຕັ້ງຄະນະກໍາມະການປຶກສາຫາລືເພື່ອເປັນກົນໄກປະສານງານທາງດ້ານສະຖາບັນ ສໍາລັບການປຶກສາຫາລືກັບພາກທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນແຜນດໍາເນີນງານ. ເຖິງຢ່າງໃດກໍ່ຕາມ, ກົມການນໍາເຂົ້າ ແລະ ສົ່ງອອກ/ກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ໄດ້ຮັບປະກັນຕາມແຜນດໍາເນີນງານວ່າ: ພາກທຸລະກິດ ຈະຖືກນໍາໃຊ້ສໍາລັບການກວດສອບປະສິດທິພາບ ແລະ ຜົນປະໂຫຍດ ຂອງບັນດາມາດຕະການທີ່ກໍານົດໃນແຜນດໍາເນີນງານ, ຊຶ່ງໃນປີ 2021 ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ສໍາເລັດການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ຕໍ່ກັບການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການອໍານວຍຄວາມສະດວກທາງດ້ານການຄ້າ.

ການລຶບລ້າງມາດຕະການ NTMs ທີ່ບໍ່ມີເຫດຜົນພຽງພໍ, ເປັນເສົາຄໍ້າທີ່ສໍາຄັນຂອງແຜນດໍາເນີນງານ ບໍ່ສາມາດບັນລຸຕາມເປົ້າໝາຍທີ່ກໍານົດໄວ້. ແຜນດໍາເນີນງານ ໄດ້ກໍານົດຈຸດປະສົງໃນການທົບທວນມາດຕະການ NTMs ໃຫ້ໄດ້ທັງໝົດໃນປີ 2022 ແລະ ປະຕິບັດຕາມຂໍ້ສະເໜີແນະຕ່າງໆ. ເຖິງຢ່າງໃດກໍ່ຕາມ, ມີພຽງ 25% ຂອງມາດຕະການ NTMs ໄດ້ຮັບການທົບທວນຄືນ ແລະ ຄໍາແນະນໍາຕ່າງໆ ຍັງບໍ່ທັນໄດ້ຮັບການເອົາໃຈໃສ່ເປັນສ່ວນໃຫຍ່, ຍົກເວັ້ນກະຊວງອຸດສາຫະກໍາ ແລະ ການຄ້າ ຊຶ່ງໄດ້ນໍາໃຊ້ມາດຕະການພິເສດຕ່າງໆ. ຕົວຢ່າງ: ໄດ້ລຶບລ້າງໃບອະນຸຍາດນໍາເຂົ້າທີ່ສໍາຄັນ ປະເພດ ຊີມັງ, ເຫຼັກ, ຊິ້ນສ່ວນຍານພາຫະນະ ແລະ ລົດໄຖນາ, ແລະ ນໍາໃຊ້ຂັ້ນຕອນການອອກອະນຸຍາດແບບເອເລັກໂຕຼນິກ ສໍາລັບການນໍາເຂົ້າຍານພາຫະນະ, ນໍ້າມັນເຊື້ອໄຟ ແລະ ອາຍແກັສ ໂດຍຜ່ານລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດ (LNSW). ກະຊວງອຸດສາຫະກໍາ ແລະ ການຄ້າ ຍັງຂະຫຍາຍການນໍາໃຊ້ລະບົບຍື່ນ ແລະ ພິຈາລະນາໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທາງເອເລັກໂຕຼນິກ (e-CO) ໃຫ້ບັນດາແຂວງ. ສ່ວນກົມອື່ນໆ ໄດ້ປ່ຽນແປງພຽງແຕ່ຂັ້ນຕອນ ແລະ ບໍ່ນໍາເອົາຂໍ້ແນະນໍາຕ່າງໆ ເພື່ອລຶບລ້າງໃບອະນຸຍາດ/ໃບຢັ້ງຢືນ. ພວກເຂົາ ມີຄວາມຊັກຊ້າໃນການປະຕິບັດຕາມຂໍ້ສະເໜີແນະ ກ່ຽວກັບການລຶບລ້າງສິ່ງກີດຂວາງຕ່າງໆໃນການອອກອະນຸຍາດ ແລະ ຢັ້ງຢືນ ຕາມບົດສຶກສາເວລາກວດປ່ອຍສິນຄ້າ (TRS) ປີ 2020.

ເສົາຄໍ້າຍຸດທະສາດຂອງບັນດາມາດຕະການບູລິມະສິດ ຊຶ່ງລວມມີຂໍ້ຄິດລິເລີ່ມແບບປະສົມປະສານຈໍານວນໜຶ່ງ ທີ່ຖືກລະບຸສໍາລັບການປະຕິບັດໃນໄລຍະກາງ ໄດ້ຮັບໝາກຜົນທີ່ຫຼາກຫຼາຍ. ໃນນີ້, ການຢຸດຕິການກວດກາຕາມເສັ້ນທາງ ແມ່ນມີຜົນສໍາເລັດພໍສົມຄວນ ໂດຍການປະຕິບັດຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 12/ນຍ. ການເຜີຍແຜ່ຂັ້ນຕອນທີ່ຕິດພັນກັບການຄ້າ ກໍມີຜົນສໍາເລັດ ໂດຍການນໍາໃຊ້ເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ (LTP). ແຕ່ມາດຕະການຕ່າງໆ ເຊັ່ນ: ການພັດທະນາມາດຕະຖານການບໍລິການ (ມີພຽງກົມການນໍາເຂົ້າ ແລະ ສົ່ງອອກ ທີ່ໄດ້ສໍາເລັດ), ການລວມເອົາບັນດາຜູ້ສົ່ງອອກເຂົ້າໃນແຜນງານຜູ້ປະກອບການເອອີໂອ (AEO), ການຂະຫຍາຍເວລາເຮັດວຽກ ຢູ່ດ່ານ ແລະ ການລວມສູນການຊໍາລະເງິນ ຍັງບໍ່ທັນມີຄວາມຄືບໜ້າຫຼາຍ ເທົ່າທີ່ຄວນ. ພ້ອມດຽວກັນ, ຂໍ້ຄິດລິເລີ່ມທີ່ສໍາຄັນ ຄື: ການຂະຫຍາຍການນໍາໃຊ້ລະບົບ LNSW ຫາ ທຸກຂະແໜງການອອກອະນຸຍາດ ກໍ່ຍັງຕໍ່າກວ່າເປົ້າໝາຍທີ່ກໍານົດໄວ້ ຫຼາຍສົມຄວນ.

ໃນທາງກົງກັນຂ້າມ, ລະບົບແຈ້ງພາສີປະຕູດຽວອາຊຽນ (ASW) ສໍາລັບການແລກປ່ຽນຂໍ້ມູນໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບເອເລັກໂຕຼນິກຟອມ D ໃນຂອບສັນຍາ ວ່າດ້ວຍການຄ້າດ້ານສິນຄ້າ (ATIGA) ກັບ ປະເທດສະມາຊິກອື່ນໆ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2019 ຕາມກໍານົດເວລາ. ເຖິງຢ່າງໃດກໍ່ຕາມ, ການແລກປ່ຽນຂໍ້ມູນໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຟອມ D ດັ່ງກ່າວ ຍັງມີຄວາມລ່າຊ້າ ຊຶ່ງຄາດວ່າຈະສໍາເລັດໃນໄວໆນີ້. ເມື່ອສົມທຽບກັບວຽກງານອື່ນໆ ທີ່ກໍານົດໃນເສົາຄໍ້າການຮ່ວມມືການຄ້າຂ້າມແດນ ແມ່ນລິເລີ່ມຊ້າດ້ວຍເຫດຜົນຫຼາຍປະການ. ຕົວຢ່າງ: ການຂະຫຍາຍການກວດກາຈຸດດຽວ ທີ່ໄດ້ປະຕິບັດຢູ່ດ່ານສາກົນແດນສະຫວັນ-ລາວບາວ ນັບແຕ່ປີ 2015 ຊຶ່ງບໍ່ສາມາດສໍາເລັດ ຢູ່ດ່ານລາວ-ໄທ ຂົວມິດຕະພາບ 2-ມຸກດາຫານ ເນື່ອງຈາກຂໍ້ຈໍາກັດດ້ານນິຕິກໍາຂອງຝ່າຍພາສີ

ໄທ. ໂດຍລວມແລ້ວ, ໄດ້ມີຄວາມພະຍາຍາມພຽງເລັກນ້ອຍ ເພື່ອເຊື່ອມໂຍງບັນດາວຽກງານທີ່ນອນໃນແຜນດຳເນີນງານ ກັບ ແຜນວຽກຕ່າງໆຂອງອາຊຽນ, ການຮ່ວມມືໃນອານຸພາກລຸ່ມແມ່ນ້ຳຂອງ (GMS) ຫຼື ຂໍ້ຄິດລິເລີ່ມອື່ນໆ ໃນຂອບພາກພື້ນ, ຫຼາຍຝ່າຍ ແລະ ສອງຝ່າຍ.

ເຖິງຢ່າງໃດກໍ່ຕາມ, ເສົາຄ້ຳຍຸດທະສາດທີ່ສຳຄັນທີ່ສຸດຂອງແຜນດຳເນີນງານ ເຊັ່ນ: ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ຊຶ່ງໄດ້ເຫັນຄວາມຄືບໜ້າໃນການຊຸກຍູ້ການລິເລີ່ມການຈັດຕັ້ງປະຕິບັດທຸກມາດຕະການທີ່ນອນໃນສັນຍາ WTO-TFA, ສິ່ງຜົນໃຫ້ 30% ຂອງມາດຕະການທັງໝົດ ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ, 17% ສາມາດຈັດຕັ້ງປະຕິບັດໄດ້ສ່ວນໃຫຍ່ (ຢ່າງໜ້ອຍຈຳນວນ 2/3 ຂອງມາດຕະການທີ່ນອນໃນສັນຍາ WTO-TFA ໄດ້ຮັບການຈັດຕັ້ງປະຕິບັດ), ແລະ 53% ສາມາດປະຕິບັດໄດ້ສ່ວນໃດສ່ວນໜຶ່ງ (ໜ້ອຍກວ່າ 2/3 ໄດ້ຮັບການຈັດຕັ້ງປະຕິບັດ). ມີມາດຕະການຈຳນວນໜຶ່ງ ທີ່ໃກ້ຄຽງຈະສຳເລັດ ແລະ ຈະສຳເລັດໃນໄວໆນີ້. ມາດຕະການເຫຼົ່ານີ້ ມີສິ່ງທ້າທາຍຫຼາຍຢ່າງ ຊຶ່ງໄດ້ກຳນົດເປັນເປົ້າໝາຍສະເພາະ ພາຍໃຕ້ໂຄງການ LCT.

ມີຜົນສຳເລັດທີ່ໜ້າປະທັບໃຈ ເທົ່າທີ່ກ່ຽວຂ້ອງກັບເປົ້າໝາຍ ແລະ ໝາກຜົນ ຂອງແຜນດຳເນີນງານ. ອີງຕາມບົດລາຍງານຄວາມສະດວກໃນການດຳເນີນທຸລະກິດຂອງທະນາຄານໂລກ (EDB), ສປປ ລາວ ສຳເລັດການຫຼຸດຜ່ອນເວລາທີ່ໃຊ້ທັງໃນການນຳເຂົ້າ ແລະ ສົ່ງອອກ ປະມານ 72% ຊຶ່ງເຮັດໃຫ້ອັນດັບຕົວຊີ້ວັດການຄ້າຂ້າມແດນ ຫຍັບຂຶ້ນມາຢູ່ອັນດັບທີ 78 ຂອງໂລກໃນປີ 2019. ຊຶ່ງເປັນອັນດັບທີ່ສູງກວ່າ ສສ ຫວຽດນາມ (ອັນດັບ 100), ກຳປູເຈຍ (ອັນດັບ 115) ແລະ ອິນໂດເນເຊຍ (ອັນດັບ 116) ແລະ ໃກ້ຄຽງກັບ ສປ ຈີນ (ອັນດັບ 65) ແລະ ໄທ (ອັນດັບ 59). ບົດລາຍງານ EDB ໄດ້ຖືກຢຸດຕິໃນປີ 2020. ໃນຂະນະທີ່ບໍ່ມີຂໍ້ມູນຂອງ EDB ພາຍຫຼັງປີ 2019 ເນື່ອງຈາກໄດ້ຢຸດຕິ, ຫຼັງຈາກນັ້ນ ການຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້າຢູ່ດ່ານ ແມ່ນໄດ້ຮັບການສະໜັບສະໜູນ ໂດຍຂໍ້ມູນຂອງການສຶກສາເວລາໃນການກວດປ່ອຍສິນຄ້າ (Time Release Study: TRS) ຢູ່ ສປປ ລາວ ໃນປີ 2017 ແລະ 2020.

ການຈັດຕັ້ງປະຕິບັດແຜນດຳເນີນງານ ສາມາດຖອດຖອນບາງບົດຮຽນສຳຄັນ ຊຶ່ງໄດ້ສະແດງໃຫ້ເຫັນຄວາມສຳຄັນຂອງການມີຜູ້ນຳທາງດ້ານການເມືອງ ເປັນຜູ້ຊີ້ນຳຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ. ບົດຮຽນທີ່ສຳຄັນອີກອັນໜຶ່ງ ແມ່ນປະສິດທິພາບຂອງໂຄງການສະໜັບສະໜູນຂອງທະນາຄານໂລກ ໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA. ເຖິງຢ່າງໃດກໍ່ຕາມ, ຍັງໄດ້ເນັ້ນໜັກເຖິງຄວາມຈຳເປັນທີ່ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຕ້ອງມີບຸກຄະລາກອນທີ່ພຽງພໍ ແລະ ກົນໄກຕິດຕາມທີ່ເຂັ້ມແຂງ ເພື່ອຕິດຕາມການຈັດຕັ້ງປະຕິບັດຂອງບັນດາກົມ ແລະ ວຽກງານຕ່າງໆ.

ອີງຕາມບົດຮຽນທີ່ຖອດຖອນໄດ້ເຫຼົ່ານີ້, ບົດລາຍງານສະບັບນີ້ ໄດ້ມີຂໍ້ສະເໜີແນະໃນການສ້າງຄວາມເຂັ້ມແຂງໃຫ້ແກ່ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບການຕິດຕາມແຜນຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງມີປະສິດທິພາບ. ຄຳແນະນຳນີ້ ມີຄວາມສຳຄັນຫຼາຍຂຶ້ນໃນປະຈຸບັນເນື່ອງຈາກມີການຕົກລົງຂອງລັດຖະບານເພື່ອໂຮມຄະນະກຳມະການຂົນສົ່ງແຫ່ງຊາດ ເຂົ້າກັບຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຊຶ່ງຈະເຮັດໃຫ້ໜ້າວຽກຂອງກອງເລຂາ ເພີ່ມຂຶ້ນຢ່າງຫຼວງຫຼາຍ. ຂໍ້ສະເໜີແນະທີ່ສຳຄັນອີກອັນໜຶ່ງ ແມ່ນການເອົາໃຈໃສ່ປະສານສົມທົບກັບພາກທຸລະກິດໃຫ້ຫຼາຍຂຶ້ນ ຊຶ່ງເປັນສິ່ງສຳຄັນເພື່ອປະສິດທິພາບໃນການປະຕິຮູບການອຳນວຍຄວາມສະດວກທາງດ້ານການຄ້າ. ທ້າຍສຸດ, ບັນດາມາດຕະການທີ່ມີຄວາມສຳຄັນ ເຊັ່ນ: ການປະຕິບັດມາດຕະການ NTMs ຫຼື ການຂະຫຍາຍການນຳໃຊ້ລະບົບ LNSW ຕ້ອງໄດ້ຮັບການຕິດຕາມຢ່າງໃກ້ຊິດໂດຍຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຜົນສຳເລັດ. ຈາກຜົນກະທົບທີ່ສຳເລັດຂອງການລິເລີ່ມຕ່າງໆ ທີ່ດຳເນີນການພາຍໃຕ້ແຜນດຳເນີນງານ, ປະສົບການ ແລະ ບົດຮຽນຕ່າງໆອາດຖືກນຳໃຊ້ສຳລັບແຜນຍຸດທະສາດຕໍ່ໄປ ເພື່ອໝາກຜົນທີ່ດີຂຶ້ນກວ່າເກົ່າ.

# ສາລະບັນ


ບົດນຳ ..................................................................................... i
ບົດສະຫຼຸບຫຍໍ້ ..................................................................................... ii
ອະທິບາຍຄຳສັບຫຍໍ້ ..................................................................................... vi
1. ສະພາບລວມ ..................................................................................... 1
2. ການທົບທວນຄືນປະຕິບັດງານ ແລະ ຜົນສຳເລັດ..................................................... 2
**2.1 ການພັດທະນາກົນໄກທາງດ້ານສະຖາບັນ ເພື່ອການປະສານງານຢ່າງມີປະສິດທິພາບ**.................................. 3
**2.2 ການສ້າງຄວາມເຂັ້ມແຂງໂຄງສ້າງການບໍລິຫານ ໃນລະດັບແຂວງ** .............................................. 7
**2.3 ມາດຕະການບູລິມະສິດ ເພື່ອປັບປຸງມາດຕະຖານການບໍລິການ, ການຫ້າມຈຸດກວດກາຕາມເສັ້ນທາງ ແລະ ອື່ນໆ**................................................................................. 9
**2.4 ການລຶບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ບໍ່ມີເຫດຜົນພຽງພໍ**...................... 14
**2.5 ການຮ່ວມມືການຂ້າມແດນ ແລະ ການເຊື່ອມໂຍງພາກພື້ນ** ............................................. 18
**2.6 ການປະສານສົມທົບກັບພາກທຸລະກິດ** ..................................................................... 21
**2.7 ການຈັດຕັ້ງປະຕິບັດມາດຕະການທີ່ມອບໃນສັນຍາ WTO-TFA ຢ່າງເຕັມສ່ວນ ຢ່າງໄວວາ ແລະ ຕາມເວລາທີ່ກຳນົດ**.......................................................................................... 23
3. ຜົນກະທົບ ແລະ ຜົນໄດ້ຮັບ.......................................................................... 50
4. ສະຫຼຸບ ແລະ ບົດຮຽນທີ່ຖອດຖອນໄດ້....................................................................... 54
5. ຂໍ້ສະເໜີແນະ ແລະ ແຜນໃນຕໍ່ໜ້າ ..................................................................... 59
ເອກະສານຊ້ອນທ້າຍ ..................................................................................... 66
1. ອົງປະກອບຂອງຄະນະກຳມະການ NTFC................................................................ 66
2. ລາຍລະອຽດຂອງບົດສະເໜີໂຄງການ CF ທີ່ໄດ້ຮັບອະນຸມັດໂດຍການສະໜັບສະໜູນຂອງໂຄງການ LCT..66
3. ສ່ວນສຳຄັນຂອງຂໍ້ຄິດລິເລີ່ມຂອງມາດຕະການ NTMs.................................................... 67

# ອະທິບາຍຄຳສັບຫຍໍ້

| | |
|---|---|
| ACTS | ແຜນງານຜ່ານແດນພາສີອາຊຽນ |
| ATIGA | ສັນຍາ ວ່າດ້ວຍການຄ້າດ້ານສິນຄ້າອາຊຽນ |
| AEO | ຜູ້ປະກອບການມາດຕະຖານເອອີໂອ |
| ASEAN | ປະຊາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ |
| ASYCUDA | ລະບົບແຈ້ງພາສີແບບອັດຕະໂນມັດ |
| DAP | ແຜນປະຕິບັດງານຂອງຂະແໜງການ |
| DDT | ກົມເຕັກໂນໂລຊີດິຈິຕອນ |
| DIMEX | ກົມການນຳເຂົ້າ ແລະ ສົ່ງອອກ |
| DMM | ກົມຄຸ້ມຄອງບໍ່ແຮ່ |
| DOA | ກົມປູກຝັງ |
| DOLF | ກົມລ້ຽງສັດ ແລະ ການປະມົງ |
| DOT | ກົມຂົນສົ່ງ |
| DOSM | ກົມມາດຕະຖານ ແລະ ວັດແທກ |
| EDB | ບົດສຶກສາຄວາມງ່າຍດາຍໃນການດຳເນີນທຸລະກິດ |
| FDD | ກົມອາຫານ ແລະ ຢາ |
| IRMF | ແຜນງານການບໍລິຫານຄວາມສ່ຽງແບບເຊື່ອມໂຍງ |
| JICA | ອົງການຮ່ວມມືສາກົນຍີ່ປຸ່ນ |
| LCD | ກົມພາສີ |
| LCTP | ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ |
| LNCCI | ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ |
| LNSW | ລະບົບແຈ້ງພາສີປະຕູດຽວແຫ່ງຊາດ |
| LTP | ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ |
| MOU | ບົດບັນທຶກຄວາມເຂົ້າໃຈ |
| NEDA | ອົງການພັດທະນາເສດຖະກິດຂອງປະເທດເພື່ອນບ້ານຂອງປະເທດໄທ |
| NTBs | ສິ່ງກີດຂວາງທາງດ້ານການຄ້າທີ່ບໍ່ແມ່ນພາສີ |
| NTCS | ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ |
| NTFC | ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ |
| NTTFC | ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ |
| NTM | ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ |
| OGA | ຂະແໜງການລັດອື່ນ (ທີ່ບໍ່ແມ່ນຂະແໜງພາສີ) |
| PTFC | ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ |
| RIA | ການປະເມີນຜົນກະທົບທາງດ້ານລະບຽບການ |
| RKC | ສັນຍາກຽວໂຕຂອງອົງການພາສີໂລກ ສະບັບປັບປຸງ ວ່າດ້ວຍການປັບປຸງຂັ້ນຕອນທາງພາສີ |
| SAFE | ແຜນງານຄວາມປອດໄພຂອງມາດຕະຖານເພື່ອຮັບປະກັນ ແລະ ອຳນວຍຄວາມສະດວກທາງດ້ານການຄ້າໂລກ |
| SOP | ຂັ້ນຕອນການດຳເນີນງານທີ່ເປັນມາດຕະຖານ |
| SPS | ມາດຕະຖານສຸຂານາໄມ ແລະ ສຸຂານາໄມພືດ |

| | |
|---|---|
| TAB | ຕົວຊີ້ວັດການຄ້າຂ້າມແດນ ຂອງບົດສຶກສາຄວາມງ່າຍດາຍໃນການດຳເນີນທຸລະກິດ |
| TBT | ສິ່ງກີດຂວາງທາງດ້ານການຄ້າທາງດ້ານເຕັກນິກ |
| TFA | ສັນຍາ ວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ |
| TFRM | ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ 2017-2022 |
| TFS | ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ |
| TIU | ໜ່ວຍງານຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ |
| UNESCAP | ຄະນະກຳມະການເພື່ອພັດທະນາເສດຖະກິດ ແລະ ສັງຄົມ ຂອງອາຊີ ແລະ ປາຊີຟິກ ຂອງອົງການສະຫະປະຊາຊາດ |
| WB | ທະນາຄານໂລກ |
| WCO | ອົງການພາສີໂລກ |
| WHO | ອົງການອານາໄມໂລກ |
| WOAH | ອົງການສຸຂະພາບສັດໂລກ |
| WTO | ອົງການການຄ້າໂລກ |

# 1. ສະພາບລວມ

ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ (TFRM) ໄດ້ຖືກພັດທະນາໃນປີ 2017 ຫຼັງຈາກການທົບທວນແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015. ການສົ່ງອອກຂອງ ສປປ ລາວ ມີການຂະຫຍາຍຕົວຢ່າງສະໝ່ຳສະເໝີໃນຫຼາຍປີຜ່ານມາ ຊຶ່ງເປັນອັດຕາການຂະຫຍາຍຕົວທີ່ສູງ, ແລະ ເພື່ອຮັບປະກັນວ່າ ມີຄວາມເປັນພະຍາຍາມເປັນພິເສດໃນການປັບປຸງຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າຂອງປະເທດ ພາຍໃຕ້ຍຸດທະສາດອັນໃໝ່. ສະນັ້ນ, ແຜນດຳເນີນງານ ຈຶ່ງໄດ້ແກ້ໄຂຂໍ້ບົກຜ່ອງຂອງຍຸດທະສາດກ່ອນໜ້ານີ້ ແລະ ໄດ້ນຳສະເໜີມາດຕະການຕ່າງໆທີ່ຫຼາກຫຼາຍ ເພື່ອປັບປຸງຂະບວນການດ້ານລະບຽບການຂອງການຄ້າຂ້າມແດນທີ່ມີຄວາມຊັບຊ້ອນ. ພ້ອມດຽວກັນ, ຍັງລວມເອົາການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ ຊຶ່ງໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍທາງດ້ານການຄ້າ ໃນປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ ຢ່າງຫຼວງຫຼາຍ.

ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ (2017-2022) ໄດ້ຖືກປະເມີນໃນຮູບແບບສັງລວມຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາວຽກງານທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານ ແລະ ຜົນກະທົບຂອງບັນດາວຽກງານດັ່ງກ່າວ ທີ່ສະທ້ອນໃຫ້ເຫັນໃນຮູບແບບຂອງຜົນໄດ້ຮັບ ເຊັ່ນ: ການຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ໃນການກວດປ່ອຍຢູ່ຊາຍແດນ ແລະ ການປະຕິບັດດ້ານເອກະສານ ສຳລັບການນຳເຂົ້າ ແລະ ສົ່ງອອກ.

ເພື່ອປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານເປັນແຕ່ລະກິດຈະກຳ ຈຶ່ງໄດ້ກະກຽມແບບສອບຖາມຢ່າງລະອຽດ ເພື່ອຂໍລາຍລະອຽດກ່ຽວກັບການຈັດຕັ້ງປະຕິບັດແຜນງານຂອງຂະແໜງການໃນແຕ່ລະມາດຕະການ ທີ່ໄດ້ກຳນົດໃນແຜນດຳເນີນງານ. ຂໍ້ມູນຕ່າງໆໄດ້ຮັບການເກັບກຳໂດຍກົງ ຜ່ານການຈັດກອງປະຊຸມແບບເຊິ່ງໜ້າ ກັບບັນດາຂະແໜງການທີ່ສຳຄັນ ເຊັ່ນ: ກົມພາສີ, ກົມອາຫານ ແລະ ຢາ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ກົມຂົນສົ່ງ, ກົມມາດຕະຖານ ແລະ ວັດແທກ, ກົມຄຸ້ມຄອງບໍ່ແຮ່, ກົມເຕັກໂນໂລຊີດີຈີຕອນ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ຊຶ່ງມີຫຼາຍກວ່າໜຶ່ງຄັ້ງ. ພ້ອມດຽວກັນ, ຍັງຮຽກຮ້ອງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອຕອບຄຳຖາມເຫຼົ່ານີ້ເປັນລາຍລັກອັກສອນ ພ້ອມກັບລາຍລະອຽດຂອງຄຳແນະນຳ ແລະ ຄຳສັ່ງຕ່າງໆ ທີ່ວາງອອກ ທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງພວກເຂົາ. ເພື່ອປະເມີນຜົນກະທົບ ແລະ ຜົນໄດ້ຮັບ, ຕົວຊີ້ວັດການປະຕິບັດງານ ທີ່ກຳນົດໃນແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນມີບ່ອນອີງ ຊຶ່ງລວມມີບົດສຶກສາ EDB ຂອງທະນາຄານໂລກ ຊຶ່ງໄດ້ຢຸດຕິການສຶກສາດັ່ງກ່າວໃນປີ 2020, ແລະ ນຳໃຊ້ຜົນການສຶກສາເວລາກວດປ່ອຍສິນຄ້າ (TRS).

ພ້ອມດຽວກັນ, ຍັງໄດ້ຮັບຄຳຄິດເຫັນຈາກພາກທຸລະກິດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (LNCCI) ກ່ຽວກັບຄວາມຄືບໜ້າໃນປະຈຸບັນ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການຄ້າ ຈາກບັນດາຂໍ້ຄິດລິເລີ່ມທີ່ຫຼາກຫຼາຍທີ່ໄດ້ປະຕິບັດພາຍໃຕ້ແຜນດຳເນີນງານ TFRM. ການສະຫຼຸບຂອງບົດສຳຫຼວດຄຳຄິດເຫັນຂອງພາກທຸລະກິດທີ່ໄດ້ສຶກສາໃນປີ 2021 ຍັງເປັນການກວດສອບ ເພື່ອເພີ່ມທະວີການຕອບຄຳຄິດເຫັນຂອງພາກທຸລະກິດ. ນອກຈາກນີ້, ແຫຼ່ງຂໍ້ມູນທີສອງທີ່ເປັນບ່ອນອີງໃນການປະເມີນການປະຕິບັດງານ ເຊັ່ນ: ໄດ້ນຳໃຊ້ການສຳຫຼວດວຽກອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການເພື່ອການຮ່ວມມື ແລະ ການພັດທະນາທາງເສດຖະກິດ (OECD) ໃນປີ 2019 ແລະ ການສຳຫຼວດໂລກຂອງອົງການສະຫະປະຊາຊາດ ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າແບບດີຈີຕອນ ແລະ ແບບຍືນຍົງ ເພື່ອຢັ້ງຢືນຄວາມຖືກຕ້ອງຜົນການປະເມີນ. ຍັງອີງໃສ່ບົດວິໄຈການເຊື່ອມໂຍງ

ເຂົ້າສາກົນດ້ານການຄ້າ (DTIS) ຂອງ ສປປ ລາວ ທີ່ໄດ້ສຳເລັດໃນປີ 2022 ແລະ ບົດປະເມີນຄວາມພ້ອມຂອງການຄ້າແບບບໍ່ນຳໃຊ້ເຈ້ຍ ຂອງ ສປປ ລາວ ຂອງອົງການ UNESCAP ໃນປີ 2022.

ບົດລາຍງານການປະເມີນສະບັບນີ້ ປະກອບມີ 5 ພາກ. ພາກທີ 2 ຫຼັງຈາກ ພາກສະພາບລວມ ລວມເອົາການທົບທວນຄືນການປະຕິບັດງານ ແລະ ຜົນສຳເລັດ, ການສັງລວມການຈັດຕັ້ງປະຕິບັດຂອງຂະແໜງການທີ່ກ່ຽວຂ້ອງ ພາຍໃຕ້ເສົາຄ້ຳຍຸດທະສາດຕ່າງໆ. ພາກທີ 3 ກວມເອົາການປະເມີນຜົນກະທົບ ແລະ ໝາກຜົນ ໂດຍລວມ. ຫຼັງຈາກນັ້ນ, ພາກທີ 4 ໄດ້ກຳນົດບັນດາຂໍ້ສະຫຼຸບ ແລະ ບົດຮຽນທີ່ສຳຄັນ, ພາກທີ 6 ໃຫ້ບາງຄຳແນະນຳທີ່ສຳຄັນ ສຳລັບແຜນຍຸດທະສາດໃນອານາຄົດ.

## 2. ການທົບທວນຄືນການປະຕິບັດງານ ແລະ ຜົນສຳເລັດ

ພາກນີ້ ກ່ຽວຂ້ອງກັບການທົບທວນຄືນການຈັດຕັ້ງປະຕິບັດວຽກງານ ຂອງແຜນດຳເນີນງານພາຍໃຕ້ເສົາຄ້ຳຍຸດທະສາດຕ່າງໆ ເປັນແຕ່ລະກິດຈະກຳ, ໂດຍສະເພາະການເນັ້ນເຖິງຜົນສຳເລັດທີ່ຍາດແຍ່ງມາໄດ້ ແລະ ສິ່ງທ້າທາຍຕ່າງໆທີ່ພົບພໍ້ໃນການຈັດຕັ້ງປະຕິບັດ. ໄດ້ມີການປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂອງຫຼາຍວຽກງານ ຕໍ່ໄລຍະເວລາທີ່ກວ້າງທີ່ໄດ້ກຳນົດສຳລັບບັນດາກິດຈະກຳ ພາຍໃຕ້ແຜນການຈັດຕັ້ງແຜນດຳເນີນງານ TFRM. ມາດຕະການເຫຼົ່ານີ້ ໄດ້ຖືກຈັດປະເພດໃນ 7 ຂົງເຂດຍຸດທະສາດ ຊຶ່ງໄດ້ກຳນົດເພື່ອເພີ່ມທະວີປະສິດທິພາບການໃຫ້ບໍລິການທາງການຄ້າ ແລະ ການປັບປຸງຄວາມສາມາດໃນການແຂ່ງຂັນທາງການຄ້າ. ສະນັ້ນ, ພວກເຂົາໄດ້ລິເລີ່ມໂດຍການສ້າງກົນໄກການຈັດຕັ້ງປະຕິບັດ ແລະ ຕິດຕາມ, ການເພີ່ມທະວີການບໍລິຫານຈັດການ, ການສົ່ງເສີມ ຄູ່ຮ່ວມມື ແລະ ການຮ່ວມມື ໃນດ້ານໜຶ່ງ ເພື່ອກຳນົດຂົງເຂດບູລິມະສິດສຳລັບການຈັດຕັ້ງປະຕິບັດ ເຊັ່ນ: ການປະຕິຮູບມາດຕະການ NTMs, ມາດຕະການບູລິມະສິດ ແລະ ການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງເຕັມສ່ວນ. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດຫຼາຍໆວຽກງານທີ່ກຳນົດໃນແຜນດຳເນີນງານ TFRM ພາຍໃຕ້ 7 ເສົາຄ້ຳຍຸດທະສາດເຫຼົ່ານີ້ ໄດ້ຮັບການທົບທວນຄືນຂ້າງລຸ່ມນີ້ ທີ່ສັງລວມເອົາບັນດາມາດຕະການທີ່ໄດ້ຈັດຕັ້ງປະຕິບັດ ແລະ ເກັບກຳບັນດາດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ທີ່ສຳຄັນທີ່ໄດ້ວາງອອກ ໃນການສະໜັບສະໜູນການຈັດຕັ້ງປະຕິບັດ.

ແຜນດຳເນີນງານ ກຳນົດວິໄສທັດໃນເວລາ 5 ປີ ສຳລັບການຈັດຕັ້ງປະຕິບັດ, ອາດເວົ້າໄດ້ວ່າສ່ວນສຳຄັນຂອງໄລຍະເວລານີ້ ແມ່ນຖືກກະທົບໂດຍການລະບາດຂອງພະຍາດໂຄວິດ-19 ທີ່ຂັດຂວາງບໍ່ພຽງແຕ່ການເດີນທາງ ແຕ່ລວມທັງການໃຊ້ຊີວິດປະຈຳວັນ ເນື່ອງຈາກຫຼາຍຫ້ອງການໄດ້ຖືກປິດເປັນເວລາຫຼາຍເດືອນ ແລະ ພະນັກງານ ແມ່ນເຮັດວຽກຢູ່ບ້ານ ຊຶ່ງມີຂໍ້ຈຳກັດໃນການເຮັດວຽກຂອງຕົນເອງ. ໃນໄລຍະຕໍ່ມາ, ໄດ້ມີການຍົກເລີກການປິດປະເທດ ແລະ ເປີດຫ້ອງການຄືນໃໝ່, ແຕ່ມີການຈຳກັດພະນັກງານເຂົ້າມາເຮັດວຽກຢູ່ຫ້ອງການ ບົນພື້ນຖານສັບປ່ຽນການເຮັດວຽກ. ພະນັກງານ ບໍ່ໄດ້ຮັບອະນຸຍາດໃຫ້ເດີນທາງໄປຕ່າງແຂວງ ຫຼື ຈັດກອງປະຊຸມ ແລະ ກອງປະຊຸມສຳມະນາແບບເຊິ່ງໜ້າ. ນອກຈາກນີ້, ເນື່ອງຈາກຂໍ້ຈຳກັດທາງດ້ານການເດີນທາງ ແລະ ວີຊາ, ຊ່ຽວຊານສາກົນ ບໍ່ສາມາດເດີນທາງມາ ສປປ ລາວ ໄດ້. ຫຼາຍກວ່າອື່ນສິ່ງໃດ, ແມ່ນບໍ່ສາມາດຈັດຈ້າງຊ່ຽວຊານໃໝ່ ໃນສະພາບການລະບາດຂອງພະຍາດ ຊຶ່ງເຮັດໃຫ້ການຈັດຈ້າງຊ່ຽວຊານສາກົນໃຫ້ກົມພາສີ, ກົມປູກຝັງ ແລະ ກົມຄຸ້ມຄອງບໍ່ແຮ່ ມີຄວາມຊັກຊ້າ. ເມື່ອມີການຈຳກັດການເດີນທາງ ແລະ ວີຊາ ເຮັດໃຫ້ບໍ່ມີຊ່ຽວຊານສາກົນຢູ່ໃນປະເທດ ໃນລະຫວ່າງເດືອນ ເມສາ 2020 ຫາ ເດືອນ ມິຖຸນາ 2022, ພາຍຫຼັງໄດ້ຮັບການຜ່ອນຜັນ ເຮັດໃຫ້ສິ່ງຜົນກະທົບຕໍ່ຫຼາຍວຽກງານຢ່າງໜັກ ໂດຍສະເພາະວຽກງານທີ່ຕ້ອງການການຊ່ວຍເຫຼືອທາງວິຊາການ ແລະ ການສ້າງຂີດຄວາມສາມາດ. ໂດຍລວມແລ້ວ, ໃນໄລຍະ 5 ປີນີ້, ແຜນດຳເນີນງານມີພຽງເວລາ 3 ປີ ໃນການເຮັດວຽກທີ່ເປັນໄລຍະປົກກະຕິ, ສະນັ້ນ ການປະຕິບັດງານຈຳເປັນຕ້ອງໄດ້ຮັບການທົບທວນຄືນ ໂດຍຄຳນຶງເຖິງຂໍ້ຈຳກັດເຫຼົ່ານີ້ ຢ່າງຈິງຈັງ.

## 2.1 ການພັດທະນາກົນໄກທາງດ້ານສະຖາບັນ ເພື່ອການປະສານງານຢ່າງມີປະສິດທິພາບ

ເພື່ອການຈັດຕັ້ງປະຕິບັດ ແລະ ຕິດຕາມບັນດາວຽກງານທີ່ກຳນົດໄວ້ ຢ່າງມີປະສິດທິພາບ, ແຜນດຳເນີນງານ ໄດ້ກຳນົດການສ້າງຕັ້ງໂຄງສ້າງການຈັດຕັ້ງທາງດ້ານສະຖາບັນທີ່ເຂັ້ມແຂງ ຊຶ່ງລວມເອົາການຈັດກອງປະຊຸມຂອງຄະນະກຳມະການ ເລື້ອຍໆ ເຊັ່ນ: ກອງເລຂາ/ຄະນະກຳມະການ, ແລະ ການສ້າງໜ່ວຍງານປະຕິບັດງານວິຊາການໃນແຕ່ລະກົມ ເພື່ອປະຕິບັດ ແລະ ຕິດຕາມວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການກະກຽມສ້າງແຜນປະຕິບັດງານຂອງຂະແໜງການ (DAPs) ຂອງກົມທີ່ກ່ຽວຂ້ອງ. ວຽກງານສ່ວນໃຫຍ່ເຫຼົ່ານີ້ ໄດ້ຖືກດຳເນີນການໃນໄລຍະລິເລີ່ມແລ້ວ ໃນເດືອນ ກຸມພາ 2018. ດັ່ງນັ້ນ, ແມ່ນມີໂຄງສ້າງການຈັດຕັ້ງທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດແຜນດຳເນີນງານແລ້ວ.

### 2.1.1 ການໄດ້ຮັບອະນຸມັດທີ່ຈຳເປັນ ຂອງແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ

ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຖືກພັດທະນາໂດຍຜ່ານການປຶກສາຫາລືຢ່າງກວ້າງຂວາງ ກັບ ກົມທີ່ກ່ຽວຂ້ອງ ໃນຊ່ວງປີ 2016-2017 ແລະ ຖືກອະນຸມັດໃນກອງປະຊຸມກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ຄັ້ງທີ VI ຊຶ່ງຈັດຂຶ້ນໃນວັນທີ 11 ສິງຫາ 2017. ແຜນດຳເນີນງານ TFRM ໄດ້ຖືກຮັບຮອງຢ່າງເປັນທາງການໃນວັນທີ 25 ກັນຍາ 2017[1] ຊຶ່ງມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ລາຍງານຄວາມຄືບໜ້າ ຕໍ່ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (TFS). ນອກຈາກນີ້, ຍັງຮຽກຮ້ອງໃຫ້ທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ການຮ່ວມມືກັບກອງເລຂາ ໃນການຈັດຕັ້ງປະຕິບັດແຜນປະຕິບັດງານນີ້. ຕໍ່ມາ, ແຜນດຳເນີນງານ ໄດ້ຮັບການລິເລີ່ມໂດຍກະຊວງອຸດສາຫະກຳ ແລະ ການຄ້າ ໃນກອງປະຊຸມເປີດກວ້າງ ໃນວັນທີ 29 ພະຈິກ 2017 ໂດຍມີພະນັກງານອາວຸໂສຈາກຫຼາຍກະຊວງ ແລະ ຕາງໜ້າຈາກພາກທຸລະກິດ ເຂົ້າຮ່ວມ. ເປົ້າໝາຍຂອງແຜນດຳເນີນງານ ໄດ້ຮັບການປະຕິບັດໂດຍໄວ ພາຍຫຼັງມີຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ຊຶ່ງໄດ້ຊຸກຍູ້ໃຫ້ທຸກກະຊວງ, ກົມກອງ, ອົງການຈັດຕັ້ງຂອງລັດ ແລະ ອົງການປົກຄອງຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອເຮັດວຽກຮ່ວມກັນ ໃນການປັບປຸງຂັ້ນຕອນຕ່າງໆທີ່ຕິດພັນກັບການຄ້າ ເພື່ອບັນລຸເປົ້າໝາຍທີ່ກຳນົດໄວ້ໃນແຜນດຳເນີນງານ. ສິ່ງນີ້ໄດ້ຮັບການສະໜັບສະໜູນເພີ່ມເຕີມ ໂດຍຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 12/ນຍ, ລົງວັນທີ 19 ຕຸລາ 2019 ຊຶ່ງໄດ້ໃຫ້ທິດຊີ້ນຳແກ່ທຸກຂະແໜງການທີ່ກ່ຽວຂ້ອງເປັນອັນສະເພາະ ເພື່ອບັນລຸເປົ້າໝາຍໃນປີ 2022 ຕາມທີ່ກຳນົດໄວ້ໃນແຜນດຳເນີນງານ[2]. ບັນດານິຕິກຳເຫຼົ່ານີ້ ໄດ້ພິສູດວ່າ ແຜນດຳເນີນງານອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນເປັນແຜນງານເພື່ອຂັບເຄື່ອນບັນດາຂໍ້ຄິດລິເລີ່ມການອຳນວຍຄວາມສະດວກທາງດ້ານການຄ້າໃນປະເທດ. ໂດຍມີທ່ານນາຍົກລັດຖະມົນຕີ ໃຫ້ທິດເຍືອງທາງ, ແຜນດຳເນີນງານ ຈຶ່ງຖືເປັນເອທີໃຈກາງ ແລະ ພຽງແຕ່ຕ້ອງການໂຄງສ້າງການຈັດຕັ້ງທີ່ມີປະສິດທິພາບ ເພື່ອໃຫ້ມີຜົນໄດ້ຮັບ.

[1] ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ 2017-2022 ໄດ້ຖືກຮັບຮອງ ຕາມຂໍ້ຕົກລົງ ເລກທີ 0051/ກຂອຄ, ລົງວັນທີ 26 ກັນຍາ 2017.

[2] ຄຳສັ່ງດັ່ງກ່າວ ໃຫ້ທິດຊີ້ນຳບັນດາກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ ເພື່ອຫຼຸດຜ່ອນເອກະສານ ແລະ ຂັ້ນຕອນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ມອບໃຫ້ບັນດາກະຊວງ ໃຫ້ມີຄວາມພະຍາຍາມປະສານສົມທົບກັນ ເພື່ອບັນລຸເປົ້າໝາຍຂອງແຜນດຳເນີນງານ.

ອີງຕາມຂໍ້ຕົກລົງຂອງທ່ານຮອງນາຍົກລັດຖະມົນຕີ ເລກທີ 48/ຄອຄສ[3], ລົງວັນທີ 26 ກໍລະກົດ 2018, ກອງເລຂາ ອຳນວຍຄວາມສະດວກທາງດ້ານການຄ້າ ຊຶ່ງເຄີຍເປັນຄະນະກຳມະການສູງສຸດໃນປະເທດ ທີ່ຂັບເຄື່ອນວຽກງານອຳ ນວຍຄວາມສະດວກທາງດ້ານການຄ້າ ໄດ້ຖືກຍົກລະດັບໂດຍແມ່ນທ່ານ ຮອງນາຍົກລັດຖະມົນຕີ ເປັນຫົວໜ້າຄະນະ (ປ່ຽນແທນທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ) ແລະ ປ່ຽນຊື່ເປັນ: ຄະນະກຳມະການຊີ້ນຳລວມອຳ ນວຍຄວາມສະດວກທາງດ້ານການຄ້າ (NTFC) ໂດຍແມ່ນທ່ານຮອງນາຍົກລັດຖະມົນຕີ ເປັນຫົວໜ້າ, ວາລະ ການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ຄະນະກຳມະການໄດ້ຮັບອຳນາດເຕັມໃນ ການແກ້ໄຂບັນຫາຫຼາຍຢ່າງ ທີ່ກ່ຽວຂ້ອງກັບຫຼາຍກະຊວງ. ເພື່ອຊ່ວຍຕິດຕາມການຈັດຕັ້ງປະຕິບັດວຽກງານອຳນວຍ ຄວາມສະດວກທາງດ້ານການຄ້າ, ຄະນະກຳມະການ NTFC ໄດ້ສ້າງຕັ້ງກອງເລຂາຄະນະກຳມະການອຳນວຍຄວາມ ສະດວກທາງດ້ານການຄ້າ (TFCS)[4] ໂດຍແມ່ນທ່ານ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວ ໜ້າຄະນະ ແລະ ມີຜູ້ຕາງໜ້າອາວຸໂສຂອງຫຼາຍຂະແໜງການທີ່ກ່ຽວຂ້ອງ ແລະ ພາກທຸລະກິດ. ກອງເລຂາຄະນະກຳ ມະການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຖືກແຕ່ງຕັ້ງເພື່ອກະກຽມແຜນວຽກ, ການສະເໜີງົບປະມານ, ການລາຍງານ ແລະ ການທົບທວນຄືນ ແລະ ອື່ນໆ ໃຫ້ແກ່ຄະນະກຳມະການ NTFC ແລະ ຈັດກອງປະຊຸມ ຢ່າງ ໜ້ອຍສອງຄັ້ງຕໍ່ປີ. ນອກຈາກນີ້, ກອງເລຂາ ຍັງໄດ້ຮັບການມອບໝາຍໃຫ້ມີໜ້າທີ່ຮັບຜິດຊອບທີ່ກວ້າງຂວາງອື່ນໆ ເຊັ່ນ: ການທົບທວນຄືນ ແລະ ການປະກອບຄຳເຫັນຕໍ່ນະໂຍບາຍ, ແຜນງານ, ຂໍ້ຕົກລົງ, ກົດລະບຽບ ແລະ ລະບຽບ ການຕ່າງໆ ທີ່ກ່ຽວຂ້ອງກັບການອຳນວຍຄວາມສະດວກທາງດ້ານການຄ້າຂອງປະເທດ ແລະ ຊ່ວຍໃນການຈັດຕັ້ງ ປະຕິບັດ ໂດຍມີການປະສານສົມທົບກັນ. ກອງເລຂາ ຍັງມີໜ້າທີ່ໃນການສຶກສາ ແລະ ເພີ່ມທະວີມາດຕະການທາງ ດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ແລະ ຂັ້ນຕອນຕ່າງໆທີ່ຕິດພັນກັບການຄ້າ ແລະ ການຂົນສົ່ງ ອື່ນໆ ເພື່ອ ປະຕິບັດຕາມຂໍ້ຜູກມັດຂອງສາກົນ.

### 2.1.2 ການເພີ່ມລະບອບກອງປະຊຸມຂອງຄະນະກຳມະການ NTFC/ກອງເລຂາ TFS

ກອງປະຊຸມກອງເລຂາ ໄດ້ຖືກຈັດຂຶ້ນຄັ້ງໜຶ່ງຕໍ່ປີ[5], ແຜນດຳເນີນງານ ໄດ້ແນະນຳໃຫ້ການເພີ່ມລະບອບຂອງກອງ ປະຊຸມ. ຄະນະກຳມະການ NTFC ທີ່ປ່ຽນແທນກອງເລຂາ TFS ໄດ້ຕົກລົງໃຫ້ຈັດກອງປະຊຸມ 6 ເດືອນຕໍ່ຄັ້ງ. ກອງ ປະຊຸມຄັ້ງປະຖົມມະລຶກ ແມ່ນຈັດຂຶ້ນໃນວັນທີ 7 ມັງກອນ 2019 ເພື່ອປຶກສາຫາລື ກ່ຽວກັບຂອບເຂດ ແລະ ໜ້າທີ່ ຂອງຄະນະກຳມະການດັ່ງກ່າວ. ພາຍຫຼັງທີ່ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ (PTFCs) ໄດ້ຮັບການສ້າງຕັ້ງຂຶ້ນ ກໍ່ໄດ້ເຊື້ອເຊີນຫົວໜ້າຄະນະກຳມະການ PTFCs ທຸກແຂວງ ເຂົ້າຮ່ວມກອງ ປະຊຸມ. ເປັນການລິເລີ່ມທີ່ດີ ທີ່ມີ 2 ກອງປະຊຸມ ໃນປີ 2019 (ເດືອນ ເມສາ ແລະ ພະຈິກ), ແຕ່ກຳນົດໝາຍຈັດ ກອງປະຊຸມ ໄດ້ຖືກຢຸດຕິໂດຍການລະບາດຂອງພະຍາດໂຄວິດ. ກອງເລຂາ TFCS ໄດ້ສ້າງຕັ້ງຂຶ້ນເພື່ອຊ່ວຍວຽກ ຄະນະກຳມະການ NTFC ຊຶ່ງຈະປະຊຸມ ກ່ອນກອງປະຊຸມຂອງຄະນະກຳມະການ NTFC[6]. ນອກຈາກນີ້, ຍັງໄດ້ຈັດ ກອງປະຊຸມປຶກສາຫາລື ກັບຂະແໜງການ ແລະ ພາກທຸລະກິດທີ່ກ່ຽວຂ້ອງ ກ່ຽວກັບບັນຫາສະເພາະ. ປົກກະຕິແລ້ວ, ກອງປະຊຸມປຶກສາຫາລືທາງດ້ານວິຊາການເຫຼົ່ານີ້ ແມ່ນເຂົ້າຮ່ວມໂດຍຈຸດປະສານງານວຽກງານອຳນວຍຄວາມ

[3] ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 48/ນຍ ໄດ້ຖືກວາງອອກໃນວັນທີ 26 ກໍລະກົດ 2018. ຄຽງຄູ່ກັບການສ້າງຕັ້ງຄະນະກຳມະ ການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ, ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ ກໍ່ໄດ້ຮັບ ການສ້າງຕັ້ງຂຶ້ນໃນແຕ່ລະແຂວງ ພາຍໃຕ້ການຊີ້ນຳຂອງທ່ານຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ສຳລັບການປະສານງານ ແລະ ຕິດຕາມ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ທີ່ມີປະສິດທິພາບ ຢູ່ຂັ້ນແຂວງ.

[4] ຂໍ້ຕົກລົງ ເລກທີ 001/ຄອຄສ, ລົງວັນທີ 26 ທັນວາ 2018.

[5] ກອງປະຊຸມໃນວັນທີ 11 ສິງຫາ 2017 ແລະ ໃນວັນທີ 25 ພຶດສະພາ 2018 ໃນລະຫວ່າງໄລຍະຂອງແຜນດຳເນີນງານ ກ່ອນຄະນະກຳ ມະການ NTFC ຖືກສ້າງຕັ້ງຂຶ້ນ.

[6] ກອງປະຊຸມກອງເລຂາ TFCS ໃນວັນທີ 06 ມີນາ 2019, 15 ສິງຫາ 2019, 02 ພະຈິກ 2020 ແລະ 16 ທັນວາ 2021.

ສະດວກທາງດ້ານການຄ້າຂອງຂະແໜງການທີ່ກ່ຽວຂ້ອງ ແລະ ເປັນປະທານໂດຍທ່ານຫົວໜ້າ ຫຼື ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ.

ປົກກະຕິແລ້ວ, ກອງປະຊຸມຄະນະກຳມະການ NTFC ແມ່ນເປັນປະທານໂດຍທ່ານຮອງນາຍົກລັດຖະມົນຕີ. ມາຮອດປະຈຸບັນ ໄດ້ຈັດໄປແລ້ວຈຳນວນ 5 ຄັ້ງ[7] ເມື່ອບັນຫາການອຳນວຍຄວາມສະດວກທາງດ້ານການຄ້າທີ່ສຳຄັນໄດ້ຖືກຍົກຂຶ້ນມາປຶກສາຫາລື. ບັນຫາເຫຼົ່ານີ້ ໄດ້ຖືກສັງລວມ ແລະ ຕິດຕາມ ຢ່າງໃກ້ຊິດ ຈົນກວ່າຈະຖືກແກ້ໄຂ. ບາງຂໍ້ຕົກລົງທີ່ສຳຄັນຂອງຄະນະກຳມະການ NTFC ລວມມີການສ້າງຕັ້ງໂຄງສ້າງການຈັດຕັ້ງວຽກງານອຳນວຍຄວາມສະດວກທາງດ້ານການຄ້າທີ່ເຊື່ອມໂຍງ ແລະ ການເຊັນບົດບັນທຶກຮ່ວມກັນ ລະຫວ່າງກົມພາສີ ແລະ ຂະແໜງການສຳຄັນອື່ນໆ ກ່ຽວກັບການພັດທະນາແຜນງານວຽກບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ.

ຄຽງຄູ່ກັນ, ໄດ້ຮັບການລາຍງານວ່າມີຫຼາຍກວ່າ 50 ກອງປະຊຸມ ໄດ້ຖືກຈັດຂຶ້ນໃນລະຫວ່າງປີ 2017-2022 ຊຶ່ງສະເລ່ຍປະມານ 10 ກອງປະຊຸມ ຕໍ່ປີ. ກອງປະຊຸມເຫຼົ່ານີ້ ໄດ້ຊ່ວຍຢ່າງຫຼວງຫຼາຍໃຫ້ແກ່ການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແລະ ການປຶກສາຫາລືກັບພາກທຸລະກິດ ໃນການແກ້ໄຂບັນຫາທີ່ພົບເຫັນໃນການຈັດຕັ້ງປະຕິບັດແຜນດຳເນີນງານ. ບົດບັນທຶກກອງປະຊຸມຕ່າງໆ ໄດ້ຖືກນຳສົ່ງໃຫ້ຜູ້ເຂົ້າຮ່ວມ ເຖິງວ່າຈະບໍ່ໄດ້ເອົາລົງໃນເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ ເພື່ອເປັນຂໍ້ມູນທາງດ້ານການຄ້າ ແລະ ສາທາລະນະກໍ່ຕາມ.

#### 2.1.3 ການສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດວຽກອຳນວຍຄວາມສະດວກທາງດ້ານການຄ້າ ໃນແຕ່ລະກົມ

ແຜນດຳເນີນງານ TFRM ຮຽກຮ້ອງໃຫ້ຂະແໜງການທີ່ກ່ຽວຂ້ອງ ສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ (TIU) ທີ່ຖືກມອບໝາຍຢູ່ອີງການຂອງພວກເຂົາ ໃຫ້ສຳເລັດໃນເດືອນກຸມພາ 2018. ໜ່ວຍງານດັ່ງກ່າວ ໄດ້ຮັບການຄາດຫວັງວ່າຈະຊ່ວຍກົມຂອງພວກເຂົາ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳທີ່ບອນໃນແຜນດຳເນີນງານ TFRM ພາຍໃນເວລາທີ່ກຳນົດໄວ້. ຂະແໜງການທີ່ກ່ຽວຂ້ອງໂດຍສ່ວນຫຼາຍ ບໍ່ໄດ້ສ້າງຕັ້ງໜ່ວຍງານ TIU ແລະ ເອື່ອຍອີງໃສ່ຈຸດປະສານວຽກອຳນວຍຄວາມສະດວກທາງດ້ານການຄ້າ ທີ່ໄດ້ແຕ່ງຕັ້ງກ່ອນໜ້ານີ້ ແທນ ຍົກເວັ້ນບາງກົມທີ່ໄດ້ສ້າງຕັ້ງ ເຊັ່ນ: ກົມການນຳເຂົ້າ ແລະ ສົ່ງອອກ, ກົມພາສີ ແລະ ກົມອາຫານ ແລະ ຢາ. ກົມພາສີ ໄດ້ລາຍງານວ່າ ໜ່ວຍງານຂັ້ນຕອນທາງພາສີ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ພະແນກນິຕິກຳຕາມຂໍ້ຕົກລົງ ວັນທີ 15 ມີນາ 2018 ແລະ ຕໍ່ມາແມ່ນລະບຽບການໃນເດືອນ ພຶດສະພາ 2019, ໜ້າທີ່ຮັບຜິດຊອບຂອງການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຮັບການຜັນຂະຫຍາຍຢູ່ພະແນກນິຕິກຳ ຕາມຂໍ້ຕົກລົງຂອງລັດຖະມົນຕີ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ ເລກທີ 2059/ກງ, ລົງວັນທີ 29 ພຶດສະພາ 2021.

ນອກຈາກກົມພາສີແລ້ວ, ກົມອາຫານ ແລະ ຢາ ແມ່ນອີກກົມໜຶ່ງທີ່ໄດ້ສ້າງຕັ້ງໜ່ວຍງານ TIU ໃນປີ 2018 ຊຶ່ງປະກອບມີຕາງໜ້າຈາກກອງກວດກາອາຫານ ແລະ ຢາ ແລະ ພະແນກທີ່ຮັບຜິດຊອບວຽກງານຢູ່ດ່ານ. ເຖິງຢ່າງໃດກໍ່ຕາມ, ອີກ 4 ຂະແໜງການ ເຊັ່ນ: ກົມມາດຕະຖານ ແລະ ວັດແທກ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ,

[7] ກອງປະຊຸມຄະນະກຳມະການ NTFC ໄດ້ຈັດຂຶ້ນໃນວັນທີ 07 ມັງກອນ 2019, 03 ເມສາ 2019, 18 ທັນວາ 2019, 17 ທັນວາ 2020 ແລະ 25 ມັງກອນ 2022. ກອງປະຊຸມເທື່ອທຳອິດ ແມ່ນບໍ່ໄດ້ເຊີນເອົາຫົວໜ້າຄະນະກຳມະການ PTFC ເຂົ້າຮ່ວມ, ເຊິ່ງໄດ້ເລີ່ມເຂົ້າຮ່ວມນັບແຕ່ເດືອນ ເມສາ 2019 ແລະ ຖືກເອີ້ນວ່າເປັນກອງປະຊຸມຄະນະກຳມະການ NTFC ທົ່ວປະເທດ ຄັ້ງທຳອິດ ຢ່າງເຕັມຮູບແບບ.

ກົມເຕັກໂນໂລຊີດິຈິຕອນ ໄດ້ສ້າງໜ່ວຍງານ TIU ຂຶ້ນໃນລະຫວ່າງເດືອນ ມີນາ ຫາ ພຶດສະພາ 2022[8] ຕາມທີ່ໄດ້ຮັບການແນະນຳຈາກຫ້ອງການກອງເລຂາ TFCS. ອາດກ່ຽວຂ້ອງກັບການກ່າວເຖິງໃນທີ່ນີ້ຫຼາຍກວ່າສິ່ງອື່ນໃດ, ກອງເລຂາ TFCS ຍັງໄດ້ຖືກມອບໝາຍໃຫ້ສ້າງໜ່ວຍງານ TIU ຢູ່ຂະແໜງການທີ່ກ່ຽວຂ້ອງ[9]. ບາງທີຄວາມຮັບຜິດຊອບທີ່ຊັດເຈນນີ້ ເຮັດໃຫ້ມີການປະຕິບັດທີ່ລ່າຊ້າ ຢູ່ໃນການຂະແໜງການທີ່ບໍ່ມີຄວາມເອົາໃສໃສ່ ຊຶ່ງກ່ອນໜ້ານີ້ໄດ້ຖືເອົາຈຸດປະສານງານນັ້ນ ດີພໍ່ງກັບໜ່ວຍງານໜຶ່ງ. ກົມການນຳເຂົ້າ ແລະ ສົ່ງອອກ ເປັນຫ້ອງການກອງເລຂາ TFS ແລະ ຕໍ່ມາແມ່ນຄະນະກຳມະການ NTFC ໂດຍປົກກະຕິແລ້ວ ຈະມີການຈັດສັນພະແນກຮັບຜິດຊອບທີ່ດີ ຊຶ່ງໄດ້ຮັບການສະໜັບສະໜູນໂດຍການຊ່ວຍເຫຼືອທາງດ້ານວິຊາການສາກົນ ແລະ ພາຍໃນ ພາຍໃຕ້ໂຄງການ LCT. ສິ່ງນີ້ຕ້ອງໄດ້ຮັບການກ່າວເຖິງໃນທີ່ນີ້ວ່າ 3 ກົມ ແມ່ນເຮັດໄດ້ດີໃນການຈັດຕັ້ງປະຕິບັດແຜນດຳເນີນງານ ທີ່ເປັນຂະແໜງການທີ່ສ້າງຕັ້ງໜ່ວຍງານ TIU ຢ່າງເຕັມຮູບແບບ.

#### 2.1.4 ການກະກຽມແຜນປະຕິບັດງານຂອງຂະແໜງການ (DAP) ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າຂອງແຕ່ລະກົມ ເພື່ອຈັດຕັ້ງປະຕິບັດແຜນດຳເນີນງານ

ເພື່ອການປະຕິບັດແຜນດຳເນີນງານຢ່າງມີປະສິດທິພາບ ຈຳເປັນຕ້ອງໃຫ້ຂະແໜງການທີ່ກ່ຽວຂ້ອງ ສ້າງແຜນປະຕິບັດງານສະເພາະ ສຳລັບການຈັດຕັ້ງປະຕິບັດແຜນດຳເນີນງານໃນຂະແໜງການຂອງພວກເຂົາ. ມີໂຄງການສະໜັບສະໜູນການຊ່ວຍເຫຼືອທາງດ້ານວິຊາການສາກົນ ທີ່ຂະຫຍາຍໄປສູ່ຂະແໜງການທີ່ສຳຄັນ ເພື່ອບັນລຸເປົ້າໝາຍນີ້. ພາຍຫຼັງການປຶກສາຫາລື ແລະ ພິຈາລະນາ ຢ່າງລະອຽດ, 8 ຂະແໜງການ ເຊັ່ນ: ກົມພາສີ, ກົມການນຳເຂົ້າ ແລະ ສົ່ງອອກ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ, ກົມມາດຕະຖານ ແລະ ວັດແທກ, ກົມຂົນສົ່ງ ແລະ ກົມຄຸ້ມຄອງບໍ່ແຮ່ ສາມາດພັດທະນາແຜນປະຕິບັດງານຂອງຂະແໜງການ (DAPs) ພ້ອມທັງກິດຈະກຳສະເພາະທີ່ກຳນົດໄວ້ ເພື່ອຈັດຕັ້ງປະຕິບັດກິດຈະກຳຂອງແຜນດຳເນີນງານ ຕາມໄລຍະເວລາທີ່ກຳນົດໄວ້. ແຜນປະຕິບັດງານ DAP ລວມເອົາທຸກກິດຈະກຳທີ່ໄດ້ຄາດການໄວ້ໃນແຜນດຳເນີນງານ. ຕົວຢ່າງ ລວມເອົາການສ້າງຕັ້ງໜ່ວຍງານ TIU, ການແຕ່ງຕັ້ງຈຸດປະສານງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນແຂວງ, ການທົບທວນຄືນມາດຕະການ NTM, ການພັດທະນາມາດຕະຖານການບໍລິການ, ການສ້າງຕັ້ງຄະນະກຳມະການສຳລັບການປຶກສາຫາລື, ການຈັດກອງປະຊຸມປຶກສາຫາລືເປັນປົກກະຕິ ເພື່ອການປະສານສົມທົບກັບພາກທຸລະກິດ ແລະ ກິດຈະກຳອື່ນໆ ສຳລັບການຈັດຕັ້ງປະຕິບັດມາດຕາທີ່ກ່ຽວຂ້ອງຂອງສັນຍາ WTO-TFA. ຈຸດສຸມຂອງແຜນປະຕິບັດງານ DAP ນີ້ ແມ່ນການບັນລຸການຈັດຕັ້ງປະຕິບັດບັນດາມາດຕະການທີ່ນອນໃນສັນຍາ WTO-TFA ຊຶ່ງເປັນຂໍ້ຜູກມັດສາກົນທີ່ມີກຳນົດເວລາ. ແຜນປະຕິບັດງານ DAP ໄດ້ຮັບການອະນຸມັດໂດຍຄະນະກົມຂອງພວກເຂົາ ແລະ ສົ່ງໃຫ້ກອງເລຂາ TFS ແລະ ທະນາຄານໂລກ.

ອີງຕາມແຜນປະຕິບັດງານ DAPs, ຂະແໜງການທີ່ກ່ຽວຂ້ອງ ຍັງໄດ້ກະກຽມບົດສະເໜີ Challenge Facility (CF) ເພື່ອຂໍການສະໜັບສະໜູນຈາກໂຄງການ ໃນການຈັດຕັ້ງປະຕິບັດກິດຈະກຳທີ່ກຳນົດໄວ້ ໂດຍສະເພາະຂໍ້ຜູກມັດຕ່າງໆທີ່ນອນໃນໝວດ C ທີ່ຕ້ອງການການຊ່ວຍເຫຼືອທາງດ້ານວິຊາການ. ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCTP) ທີ່ສະໜັບສະໜູນໂດຍທະນາຄານໂລກ ໄດ້ຈັດສັນງົບປະມານພິເສດ ເພື່ອສະໜັບສະໜູນຂະແໜງການທີ່ສຳຄັນ ໃນການຈັດຕັ້ງປະຕິບັດຂໍ້ຜູກມັດຕ່າງໆຂອງສັນຍາ WTO-TFA ພາຍໃຕ້ຫົວຂໍ້ສະເພາະວ່າ "ທຶນສະໜັບສະໜູນຍ່ອຍ CF ໃນການຈັດຕັ້ງປະຕິບັດສັນຍາ WTO-

---

[8] ຕາມໜັງສືທີ່ພວກເຂົາໄດ້ແຈ້ງ, ໜ່ວຍງານ TIU ໄດ້ຮັບການສ້າງຕັ້ງຂຶ້ນຢູ່ກົມເຕັກໂນໂລຊີດິຈິຕອນ ໃນວັນທີ 11 ມີນາ 2022, ກົມລ້ຽງສັດ ແລະ ການປະມົງ ໃນວັນທີ 16 ມີນາ 2022, ກົມປູກຝັງ ໃນວັນທີ 18 ພຶດສະພາ 2022, ກົມມາດຕະຖານ ແລະ ວັດແທກ ໃນວັນທີ 29 ມິຖຸນາ 2022.

[9] ມາດຕາ 3.11 ຂອງຂໍ້ຕົກລົງ ເລກທີ 001/ຄອຄສ, ລົງວັນທີ 16 ທັນວາ 2018 ທີ່ກ່າວເຖິງສະເພາະບົດບາດຂອງກອງເລຂາ TFCS.

TFA" ແລະ ສະນັ້ນ ຈຶ່ງມີບົດສະເໜີໂຄງການຂອງບັນດາກົມເຫຼົ່ານີ້ ທີ່ຂໍການສະໜັບສະໜູນຈາກໂຄງການ ຊຶ່ງຖືກເອີ້ນວ່າ: ບົດສະເໜີໂຄງການ WTO-TFA CF ຫຼື ເອີ້ນວ່າຫຍໍ້ແມ່ນໂຄງການ CF. ບົດສະເໜີໂຄງການ CF ຈຳນວນ 5 ໂຄງການ (ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຄຸ້ມຄອງບໍ່ແຮ່) ໂດຍສອດຄ່ອງກັບຈຸດປະສົງ ແລະ ຂອບເຂດຜົນໄດ້ຮັບຂອງໂຄງການແມ່ນໄດ້ຮັບອະນຸມັດເພື່ອສະໜັບສະໜູນໂຄງການ. ການສ້າງກົນໄກໂຄງການ CF ພາຍໃຕ້ຂອງໂຄງການ LCT ພິສູດວ່າຂ້ອນຂ້າງມີປະສິດທິພາບ ໃນການຂະຫຍາຍການສະໜັບສະໜູນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA. ສະຫຼຸບຂອງບົດສະເໜີໂຄງການ CF ຈຳນວນ 5 ສະບັບ ຢູ່ໃນເອກະສານຊ້ອນທ້າຍ 2.

ບັນດາຂະແໜງການ ແມ່ນຖືກຄາດຫວັງເພື່ອຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານເຫຼົ່ານີ້ ໂດຍນຳໃຊ້ໜ່ວຍງານ TIUs. ເຖິງຢ່າງໃດກໍ່ຕາມ, ໃນໄລຍະເວລາການປະເມີນນີ້, ສັງເກດເຫັນວ່າບໍ່ມີຂະແໜງການໃດ ໄດ້ທົບທວນຄືນການປະຕິບັດງານຂອງຕົນ ຕໍ່ກັບແຜນປະຕິບັດງານ DAP. ປະກົດວ່າບາງຂະແໜງການ ບໍ່ສາມາດຄົ້ນຫາແຜນປະຕິບັດງານ DAP ທີ່ພະນັກງານກ່ອນໜ້ານີ້ຂອງພວກເຂົາເປັນຜູ້ກະກຽມ ໃນປີ 2018, ການພັດທະນາແຜນປະຕິບັດງານ DAP ໄດ້ຖືກຍົກຍ້າຍ ແລະ ບໍ່ມີຄວາມຊົງຈຳທາງດ້ານສະຖາບັນເຫຼືອຢູ່. ກະທັ້ງວ່າບົດສະເໜີໂຄງການ CF ຂອງຂະແໜງການເຫຼົ່ານີ້ ໄດ້ຮັບອະນຸມັດ, ແຕ່ການທົບທວນຄືນຍັງຈຳກັດພຽງແຕ່ກອບຂອງບົດສະເໜີໂຄງການ CF, ບໍ່ແມ່ນທັງໝົດຂອງແຜນປະຕິບັດງານ DAP. ສິ່ງຜົນໃຫ້ກິດຈະກຳອື່ນໆໃນແຜນປະຕິບັດງານ DAP ໂດຍສະເພາະການສະໜັບສະໜູນຂອງໂຄງການ ແມ່ນບໍ່ໄດ້ຮັບການສະເໜີ ເຊັ່ນ: ກິດຈະກຳທີ່ນອນໃນ 6 ມາດຕະການຍຸດທະສາດທຳອິດ ຫຼື ຂໍ້ຜູກມັດໃນໝວດ A ແລະ B ແມ່ນປະໄວ້ສ່ວນໃຫຍ່ໂດຍບໍ່ມີໃຜດຳເນີນການ.

ກອງເລຂາ TFCS ຍັງບໍ່ສາມາດຕິດຕາມການປະຕິບັດງານຂອງຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບບັນດາກິດຈະກຳທີ່ກຳນົດໃນຕາຕະລາງການຈັດຕັ້ງປະຕິບັດແຜນດຳເນີນງານ TFRM ເນື່ອງຈາກບໍ່ໄດ້ຮັບການລາຍງານທີ່ມີແບບແຜນຈາກພວກເຂົາ. ແບບຟອມທີ່ລະອຽດ ໄດ້ນຳສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ສຳລັບການລາຍງານຄວາມຄືບໜ້າ ໃນໄລຍະເລີ່ມຕົ້ນແຜນດຳເນີນງານ ແຕ່ຂະແໜງການທີ່ກ່ຽວຂ້ອງ ບໍ່ໄດ້ມີການຕິດຕາມ ແລະ ບໍ່ມີການຈັດຕັ້ງ ແລະ ບໍ່ລາຍງານເປັນປົກກະຕິ, ບາງຄັ້ງແມ່ນຂ້ອນຂ້າງມີລັກສະນະທົ່ວໄປ ໂດຍຂາດລາຍລະອຽດສະເພາະ. ກອງເລຂາ TFCS ຕ້ອງຮຽກຮ້ອງໃຫ້ມີການລາຍງານຄວາມໜ້າເປັນປົກກະຕິ ຊຶ່ງຈະສາມາດຊ່ວຍຄະນະກຳມະການ NTFC ໃນການຕິດຕາມໃນສ່ວນທີ່ຂະແໜງການໃດໜຶ່ງ ບໍ່ຈັດຕັ້ງປະຕິບັດ ຫຼື ຊັກຊ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານ. ໃນຄວາມເປັນຈິງແລ້ວ, ພະນັກງານຂອງກົມການນຳເຂົ້າ ແລະ ສົ່ງອອກ ຈຳນວນໜຶ່ງ ທີ່ໄດ້ຮັບຄວາມໄວ້ວາງໃຈ ຕາມໜ້າທີ່ຂອງກອງເລຂາ ແມ່ນເຫັນໄດ້ຊັດເຈນວ່າຍັງບໍ່ພຽງພໍ ແລະ ບໍ່ມີຄວາມກະຕືລືລົ້ນທີ່ຈະມີສ່ວນຮ່ວມໃນການຕິດຕາມຂະແໜງການທີ່ກ່ຽວຂ້ອງ ຢ່າງໃກ້ຊິດ.

## 2.2 ການສ້າງຄວາມເຂັ້ມແຂງໂຄງສ້າງການບໍລິຫານ ໃນລະດັບແຂວງ

ແຜນດຳເນີນງານ ໄດ້ສະເໜີແນະໃຫ້ມີການສ້າງຄວາມເຂັ້ມແຂງໂຄງສ້າງການບໍລິຫານໃນລະດັບແຂວງ ເພື່ອການປະສານງານ, ຕິດຕາມ ແລະ ການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນແຂວງທີ່ດີຂຶ້ນ. ການເພີ່ມທະວີການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແມ່ນມີຄວາມສຳຄັນ ໂດຍສະເພາະເພື່ອແກ້ໄຂບັນຫາຕ່າງໆໃນຂັ້ນຈັດຕັ້ງປະຕິບັດ.

### 2.2.1 ການສ້າງຕັ້ງຫ້ອງການກອງເລຂາ/ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ໃນແຕ່ລະແຂວງ

ແຜນດຳເນີນງານ TFRM ໄດ້ໃຫ້ຂໍ້ສະເໜີແນະໃນການສ້າງຕັ້ງຫ້ອງການກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ແຕ່ລະແຂວງ ໂດຍສອດຄ່ອງກັບກອງເລຂາຢູ່ຂັ້ນສູນກາງ ເພື່ອໃຫ້ການປະສານງານ ແລະ ການຕິດຕາມ ທີ່ມີປະສິດທິພາບ ຊຶ່ງມີຄວາມຈຳເປັນສຳລັບການຈັດຕັ້ງປະຕິບັດກິດຈະກຳຂອງແຜນດຳເນີນງານ ຢູ່ຂັ້ນແຂວງ. ເຖິງຢ່າງໃດກໍ່ຕາມ, ນັບແຕ່ກອງເລຂາ TFS ໄດ້ຖືກປ່ຽນຊື່ເປັນກອງເລຂາ TFCS, ການສະເໜີເອົາຂະແໜງການຮ່ວມງານຢູ່ບັນດາແຂວງ ໄດ້ຖືກປ່ຽນເປັນຊື່ຄະນະກຳມະການ PTFC. ອີງຕາມຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 48/ນຍ ໄດ້ນຳໃຊ້ຊື່ໃໝ່ເຫຼົ່ານີ້ ໃນຂໍ້ຕົກລົງດັ່ງກ່າວ. ດັ່ງທີ່ກ່າວມາຂ້າງເທິງ, ຄະນະກຳມະການ PTFCs ໄດ້ຖືກສ້າງຕັ້ງຂຶ້ນໃນທຸກແຂວງ ໂດຍສອດຄ່ອງກັບຂໍ້ຕົກລົງ ເລກທີ 48/ນຍ.

ຄະນະກຳມະການ PTFCs ແມ່ນທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນຫົວໜ້າຄະນະ ໃນແຕ່ລະແຂວງ ແລະ ລວມມີທຸກຫົວໜ້າ/ຮອງຫົວໜ້າ ພະແນກການທີ່ກ່ຽວຂ້ອງກັບການຄ້າ ພາຍໃນແຂວງ ເປັນສະມາຊິກ. ຍັງລວມມີ ຂະແໜງການນຳເຂົ້າ ແລະ ສົ່ງອອກ, ຂະແໜງການພາສີ, ຂະແໜງການຂົນສົ່ງ, ຂະແໜງການອາຫານ ແລະ ຢາ, ຂະແໜງການປູກຝັງ, ຂະແໜງການລ້ຽງສັດ ແລະ ການປະມົງ, ຂະແໜງການມາດຕະຖານ ແລະເຕັກໂນໂລຊີ ແລະ ອື່ນໆ ເປັນຮອງຫົວໜ້າຫົວໜ້າຄະນະ PTFC. ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ຖືກແຕ່ງຕັ້ງ ເປັນຫົວໜ້າຄະນະ ເພື່ອໃຫ້ການປະສານງານ ກັບ ກົມການນຳເຂົ້າ ແລະ ສົ່ງອອກ ຊຶ່ງເຮັດວຽກເປັນກອງເລຂາຄະນະກຳມະການ NTFC ມີຄວາມສະດວກ. ນອກຈາກນີ້, ຍັງຊ່ວຍໃຫ້ເຂົ້າເຖິງການສະໜັບສະໜູນງົບປະມານທີ່ຈຳເປັນຈາກໂຄງການ LCT ຕາມທີ່ໄດ້ກຳນົດໄວ້ໃນທິດຊີ້ນຳຂອງທ່ານນາຍົກລັດຖະມົນຕີ. ຄະນະກຳມະການ PTFC ຍັງລວມເອົາຮອງປະທານສະພາການຄ້າ ແລະ ອຸດສາຫະກຳ ໃນແຕ່ລະແຂວງ ເປັນຄະນະ ເພື່ອໃຫ້ພາກທຸລະກິດ ມີສ່ວນກ່ຽວຂ້ອງໃນບັນດາກິດຈະກຳຂອງແຜນດຳເນີນງານ ແລະ ການຕັດສິນໃຈບັນຫາ.

ອີງຕາມ, ຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ຄະນະກຳມະການ PTFC ແມ່ນຕ້ອງຈັດກອງປະຊຸມສອງຄັ້ງ ຕໍ່ປີ. ເຖິງຢ່າງໃດກໍ່ຕາມ, ເລື້ອຍໆແລ້ວລະບອບກອງປະຊຸມນີ້ ຍັງບໍ່ໄດ້ປະຕິບັດຕາມຢ່າງເຂັ້ມງວດ. ແຕ່ເຖິງຢາງໃດກໍ່ຕາມ, ຍັງຄວາມເປັນຈິງທີ່ວ່າ ຄະນະກຳມະການໃໝ່ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ການປັບປຸງການປະສານງານ ແລະການສ້າງຄວາມເຂົ້າໃຈ ກ່ຽວກັບບັນຫາການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນແຂວງ. ພວກເຂົາໄດ້ນຳເອົາຄວາມຮັບຜິດຊອບຂອງການຈັດຕັ້ງປະຕິບັດແຜນດຳເນີນງານ TFRM ສະເໜີຕໍ່ຂັ້ນລັດຖະບານ. ພະນັກງານຂອງກົມການນຳເຂົ້າ ແລະ ສົ່ງອອກ ໄດ້ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການ PTFC ແລະ ເຮັດໜ້າທີ່ໃນການເປັນຂົວຕໍ່ລະຫວ່າງຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດ ແລະ ການຕິດຕາມກິດຈະກຳທີ່ນອນໃນແຜນດຳເນີນງານ. ພວກເຂົາ ຍັງໄດ້ຈັດກອງປະຊຸມສ້າງຂີດຄວາມສາມາດ ໃຫ້ແກ່ກອງເລຂາຄະນະກຳມະການ PTFC ໂດຍນຳໃຊ້ການສະໜັບສະໜູນຂອງໂຄງການ ແລະ ຊ່ວຍແກ້ໄຂບັນຫາຕ່າງໆທີ່ມີຄວາມຂັດແຍ່ງກັນ.

### 2.2.2 ການແຕ່ງຕັ້ງຈຸດປະສານງານອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ

ເພື່ອປັບປຸງການປະສານງານກັບພະນັກງານຢູ່ຂັ້ນແຂວງ, ແຜນດຳເນີນງານ TFRM ໄດ້ກຳນົດໃຫ້ມີການແຕ່ງຕັ້ງຈຸດປະສານງານຢູ່ທຸກຂະແໜງການໃນແຕ່ລະແຂວງ. ສິ່ງດັ່ງກ່າວ, ແມ່ນໄດ້ສຳເລັດແລ້ວ ໂດຍແມ່ນເຈົ້າແຂວງໃນແຕ່ລະແຂວງ ກຳນົດໃຫ້ມີການສ້າງຕັ້ງຄະນະກຳມະການ PTFC ໃນແຂວງຂອງຕົນ ຕາມຂໍ້ຕົກລົງ ເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018, ຄະນະກຳມະການ PTFC ລວມມີຫົວໜ້າ/ຮອງຫົວໜ້າ ພະແນກການທີ່ກ່ຽວຂ້ອງ ຊຶ່ງປົກກະຕິໄດ້ຖືກແຕ່ງຕັ້ງເປັນຈຸດປະສານງານຢູ່ແຂວງ ເປັນສະມາຊິກຂອງຄະນະ.

## 2.3 ມາດຕະການບູລິມະສິດ ເພື່ອປັບປຸງມາດຕະຖານການບໍລິການ, ການຫ້າມຈຸດກວດກາຕາມເສັ້ນທາງ ແລະ ອື່ນໆ

ໄດ້ມີການລະບຸມາດຕະການພິເສດໃນແຜນດຳເນີນງານ ສຳລັບການປະຕິບັດທີ່ເປັນບູລິມະສິດ. ບາງມາດຕະການບູລິມະສິດເຊັ່ນ: ການເຜີຍແຜ່ບັນດາຂັ້ນຕອນ, ແຜນງານຜູ້ປະກອບການເອອີໂອ ແລະ ລະບົບປະຕູດຽວ ແມ່ນສ່ວນໜຶ່ງຂອງສັນຍາ WTO-TFA ແຕ່ຖືກແຍກອອກມາເພື່ອເນັ້ນໜັກເປັນພິເສດ ແລະ ການປະຕິບັດທັນທີພາຍໃຕ້ເສົາຄໍ້າຍຸດທະສາດນີ້.

### 2.3.1 ການເຜີຍແຜ່ຂໍ້ຮຽກຮ້ອງດ້ານເອກະສານ ແລະ ຂັ້ນຕອນລະອຽດ ແລະ ມາດຕະຖານການບໍລິການທີ່ກຳນົດມາດຕະຖານ ແລະ ເວລາຂອງການໃຫ້ບໍລິການ

ດັ່ງທີ່ໄດ້ຮຽກຮ້ອງໃນແຜນດຳເນີນງານ, ທຸກຂະແໜງການ ຕ້ອງຮັບປະກັນວ່າກົດໝາຍ, ລະບຽບ, ຂັ້ນຕອນ, ຄຳແນະນຳ, ຂໍ້ຮຽກຮ້ອງ ແລະ ແບບຟອມທາງດ້ານເອກະສານປະກອບ ຂອງພວກເຂົາທີ່ຕິດພັນກັບການຄ້າ ໄດ້ເອົາລົງໃນເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າ (LTP), ເປັນແບບເອເລັກໂຕຣນິກທັງສອງພາສາ (ລາວ ແລະ ອັງກິດ) ເພື່ອໃຫ້ສາມາດເຂົ້າເຖິງຜ່ານອອນໄລນ໌ ຢູ່ທຸກແຫ່ງໃນໂລກ. ເວັບໄຊທ໌ LTP ແມ່ນໄດ້ຮັບການປັບປຸງໃຫ້ທັນຍຸກທັນສະໄໝຢູ່ຕະຫຼອດ ໂດຍກົມການນຳເຂົ້າ ແລະ ສົ່ງອອກ ຊຶ່ງທັງຮັບຜິດຊອບໃນການດຳເນີນການ ແລະ ບຳລຸງຮັກສາ. ພາກເອກະຊົນ, ບໍລິສັດໄຊເບີເຣຍ ມີສ່ວນຮ່ວມໃນການບຳລຸງຮັກສາທາງດ້ານເຕັກນິກ ແລະ ມີພະນັກງານຂອງກົມການນຳເຂົ້າ ແລະ ສົ່ງອອກ ໄດ້ຖືກແຕ່ງຕັ້ງເພື່ອປະສານງານເອົາເນື້ອໃນ (ເອກະສານ) ຈາກຂະແໜງການທີ່ກ່ຽວຂ້ອງ ທັງພາສາລາວ ແລະ ພາສາອັງກິດ. ກົມການນຳເຂົ້າ ແລະ ສົ່ງອອກ ດຳເນີນການແປເອກະສານທີ່ເປັນນິຕິກຳທີ່ບໍ່ເປັນພາສາອັງກິດ. ພ້ອມດຽວກັນ, ຍັງໄດ້ອອກຂ່າວດ່ວນ ແລະ ປະກາດ ກ່ຽວກັບບັນຫາການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ສຳຄັນ. ນອກຈາກເວັບໄຊທ໌ LTP, ຫຼາຍຂະແໜງການ ເຊັ່ນ: ກົມພາສີ, ກົມຄຸ້ມຄອງບໍ່ແຮ່, ກົມຂົນສົ່ງ, ກົມມາດຕະຖານ ແລະ ວັດແທກ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມເຕັກໂນໂລຊີດີຈີຕອນ ໄດ້ເອົາເອກະສານທີ່ກ່ຽວຂ້ອງລົງໃນເວັບໄຊທ໌ຂອງຕົນ. ເຖິງຢ່າງໃດກໍ່ຕາມ, ໂດຍປົກກະຕິແລ້ວການປັບປຸງເວັບໄຊທ໌ໃຫ້ທັນຍຸກທັນເຫດການ ແມ່ນດຳເນີນການໂດຍພະນັກງານຂອງກົມການນຳເຂົ້າ ແລະ ສົ່ງອອກ ໂດຍການດຶງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ຈາກເວັບໄຊທ໌ຕ່າງໆ ແລະ ແຫຼ່ງຂໍ້ມູນອື່ນໆ. ຂະແໜງການທີ່ກ່ຽວຂ້ອງ ຕ້ອງເຂົ້າໃຈເຖິງຄວາມສຳຄັນໃນການສະໜອງຂໍ້ມູນຂ່າວສານລົງໃນເວັບໄຊທ໌ LTP ຫຼາຍກວ່າເວັບໄຊທ໌ຂອງພວກເຂົາ ເນື່ອງຈາກເວັບໄຊທ໌ LTP ເປັນແພລດຟອມດຽວທີ່ມີທຸກຂໍ້ມູນຂ່າວສານທີ່ຈຳເປັນ ເພື່ອການປະຕິບັດທາງດ້ານລະບຽບການ ກ່ຽວກັບການຄ້າຂ້າມແດນ ໃຫ້ສາມາດເຂົ້າເຖິງຂໍ້ມູນທາງດ້ານການຄ້າໄດ້ງ່າຍ. ການແປເອກະສານເປັນພາສາອັງກິດ ລົງໃນເວັບໄຊທ໌ LTP ແມ່ນມີຄວາມສຳຄັນເພື່ອໃຫ້ພາກສ່ວນທີ່ມີຄວາມສົນໃຈຢູ່ຕ່າງປະເທດ ສາມາດໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນເພື່ອການຄ້າກັບ ສປປ ລາວ. ການຮັບປະກັນຄວາມໂປ່ງໃສແມ່ນຫຼັກການລວມຂອງການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ດັ່ງນັ້ນ ຂະແໜງການທີ່ກ່ຽວຂ້ອງຕ້ອງມີຄວາມເປັນເຈົ້າຂອງໃນການເອົາບັນດາຂໍ້ຮຽກຮ້ອງດ້ານລະບຽບການ, ຂັ້ນຕອນ ແລະ ເອກະສານ ຂອງພວກເຂົາ ສຳລັບການກວດປ່ອຍສິນຄ້າຂ້າມແດນ ລົງໃນເວັບໄຊທ໌ LTP ໃຫ້ທັນຍຸກທັນສະໄໝ ຢ່າງເຕັມສ່ວນ. ໃນຄວາມເປັນຈິງແລ້ວ, ພວກເຂົາ ຍັງຕ້ອງຮັບປະກັນວ່າຮ່າງກົດໝາຍ, ດຳລັດ ແລະ ລະບຽບການ ໄດ້ເຜີຍແຜ່ລົງໃນເວັບໄຊທ໌ LTP ເພື່ອແຈ້ງໃຫ້ຊາບລ່ວງໜ້າ ແລະ ການຮັບຄຳຄິດເຫັນຂອງການຄ້າ ຢ່າງໜ້ອຍ 60 ມື້ ກ່ອນມີຜົນບັງຄັບໃຊ້.

ແຜນດຳເນີນງານ ໄດ້ມີຂໍ້ສະເໜີແນະໃຫ້ທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອພັດທະນາມາດຕະຖານການບໍລິການ ທີ່ກຳນົດມາດຕະຖານ ແລະ ເວລາ ຂອງການໃຫ້ບໍລິການທີ່ຊັດເຈນໃນເບື້ອງຂອງພວກເຂົາ ເພື່ອການຄ້າ. ໄດ້ມີການຈັດກອງປະຊຸມສຳມະນາເພື່ອປຶກສາຫາລື ກ່ຽວກັບຄຳແນະນຳ ແລະ ແບບຟອມລະອຽດ ສຳລັບຈຸດປະສົງດັ່ງກ່າວ.

ເຖິງຢ່າງໃດກໍ່ຕາມ, ມີພຽງກົມການນໍາເຂົ້າ ແລະ ສົ່ງອອກ ທີ່ໄດ້ສໍາເລັດການພັດທະນາມາດຕະຖານການບໍລິການ ເພື່ອຮັບປະກັນມາດຕະຖານການບໍລິການທີ່ສູງ ໃຫ້ແກ່ຜູ້ຄ້າຂອງພວກເຂົາ. ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ເອົາມາດຕະຖານການບໍລິການລົງໃນເວັບໄຊທ໌[10] ທີ່ໄດ້ປະກາດວ່າ ການອອກອະນຸຍາດນໍາເຂົ້າຍານພາຫະນະ ແລະ ນໍ້າມັນເຊື້ອໄຟ ໃຊ້ເວລາພາຍໃນ 1 ວັນ, ການຍື່ນຂໍອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າສົ່ງອອກ ໃຊ້ເວລາພາຍໃນ 2 ຊົ່ວໂມງ. ໃນຄວາມເປັນຈິງແລ້ວ, ເວລາໃນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບເອເລັກໂຕຼນິກ (e-CO) ຜ່ານການຍື່ນເອກະສານຜ່ານອອນໄລນ໌ ອ້າງວ່າໃຊ້ເວລາພຽງ 1 ຊົ່ວໂມງ. ເຖິງຢ່າງໃດກໍ່ຕາມ, ມີການບໍລິການບາງອັນໃຊ້ເວລາດົນກວ່າ ແຕ່ກົມການນໍາເຂົ້າ ແລະ ສົ່ງອອກ ກໍາລັງພະຍາຍາມຫຼຸດຜ່ອນເວລາໃນການດໍາເນີນການມາດຕະຖານການບໍລິການເຫຼົ່ານີ້ ດ້ວຍການປັບປຸງຂັ້ນຕອນການດໍາເນີນການ ໃຫ້ດີຂຶ້ນ. ມາດຕະຖານການບໍລິການສະບັບລ່າສຸດ ອອກໃນເດືອນ ມີນາ 2022, ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດຄວາມຄືບໜ້າຂອງການປັບປຸງເວລາໃນການອອກອະນຸຍາດໂດຍສົມທຽບກັບມາດຕະຖານການບໍລິການໃນປີ 2018 ທີ່ຖືກພັດທະນາໂດຍກົມການນໍາເຂົ້າ ແລະ ສົ່ງອອກ ໃນໄລຍະທໍາອິດ, ຊຶ່ງເປັນສິ່ງມະຫັດສະຈັນ. ມີຄວາມຫຍຸ້ງຍາກໃນການສ້າງຄວາມເຂົ້າໃຈວ່າເປັນຫຍັງຂະແໜງການອື່ນໆ ຈຶ່ງບໍ່ມີຄວາມກະຕືລືລົ້ນໃນການປະຕິບັດທີ່ເປັນແບບຢ່າງນີ້. ມາດຕະຖານການບໍລິການ ຍັງຕ້ອງນໍາສົ່ງຮ່າງດໍາລັດ ແລະ ລະບຽບການໃຫ້ພາກທຸລະກິດ ແລະ ຈັດກອງປະຊຸມລ່ວງໜ້າກັບພວກເຂົາ ເປັນຢ່າງດີ ກ່ອນເຮັດໃຫ້ສໍາເລັດ ແລະ ມີຜົນບັງຄັບໃຊ້.

### 2.3.2 ການຂະຫຍາຍເວລາເຮັດວຽກຢູ່ດ່ານຂ້າມແດນສໍາຄັນ ແລະ ເຮັດວຽກຕະຫຼອດ 24 ຊົ່ວໂມງ

ຕາມຂໍ້ສະເໜີຂອງພາກທຸລະກິດ, ແຜນດໍາເນີນງານ ໄດ້ມີຂໍ້ສະເໜີແນະໃນການຂະຫຍາຍເວລາເຮັດວຽກ ຢູ່ດ່ານຂ້າມແດນສໍາຄັນ ແລະ ເປີດດ່ານຕະຫຼອດ ຖ້າການສຶກສາຄວາມເປັນໄປໄດ້ມີເຫດຜົນໃຫ້ມີຂໍ້ຮຽກຮ້ອງດັ່ງກ່າວ. ຂະແໜງພາສີ ເຫັນວ່າຄວາມຕ້ອງການໃນການເປີດດ່ານຕະຫຼອດ ຈະສາມາດຕອບສະໜອງໄດ້ກໍ່ຕໍ່ເມື່ອດ່ານຄູ່ຊາຍແດນອີກຝັ່ງໜຶ່ງ ເຫັນພ້ອມນໍາ. ພ້ອມດຽວກັນ, ຍັງຕ້ອງການການສະໜັບສະໜູນຈາກຂະແໜງການລັດທີ່ກ່ຽວຂ້ອງຢູ່ດ່ານຊາຍແດນ. ໃນການເຊື່ອມຕໍ່ເວລາເຮັດວຽກນີ້, ຂະແໜງພາສີ ແນະນໍາໃຫ້ມີການສຶກສາຄວາມເປັນໄປໄດ້ ເພື່ອລະບຸເວລາເຮັດວຽກທີ່ເໝາະສົມ ໃນແຕ່ລະດ່ານຊາຍແດນ ຊຶ່ງອາດແຕກຕ່າງຈາກດ່ານອື່ນ ອີງຕາມແນວໂນ້ມການຂະຫຍາຍຕົວຂອງປະລິມານການຄ້າ, ຄວາມພ້ອມດ້ານຊັບພະຍາກອນ ແລະ ການຕົກລົງຂອງດ່ານຄູ່ຊາຍແດນ. ໃນຂະນະທີ່ບໍ່ມີການດໍາເນີນການສຶກສາຄວາມເປັນໄປໄດ້ກ່ຽວກັບຫົວຂໍ້ດັ່ງກ່າວ, ແມ່ນມີການຂະຫຍາຍເວລາເຮັດວຽກກັບ ດ່ານຄູ່ຊາຍແດນອີກຝັ່ງໜຶ່ງ ຢູ່ບາງດ່ານ, ມີສອງດ່ານຊາຍແດນ ໄດ້ເປີດບໍລິການທຸກມື້. ທໍາອິດ, ແມ່ນດ່ານສາກົນບໍ່ເຕ່ນ ທີ່ມີປະລິມານການສັນຈອນຂະໜາດໃຫຍ່ ຊຶ່ງເປັນເຫດຜົນໃຫ້ມີການຂະຫຍາຍເວລາເຮັດວຽກ ແລະ ຕໍ່ມາຍັງໄດ້ຂະຫຍາຍເວລາເຮັດວຽກຢູ່ດ່ານສາກົນວັງເຕົ່າ. ມີການປະສານງານເວລາເຮັດວຽກ ກັບ ຄະນະຄຸ້ມຄອງດ່ານຊາຍແດນອີກຝັ່ງໜຶ່ງ. ການເປີດບໍລິການຂອງທ່າບົກໃນບໍ່ດົນມານີ້ ຢູ່ດ່ານສາກົນທ່າບົກທ່ານາແລ້ງ ແລະ ດ່ານສາກົນທ່າບົກສະຫວັນນະເຂດ ຊຶ່ງໄດ້ຮັບການລາຍງານວ່າ ໄດ້ໃຫ້ບໍລິການສິ່ງອໍານວຍຄວາມສະດວກຕ່າງໆທຸກມື້ ແຕ່ເວລາ 8 ໂມງເຊົ້າ ຫາ 10 ໂມງແລງ. ເຖິງຢ່າງໃດກໍ່ຕາມ, ເວລາໃນການກວດປ່ອຍສິນຄ້າ ແມ່ນດໍາເນີນການສະເພາະໂມງເຮັດວຽກ ເນື່ອງຈາກພະນັກງານລັດ ບໍ່ໄດ້ປະຈໍາການຕະຫຼອດ. ຕາມທີ່ໄດ້ຮັບຂໍ້ມູນທີ່ບໍ່ເປັນທາງການ, ສິນຄ້າປະເພດເນົ່າເປື່ອຍ ແລະ ຮີບດ່ວນ ໄດ້ຮັບການກວດປ່ອຍຢູ່ບາງດ່ານ ເຖິງວ່າເປັນເວລາຫຼັງໂມງເຮັດວຽກ ກໍ່ຕາມ. ແຕ່ສິ່ງນີ້ ເປັນການກະກຽມແບບບໍ່ເປັນທາງການ ຊຶ່ງຈໍາເປັນຕ້ອງໄດ້ຮັບອະນຸຍາດຢ່າງເປັນທາງການໃນການຊໍາລະເງິນລ່ວງເວລາ.

[10] ອີງຕາມ ແຈ້ງການ ເລກທີ 0826/ອຄ.ກຂອ, ລົງວັນທີ 2 ມີນາ 2022.

### 2.3.3 ການອອກຄໍາສັ່ງເພື່ອຍົກເລີກຈຸດກວດກາຕາມເສັ້ນທາງ ນອກເຂດພາສີ ແລະ ການກະກຽມຂັ້ນຕອນທີ່ເປັນເອກະພາບ ສໍາລັບການລິເລີ່ມການກວດກາຈຸດດຽວ

ການພິຈາລະນາຄວາມຂັດແຍ່ງທີ່ເກີດຈາກການຕັ້ງຈຸດກວດກາຕາມເສັ້ນທາງຂອງການຄ້າຂ້າມແດນ ຂອງຂະແໜງການທີ່ກ່ຽວຂ້ອງ, ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ຍົກລະດັບບັນຫາດັ່ງກ່າວ ໃຫ້ມີການແຊກແຊງຂອງທ່ານນາຍົກລັດຖະມົນຕີ ຜູ້ທີ່ອອກຄໍາສັ່ງໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ກະກຽມລະບຽບການໃນຫົວຂໍ້ສະເພາະກ່ຽວກັບການສະເໜີການລຶບລ້າງຈຸດກວດກາຕາມເສັ້ນທາງ. ອີງຕາມທິດຊີ້ນໍາທີ່ໄດ້ກ່າວມາຂ້າງເທິງ, ພາຍຫຼັງໄດ້ມີການປຶກສາຫາລືຢ່າງກວ້າງຂວາງ ກັບ ຂະແໜງການທີ່ກ່ຽວຂ້ອງ, ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ຮ່າງຂໍ້ສະເໜີເພື່ອລຶບລ້າງການຕັ້ງຈຸດກວດກາຕາມເສັ້ນທາງທີ່ບໍ່ຈໍາເປັນ ແລະ ສ້າງສິ່ງກີດຂວາງໃຫ້ແກ່ການເຄື່ອນຍ້າຍສິນຄ້າ. ຂໍ້ສະເໜີດັ່ງກ່າວ ໄດ້ຖືກຮັບຮອງ ແລະ ວາງອອກ ຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 12/ນຍ ໃນປີ 2019[11]. ອີງຕາມຄໍາສັ່ງສະບັບດັ່ງກ່າວ, ມີພຽງ 3 ຂະແໜງການທີ່ອະນຸຍາດໃຫ້ສ້າງຕັ້ງຈຸດກວດກາຕາມເສັ້ນທາງ ເຊັ່ນ: ຂະແໜງຕໍາຫຼວດຈະລາຈອນ ເພື່ອກວດກາເອກະສານສໍາລັບການບັງຄັບໃຊ້ລະບຽບການສັນຈອນ, ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອກວດການໍ້າໜັກ ແລະ ຂະໜາດຂອງລົດຂົນສົ່ງ, ຂະແໜງພາສີ ເພື່ອປະຕິບັດວຽກງານສະກັດກັ້ນການລັກລອບໜີພາສີ. ເຖິງຢ່າງໃດກໍ່ຕາມ, ມີພຽງຂະແໜງພາສີ ທີ່ອະນຸຍາດໃຫ້ກວດກາສິນຄ້າເທົ່ານັ້ນ, ສ່ວນຂະແໜງການອື່ນ ແມ່ນຖືກຫ້າມໃນການເຮັດແນວນັ້ນ ຢ່າງເດັດຂາດ.

ຄໍາສັ່ງສະບັບດັ່ງກ່າວ ມີຜົນກະທົບທີ່ເຫັນໄດ້ໃນເບື້ອງຕົ້ນ ເນື່ອງຈາກຈໍານວນການຕັ້ງຈຸດກວດກາຕາມເສັ້ນທາງໄດ້ຫຼຸດລົງ, ເຮັດໃຫ້ສາມາດເຄື່ອນຍ້າຍ, ນໍາເຂົ້າ-ສົ່ງອອກ ແລະ ຜ່ານແດນ ສິນຄ້າ ນອກເຂດພາສີ ໂດຍບໍ່ມີສິ່ງກີດຂວາງ. ການລຶບລ້າງຈຸດກວດກາຕາມເສັ້ນທາງ ໄດ້ມີແຈ້ງການສະເພາະຢູ່ບາງແຂວງ ເຊັ່ນ: ແຂວງສະຫວັນນະເຂດ ແລະ ບໍລິຄໍາໄຊ ໂດຍອີງຕາມຄໍາສັ່ງດັ່ງກ່າວ, ບັນດາເຈົ້າແຂວງ ໄດ້ອອກຄໍາສັ່ງສະເພາະໃນການລຶບລ້າງການກວດກາຕາມເສັ້ນທາງທີ່ບໍ່ຈໍາເປັນ. ເຖິງຢ່າງໃດກໍ່ຕາມ, ການຕັ້ງຈຸດກວດກາຕາມເສັ້ນທາງ ເລີ່ມປະກົດຂຶ້ນຄືນ ເທື່ອລະໜ້ອຍ ໂດຍສະເພາະຈຸດກວດກາຂອງບັນດາຂະແໜງການຢູ່ຂັ້ນເມືອງ[12]. ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ໄດ້ແຈ້ງວ່າຂະແໜງການຢູ່ຂັ້ນເມືອງ ໄດ້ຕັ້ງຈຸດກວດກາຕາມເສັ້ນທາງ ສໍາລັບສິນຄ້າກະສິກໍາ ເຊັ່ນ: ກາເຟ ແລະ ມັນຕົ້ນ (ຢູ່ບັນດາແຂວງພາກໃຕ້ໃນລະດູການຜະລິດ) ຊຶ່ງສ້າງສິ່ງກີດຂວາງໃຫ້ແກ່ການສົ່ງອອກຂອງພວກເຂົາ.

ໃນທາງກົງກັນຂ້າມ, ຍັງບໍ່ມີຄວາມຄືບໜ້າໃນການພັດທະນາການກວດກາຈຸດດຽວ ຫຼື ຮ່ວມກັນ ໂດຍຂະແໜງພາສີ ແລະ ຂະແໜງການອື່ນທີ່ມີໜ່ວຍງານປະຈໍາດ່ານ. ຊຶ່ງຂຶ້ນຢູ່ກັບການພັດທະນາແຜນງານບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ ຊຶ່ງຂະແໜງພາສີ ຈະໃຫ້ຂໍ້ມູນກ່ຽວກັບລະບົບບໍລິຫານຄວາມສ່ຽງ (Selectivity Module) ຂອງລະບົບແຈ້ງພາສີແບບອັດຕະໂນມັດ (ASYCUDA) ໃຫ້ກັບຂະແໜງການອື່ນທີ່ກ່ຽວຂ້ອງ ສໍາລັບການກວດກາຢູ່ດ່ານຊາຍແດນ ຕາມຄວາມສ່ຽງ ແລະ ການກວດກາຮ່ວມກັນ. ບົດບັນທຶກຄວາມເຂົ້າໃຈ ໄດ້ຖືກເຊັນລົງນາມ ລະຫວ່າງກົມພາສີ ແລະ ກົມທີ່ກ່ຽວຂ້ອງ ໃນວັນທີ 13 ທັນວາ 2021 ໂດຍແມ່ນກົມພາສີ ຈະເປັນຜູ້ພັດທະນາຂັ້ນຕອນການດໍາເນີນງານທີ່ເປັນມາດຕະຖານ ກ່ຽວກັບການປະຕິບັດງານການບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ ແລະ ການກວດກາຮ່ວມກັນ ໂດຍຜ່ານການປຶກສາຫາລື ກັບ ຂະແໜງການອື່ນທີ່ກ່ຽວຂ້ອງ. ເຖິງຢ່າງໃດກໍ່ຕາມ, ຍັງຄົງລໍຖ້າຄວາມຄືບໜ້າກ່ຽວກັບການກວດກາຮ່ວມກັນ.

[11] ຄໍາສັ່ງ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອໍານວຍຄວາມສະດວກໃຫ້ແກ່ການນໍາເຂົ້າ-ສົ່ງອອກ, ການນໍາເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ.

[12] ຄໍາສັ່ງຂອງນາຍົກລັດຖະມົນຕີ ອະນຸຍາດໃຫ້ແກ່ເຈົ້າແຂວງ ສ້າງຕັ້ງຈຸດກວດກາຕາມເສັ້ນທາງຊົ່ວຄາວ ສໍາລັບຈຸດປະສົງສະເພາະ.

### 2.3.4 ການລວມສູນການຊໍາລະພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການອື່ນໆ ຢູ່ດ່ານ

ການຊໍາລະສະສາງ ຍັງບໍ່ທັນເປັນແບບລວມສູນ ຈົນມາເຖິງລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດ (LNSW) ໄດ້ຮັບການສ້າງຕັ້ງຂຶ້ນ ຊຶ່ງມີສິ່ງອໍານວຍຄວາມສະດວກໃນການຊໍາລະຄ່າທໍານຽມການອອກໃບອະນຸຍາດ, ໃບຢັ້ງຢືນ ແລະ ຄ່າບໍລິການພິຈາລະນາເອກະສານທີ່ຈໍາເປັນ ຜ່ານທາງເອເລັກໂຕຼນິກ ເພື່ອຊໍາລະໃຫ້ຂະແໜງການທີ່ກ່ຽວຂ້ອງ ລວມທັງຄ່າພາສີ ແລະ ອາກອນ ທີ່ຈັດເກັບໂດຍຂະແໜງພາສີ. ການຊໍາລະດັ່ງກ່າວ ຍັງຈໍາກັດຢູ່ແຕ່ກົມການນໍາເຂົ້າ ແລະ ສົ່ງອອກ ແລະ ກົມຂົນສົ່ງ ຊຶ່ງປະຈຸບັນເປັນສອງກົມທີ່ນໍາໃຊ້ລະບົບ LNSW. ເຖິງຢ່າງໃດກໍ່ຕາມ, ບັນດາກົມເຫຼົ່ານີ້ ຍັງບໍ່ນໍາໃຊ້ສິ່ງອໍານວຍຄວາມສະດວກໃນການຊໍາລະແບບເອເລັກໂຕຼນິກ (e-payment) ເຂົ້າໃນການຊໍາລະຄ່າທໍານຽມໃນການອອກໃບອະນຸຍາດ, ໃບອະນຸມັດ, ໃບຢັ້ງຢືນ ທີ່ອອກດ້ວຍລະບົບເຈ້ຍ ຫຼື ນອກຈາກລະບົບ LNSW ເຊັ່ນ: ລະບົບ e-CO. ເວົ້າຢ່າງກົງໄປກົງມາ, ເຖິງວ່າມີລະບົບ e-CO ທີ່ດໍາເນີນເອກະສານແບບເອເລັກໂຕຼນິກ, ແຕ່ຍັງການຊໍາລະຄ່າທໍານຽມ ຍັງເປັນແບບເງິນສົດ ຢູ່. ຍັງບໍ່ທັນມີຄວາມພະຍາຍາມຮ່ວມກັນໃນການລວມສູນການຊໍາລະສະສາງຄ່າທໍານຽມ ແລະ ບໍລິການ ໃນຂະບວນການດໍາເນີນການຢູ່ດ່ານຊາຍແດນ. ໃນຄວາມເປັນຈິງແລ້ວ, ບາງຂະແໜງການ ເຊັ່ນ: ຂະແໜງຂົນສົ່ງ ແລະ ຂະແໜງກັກກັນສັດ ແມ່ນຈັດເກັບຄ່າທໍານຽມດ້ວຍເງິນສົດ ຢູ່ເຄົາເຕີຂອງຕົນທີ່ດ່ານຊາຍແດນ, ບໍ່ຄືກັບພາກສ່ວນອື່ນທີ່ຍອມຮັບເອົາການຊໍາລະຜ່ານທະນາຄານ.

ໃນທາງກົງກັນຂ້າມ ຂະແໜງພາສີ ໄດ້ຂະຫຍາຍການນໍາໃຊ້ສິ່ງອໍານວຍຄວາມສະດວກໃນການຊໍາລະສະສາງ ແບບເອເລັກໂຕຼນິກຂອງຕົນ ຜ່ານລະບົບບັດສະມາດແທັກ ຢູ່ 26 ດ່ານ ຈາກທັງໝົດ 28 ດ່ານຊາຍແດນ ຊຶ່ງຄ່າພາສີ, ອາກອນ ແລະ ຄ່າທໍານຽມການດໍາເນີນການຢູ່ດ່ານ ແມ່ນສາມາດຊໍາລະຢູ່ຈຸດດຽວ ຊຶ່ງເກັບຕາມລັດຖະບັນຍັດ ເລກທີ 002/ປປທ ໃນປີ 2021. ສະນັ້ນ, ໂດຍສ່ວນໃຫຍ່ ຄ່າພາສີ, ອາກອນ ແລະ ອື່ນໆ ແມ່ນຊໍາລະຜ່ານເອເລັກໂຕຼນິກ ໂດຍນໍາໃຊ້ບັດສະມາດແທັກ ຫຼື ຮູບແບບການຊໍາລະຜ່ານທາງລະບົບ LNSW. ເຖິງຢ່າງໃດກໍ່ຕາມ, ຍັງມີການເກັບຄ່າທໍານຽມໂດຍຂະແໜງພາສີ ໃນການອະນຸຍາດໃຫ້ລົດຂົນສົ່ງສິນຄ້າເຂົ້າມາດ່ານ ຫຼື ເຂົ້າມາໃນຕົວເມືອງ ຊຶ່ງເກັບເປັນເງິນສົດ ໃນນາມຂອງກົມຂົນສົ່ງ[13]. ໜ້າແປກໃຈ, ທີ່ຄວາມຜິດປົກກະຕິນີ້ ເກີດຂຶ້ນຢູ່ທ່າບົກທ່ານາແລ້ງ ຊຶ່ງນອກຈາກຂະແໜງພາສີແລ້ວ, ຂະແໜງຂົນສົ່ງ ໄດ້ເກັບຄ່າທໍານຽມດັ່ງກ່າວເປັນເງິນສົດ ເພື່ອຈຸດປະສົງດຽວກັນ ຊຶ່ງຕ້ອງໄດ້ມີເຫດຜົນ ເນື່ອງຈາກປະກົດວ່າເປັນການຊໍ້າຊ້ອນທີ່ຫຼີກລ້ຽງບໍ່ໄດ້.

### 2.3.5 ການລວມເອົາຜູ້ສົ່ງອອກຢ່າງໜ້ອຍ 20 ບໍລິສັດ ເຂົ້າໃນໂຄງການຜູ້ປະກອບການມາດຕະຖານ ເອອີໂອ (AEO)

ການລວມເອົາແຜນງານຜູ້ປະກອບການເອອີໂອ ເປັນມາດຕະການບູລິມະສິດ ທີ່ກໍານົດໃນແຜນດໍາເນີນງານ ເພື່ອຮັບປະກັນການປະຕິບັດແຜນງານດັ່ງກ່າວທັນທີ ແລະ ການຂະຫຍາຍຜົນປະໂຫຍດໃຫ້ແກ່ຜູ້ສົ່ງອອກ. ເຖິງຢ່າງໃດກໍ່ຕາມ, ເຖິງວ່າມີການປັບປຸງແປງດ້ານນິຕິກໍາ ແລະ ມີຄວາມພະຍາຍາມໃນການສ້າງຂີດຄວາມສາມາດ ແລະ ຄວາມເຂົ້າໃຈ, ແຕ່ແຜນງານດັ່ງກ່າວ ຍັງບໍ່ຖືກລິເລີ່ມ. ຂະແໜງພາສີ ໄດ້ຮັບການສະເໜີຂໍເປັນຜູ້ປະກອບເອອີໂອ ຈໍານວນໜຶ່ງ. ເຖິງຢ່າງໃດກໍ່ຕາມ, ບໍ່ມີຜູ້ຄ້າໃດທີ່ມີຄຸນສົມບັດໃນການເປັນຜູ້ປະກອບການເອອີໂອ ເນື່ອງຈາກເງື່ອນໄຂ ແມ່ນເຂັ້ມງວດ. ຂະແໜງພາສີ ຍັງພົບຂໍ້ຫຍຸ້ງຍາກໃນການຢັ້ງຢືນການຕິດຕາມການປະຕິບັດຂອງຜູ້ປະກອບການເອອີໂອ ເນື່ອງຈາກຂາດຂໍ້ມູນຍ້ອນຫຼັງ ກ່ຽວກັບການບໍລິຫານຄວາມສ່ຽງ ແລະ ຜົນການກວດກາ ທີ່ໜ້າເຊື່ອຖື. ນອກຈາກນີ້, ມີຜູ້ປະຕິບັດແຜນງານດັ່ງກ່າວໜ້ອຍຫຼາຍ ເນື່ອງຈາກບໍ່ທັນໃຫ້ສິ່ງຈູງໃຈຫຼາຍເທົ່າທີ່ຄວນ ສໍາລັບການປະຕິບັດຫຼາຍໆເງື່ອນໄຂທີ່ຈໍາເປັນ ເພື່ອໃຫ້ໄດ້ຮັບການອະນຸຍາດ. ຂະແໜງພາສີໄດ້ແຈ້ງວ່າມີ 4 ຜູ້ປະກອບການທີ່ຢູ່ໃນ

[13] ທີ່ດ່ານທ່ານາແລ້ງ, ມີການເກັບຄ່າທໍານຽມລົດຂົນສົ່ງຂາເຂົ້າທີ່ເປັນມາດຕະຖານ ຈໍານວນ 50,000 ກີບ ຕໍ່ຄັນ, ຖ້າລົດຂົນສົ່ງ ຈໍາເປັນຕ້ອງເຂົ້າມາໃນຕົວເມືອງ ແມ່ນຈະເກັບເພີ່ມເຕີມ ຈໍານວນ 250,000 ກີບ ຕໍ່ ຄັນ.

ລາຍຊື່ ທີ່ຖືກຄັດເລືອກ, ແຕ່ທ້າຍສຸດມີພຽງຜູ້ປະກອບການດຽວ ທີ່ຍັງໄດ້ຕາມເງື່ອນໄຂ ຊຶ່ງໄດ້ຮັບການແນະນຳໃຫ້ປະຕິບັດຕາມມາດຕະການຂໍອະນຸຍາດທີ່ຈຳເປັນ ເພື່ອໃຫ້ມີຄຸນສົມບັດໃນການເປັນສະຖານະຜູ້ປະກອບເອອີໂອ. ກົມພາສີ ກຳລັງພິຈາລະນາທີ່ຈະປັບປຸງແຜນງານດັ່ງກ່າວ ເພື່ອເຮັດໃຫ້ມີຄວາມສົນໃຈຫຼາຍຂຶ້ນ ໂດຍນຳໃຊ້ລະບົບການຈັດລະດັບໝວດຂອງຜູ້ປະກອບການເອອີໂອ ເພື່ອໃຫ້ມີການຮັບຮອງຫຼາຍຂຶ້ນ. ຖ້າຫາກແຜນງານຜູ້ປະກອບການເອອີໂອ ໄດ້ຖືກດຳເນີນງານ ພ້ອມກັບຈຳນວນຜູ້ປະກອບການເອອີໂອທີ່ພຽງພໍ, ແຜນງານດັ່ງກ່າວ ຈະກ້າວໄປສູ່ການລົງນາມໃນສັນຍາຮັບຮູ້ຮ່ວມກັນ (MRAs) ກັບປະເທດຄູ່ຄ້າຫຼັກ.

### 2.3.6 ການສ້າງຕັ້ງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ກັບ 5 ຂະແໜງການ ໃນປີ 2019 ແລະ 10 ຂະແໜງການໃນປີ 2020 ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນປີ 2022

ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ໄດ້ເລີ່ມປະຕິບັດໃນປີ 2019 ທີ່ດ່ານສາກົນຂົວມິດຕະພາບ 1 (ທ່ານາແລ້ງ) ສຳລັບການກວດປ່ອຍຍານພາຫະນະ ຊຶ່ງການອອກອະນຸຍາດນຳເຂົ້າແມ່ນດຳເນີນການແບບເອເລັກໂຕຼນິກ ໂດຍກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຂົນສົ່ງ ຜ່ານລະບົບ LNSW. ມີສິ່ງອຳນວຍຄວາມສະດວກໃນການຊຳລະຄ່າທຳນຽມຂອງການອອກອະນຸຍາດແບບເອເລັກໂຕຼນິກ ພ້ອມກັບຄ່າພາສີ ແລະ ອາກອນຕ່າງໆ ໃນລະບົບດຽວ (ການຊຳລະເທື່ອດຽວ) ໃນເວລາກວດປ່ອຍສິນຄ້າຂອງພາສີຢູ່ດ່ານ. ຂອບເຂດຂອງລະບົບ LNSW ຢູ່ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ຖືກຂະຫຍາຍໄປກວມເອົາການອອກອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ແລະ ອາຍແກັສໃນປີ 2021. ເຖິງຢ່າງໃດກໍ່ຕາມ, ດ້ວຍເຫດຜົນບາງຢ່າງທີ່ບໍ່ສາມາດອະທິບາຍໄດ້, ລະບົບ LNSW ຍັງບໍ່ທັນເຊື່ອມໂຍງກັບລະບົບ e-CO ຢູ່ກົມການນຳເຂົ້າ ແລະ ສົ່ງອອກ, ຊຶ່ງນຳໃຊ້ສຳລັບການດຳເນີນເອກະສານສະເໜີຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອເລັກໂຕຼນິກ (e-CO) ຊຶ່ງສາມາດເຊື່ອມໂຍງໄດ້ຂ້ອນຂ້າງງ່າຍ. ລະບົບດັ່ງກ່າວຍັງປູທາງໃຫ້ແກ່ການເຊື່ອມໂຍງກັບລະບົບແຈ້ງພາສີປະຕູດຽວອາຊຽນ ທີ່ໃຊ້ສຳລັບການແລກປ່ຽນຂໍ້ມູນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ D ແບບເອເລັກໂຕຼນິກ (e-Form D) ພາຍໃຕ້ສັນຍາ ວ່າດ້ວຍການຄ້າດານສິນຄ້າອາຊຽນ (ATIGA) ກັບປະເທດສະມາຊິກອາຊຽນອື່ນໆ.

ຕັ້ງແຕ່ນັ້ນມາ, ລະບົບ LNSW ໄດ້ຂະຫຍາຍການນຳໃຊ້ໄປກວມເອົາຫຼາຍໆດ່ານສາກົນ ແລະ ເຂດເສດຖະກິດພິເສດ ແລະ ສາມາດນຳໃຊ້ເພື່ອການກວດປ່ອຍທຸກສິນຄ້າ. ເຖິງຢ່າງໃດກໍ່ຕາມ, ມາຮອດປະຈຸບັນ ຍັງບໍ່ສາມາດຂະຫຍາຍຂອບເຂດການນຳໃຊ້ລະບົບດັ່ງກ່າວ ນອກເໜືອຈາກ 3 ກົມ ເຊັ່ນ: ກົມພາສີ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຂົນສົ່ງ. ກົມອາຫານ ແລະ ຢາ ແມ່ນຂະແໜງການຕໍ່ໄປທີ່ມີແຜນຈະນຳໃຊ້ລະບົບ LNSW ໃນເດືອນ ມັງກອນ 2023 ຊຶ່ງຈະເຮັດໃຫ້ມີທັງໝົດ 4 ຂະແໜງການທີ່ນຳໃຊ້ລະບົບດັ່ງກ່າວ. ສະນັ້ນ, ຈະບໍ່ສາມາດບັນລຸເປົ້າໝາຍການນຳໃຊ້ລະບົບ LNSW ໃຫ້ກວມເອົາທຸກຂະແໜງການພາຍໃນປີ 2022 ຕາມທີ່ກຳນົດໄວ້ໃນແຜນດຳເນີນງານ. ນອກຈາກການຂາດຄວາມເອົາໃຈໃສ່ແລ້ວ, ຂໍ້ຈຳກັດສຳຄັນໃນການຂະຫຍາຍການນຳໃຊ້ໃຫ້ກວມເອົາຫຼາຍຂະແໜງການ ແລະ ເຄື່ອງມືໃນການອອກອະນຸຍາດ, ອະນຸມັດ ແລະ ຢັ້ງຢືນ ປະກອບມີ: ການຂາດຄວາມສາມາດ ໃນການດຳເນີນການປັບປຸງໂຄງສ້າງຂັ້ນຕອນທາງທຸລະກິດໃໝ່ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ການຕິດຕາມການຄຸ້ມຄອງການປ່ຽນແປງ ແລະ ປັບປຸງການປະສານງານ.

ເນື່ອງຈາກການຂະຫຍາຍລະບົບ ມີຄວາມຄືບໜ້າຊ້າ, ການຈັດຕັ້ງປະຕິບັດລະບົບ LNSW ແມ່ນຊ້າກວ່າກຳນົດ. ລັດຖະບານ ຮັບຊາບກ່ຽວກັບຄວາມລ່າຊ້າດັ່ງກ່າວ ແລະ ໄດ້ຊຸກຍູ້ໃຫ້ຂະຫຍາຍຂອບເຂດການນຳໃຊ້ລະບົບ LNSW ໃຫ້ໄດ້ຢ່າງໜ້ອຍ ຕາມພູມີສາດ (ຕາມດ່ານ) ພ້ອມທັງເພີ່ມເຕີມຄຳສັ່ງບາງອັນ ເຊັ່ນ: ການຈັດເກັບໃບຂົນສົ່ງ ແລະ ການເກັບກຳຂໍ້ມູນ ກ່ຽວກັບຂໍ້ມູນການແຈ້ງພາສີ ທີ່ມີຈຸດປະສົງເພື່ອໃຫ້ສາມາດດຳເນີນຂັ້ນຕອນການແຈ້ງພາສີແບບບໍ່ນຳໃຊ້ເຈ້ຍ. ປະຈຸບັນ, ໄດ້ມີການທົດລອງການນຳໃຊ້ລະບົບຢູ່ດ່ານສາກົນທ່າບົກທ່ານາແລ້ງ ຊຶ່ງລະບົບ LNSW

ໄດ້ເຊື່ອມໂຍງກັບລະບົບ ASYCUDA ເພື່ອສະໜອງຂໍ້ມູນການກວດປ່ອຍລົດຂົນສົ່ງ ແລະ ການຍື່ນເອກະສານແຈ້ງພາສີແບບເອເລັກໂຕຼນິກ. ລະບົບດັ່ງກ່າວ ອະນຸຍາດໃຫ້ຍື່ນຂໍ້ມູນຜ່ານລະບົບ LNSW ບ່ອນດຽວ, ສ່ວນຄໍາສັ່ງໃນການກວດກາສຸດທ້າຍພາຍຫຼັງ ແມ່ນດໍາເນີນການໂດຍລະບົບ ASYCUDA ດັ່ງທີ່ປະຕິບັດຜ່ານມາ. ລະບົບເຊື່ອມໂຍງດັ່ງກ່າວ ແມ່ນມີຊື່ວ່າ "LNSWA+" ຊຶ່ງປະສົບຜົນສໍາເລັດໃນໄລຍະທົດລອງ ແລະ ມີແຜນຈະຂະຫຍາຍໄປໄດ້ສາກົນອື່ນ ໃນປີ 2023.

## 2.4 ການລົບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ບໍ່ມີເຫດຜົນພຽງພໍ

ອັດຕາພາສີນໍາເຂົ້າສະເລ່ຍຂອງ ສປປ ລາວ ແມ່ນມີປະມານ 8.6% ຊຶ່ງຫຼຸດລົງພຽງ 0.2% ພາຍໃຕ້ອັດຕາສິດທິພິເສດທີ່ກໍານົດໃນສັນຍາ ATIGA ທີ່ສາມາດນໍາໃຊ້ໄດ້ເພື່ອການນໍາເຂົ້າສິນຄ້າ ຈາກບັນດາປະເທດອາຊຽນ[14]. ເຖິງຢ່າງໃດກໍ່ຕາມ, ຖ້າບໍ່ຄໍານຶງເຖິງອັດຕາພາສີທີ່ຕໍ່າເຫຼົ່ານີ້, ຄ່າໃຊ້ຈ່າຍທາງດ້ານການຄ້າສະເລ່ຍໃນ ສປປ ລາວ ແມ່ນຂ້ອນຂ້າງສູງ ສາເຫດຕົ້ນຕໍແມ່ນຍ້ອນນະໂຍບາຍ ແລະ ຂໍ້ຮຽກຮ້ອງທາງດ້ານລະບຽບການ ຊຶ່ງແປເປັນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs). ອີງຕາມຂໍ້ມູນຢູ່ໃນເວັບໄຊທ໌ LTP, ປະຈຸບັນ ສປປ ລາວ ມີມາດຕະການ NTMs ຈໍານວນ 452 ມາດຕະການ. ຈໍານວນມາດຕະການ NTMs ມີຖືກລະບຸໃນປີ 2017 ມີຈໍານວນ 243 ມາດຕະການ, ແຕ່ມາດຕະການເຫຼົ່ານີ້ໄດ້ເພີ່ມຂຶ້ນ ເນື່ອງຈາກໄດ້ມີການຈັດປະເພດມາດຕະການຄືນໃໝ່ ຕາມຄໍາແນະນໍາຂອງອົງການສະຫະປະຊາດ ວ່າດ້ວຍການຄ້າ ແລະ ການພັດທະນາ (UNCTAD) ປີ 2019[15] ແລະ ມີມາດຕະການເພີ່ມເຕີມ ຕາມລະບຽບການໃໝ່.

ແຜນດໍາເນີນງານວຽກອໍານວຍຄວາມສະດວກທາງດ້ານການຄ້າ ກໍານົດຈຸດປະສົງເພື່ອທົບທວນຄືນມາດຕະການ NTMs ທີ່ສໍາຄັນທຸກມາດຕະການ ແລະ ມີວິທີການເປັນແຕ່ລະໄລຍະໃນການເຮັດແນວນັ້ນ. ຕົວຢ່າງ: ໄດ້ກໍານົດເປົ້າໝາຍ ໃນການປະເມີນຜົນກະທົບທາງດ້ານລະບຽບການ (RIA) ຈໍານວນ 18 ມາດຕະການ ໃນປີ 2017 ດ້ວຍຕົວເອງ ແລະ ປະຕິບັດຕາມຂໍ້ສະເໜີແນະຕ່າງໆໃນທັນທີ. ນອກຈາກນີ້, ເນື່ອງຈາກຂະແໜງການທີ່ກ່ຽວຂ້ອງ ໄດ້ສຸມໃສ່ການປະເມີນຜົນກະທົບມາດຕະການ NTMs, ແຜນດໍາເນີນງານ ຈຶ່ງໄດ້ກໍານົດເປົ້າໝາຍສໍາລັບການທົບທວນຄືນມາດຕະການ NTMs ຂອງໃຫ້ໄດ້ຢ່າງໜ້ອຍຂະແໜງການລະ 3 ມາດຕະການ ພາຍໃນ 2017 ແລະ ປະຕິບັດຕາມຂໍ້ສະເໜີແນະພາຍໃນປີ 2018. ໃນລະຫວ່າງປີ 2018-2022, ຈຸດປະສົງ ແມ່ນເພື່ອທົບທວນຄືນທຸກມາດຕະການ NTMs ທີ່ສໍາຄັນທີ່ຍັງເຫຼືອ ແລະ ລົບລ້າງມາດຕະການທີ່ເຫັນວ່າບໍ່ມີເຫດຜົນພຽງພໍ ແລະ ສ້າງສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ. ການປະເມີນ RIA ແມ່ນອີງໃສ່ຂໍ້ຕົກລົງແຕ່ງຕັ້ງໜ່ວຍງານ NTMs ທີ່ມີໜ້າທີ່ໃນການປະເມີນຜົນ RIA ສໍາລັບມາດຕະການ NTMs ທີ່ສໍາຄັນ. ເຖິງຢ່າງໃດກໍ່ຕາມ, ໜ່ວຍງານ NTMs ໄດ້ຕັດສິນໃຈດໍາເນີນການທົບທວນຄືນມາດຕະການ NTMs ທີ່ຍັງເຫຼືອດ້ວຍວິທີງ່າຍດາຍ ແທນທີ່ການປະເມີນ RIA ເນື່ອງຈາກໃຊ້ເວລາ ແລະ ມີຄ່າໃຊ້ຈ່າຍ. ການທົບທວນຄືນທຸກມາດຕະການ NTMs ໃນປີ 2022 ຍັງປະຕິບັດເປົ້າໝາຍທີ່ກໍານົດໃນສັນຍາ ATIGA ທີ່ກໍານົດໃຫ້ມີການລົບລ້າງສິ່ງກີດຂວາງທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTBs).

ຕໍ່ມາ, ພາກທຸລະກິດ ໄດ້ມີສ່ວນຮ່ວມໃນການທົບທວນຄືນມາດຕະການ NTMs ເຫຼົ່ານີ້ ໂດຍການປຶກສາຫາລືຢ່າງໃກ້ຊິດກັບຂະແໜງການທີ່ກ່ຽວຂ້ອງ ແລະ ກອງເລຂາ TFS/TFCS. ອີງຕາມຜົນການທົບທວນຄືນເຫັນວ່າ: ໃນລະຫວ່າງປີ 2017-2022 ໄດ້ທົບທວນຄືນມາດຕະການ NTMs ຈໍານວນ 107 ມາດຕະການ ຊຶ່ງສ່ວນໃຫຍ່ແມ່ນຢູ່

---

[14] ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (DTIS) ຂອງ ສປປລາວ ປີ 2022. ອັດຕາພາສີສະເລ່ຍນີ້ ແມ່ນອີງໃສ່ຖານຂໍ້ມູນການແກ້ໄຂການຄ້າທີ່ເຊື່ອມໂຍງຂອງໂລກ (WITS).

[15] ການຈັດປະເພດມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ສາກົນ, ສະບັບປັບປຸງປີ 2019, ອົງການ UNCTAD.

ໃນຊ່ວງຕົ້ນປີ 2017-2019. ການລະບາດຂອງພະຍາດໂຄວິດ ສົ່ງຜົນກະທົບຫຼາຍຕໍ່ການທົບທວນຄືນມາດຕະການເຫຼົ່ານີ້. ລາຍການສິນຄ້າທີ່ສຳຄັນທີ່ໄດ້ຮັບການທົບທວນຄືນ ໄດ້ກຳນົດຢູ່ຕາຕະລາງຂ້າງລຸ່ມເພື່ອການອ້າງອີງ ຊຶ່ງຍັງໄດ້ກ່າວເຖິງຂໍ້ສະເໜີແນະທີ່ສຳຄັນ ແລະ ການປະຕິບັດຕາມຂໍ້ສະເໜີແນະດັ່ງກ່າວ.

**ຄວາມຄືບໜ້າຂອງການທົບທວນຄືນມາດຕະການ NTMs**

| ປີ | ສິນຄ້າ | ຂະແໜງການ | ຈຳນວນ NTMs | ຂໍ້ສະເໜີແນະທີ່ສຳຄັນ | ການປະຕິບັດຕາມຂໍ້ສະເໜີແນະ |
|---|---|---|---|---|---|
| 2018 | ເຂົ້າ, ຊີມັງ ແລະ ເຫຼັກ | ກົມ ຂອ | 4 | ລຶບລ້າງການອອກອະນຸຍາດນຳເຂົ້າແບບອັດຕະໂນມັດທີ່ມີຈຸດປະສົງເພື່ອເກັບກຳສະຖິຕິ ເນື່ອງຈາກຍັງບໍ່ທັນສາມາດບັນລຸຕາມຈຸດປະສົງ | ການອອກອະນຸຍາດນຳເຂົ້າ ເຫຼັກ ແລະ ຊີມັງ ແມ່ນຖືກລຶບລ້າງແລ້ວ ຕາມຄຳສັ່ງ ເລກທີ 1364. |
| 2018 | ຍານພາຫະນະ ແລະ ຊິ້ນສ່ວນຍານພາຫະນະ | ກົມ ຂອ, ກົມ ອຫ, ກົມຂົນສົ່ງ | 13 | ການລຶບລ້າງການອອກອະນຸຍາດ, ຢັ້ງຢືນການນຳເຂົ້າຊິ້ນສ່ວນຍານພາຫະນະ; ປັບປຸງການອອກອະນຸຍາດ, ຢັ້ງຢືນການນຳເຂົ້າຍານພາຫະນະ | ໃບອະນຸຍາດ, ຢັ້ງຢືນ ການນຳເຂົ້າຊິ້ນສ່ວນຍານພາຫະນະ ຢູ່ກົມ ຂອ ແລະ ກົມ ອຫ ໄດ້ຖືກລຶບລ້າງໂດຍຄຳສັ່ງເລກທີ 0535 (ກົມ ຂອ, ປີ 2017) ແລະ ຄຳສັ່ງ ເລກທີ 1848 (ກົມ ອຫ, ປີ 2019).<br>ກົມ ຂອ ຍັງລຶບລ້າງໃບອະນຸຍາດນຳເຂົ້າລົດໄຖນາ ຕາມຄຳສັ່ງເລກທີ 0982 (ປີ 2021).<br>ກົມ ຂອ ແລະ ກົມຂົນສົ່ງ ຍັງໄດ້ປັບປຸງຂັ້ນຕອນການນຳເຂົ້າ ໂດຍນຳໃຊ້ລະບົບ LNSW ສຳລັບການອອກອະນຸຍາດ, ຢັ້ງຢືນ ການນຳເຂົ້າ ໃນປີ 2019. |
| 2018 | ນ້ຳມັນເຊື້ອໄຟ | ກົມ ຂອ, ກົມມາດຕະຖານ ແລະ ວັດແທກ | 16 | ກົມ ຂອ ປັບປຸງ/ລຶບລ້າງໃບອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟບາງປະເພດ; ກົມມາດຕະຖານ ແລະ ວັດແທກ ເພື່ອຖອນໜ່ວຍງານຂອງຈາກດ່ານ. | ໃບອະນຸຍາດນຳເຂົ້ານ້ຳມັນຫຼໍ່ລື່ນ ຢູ່ກົມ ຂອ ໄດ້ຖືກລຶບລ້າງ ຕາມຄຳສັ່ງເລກທີ 0317 (ປີ 2022). ສຳລັບເອກະສານ ແລະ ຂັ້ນຕອນການອອກອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟ ປະເພດແອັດຊັງ, ກາຊວນ ແລະ ອື່ນໆ) ໄດ້ຮັບການປັບປຸງ ໂດຍການນຳໃຊ້ລະບົບ LNSW ໃນປີ 2020.<br>ກົມມາດຕະຖານ ແລະ ວັດແທກ ບໍ່ປະຕິບັດຂໍ້ສະເໜີແນະ ເນື່ອງຈາກ |

| ປີ | ສິນຄ້າ | ຂະແໜງການ | ຈຳນວນ NTMs | ຂໍ້ສະເໜີແນະທີ່ສຳຄັນ | ການປະຕິບັດຕາມຂໍ້ສະເໜີແນະ |
|---|---|---|---|---|---|
| | | | | | ການກວດສອບນ້ຳມັນເຊື້ອໄຟຢູ່ດ່ານແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ[16]. |
| 2018 | ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ | ກົມປູກຝັງ | 20 | ການຍົກເລີກການອອກອະນຸຍາດ ໂດຍການປັບປຸງຂັ້ນຕອນການຈົດທະບຽນ. | ຄວາມຊັກຊ້າໃນການປະຕິບັດ. ເຖິງຢ່າງໃດກໍ່ຕາມ, ກົມປູກຝັງ ໄດ້ປັບປຸງຂັ້ນຕອນການອອກອະນຸຍາດ ແລະ ການຈົດທະບຽນ ຕາມຂໍ້ຕົກລົງ ເລກທີ 2985. |
| 2018 | ຜະລິດຕະພັນສັດ ແລະ ອາຫານສັດ | ກົມລ້ຽງສັດ ແລະ ການປະມົງ | 9 | ການລົບລ້າງການອອກອະນຸຍາດ ພ້ອມກັບປັບປຸງຂັ້ນຕອນ ແລະ ໂຄງສ້າງຄ່າທຳນຽມທີ່ມີເຫດຜົນ | ມີຄວາມຊັກຊ້າໃນການປະຕິບັດ. ເຖິງຢ່າງໃດກໍ່ຕາມ, ກົມລ້ຽງສັດ ແລະ ການປະມົງ ໄດ້ປັບປຸງຂັ້ນຕອນການອອກອະນຸຍາດ ແລະ ການຈົດທະບຽນຕາມຂໍ້ຕົກລົງ ເລກທີ 0795/ກປ. |
| 2018 | ອາຫານ ແລະ ຢາ | ກົມອາຫານ ແລະ ຢາ | 21 | ການລົບລ້າງການອອກອະນຸຍາດ ພ້ອມກັບປັບປຸງຂັ້ນຕອນ ແລະ ໂຄງສ້າງຄ່າທຳນຽມທີ່ມີເຫດຜົນ | ມີຄວາມຊັກຊ້າໃນການປະຕິບັດ. ເຖິງຢ່າງໃດກໍ່ຕາມ, ກົມອາຫານ ແລະ ຢາ ຢູ່ໃນຂັ້ນຕອນການປັບປຸງການອອກອະນຸຍາດນຳເຂົ້າໂດຍການນຳໃຊ້ລະບົບ LNSW ຊຶ່ງຄາດວ່າຈະເລີ່ມປະຕິບັດໃນເດືອນ ມັງກອນ 2023. |
| 2018 | ສິ່ງພິມ, ຜະລິດຕະພັນບັນເທີງ, ປ້າຍ ແລະ ອື່ນໆ | ກະຊວງ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ | 20 | ການລົບລ້າງໃບອະນຸຍາດນຳເຂົ້າ | ມີຄວາມຊັກຊ້າໃນການປະຕິບັດ. ເນື່ອງຈາກການອອກອະນຸຍາດນຳເຂົ້າໄດ້ກຳນົດໃນກົດໝາຍທີ່ກ່ຽວຂ້ອງຂອງກະຊວງ ຖວທ. |
| 2020 | ຜະລິດຕະພັນແຮ່ທາດ | ກົມຄຸ້ມຄອງບໍ່ແຮ່ | 4 | ປັບປຸງຂັ້ນຕອນພາຍໃນສຳລັບການອອກອະນຸຍາດສົ່ງອອກ | ຍອມຮັບ. ກົມຄຸ້ມຄອງບໍ່ແຮ່ໄດ້ປັບປຸງຂັ້ນຕອນພາຍໃນສຳລັບການອອກອະນຸຍາດສົ່ງອອກ ຊຶ່ງຫຼຸດເວລາລົງຈາກ 5-7 ວັນ ມາເປັນ 1 ວັນ. |
| **Total** | | | **107** | | |

**ຕາຕະລາງທີ 1 - ລາຍລະອຽດຂອງການດຳເນີນທົບທວນຄືນມາດຕະການ NTMs ໃນລະຫວ່າງປີ 2017-2022**

[16] ອີງຕາມກົດໝາຍ ວ່າດ້ວຍມາດຕະຖານ (ສະບັບປັບປຸງ) ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014, ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບນ້ຳມັນເຊື້ອໄຟ ເລກທີ 0541/ກວຕ, ລົງວັນທີ 08 ມິຖຸນາ 2016 ແລະ ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ບັງຄັບໃຊ້ມາດຕະຖານບັງຄັບ ກ່ຽວກັບຜະລິດຕະພັນນ້ຳມັນເຊື້ອໄຟ ແລະ ອາຍແກັສ ເລກທີ 0011/ກວຕ, ລົງວັນທີ 07 ມິຖຸນາ 2021, ນ້ຳມັນເຊື້ອໄຟ ແລະ ອາຍແກັສ ທີ່ຜະລິດ, ຂາຍ, ນ້ຳເຂົ້າ ແລະ ສົ່ງອອກ ໃນ ສປປ ລາວ ຕ້ອງໄດ້ຮັບການຢັ້ງຢືນ ແລະ ກວດກາໂດຍກົມມາດຕະຖານ ແລະ ວັດແທກ.

ອີງຕາມຂໍ້ສະເໜີແນະ ຂອງການປະເມີນ RIA ແລະ ການທົບທວນຄືນເຫຼົ່ານີ້, ບາງມາດຕະການ NTMs ໄດ້ຖືກລົບລ້າງ ແລະ ຂໍ້ສະເໜີແນະໄດ້ຖືກປະຕິບັດຢູ່ຫຼາຍໆກົມ ເພື່ອປັບປຸງຂັ້ນຕອນທີ່ກ່ຽວຂ້ອງ.

### 2.4.1 ການລົບລ້າງມາດຕະການ NTMs ທີ່ບໍ່ມີເຫດຜົນພຽງພໍ ແລະ ການປັບປຸງຂັ້ນຕອນ ແລະ ໂຄງສ້າງຄ່າທຳນຽມທີ່ມີເຫດຜົນ ສຳລັບມາດຕະການ NTMs ທີ່ສຳຄັນ ຕາມຂໍ້ສະເໜີແນະຂອງການທົບທວນຄືນມາດຕະການ NTMs

ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນຂະແໜງການໜຶ່ງທີ່ມີຄວາມອ່ອນໄຫວທີ່ສຸດ ກ່ຽວກັບຫົວຂໍ້ດັ່ງກ່າວ ແລະໄດ້ສະແດງການປະຕິບັດທີ່ເປັນແບບຢ່າງ ເນື່ອງຈາກໄດ້ລົບລ້າງໃບອະນຸຍາດນຳເຂົ້າເຫຼັກ ແລະ ຊີມັງ ຕາມຄຳສັ່ງຂອງລັດຖະມົນຕີ ເລກທີ 1364/ອຄ.ກຂອ, ລົງວັນທີ 28 ກັນຍາ 2018 ຕາມຂໍ້ສະເໜີແນະນຳໃຊ້ບົດທົບທວນຄືນມາດຕະການ NTMs ທີ່ມີເຫດຜົນເພື່ອເກັບກຳສະຖິຕິ (ເຫຼັກ, ຊີມັງ ແລະ ເຂົ້າ) ທີ່ດຳເນີນໃນປີ 2017-2018. ພ້ອມດຽວກັນ, ຍັງໄດ້ຕັດສິນໃຈລົບລ້າງໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອປະກອບ[17]. ຕໍ່ມາໄດ້ມີການລົບລ້າງໃບອອກອະນຸຍາດນຳເຂົ້າລົດໄຖນາ[18]. ນອກຈາກກະຊວງອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນໆ ໄດ້ປັບປຸງຂັ້ນຕອນການປະຕິບັດງານ ຊຶ່ງລວມມີກົມພາສີ, ກົມຄຸ້ມຄອງບໍ່ແຮ່, ກົມຄຸ້ມຄອງຊັບສິນຂອງລັດ ແລະ ກົມສ່ວຍສາອາກອນ ທີ່ມີຄວາມພະຍາຍາມຮ່ວມກັນໃນການຫຼຸດຜ່ອນຂັ້ນຕອນການສົ່ງອອກແຮ່ທາດ ລົງຫຼາຍ. ອາດເວົ້າໄດ້ວ່າກະຊວງອຸດສາຫະກຳ ແລະ ການຄ້າ ມີບົດບາດໃນການຊຸກຍູ້ການປະຕິບັດນີ້ ຕາມຄຳສັ່ງຂອງທ່ານນາຍົກກ່ຽວກັບການຫຼຸດຜ່ອນເວລາໃນການພິຈາລະນາ.

### 2.4.2 ການສຳເລັດບົດປະເມີນ RIA/ບົດທົບທວນຄືນ ທຸກມາດຕະການ NTMs

ແຜນດຳເນີນງານ ໄດ້ກຳນົດເປົ້າໝາຍໃຫ້ສຳເລັດບົດປະເມີນ RIA ຈຳນວນ 18 ບົດ ໃນປີ 2017 ເນື່ອງຈາກໄດ້ມີການເລີ່ມທົບທວນຄືນມາດຕະການເຫຼົ່ານີ້ ໃນເວລາຮ່າງແຜນດຳເນີນງານ. ມີການປະເມີນ RIA ຫຼື ການທົບທວນຄືນ ຈຳນວນຫຼາຍເຖິງ 11 ບົດ ໃນລະຫວ່າງປີ 2017-2022 ຊຶ່ງກວມເອົາມາດຕະການ NTMs ຈຳນວນ 107 ມາດຕະການ. ແຕ່ຍັງມີຫຼາຍມາດຕະການ NTMs ທີ່ຈະຕ້ອງໄດ້ຮັບການທົບທວນຄືນ ເຮັດໃຫ້ເປົ້າໝາຍໃນປີ 2022 ບໍ່ທັນບັນລຸຜົນສຳເລັດ. ມີຈຳນວນມາດຕະການ NTMs ຈຳນວນ 452 ມາດຕະການ ຢູ່ ສປປ ລາວ ຊຶ່ງບັນລຸໄດ້ໜ້ອຍກວ່າ 1/4 (23.67%) ເທົ່ານັ້ນ. ຄວາມຄືບໜ້າຂອງການທົບທວນຄືນໄດ້ຮັບຜົນກະທົບຢ່າງຮຸນແຮງ ໂດຍການລະບາດຂອງພະຍາດໂຄວິດ ຊຶ່ງໄດ້ປິດປະເທດ ແລະ ການຈຳກັດການເດີນທາງ ແລະ ບໍ່ສາມາດຈັດກິດຈະກຳຕັ້ງແຕ່ນັ້ນມາ. ລາຍການມາດຕະການ NTMs ທີ່ໄດ້ຮັບການລະບຸໃນ ສປປ ລາວ ແມ່ນໄດ້ເອົາລົງໃນເວັບໄຊທ໌ LTP ພ້ອມກັບລາຍລະອຽດຂອງສິນຄ້າທີ່ຖືກນຳໃຊ້ມາດຕະການ ແລະ ລາຍລະອຽດຂອງມາດຕະການ. ເຖິງຢ່າງໃດກໍ່ຕາມ, ລາຍລະອຽດຂອງປະຕິບັດຕາມຂໍ້ສະເໜີແນະໃນການທົບທວນຄືນມາດຕະການ NTMs ເຫຼົ່ານີ້ ຍັງບໍ່ທັນໄດ້ເອົາລົງຢູ່ໃນເວັບໄຊທ໌ດັ່ງກ່າວ.

### 2.4.3 ການປະຕິບັດ ເພື່ອຫຼຸດຜ່ອນ ຫຼື ປັບປຸງຂັ້ນຕອນ ເພີ່ມເຕີມ

ການປະຕິບັດຂໍ້ສະເໜີແນະທີ່ກຳນົດໃນບົດທົບທວນຄືນ NTMs ຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນມີຄວາມລ່າຊ້າ ເນື່ອງຈາກຕ້ອງຮັບປະກັນວ່າບໍ່ມີຜົນກະທົບທາງລົບໃນການລົບລ້າງ ຫຼື ປັບປຸງມາດຕະການ NTMs ເຫຼົ່ານີ້. ນອກຈາກນີ້, ຂະແໜງການທີ່ກ່ຽວຂ້ອງ ບໍ່ມີທັນສິ່ງຈູງໃຈໃນການປະຕິຮູບມາດຕະການ NTMs ຢ່າງຈິງຈັງ ເນື່ອງຈາກມີຄວາມເອົາໃຈໃສ່ໃນການຄວບຄຸມ ຫຼາຍກວ່າການອຳນວຍຄວາມສະດວກທາງດ້ານການຄ້າ. ບໍ່ວ່າຈະດ້ວຍເຫດຜົນໃນການບໍ່ຍອມຮັບເອົາບັນດາຂໍ້ສະເໜີແນະ ຕາມບົດທົບທວນຄືນມາດຕະການ NTMs ແນວໃດກໍ່ຕາມ,

---

[17] ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ລົບລ້າງໃບອະນຸຍາດຕາມຄຳສັ່ງຂອງລັດຖະມົນຕີ ເລກທີ 0535/ອຄ.ກຂອ, ລົງວັນທີ 10 ເມສາ 2018 ແລະ ຕໍ່ມາ ແມ່ນກົມອຸດສາຫະກຳ ແລະ ຫັດຖະກຳ ຕາມຄຳສັ່ງຂອງລັດຖະມົນຕີ ເລກທີ 1848/ອຄ.ກອຫ, ລົງວັນທີ 26 ທັນວາ 2019.

[18] ໃບອະນຸຍາດນຳເຂົ້າລົດໄຖນາ ແມ່ນຖືກລົບລ້າງໂດຍຄຳສັ່ງຂອງລັດຖະມົນຕີ ເລກທີ 0982/ອຄ, ລົງວັນທີ 19 ຕຸລາ 2021.

ໂດຍສະເພາະການລຶບລ້າງໃບອະນຸຍາດ, ໃບຢັ້ງຢືນ ແຕ່ຂໍ້ສະເໜີແນະດັ່ງກ່າວຕ້ອງຍົກຂຶ້ນຕໍ່ຄະນະກໍາມະການ NTFC ເພື່ອອະທິບາຍວ່າເປັນເຫດຜົນທີ່ຖືກຕ້ອງແລ້ວ ທີ່ຈະບໍ່ດໍາເນີນການຕໍ່ໄປ ແທ້ໆ.

ຂະແໜງການທີ່ກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ ເພື່ອລຶບລ້າງສິ່ງກີດຂວາງຕ່າງໆ ທີ່ສົ່ງຜົນໃຫ້ຄ່າໃຊ້ຈ່າຍທາງດ້ານການຄ້າສູງ ແລະ ຕ້ອງໄດ້ລຶບລ້າງ ເພື່ອປັບປຸງຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າຂອງ ສປປ ລາວ. ໃນກໍລະນີບໍ່ໄດ້ສໍາເລັດການທົບທວນຄືນມາດຕະການ NTMs ແມ່ນຈໍາເປັນຕ້ອງດໍາເນີນການວິເຄາະຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍ ເພື່ອປະເມີນວ່າມາດຕະການ NTMs ໄດ້ບັນລຸຈຸດປະສົງທີ່ໄດ້ກໍານົດໄວ້ ຫຼື ບໍ່ ຫຼື ສ້າງຄວາມຫຍຸ້ງຍາກຫຼາຍເກີນໄປ ຊຶ່ງເປັນສາເຫດຊຸກຍູ້ໃຫ້ຜູ້ນໍາເຂົ້າ ນໍາໃຊ້ຊ່ອງທາງທີ່ບໍ່ເປັນທາງການ. ສະນັ້ນ, ການລຶບລ້າງມາດຕະການ NTMs ທີ່ບໍ່ມີເຫດຜົນພຽງພໍ ຈະຍັງຊ່ວຍຫຼຸດຜ່ອນການສໍ້ລາດບັງຫຼວງ ແລະ ການສະແຫວງຫາຜົນປະໂຫຍດທາງເສດຖະກິດທີ່ກ່ຽວຂ້ອງ. ຕາຕະລາງທີ່ກໍານົດກ່ຽວກັບການປະຕິບັດຂໍ້ສະເໜີແນະທີ່ສໍາຄັນ ຕາມບົດທົບທວນຄືນມາດຕະການ NTMs ແມ່ນລະບຸຢູ່**ເອກະສານຊ້ອນທ້າຍ III**. ຖ້າຂໍ້ສະເໜີແນະຕາມບົດທົບທວນຄືນມາດຕະການ NTMs ແລະ ການປະຕິບັດຕາມຂໍ້ສະເໜີແນະດັ່ງກ່າວ ໄດ້ເອົາລົງໃນເວັບໄຊທ໌ LTP, ຈະຊ່ວຍປັບປຸງຄວາມໂປ່ງໃສໃນການຕັດສິນໃຈຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ຮູ້ເຫດຜົນທີ່ຢູ່ເບື້ອງຫຼັງຂອງການຮັກສາມາດຕະການ NTMs ໄດ້ຢ່າງຊັດເຈນ.

## 2.5 ການຮ່ວມມືການຂ້າມແດນ ແລະ ການເຊື່ອມໂຍງພາກພື້ນ

ອາຊຽນ ເປັນຜູ້ຂັບເຄື່ອນທີ່ສໍາຄັນໃນການດໍາເນີນການໄປສູ່ການເຊື່ອມໂຍງພາກພື້ນ ໂດຍສະເພາະຕັ້ງແຕ່ເປົ້າໝາຍໃນການພັດທະນາອາຊຽນ ໃຫ້ເປັນເສດຖະກິດດຽວ ແລະ ຖານການຜະລິດຕະພັນດຽວ ໄປສູ່ສ່ວນອື່ນໆຂອງໂລກ. ມີການເຊື່ອມໂຍງກັນພາຍໃນປະຊາຄົມເສດຖະກິດອາຊຽນ ເປັນຢ່າງດີ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກມີການເພີ່ມຂຶ້ນຂອງປະລິມານການຄ້າ ແລະ ການລົງທຶນ, ເສັ້ນທາງຂອງການເຊື່ອມໂຍງ ກັບ ປະເທດເພື່ອນບ້ານອື່ນ ເຊັ່ນ: ສປ ຈີນ ແມ່ນໄວຂຶ້ນກວ່າເກົ່າ ໃນຊ່ວງປີຜ່ານມາ.

### 2.5.1 ການປະຕິບັດວຽກງານການກວດກາຈຸດດຽວ ຢູ່ແຂວງສະຫວັນນະເຂດ ແລະ ຈັງຫວັດມຸກດາຫານ ດ່ານຊາຍແດນລາວ-ໄທ

ລະບົບການກວດກາຈຸດດຽວ (SSI) ກ່ຽວຂ້ອງກັບການກວດກາຮ່ວມກັນຂອງຂະແໜງພາສີ ແລະ ຂະແໜງການກັກກັນຂອງສອງປະເທດ ຊຶ່ງປະສົບຜົນສໍາເລັດໃນການສ້າງຕັ້ງຢູ່ດ່ານແດນສະຫວັນ-ລາວບາວ ຊາຍແດນລາວ-ຫວຽດນາມ ໃນປີ 2015 ພາຍໃຕ້ສັນຍາ ວ່າດ້ວຍການຂົນສົ່ງຂ້າມແດນຂອງອານຸພາກລຸ່ມແມ່ນໍ້າຂອງ (GMS-CBTA) ທີ່ເຊັນໂດຍປະເທດໄທ, ສປປ ລາວ, ສສ ຫວຽດນາມ ແລະ ອື່ນໆ ໃນປີ 2007. ໄດ້ກໍານົດໃຫ້ມີແຕ່ງຕັ້ງເຈົ້າໜ້າທີ່ປະຈໍາດ່ານຊາຍແດນຂອງສອງຝ່າຍ ແລະ ໃຫ້ມີການກວດກາ ຖ້າມີຄວາມຈໍາເປັນໂດຍກວດກາຢູ່ເບື້ອງປະເທດນໍາເຂົ້າບ່ອນດຽວ. ການກວດກາຈຸດດຽວ ໄດ້ຖືກຂະຫຍາຍໄປສູ່ແຂວງສະຫວັນນະເຂດ ແລະ ຈັງຫວັດມຸກດາຫານ ດ່ານຊາຍແດນລາວ-ໄທ ພາຍໃຕ້ອົງປະກອບແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (WEWC) ຂອງແຜນພັດທະນາຂອງປະເທດລຸ່ມແມ່ນໍ້າຂອງ[19]. ແຜນດໍາເນີນງານ TFRM ກໍານົດວຽກງານດັ່ງກ່າວ ເປັນບູລິມະສິດ ຊຶ່ງມີຄວາມຫວັງຈະໃຫ້ສໍາເລັດພາຍໃນປີ 2017 ເນື່ອງຈາກມີການສັນຈອນສິນຄ້າຜ່ານແດນເປັນຈໍານວນຫຼາຍ. ເຖິງຢ່າງໃດກໍ່ຕາມ, ວຽກງານດັ່ງກ່າວບໍ່ສາມາດດໍາເນີນການໄດ້ ເນື່ອງຈາກບັນຫາທາງດ້ານລະບຽບການຂອງຝ່າຍໄທ ທີ່ກໍານົດວ່າບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ຂອງຕົນໄປປະຕິບັດວຽກງານການບັງຄັບໃຊ້ລະບຽບພາສີ ຢູ່ນອກ

---

[19] ໂຄງການປະຕິບັດງານການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ຂອງປະເທດລຸ່ມແມ່ນໍ້າຂອງ (TTP-AP) ມີຈຸດປະສົງເພື່ອສໍາຫຼວດການຂະຫຍາຍການກວດກາຈຸດດຽວ ຢູ່ດ່ານຊາຍແດນ 5 ແຫ່ງ, ລວມມີ ດ່ານຊາຍແດນຂອງແຂວງສະຫວັນນະເຂດ-ມຸກດາຫານ.

ອານາເຂດຂອງຕົນ ລວມທັງຢູ່ຈຸດຄວບຄຸມຮ່ວມກັນ (CCA). ບົດຮຽນທີ່ຖອດຖອນໄດ້ແມ່ນວ່າ ເນື່ອງຈາກ ກົດໝາຍໄດ້ຖືກປັບປຸງ ແລະ ການເຈລະຈາລະດັບທາງການ ແມ່ນກຳລັງດຳເນີນການຢູ່ໃນຂອບແຜນແມ່ບົດຂອງ ຂອບການຮ່ວມມື ACMECS ຂອງອາຊຽນ ເພື່ອລິເລີ່ມວຽກງານກວດສອບຈຸດດຽວ ຢູ່ດ່ານສາກົນສຳຄັນ ລວມ ທັງດ່ານຊາຍແດນຂອງແຂວງສະຫວັນນະເຂດ ແລະ ມຸກດາຫານ[20]. ອີງຕາມກົດຈະກຳໃນປະຈຸບັນ, ຄາດວ່າຈະເລີ່ມ ປະຕິບັດງານພາຍໃນປີ 2023.

ໃນຂະນະດຽວກັນ, ມີການສະເໜີວ່າຄວນມີການປະເມີນຄືນການຈັດຕັ້ງປະຕິບັດວຽກງານການກວດກາຈຸດດຽວ ຢູ່ ດ່ານແດນສະຫວັນ-ລາວບາວ ໂດຍສະເພາະການເນັ້ນໜັກບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີປັບປຸງແຜນງານ ດັ່ງກ່າວ ກ່ອນຈະຂະຫຍາຍໄປສູ່ດ່ານອື່ນ. ນອກຈາກການເຮັດວຽກ ກ່ຽວກັບການສະໜອງສິ່ງອຳນວຍຄວາມ ສະດວກໃນການກວດກາ ເພື່ອເຮັດໃຫ້ຂັ້ນຕອນການກວດປ່ອຍສິນຄ້າຂອງຂະແໜງພາສີ ແລະ ຂະແໜງການອື່ນທີ່ ມີໜ່ວຍງານປະຈຳດ່ານ ວ່ອງໄວຂຶ້ນ, ການພິຈາລະນາຄືນບັນດາສັນຍາຂົນສົ່ງສອງຝ່າຍ ພາຍໃຕ້ສັນຍາ ວ່າດ້ວຍ ແຜນງານອາຊຽນ ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າຜ່ານແດນ (AFAFGIT) ແລະ ອານຸສັນຍາ ທີ່ກ່ຽວຂ້ອງຈຳນວນ 9 ສະບັບ ກໍ່ຍັງມີຄວາມສຳຄັນ ເພື່ອເຮັດໃຫ້ການເຄື່ອນຍ້າຍການຂົນສົ່ງ ຂ້າມ ພາກພື້ນ ວ່ອງໄວຂຶ້ນ.

### 2.5.2 ບັນຫາກ່ຽວກັບລະບຽບການທາງດ້ານເຕັກນິກ ສຳລັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທຸລະກຳ ທາງເອເລັກໂຕຼນິກ

ນັບແຕ່ມີກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຼນິກ (ຮັບຮອງໃນປີ 2012) ແມ່ນຍັງລໍຖ້າການຈັດຕັ້ງປະຕິບັດ ໂດຍຕ້ອງການໃຫ້ມີລະບຽບການຜັນຂະຫຍາຍເພີ່ມເຕີມ, ແຜນດຳເນີນງານ ກຳນົດວຽກງານດັ່ງກ່າວເປັນເປົ້າໝາຍ ສຳລັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ທີ່ຈະໃຫ້ສຳເລັດໃນປີ 2017 ເພື່ອໃຫ້ສາມາດນຳໃຊ້ລາຍເຊັນ ແລະ ເອກະສານທີ່ເປັນດິຈິຕອນ ສຳລັບການເຮັດທຸລະກຳທີ່ເປັນທາງການ. ກົດໝາຍ ວ່າດ້ວຍລາຍເຊັນເອເລັກໂຕຼນິກ ໄດ້ ຖືກຮັບຮອງໃນເດືອນ ທັນວາ 2018 ແລະ ມີຜົນບັງຄັບໃຊ້ນັບແຕ່ວັນທີ 17 ພຶດສະພາ 2019[21], ແຕ່ຍັງບໍ່ທັນ ສາມາດນຳໃຊ້ລາຍເຊັນເອເລັກໂຕຼນິກ ເນື່ອງຈາກຍັງບໍ່ມີການແຕ່ງຕັ້ງອົງການກວດສອບລາຍເຊັນ ສຳລັບການນຳໃຊ້ ໃນສາທາລະນະ. ຕໍ່ມາ, ໄດ້ມີຂໍ້ຕົກລົງໃນການຈັດຕັ້ງປະຕິບັດໃນປີ 2020 ແລະ ດຳລັດ ວ່າດ້ວຍການຄ້າເອເລັກ ໂຕຼນິກໃນປີ 2021 ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າທາງເອເລັກໂຕຼນິກ. ກົມເຕັກໂນໂລຊີດິຈິຕອນ ໄດ້ ແຈ້ງໃຫ້ຊາບວ່າ: ລັດວິສາຫະກິດລາວໂທລະຄົມ ແລະ ບໍລິສັດ ຢູນິເທວ ໄດ້ແຕ່ງຕັ້ງອົງການກວດສອບລາຍເຊັນ ສຳລັບຜູ້ປະກອບທີ່ບໍ່ແມ່ນສາທາລະນະ. ໃນຕໍ່ມາ, ມີບາງກະຊວງ ລວມທັງກະຊວງການເງິນ ແລະ ອົງການຈັດຕັ້ງທີ່ ບໍ່ແມ່ນທຸລະກິດ ໄດ້ຮັບອະນຸຍາດໃຫ້ນຳໃຊ້ລາຍເຊັນແບບເອເລັກໂຕຼນິກ. ກະຊວງການເງິນ ຍັງໄດ້ອະນຸຍາດຜູ້ ປະກອບການ ແລະ ເຈົ້າໜ້າທີ່ພາສີ ໂດຍການນຳໃຊ້ລະບົບ NSWA+ ແລະ ລະບົບແຈ້ງພາສີ ASYCUDA ເພື່ອ

[20] ພາຍໃຕ້ແຜນແມ່ບົດຂອງຂອບການຮ່ວມມື ACMECS ຂອງອາຊຽນ (ຍຸດທະສາດການຮ່ວມມືເສດຖະກິດຂອງປະເທດຢູ່ແມ່ນ້ຳອີຣາ ວະດີ-ເຈົ້າພະຍາ-ແມ່ຂອງ), ຂອບການຮ່ວມມືປະເທດ CLMVT (ກຳປູເຈຍ, ສປປ ລາວ, ມຽນມ້າ, ສສ ຫວຽດນາມ ແລະ ໄທ) ຊຶ່ງມີ ຈຸດປະສົງເພື່ອສ້າງຕ້ອງຈຸດຄວບຄວບຮ່ວມກັນ (CCAs) ຢູ່ດ່ານຂ້າມແດນສຳຄັນ ທີ່ມີການສັນຈອນສິນຄ້າຈຳນວນຫຼາຍ ເພື່ອອຳນວຍ ຄວາມສະດວກໃຫ້ແກ່ການຄ້າຂ້າມແດນ.

[21] ກົດໝາຍ ວ່າດ້ວຍລາຍເຊັນເອເລັກໂຕຼນິກ ກຳນົດລາຍເຊັນມີ 3 ປະເພດ ຄື: ລາຍເຊັນເອເລັກໂຕຼນິກແບບປົກກະຕິ, ລາຍເຊັນດິຈິຕອນ ແລະ ຕາປະທັບດິຈິຕອນ.ກະຊວງໄປສະນີ ແລະ ໂທລະຄົມມະນາຄົມການສື່ສານ ຖືກມອບໝາຍໃຫ້ອອກໃບຢັ້ງຢືນລາຍເຊັນເອເລັກໂຕຼນິກ ດັ່ງກ່າວ.

ລົງທະບຽນຢູ່ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງການເງິນ ໃຫ້ສາມາດນຳໃຊ້ລາຍເຊັນເອເລັກໂຕຼນິກ ສຳລັບການເຊັນໃບ/ເອກະສານແຈ້ງພາສີແບບເອເລັກໂຕຼນິກ ແລະ ການອະນຸມັດຕ່າງໆທີ່ຈຳເປັນຕາມລຳດັບ[22].

ເຖິງຢ່າງໃດກໍ່ຕາມ, ຍັງບໍ່ໄດ້ມີການອອກລາຍເຊັນເອເລັກໂຕຼນິກ ໃຫ້ປະຊາຊົນທົ່ວໄປເພື່ອການນຳໃຊ້ທາງການຄ້າ ເນື່ອງຈາກຍັງຂາດແຄນລະບົບສຳລັບການດຳເນີນການທຸລະກຳທາງເອເລັກໂຕຼນິກ. ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຼນິກຂອງ ສປປ ລາວ ບໍ່ຮັບຮູ້ລາຍເຊັນເອເລັກໂຕຼນິກທີ່ໄດ້ຮັບອະນຸຍາດຈາກພາຍນອກ ແລະ ບໍ່ລວມເອົາເອກະສານສຳຄັນບາງອັນ ເຊັ່ນ: ເຄື່ອງມືທີ່ສາມາດຕໍ່ລອງໄດ້ ແລະ ບັນທຶກທີ່ສາມາດຖ່າຍໂອນໄດ້ ຕາມຂອບເຂດຂອງກົດໝາຍ ຊຶ່ງກົດໝາຍດັ່ງກ່າວ ໄດ້ຮັບການທົບທວນເພື່ອລົບລ້າງຄວາມບໍ່ຖືກຕ້ອງ ແລະ ຄວາມບໍ່ກົມກຽວອື່ນໆ[23]. ໃນບໍ່ດົນມານີ້, ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຼນິກ ສະບັບປັບປຸງ ໄດ້ຖືກນຳສະເໜີຜ່ານສະພາແຫ່ງຊາດ ໃນເດືອນ ທັນວາ 2022 ແລະ ຄາດວ່າຈະຖືກຮັບຮອງໃນຕົ້ນປີ 2023. ໃນຂະນະດຽວກັນ, ຄວາມຮັບຜິດຊອບໃນວຽກງານດັ່ງກ່າວ ໄດ້ຖືກໂອນຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄປກະຊວງເຕັກໂນໂລຊີ ແລະ ການສື່ສານ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໄດ້ແຈ້ງວ່າ ຍັງບໍ່ທັນມີການສ້າງຕັ້ງກົນໄກໃນການອອກລາຍເຊັນເອເລັກໂຕຼນິກ ເທື່ອ. ໜ້າວຽກທີ່ສຳຄັນທີ່ຕ້ອງການປະຕິບັດດ່ວນ ແມ່ນການເຂົ້າຮ່ວມໃນສັນຍາຮັບຮູ້ຮ່ວມກັນ (MRAs) ກັບປະເທດອື່ນໆ ເພື່ອໃຫ້ສາມາດຮັບຮູ້ລາຍເຊັນເອເລັກໂຕຼນິກທີ່ອອກໂດຍແຕ່ລະປະເທດ. ນອກຈາກນີ້, ຍັງຫຼີກລ້ຽງຄວາມຈຳເປັນໃນການອອກເອກະສານແບບເຈ້ຍຂອງເອກະສານທີ່ນຳໃຊ້ລະບົບເອເລັກໂຕຼນິກ ໂດຍຂະແໜງການຂອງລາວ ເຊັ່ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (e-CO) ແລະ ໃບຢັ້ງຢືນສຸຂານາໄມພືດ (e-Phyto), ຖ້າຫາກລາຍເຊັນເອເລັກໂຕຼນິກ ແມ່ນຮັບຮູ້ໂດຍຕ່າງປະເທດ. ໂດຍລວມແລ້ວ, ຕ້ອງມີວິທີການປະຕິບັດຕົວຈິງ ເພື່ອໃຫ້ສາມາດນຳໃຊ້ລາຍເຊັນເອເລັກໂຕຼນິກ ແລະ ການເລັ່ງໃຫ້ມີທຸລະກຳທາງເອເລັກໂຕຼນິກພາຍໃນປະເທດ ໂດຍໄວ.

### 2.5.3 ການດຳເນີນງານລະບົບແຈ້ງພາສີປະຕູດຽວອາຊຽນ

ລະບົບແຈ້ງພາສີປະຕູດຽວອາຊຽນ ໄດ້ຖືກດຳເນີນງານໃນເດືອນ ທັນວາ 2019 ແລະ ເລີ່ມແລກປ່ຽນຂໍ້ມູນກັບບັນດາປະເທດສະມາຊິກອື່ນໆ ກ່ຽວກັບເອກະສານຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອເລັກໂຕຼນິກຟອມ D (e-Form D) ພາຍໃຕ້ຂອບສັນຍາ ATIGA ເພື່ອເປັນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອໃຫ້ໄດ້ສິດທິພິເສດທາງດ້ານອັດຕາພາສີ ຖ້າເປັນການນຳເຂົ້າພາຍໃນປະຊາຄົມອາຊຽນ. ຂໍ້ຄິດລິເລີ່ມດັ່ງກ່າວ ແມ່ນເພື່ອລົບລ້າງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເຈ້ຍ. ເຖິງຢ່າງໃດກໍ່ຕາມ, ຍັງບໍ່ທັນບັນລຸຈຸດປະສົງດັ່ງກ່າວ ເນື່ອງຈາກບັນດາປະເທດສະມາຊິກຍັງສືບຕໍ່ຮຽກຮ້ອງໃຫ້ມີເອກະສານເປັນເຈ້ຍທີ່ມີລາຍເຊັນ ແລະ ຕາປະທັບ. ເຖິງວ່າໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອເລັກໂຕຼນິກ (e-CO) ສາມາດຍື່ນ ແລະ ດຳເນີນການຜ່ານລະບົບອອນໄລນ໌ ໂດຍກົມການນຳເຂົ້າ ແລະ ສົ່ງອອກ, ແຕ່ໃບຢັ້ງຢືນດັ່ງກ່າວ ຍັງອອກເປັນແບບເຈ້ຍຢູ່. ສິ່ງອຳນວຍຄວາມສະດວກໃນການຍື່ນ ແລະ ດຳເນີນການອອກໃບ e-CO ກຳລັງໄດ້ຮັບການຂະຫຍາຍການນຳໃຊ້ໄປສູ່ບັນດາຫ້ອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຢູ່ຂັ້ນແຂວງ ແລະ ຄາດວ່າຈະສຳເລັດໃນປີ 2023. ອີກຢ່າງໜຶ່ງ, ເອກະສານເອເລັກໂຕຼນິກຟອມ D ທີ່ໄດ້ຮັບຈາກປະເທດອື່ນໆ ຍັງບໍ່ໄດ້ຖືກສົ່ງໃຫ້ບັນດາດ່ານທີ່ກ່ຽວຂ້ອງ ແລະ ພວກເຂົາ ຍັງຄົງເອື່ອຍໃສ່ເອກະສານເປັນເຈ້ຍ. ກົມພາສີ ກຳລັງເຮັດວຽກເພື່ອໃຫ້ເຈົ້າໜ້າທີ່ປະຈຳດ່ານຊາຍແດນ ສາມາດເຂົ້າເຖິງລະບົບແຈ້ງພາສີປະຕູດຽວອາຊຽນ ເພື່ອສ້າງສຳເນົາເອົາເອກະສານຟອມ D ໃຫ້ແກ່ດ່ານທີ່ກ່ຽວຂ້ອງໃນອານາຄົດອັນໃກ້. ກົມພາສີ ຍັງຈະຊ່ວຍໃນການເຂົ້າເຖິງຂໍ້ມູນອື່ນໆຂອງບັນດາປະເທດສະມາຊິກ.

[22] ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ ເລກທີ 3480/ກງ, ລົງວັນທີ 7 ພະຈິກ 2022.

[23] ບົດລາຍງານຂອງອົງການ UNESCAP ກ່ຽວກັບການປະເມີນຄວາມພ້ອມຂອງ ສປປ ລາວ ສຳລັບການຄ້າຂ້າມແດນແບບບໍ່ນຳໃຊ້ເຈ້ຍ ເດືອນ ກຸມພາ 2022.

ກົມພາສີ ແມ່ນຍັງມີແຜນການເພື່ອແລກປ່ຽນຂໍ້ມູນຂ່າວສານທີ່ຕິດພັນກັບເອກະສານແຈ້ງພາສີອາຊຽນ (ACDD) ຜ່ານລະບົບແຈ້ງພາສີປະຕູດຽວອາຊຽນ ຊຶ່ງໄດ້ດຳເນີນການໄປແລ້ວໂດຍ 6 ປະເທດສະມາຊິກ[24]. ການແລກປ່ຽນຂໍ້ມູນຂອງເອກະສານ ACDD ໂດຍສະເພາະມູນຄ່າ ແລະ ປະລິມານການແຈ້ງພາສີ ຈະຊ່ວຍປັບປຸງການປະຕິບັດຕາມລະບຽບການແຈ້ງພາສີ ແລະ ເພີ່ມທະວີການເກັບລາຍຮັບ.

## 2.6 ການປະສານສົມທົບກັບພາກທຸລະກິດ

ການຮ່ວມມືກັບພາກທຸລະກິດ ແມ່ນວຽກງານທີ່ສຳຄັນທີ່ສຸດທີ່ກຳນົດໃນແຜນດຳເນີນງານ TFRM ເນື່ອງຈາກຖືໄດ້ວ່າເປັນສິ່ງຈຳເປັນຕ້ອງເຮັດກ່ອນໝູ່ ສຳລັບການຈັດຕັ້ງປະຕິບັດຂໍ້ຄິດລິເລີ່ມການອຳນວຍຄວາມສະດວກທາງດ້ານການຄ້າໃດໆ ໃຫ້ປະສົບຜົນສຳເລັດ. ຍ້ອນຄວາມເຂົ້າໃຈດັ່ງກ່າວ, ແຜນດຳເນີນງານໄດ້ກຳນົດບາງກິດຈະກຳທີ່ສຳຄັນພາຍໃຕ້ເສົາຄ້ຳນີ້.

### 2.6.1 ກອງປະຊຸມກັບພາກທຸລະກິດ ລວມທັງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ເປັນປົກກະຕິຢ່າງໜ້ອຍໄຕມາດລະໜຶ່ງຄັ້ງ

ການເນັ້ນໜັກເຖິງຄວາມຈຳເປັນຂອງການປະສານສົມທົບກັບພາກທຸລະກິດ ໃນການປະຕິຮູບການອຳນວຍຄວາມສະດວກທາງດ້ານການຄ້າ. ແຜນດຳເນີນງານ ໄດ້ກຳນົດໃຫ້ມີການປະຊຸມຂອງຂະແໜງການທີ່ກ່ຽວຂ້ອງ ກັບ ພາກທຸລະກິດ ເປັນປົກກະຕິ. ນອກຈາກນີ້, ເປັນຂໍ້ຜູກມັດທີ່ສຳຄັນພາຍໃຕ້ສັນຍາ WTO-TFA ແລະ ຈຳເປັນຕ້ອງໄດ້ປະຕິບັດ. ແຜນດຳເນີນງານ ສະເໜີໃຫ້ມີການສ້າງຕັ້ງຄະນະກຳມະການປຶກສາຫາລືທາງດ້ານວິຊາການ ກັບ ຕາງໜ້າຈາກພາກທຸລະກິດ ແລະ ມີລະບອບກອງປະຊຸມທີ່ກຳນົດໄວ້ຢ່າງໜ້ອຍໄຕມາດລະໜຶ່ງຄັ້ງ ເພື່ອສ້າງກົນໄກປະສານງານທາງດ້ານສະຖາບັນ ສຳລັບການປຶກສາຫາລືກັບພາກທຸລະກິດ ຢ່າງເປັນປົກກະຕິ.

ໃນຂະນະທີ່ຂະແໜງການສ່ວນໃຫຍ່ ລົ້ມເຫຼວໃນການສ້າງຕັ້ງຄະນະກຳມະການປຶກສາຫາລືດັ່ງກ່າວໃດໆ ແລະ ບໍ່ມີການປະຊຸມກັບພາກທຸລະກິດ ເປັນປົກກະຕິ, ຍົກເວັ້ນ ກົມການນຳເຂົ້າ ແລະ ສົ່ງອອກ ເນື່ອງຈາກມີຄວາມຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ເຮັດວຽກເປັນກອງເລຂາ TFS/NTFC. ທີ່ສຳຄັນຫຼາຍກວ່ານັ້ນ ແມ່ນກົມການນຳເຂົ້າ ແລະ ສົ່ງອອກ ຍັງມີງົບປະມານພຽງພໍສຳລັບການປຶກສາຫາລືກັບພາກທຸລະກິດ. ກົມລ້ຽງສັດ ແລະ ການປະມົງ ໄດ້ຈັດກອງປະຊຸມກັບພາກທຸລະກິດດັ່ງກ່າວ ສອງຄັ້ງຕໍ່ປີ (ຄັ້ງສຸດທ້າຍໃນປີ 2021 ແມ່ນຈັດໃນຮູບແບບທາງໄກ), ກົມຄຸ້ມຄອງບໍ່ແຮ່ ແລະ ກົມຂົນສົ່ງ ຈັດໜຶ່ງຄັ້ງຕໍ່ປີ. ຂະແໜງການດັ່ງກ່າວ ໄດ້ເຮັດບົດບັນທຶກກອງປະຊຸມເຫຼົ່ານີ້. ກົມຂົນສົ່ງ ແຈ້ງວ່າໄດ້ຈັດກອງປະຊຸມກັບພາກທຸລກິດ ໃນປີ 2018, 2020 ແລະ 2021 ຊຶ່ງສອງຄັ້ງສຸດທ້າຍແມ່ນຈັດຂຶ້ນໃນຮູບແບບທາງໄກ ແລະ ເຂົ້າຮ່ວມໂດຍບັນດາບໍລິສັດຈຳນວນຫຼາຍ (60-70 ຄົນ). ກົມມາດຕະຖານ ແລະ ວັດແທກ ກ່າວວ່າ ຈະຈັດກອງປະຊຸມຂຶ້ນຕາມຄວາມຈຳເປັນ ແລະ ເປີດເຜີຍວ່າກອງປະຊຸມຄັ້ງສຸດທ້າຍແມ່ນຈັດຂຶ້ນໃນຕົ້ນປີ 2022 ຊຶ່ງປຶກສາຫາລື ກ່ຽວກັບບັນຫາທີ່ຕິດພັນກັບການປະຈຳການຢູ່ດ່ານຊາຍແດນຂອງໜ່ວຍງານກວດສອບຄຸນນະພາບ ແລະ ບັນຫາການເກັບຄ່າທຳນຽມກວດກາ ຊຶ່ງເຫັນວ່າສູງຫຼາຍ. ກົມພາສີ ຍັງບໍ່ໄດ້ຈັດກອງປະຊຸມປຶກສາຫາລືດັ່ງກ່າວ ມາຮອດປະຈຸບັນ, ແຕ່ມີແຜນຈະສ້າງຕັ້ງຄະນະກຳມະການປຶກສາຫາລື ກັບ ຕາງໜ້າຂອງພາກທຸລະກິດ ສຳລັບການປຶກສາຫາລືໃນແຕ່ລະໄຕມາດ. ກົມພາສີ ຍັງໄດ້ຮ່າງບົດບັນທຶກຄວາມເຂົ້າໃຈ ເພື່ອເຊັນລົງນາມກັບສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ສຳລັບຈຸດປະສົງດັ່ງກ່າວ.

[24] ມີ 6 ປະເທດສະມາຊິກ ຄື: ກຳປູເຈຍ, ມາເລເຊຍ, ມຽນມ້າ, ຟີລິບປິນ, ສິງກະໂປ ແລະ ໄທ ໄດ້ເລີ່ມແລກປ່ຽນຂໍ້ມູນຜ່ານລະບົບ ACDD.

ຈາກຂໍ້ມູນທີ່ກ່າວມາຂ້າງເທິງ, ເຖິງວ່າການປຶກສາຫາລືກັບພາກທຸລະກິດ ມີຄວາມສຳຄັນ, ແຕ່ບາງຂະແໜງການບໍ່ມີຄວາມພະຍາຍາມທີ່ຈະຈັດຕັ້ງປະຕິບັດມາດຕະການທີ່ສຳຄັນນີ້ ໃນດ້ານການສ້າງໂຄງສ້າງທາງດ້ານສະຖາບັນ ສຳລັບການປຶກສາຫາລືກັບພາກທຸລະກິດ. ພວກເຂົາຊີ້ແຈງວ່າຍ້ອນຂໍ້ຈຳກັດດ້ານງົບປະມານ ຈຶ່ງບໍ່ສາມາດຈັດກອງປະຊຸມປຶກສາຫາລືດັ່ງກ່າວເປັນປົກກະຕິ. ກົມການນຳເຂົ້າ ແລະ ສົ່ງອອກ ເປັນພຽງກົມດຽວທີ່ມີສ່ວນຮ່ວມກັບພາກທຸລະກິດຢ່າງເຂັ້ມແຂງ ແລະ ໃຫ້ພາກທຸລະກິດ ມີສ່ວນຮ່ວມໃນການພິຈາລະນາເກືອບທັງໝົດ. ໃນລະຫວ່າງປີ 2018-2022, ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ຈັດກອງປະຊຸມປຶກສາຫາລື ກັບພາກທຸລະກິດຈຳນວນ 17 ຄັ້ງ ໂດຍມີຕາງໜ້າພາກລັດ ແລະ ທຸລະກິດທີ່ກ່ຽວຂ້ອງ ເຂົ້າຮ່ວມ. ໃນໄລຍະເວລາດັ່ງກ່າວ, ມີ 55 ບັນຫາທີ່ພາກທຸລະກິດໄດ້ຖືກຍົກຂຶ້ນ ຢູ່ຂັ້ນສູນກາງ ແລະ ແຂວງ ຊຶ່ງ 24 ບັນຫາ ໄດ້ຮັບການແກ້ໄຂ ແລະ ບັນຫາອື່ນໆ ແມ່ນຢູ່ໃນຂັ້ນຕອນການພິຈາລະນາ. ໃນກອງປະຊຸມໜ່ວຍງານການຄ້າ ແລະ ພາກທຸລະກິດ[25], ສະພາການຄ້າ ແລະ ອຸດສາຫະກຳ ໄດ້ແຈ້ງວ່າບັນຫາທີ່ໄດ້ຮັບການແກ້ໄຂ ຍັງລວມເອົາບັນຫາທີ່ຖືກຍົກຂຶ້ນໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ຊຶ່ງໄດ້ຮັບການແກ້ໄຂ ຜ່ານກົນໄກຂອງຄະນະກຳມະການ NTFC ແລະ ກອງເລຂາ TFCS, ແຕ່ມີບາງບັນຫາທີ່ບໍ່ສາມາດແກ້ໄຂໄດ້ ເນື່ອງຈາກເກີນຄວາມສາມາດຂອງຄະນະກຳມະການ NTFC. ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ເຮັດບົດບັນທຶກກອງປະຊຸມ ແລະ ນຳສົ່ງໃຫ້ຜູ້ເຂົ້າຮ່ວມເປັນປົກກະຕິ. ເຖິງຢ່າງໃດກໍ່ຕາມ, ຈະເປັນການດີຫຼາຍ ຖ້າບັນຫາສຳຄັນທີ່ໄດ້ຕົກລົງກັນ ໃນກອງປະຊຸມປຶກສາຫາລື ກັບ ພາກທຸລະກິດ ໄດ້ເອົາລົງໃນເວັບໄຊທ໌ LTP ເພື່ອເປັນຂໍ້ມູນໃຫ້ແກ່ສັງຄົມ ແລະ ການອ້າງອີງໃນອານາຄົດ ຊຶ່ງຈະຍັງຊ່ວຍເພີ່ມຄວາມໂປ່ງໃສຂອງການຕັດສິນໃຈ.

### 2.6.2 ການຈັດກອງປະຊຸມສ້າງຂີດຄວາມສາມາດ ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ພາກທຸລະກິດ ທັງຢູ່ສູນກາງ ແລະ ແຂວງ

ຫຼາຍຂະແໜງການ ໄດ້ຈັດກອງປະຊຸມການສ້າງຂີດຄວາມສາມາດ ແລະ ຄວາມເຂົ້າໃຈ ໃຫ້ແກ່ພາກທຸລະກິດ. ແຕ່ກິດຈະກຳຕ່າງໆສ່ວນໃຫຍ່ແລ້ວ ຈະຖືກກຳນົດຕາມງົບປະມານທີ່ມີຢູ່ ເພື່ອຈຸດປະສົງດັ່ງກ່າວ. ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ສາມາດຈັດກອງປະຊຸມໄດ້ ໂດຍນຳໃຊ້ງົບປະມານຈາກທຶນສະໜັບສະໜູນຍ່ອຍ Challenge Facility (CF) ພາຍໃຕ້ໂຄງການ LCT. ຕົວຢ່າງ: ກົມພາສີ ໄດ້ຈັດກອງປະຊຸມສຳມະນາຫຼາຍຄັ້ງ ໃນລະຫວ່າງປີ 2020-2021 ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ຊຸມຊົນທຸລະກິດ ກ່ຽວກັບກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ) ແລະ ບັນດາສິ່ງທ້າທາຍ ທີ່ພົບພໍ້ໃນການຈັດຕັ້ງປະຕິບັດຂໍ້ຄິດລິເລີ່ມໃນການປະຕິຮູບຕ່າງໆ, ໂດຍສະເພາະໃນການຕິດຕາມການຈັດຕັ້ງປະຕິບັດຄວາມຄືບໜ້າຂອງພວກເຂົາ. ເຊັ່ນດຽວກັນກັບກົມອາຫານ ແລະ ຢາ ທີ່ຈັດກອງປະຊຸມສຳມະນາ ກ່ຽວກັບບັນຫາຄວາມປອດໄພຂອງອາຫານ ພາຍຫຼັງລະບຽບການໃໝ່ ກ່ຽວກັບການສົ່ງອອກອາຫານ ໄດ້ຖືກວາງອອກ ໃນປີ 2018. ເຊັ່ນດຽວກັບກົມລ້ຽງສັດ ແລະ ການປະມົງ ທີ່ໄດ້ຈັດກອງປະຊຸມສຳມະນາ ຢູ່ແຂວງຈຳປາສັກ ໃນເດືອນ ພຶດສະພາ 2022 ເພື່ອເຜີຍແຜ່ລະບຽບການໃໝ່ ທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກຜະລິດຕະພັນສັດ ໃຫ້ແກ່ບັນດາຜູ້ຄ້າ. ນອກຈາກນີ້, ໂດຍການສະໜັບສະໜູນຂອງໂຄງການ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ຄະນະກຳມະການ PTFCs ໄດ້ຈັດກອງປະຊຸມ ກ່ຽວກັບບັນຫາການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍມີພາກລັດ ແລະ ທຸລະກິດທີ່ກ່ຽວຂ້ອງ ຫຼາຍກວ່າ 55 ຄັ້ງ ໃນລະຫວ່າງປີ 2018-2022. ສະນັ້ນ, ຈຶ່ງສາມາດຈັດກິດຈະກຳເຫຼົ່ານີ້ ເນື່ອງຈາກຂະແໜງການທີ່ກ່ຽວຂ້ອງ ໄດ້ຮັບງົບປະມານທີ່ຕ້ອງການພາຍໃຕ້ໂຄງການດັ່ງກ່າວ.

[25] ກອງປະຊຸມໜ່ວຍງານການຄ້າ ແລະ ພາກທຸລະກິດ ແມ່ນຈັດຂຶ້ນໃນວັນທີ 25 ພະຈິກ 2022.

### 2.6.3 ການຂໍການຢັ້ງຢືນຄວາມຖືກຕ້ອງຈາກພາກທຸລະກິດ ເຊັ່ນ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ສຳລັບການຈັດຕັ້ງປະຕິບັດບັນດາມາດຕະການ ທີ່ກຳນົດໃນແຜນດຳເນີນງານ TFRM

ຜູ້ທີ່ອອກແບບແຜນດຳເນີນງານ TFRM ເຊື່ອໝັ້ນຢ່າງໜັກແໜ້ນວ່າ ຂໍ້ລິດລິເລີ່ມໃນການປະຕິຮູບຈະບໍ່ສຳເລັດໄດ້ ຈົນກວ່າຜົນປະໂຫຍດທີ່ຕັ້ງໃຈໄວ້ ຈະຖືກນຳໄປສູ່ຊຸມຊົນການຄ້າ ແລະ ໃຫ້ເປັນຜູ້ຮັບຜົນປະໂຫຍດໃນທີ່ສຸດ, ພາກທຸລະກິດ ແມ່ນພາກສ່ວນທີ່ດີທີ່ສຸດ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງມາດຕະການໃດໆ ທີ່ຖືກອ້າງວ່າໄດ້ຮັບການຈັດຕັ້ງປະຕິບັດໂດຍຂະແໜງການລັດ. ດ້ວຍຈຸດປະສົງນີ້, ແຜນດຳເນີນງານ ຈຶ່ງຂໍການຢັ້ງຢືນຄວາມຖືກຕ້ອງຈາກພາກທຸລະກິດ ກ່ຽວກັບມາດຕະການຕ່າງໆທີ່ກຳນົດໃນແຜນດຳເນີນງານ. ໄດ້ມີການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ[26] ໃນປີ 2021 ທີ່ໄດ້ສຳຫຼວດເອົາຕົວຢ່າງຂະໜາດໃຫຍ່ຈຳນວນ 100 ບໍລິສັດ ຢູ່ນະຄອນຫຼວງວຽງຈັນ ແລະ 7 ແຂວງ ທົ່ວປະເທດ ຊຶ່ງສຸມໃສ່ສຳຫຼວດສະເພາະທຸກມາດຕະການໃນຂອບສັນຍາ WTO-TFA ເພື່ອປະເມີນຂອບເຂດການນຳໃຊ້ ແລະ ຜົນກະທົບຂອງມາດຕະການດັ່ງກ່າວ.

ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ, ພາກທຸລະກິດໄດ້ໃຫ້ຂໍ້ມູນວ່າ ຈາກທັງໝົດ 34 ມາດຕະການທີ່ໄດ້ຖືກປະເມີນ, ມີພຽງ 14 ມາດຕະການທີ່ສາມາດນຳໃຊ້ໄດ້ຢ່າງເຕັມສ່ວນ ແລະ 8 ມາດຕະການສາມາດນຳໃຊ້ໄດ້ໃນລະດັບປານກາງ. ມີພຽງ 12 ມາດຕະການ ທີ່ສາມາດນຳໃຊ້ໄດ້ບາງສ່ວນ ຊຶ່ງລວມເອົາ 5 ມາດຕະການທີ່ນອນໃນໝວດ A ຊຶ່ງປະກອບມີມາດຕະການທີ່ຕິດພັນກັບການກຳນົດຈຸດສອບຖາມ, ການອຸທອນ, ການເຄື່ອນຍ້າຍສິນຄ້າພາຍໃຕ້ການຄວບຄຸມຂອງພາສີ, ແຈ້ງການໃນການເພີ່ມທະວີຂັ້ນຕອນການກວດກາ ແລະ ການຄວບຄຸມຂອງພາສີ.

## 2.7 ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ຢ່າງເຕັມສ່ວນ ຢ່າງໄວວາ ແລະ ຕາມເວລາທີ່ກຳນົດ

ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ແມ່ນອົງປະກອບສຳຄັນຂອງແຜນດຳເນີນງານ ເນື່ອງຈາກເປັນຂໍ້ຜູກມັດສາກົນ ທີ່ຕ້ອງໄດ້ປະຕິບັດຕາມເວລາທີ່ກຳນົດໄວ້. ແຜນດຳເນີນງານ TFRM ໄດ້ກຳນົດເວລາໃນການຈັດຕັ້ງປະຕິບັດຢ່າງໄວວາ ຊຶ່ງເບິ່ງຄືວ່າມີຄວາມທະເຍີນທະຍານ ແຕ່ຈຸດປະສົງແມ່ນເພື່ອເນັ້ນໃສ່ຄວາມຮີບດ່ວນ ແລະ ຄວາມສຳຄັນຂອງມັນ. ໄດ້ມີການປະເມີນສະຖານະຂອງການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ແລະ C ດ້ວຍຕົນເອງ ໂດຍຂະແໜງການທີ່ສຳຄັນ ໂດຍການປຶກສາຫາລືກັບກົມການນຳເຂົ້າ ແລະ ສົ່ງອອກສຳລັບການຄົ້ນຄວ້າຈຳນວນການສະໜັບສະໜູນທີ່ຕ້ອງການ ເພື່ອການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ ໃນການຈັດຕັ້ງປະຕິບັດມາດຕະການເຫຼົ່ານີ້, ໂດຍສະເພາະແມ່ນມາດຕະການທີ່ເປັນຂໍ້ຜູກມັດໃນໝວດ C. ອີງຕາມການປະເມີນນີ້, ບັນດາກິດຈະກຳສະເພາະ ໄດ້ຖືກລວມເອົາໃນໂຄງການ LCT ເພື່ອໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສະໜັບສະໜູນອື່ນໆ ໃນການຈັດຕັ້ງປະຕິບັດສັນຍາ WTO-TFA ຢູ່ຂະແໜງການທີ່ສຳຄັນ. ຕໍ່ມາ, ສປປ ລາວ ໄດ້ແຈ້ງອົງການ WTO ກ່ຽວກັບການກະກຽມຈັດຕັ້ງປະຕິບັດສັນຍາ WTO-TFA ແລະ ຄວາມຕ້ອງການຂອງປະເທດ ສຳລັບການສະໜັບສະໜູນເພີ່ມເຕີມຈາກອົງການ WTO ແລະ ຜູ້ຮ່ວມພັດທະນາ.

ເພື່ອຊ່ວຍຂະແໜງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA, ໄດ້ມີການພັດທະນາແຜນປະຕິບັດງານຂອງແຕ່ລະຂະແໜງການ ໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ແລະ C. ລວມທັງໝົດມີ 23 ມາດຕະການ (6 ມາດຕະການທີ່ນອນໃນໝວດ B ແລະ 17 ມາດຕະການທີ່ນອນໃນ

[26] ໄດ້ດຳເນີນການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ໃນລະຫວ່າງເດືອນ ມິຖຸນາ-ກໍລະກົດ 2021. ໄດ້ສຳຫຼວດເອົາ 100 ຫົວໜ່ວຍທຸລະກິດ.ໃນນີ້, ມີບໍລິສັດນຳເຂົ້າ-ສົ່ງອອກ ຈຳນວນ 92 ບໍລິສັດ ແລະ ບໍລິສັດຂົນສົ່ງ 8 ບໍລິສັດ.

ໝວດ C) ແລະ ນຳສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ. ມາດຕະການເຫຼົ່ານີ້ ໄດ້ອະທິບາຍມາດຕະການສະເພາະຂອງສັນຍາ WTO-TFA ແລະ ສິ່ງໃດທີ່ຕ້ອງເຮັດພາຍໃຕ້ສັນຍາດັ່ງກ່າວ. ແຜນປະຕິບັດງານ ໄດ້ສະແດງສະຖານະປະຈຸບັນ ແລະ ການປະຕິບັດທີ່ມີຢູ່ ກ່ຽວກັບມາດຕະການທີ່ກ່ຽວຂ້ອງ ແລະ ທ້າຍສຸດໄດ້ກຳນົດຂັ້ນຕອນໃນການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸຕາມມາດຕາຂອງສັນຍາ WTO-TFA ຕາມກຳນົດເວລາທີ່ກວ້າງ ເພື່ອເປັນແນວທາງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ. ແຜນປະຕິບັດເຫຼົ່ານີ້ ຍັງກ່າວເຖິງຄວາມຈຳເປັນໃຫ້ມີການຊ່ວຍເຫຼືອທາງດ້ານວິຊາການທຸກຢ່າງທີ່ຈຳເປັນ ແລະ ດ້ວຍເຫດນີ້ ຈຶ່ງມີການຊ່ວຍເຫຼືອສະເພາະໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາແຜນປະຕິບັດງານ DAP ແລະ ບົດສະເໜີໂຄງການ CF.

ໄດ້ມີການກະກຽມແບບຟອມລະອຽດສຳລັບການຂໍເອົາບົດລາຍງານຈາກຂະແໜງການທີ່ກ່ຽວຂ້ອງ ເພື່ອເກັບກຳຄວາມຄືບໜ້າໃນການຈັດຕັ້ງປະຕິບັດໃນແຕ່ລະໄຕມາດ. ອີງຕາມບົດລາຍງານຄວາມຄືບໜ້າໃນແຕ່ລະໄຕມາດເຫຼົ່ານີ້ ຈາກຂະແໜງການທີ່ກ່ຽວຂ້ອງ, ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ຖືກຄາດຫວັງໃຫ້ມີການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານ TRFM ໂດຍລວມ ຕໍ່ກອງເລຂາ TFS ຫຼື ຄະນະກຳມະການ NTFC. ຂໍ້ມູນທີ່ສັງລວມໄດ້ຈາກແບບຟອມ ສາມາດນຳໃຊ້ໃນການຕື່ມຂໍ້ມູນໃນຕາຕະລາງຂອງອົງການ OECD ສຳລັບການຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA. ເຖິງຢ່າງໃດກໍ່ຕາມ, ຂະແໜງການທີ່ກ່ຽວຂ້ອງ ບໍ່ໄດ້ປະຕິບັດຕາມແບບຟອມທີ່ໄດ້ກຳນົດໄວ້ ແລະ ມັກລາຍງານໃນຮູບແບບທົ່ວໄປ ຫຼາຍກວ່າ, ສະນັ້ນ ຈຶ່ງເປັນອຸປະສັກໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຫຼື ກອງເລຂາ TFCS ຈາກການຕິດຕາມ ຫຼື ການປະເມີນຜົນ ຢ່າງໃກ້ຊິດ. ໃນຄວາມເປັນຈິງແລ້ວ, ການລະບາດຂອງພະຍາດໂຄວິດ ຍັງຂັດຂວາງການປະເມີນໄລຍະກາງສະໄໝຂອງແຜນດຳເນີນງານ ຢ່າງເລິກເຊິ່ງ ຊຶ່ງອາດຊ່ວຍໃນການແກ້ໄຂຊ່ອງຫວ່າງ ແລະ ການປັບປຸງທິດທາງທີ່ຈຳເປັນ.

ລາຍລະອຽດຂອງການປະຕິບັດງານຂອງກົມພາສີ ແລະ ຂະແໜງການທີ່ອອກລະບຽບການອື່ນໆ ກ່ຽວກັບການຈັດຕັ້ງປະຕິບັດບັນດາມາດຕະການທີ່ນອນໃນສັນຍາ WTO-TFA ແມ່ນກຳນົດຢູ່ຂ້າງລຸ່ມ ພ້ອມກັບຜົນປະທົບ ແລະ ການນຳໃຊ້ມາດຕະການດັ່ງກ່າວ ຂອງຜູ້ໄດ້ຮັບຜົນປະໂຫຍດ. ຕົວຢ່າງ: ພາກທຸລະກິດ, ຊຶ່ງສາມາດຄົ້ນຫາຢູ່ບົດສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ແລະ ຄຳເຫັນທີ່ໄດ້ຮັບຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດແມ່ນໄດ້ຮັບການພິຈາລະນາ. ໃນນີ້, ມາດຕະການທີ່ນອນໃນສັນຍາ WTO-TFA ໄດ້ຖືກອະທິບາຍເປັນການປະຕິບັດຢ່າງເຕັມສ່ວນ ຫຼື ບາງສ່ວນ. ມາດຕະການທີ່ຖືກປະຕິບັດໄດ້ຢ່າງເຕັມສ່ວນ ແມ່ນການປະຕິບັດຕາມມາດຕາຕ່າງໆຂອງສັນຍາ WTO-TFA ຢ່າງເຕັມສ່ວນ. ສ່ວນອື່ນໆ ແມ່ນມາດຕະການທີ່ຖືກປະຕິບັດໄດ້ບາງສ່ວນ. ເຖິງຢ່າງໃດກໍ່ຕາມ, ຍັງມີອີກໝວດໜຶ່ງ ຊຶ່ງເປັນມາດຕະການທີ່ຖືກປະຕິບັດເປັນສ່ວນໃຫຍ່ ຊຶ່ງຂອບເຂດການປະຕິບັດແມ່ນປະມານ 2/3 ຫຼື ຫຼາຍກວ່ານັ້ນ ແຕ່ການປະຕິບັດຢ່າງເຕັມສ່ວນ ຍັງມີໜ້ອຍ. ຕົວຢ່າງ: ມາດຕະການທີ່ຕິດພັນກັບການຢັ້ງຢືນຮັບຮອງລ່ວງໜ້າ ໄດ້ຖືກຈັດເປັນການປະຕິບັດເປັນສ່ວນໃຫຍ່ ເນື່ອງຈາກກົດໝາຍພາສີ ສະບັບປັບປຸງ ໄດ້ປະຕິບັດຕາມທຸກມາດຕາຂອງສັນຍາ WTO-TFA ແລະ ຜູ້ຄ້າ ໄດ້ນຳໃຊ້ສິ່ງອຳນວຍຄວາມສະດວກດັ່ງກ່າວ. ແຕ່ຂອບເຂດການນຳໃຊ້ ຍັງຈຳກັດສະເພາະການໄດ້ຮັບການຢັ້ງຢືນທີ່ຕິດພັນກັບແຫຼ່ງກຳເນີດຂອງສິນຄ້າເທົ່ານັ້ນ ແລະ ການຈັດລະຫັດສິນຄ້າ ແລະ ບັນຫາອື່ນໆ ເຖິງວ່າກົດໝາຍ ໄດ້ກຳນົດໄວ້ເພື່ອຈັດຕັ້ງປະຕິບັດກໍ່ຕາມ. ຍັງບໍ່ມີບົດລາຍງານ ຫຼື ການອະທິບາຍລະອຽດຈາກກົມພາສີວ່າ ບັນຫາອື່ນໆ ໄດ້ຖືກພິຈາລະນາ ຫຼື ບໍ່. ໃນສະພາບການນີ້, ມາດຕະການເຫຼົ່ານີ້ ໄດ້ຖືກຈັດເປັນການປະຕິບັດເປັນສ່ວນໃຫຍ່ ແທນທີ່ການປະຕິບັດ ຢ່າງເຕັມສ່ວນ.

### 2.7.1 ການຈັດຕັ້ງປະຕິບັດມາດຕະການທີ່ມອບໃນໝວດ A

ອີງຕາມການປະເມີນຊ່ອງຫວ່າງ ທີ່ດໍາເນີນການກ່ອນໜ້ານີ້, ສປປ ລາວ ໄດ້ກໍານົດມາດຕະການທີ່ມອບໃນໝວດ A ຈໍານວນທັງໝົດ 13 ມາດຕະການ ຊຶ່ງຖືວ່າໄດ້ຮັບການການຈັດຕັ້ງປະຕິບັດແລ້ວ ຫຼື ສາມາດຈັດຕັ້ງປະຕິບັດແບບງ່າຍດາຍ ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ. ມາດຕະການເຫຼົ່ານີ້ ໄດ້ຮັບການແຈ້ງຕໍ່ອົງການ WTO ໃນປີ 2015[27]. ໃນການເປັນປະເທດດ້ອຍພັດທະນາ, ຂໍ້ຜູກມັດຂອງມາດຕະການທີ່ມອບໃນໝວດ A ຕ້ອງໄດ້ຈັດຕັ້ງປະຕິບັດພາຍໃນໜຶ່ງປີ ພາຍຫຼັງສັນຍາ WTO-TFA ມີຜົນບັງຄັບໃຊ້. ຕົວຢ່າງ: ພາຍໃນເດືອນ ກຸມພາ 2018, ແຜນດໍາເນີນງານ ໄດ້ກໍານົດເປົ້າໝາຍໃນການຈັດຕັ້ງປະຕິບັດໃນເດືອນ ທັນວາ 2017 ເປັນຢ່າງດີ ກ່ອນກໍານົດເວລາ.

#### 2.7.1.1 ການເຜີຍແຜ່ຂໍ້ມູນຂ່າວສານທີ່ຕິດພັນກັບການຄ້າ ຢ່າງຍຸຕິທໍາ ແລະ ເຂົ້າເຖິງໄດ້ງ່າຍ (ມາດຕາ 1.1)

ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄ້າສາກົນ ແມ່ນເຜີຍແຜ່ລົງໃນເວັບໄຊທ໌ຈົດໝາຍເຫດລັດຖະການ ຂອງລັດຖະບານ ສປປ ລາວ. ຂະແໜງການທີ່ກ່ຽວຂ້ອງ ຍັງໄດ້ເຜີຍແຜ່ກົດໝາຍ ແລະ ລະບຽບການທີ່ຕິດພັນກັບການຄ້າ ຜ່ານແຜ່ນພັບ ແລະ ປຶ້ມ ໂດຍບໍ່ມີຄ່າທໍານຽມ ຫຼື ມີຄ່າທໍານຽມເລັກໜ້ອຍ. ພ້ອມດຽວກັນ, ຂໍ້ມູນກ່ຽວກັບເອກະສານສໍາລັບການນໍາເຂົ້າ ແລະ ສົ່ງອອກ ລວມທັງຂັ້ນຕອນການຂໍອະນຸຍາດ ໄດ້ຖືກສະແດງຢ່າງຊັດເຈນຢູ່ຫ້ອງການຂອງພວກເຂົາ ແລະ ຢູ່ດ່ານຊາຍແດນ. ຕາມຜົນການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ, ພາກທຸລະກິດ ໃຫ້ຄໍາຄິດເຫັນວ່າໄດ້ນໍາໃຊ້ມາດຕະການນີ້ໂດຍສ່ວນໃຫຍ່ ແລະ ສະນັ້ນ ມາດຕະການດັ່ງກ່າວ ຖືວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ.

#### 2.7.1.2 ມີຂໍ້ມູນຂ່າວສານທີ່ຕິດພັນກັບການຄ້າ ຢູ່ອິນເຕີເນັດ (ມາດຕາ 1.2)

ເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (LTP) ໄດ້ຖືກສ້າງຂຶ້ນໃນເດືອນ ມິຖຸນາ 2012 ແມ່ນຖານຂໍ້ມູນແຫ່ງຊາດ ທີ່ມີບັນດາຂໍ້ຮຽກຮ້ອງທາງດ້ານລະບຽບການທີ່ຕິດພັນກັບການນໍາເຂົ້າ, ສົ່ງອອກ ແລະ ຜ່ານແດນ ທັງໝົດ. ເວັບໄຊທ໌ດັ່ງກ່າວ ໄດ້ຮັບການບໍາລຸງຮັກສາຢູ່ກະຊວງອຸດສາຫະກໍາ ແລະ ການຄ້າ ຊຶ່ງມີພະນັກງານຮັບຜິດຊອບເອົາເນື້ອໃນຕ່າງໆລົງໃນເວັບໄຊທ໌ໃຫ້ທັນຍຸກທັນເຫດການ. ມີຈຸດປະສານງານທີ່ຖືກແຕ່ງຕັ້ງຢູ່ຂະແໜງການທີ່ກ່ຽວຂ້ອງ ຜູ້ທີ່ຮັບຜິດຊອບສົ່ງຂໍ້ມູນທີ່ກ່ຽວຂ້ອງ ເພື່ອເອົາລົງໃນເວັບໄຊທ໌ LTP ຊຶ່ງມີພຽງແຕ່ກົມພາສີ ແລະ ກົມມາດຕະຖານ ແລະ ວັດແທກ, ສ່ວນຂະແໜງການອື່ນພົບວ່າຍັງບໍ່ປະຕິບັດໜ້າທີ່ດັ່ງກ່າວ. ມີພຽງບາງຂະແໜງການ ທີ່ເອົາຂໍ້ມູນທີ່ກ່ຽວຂ້ອງລົງໃນເວັບໄຊທ໌ຂອງຕົນເອງ. ມາດຕະການດັ່ງກ່າວ ພົບວ່າໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ອີງຕາມການສໍາຫຼວດຂອງອົງການ OECD ໃນປີ 2019 ແລະ ການສໍາຫຼວດທົ່ວໂລກຂອງອົງການສະຫະປະຊາຊາດ ກ່ຽວກັບການຄ້າແບບດີຈີຕອນ ແລະ ທີ່ຍືນຍົງ ໃນປີ 2021.

ເຖິງຢ່າງໃດກໍ່ຕາມ, ອີງຕາມການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ເຫັນວ່າ ໄດ້ນໍາໃຊ້ມາດຕະການດັ່ງກ່າວໃນລະດັບປານກາງ ເທົ່ານັ້ນ ຊຶ່ງລາຍງານວ່າ: ບັນດາຜູ້ຄ້າ ເອື່ອຍອີງໃສ່ແຫຼ່ງຂໍ້ມູນແບບດັ້ງເດີມຫຼາຍກວ່າ ເຊັ່ນ: ຫ້ອງການພາສີ ຢູ່ດ່ານຊາຍແດນ (25%), ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ (15%), ພະແນກອຸດສາຫະກໍາ ແລະ ການຄ້າ (14%) ແລະ ອື່ນໆ ຫຼາຍກວ່າເວັບໄຊທ໌ LTP (13%) ແລະ ເວັບໄຊທ໌ຂອງກົມພາສີ (8%) ຊຶ່ງການຊອກຫາຂໍ້ມູນທີ່ຕ້ອງການແມ່ນມີຄວາມທ້າທາຍຫຼາຍ ສໍາລັບຜູ້ຄ້າໂດຍສະເລ່ຍ[28]. ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ລາຍງານວ່າເວັບໄຊທ໌ LTP ຄວນເຜີຍແຜ່

[27] ແຈ້ງການຂອງອົງການ WTO ເລກທີ WT/PCTF/N/LAO/1, ລົງວັນທີ 17 ກັນຍາ 2017.

[28] ອີງຕາມການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດໃນປີ 2021, ຜູ້ຄ້າ ເອື່ອຍອີງໃສ່ເວັບໄຊທ໌ LTP ແລະ ເວັບໄຊທ໌ຂອງກົມພາສີໜ້ອຍກວ່າ. ການຂາດຄວາມຮັບຮູ້ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນຢູ່ເວັບໄຊທ໌ ເປັນເຫດຜົນຕົ້ນຕໍທີ່ຢູ່ເບື້ອງຫຼັງ ບໍ່ແມ່ນບັນຫາການເຂົ້າເຖິງຂໍ້ມູນຂອງພວກເຂົາ.

ຂັ້ນຕອນການປະຕິບັດຕົວຈິງ ກ່ຽວກັບການນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ມີຄວາມສຳຄັນ ແລະ ອາດນຳໃຊ້ວິດີໂອ ເພື່ອແນະນຳຜູ້ນຳໃຊ້ໃໝ່.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ໄດ້ກ່າວເພີ່ມເຕີມວ່າ ເຖິງວ່າຂໍ້ມູນທີ່ເອົາລົງໃນເວັບໄຊທ໌ LTP ເປັນພາສາລາວ, ແຕ່ຫຼາຍຂັ້ນຕອນ ແລະ ຄຳແນະນຳທີ່ສຳຄັນ ຍັງບໍ່ທັນເປັນພາສາອັງກິດ ຊຶ່ງເປັນອຸປະສັກໃຫ້ແກ່ນັກລົງທຶນ ແລະ ຜູ້ຄ້າຕ່າງປະເທດ ໃນການເຂົ້າເຖິງຂໍ້ມູນທີ່ຄົບຖ້ວນຈາກເວັບໄຊທ໌. ວັກທີ 2.2 ຂອງມາດຕາ 1.3 ຂອງສັນຍາ WTO-TFA ກ່ຽວຂ້ອງກັບມາດຕະຖານນີ້ ຍັງກຳນົດໃຫ້ມີການສະໜອງຂໍ້ມູນທີ່ຕິດພັນກັບການຄ້າທີ່ເປັນພາສາທາງການຂອງອົງການ WTO ລົງໃນສູນຂໍ້ມູນຂ່າວສານ. ວຽກງານດັ່ງກ່າວ ແມ່ນສ້າງຄວາມຫຍຸ້ງຍາກໃຫ້ແກ່ກົມການນຳເຂົ້າ ແລະ ສົ່ງອອກ ໂດຍສະເພາະຂະແໜງການທີ່ກ່ຽວຂ້ອງສ່ວນໃຫຍ່ ທີ່ໄດ້ນຳສົ່ງເອກະສານຂອງພວກເຂົາ ທີ່ບໍ່ໄດ້ແປເປັນພາສາອັງກິດ. ຂະແໜງການທີ່ກ່ຽວຂ້ອງ ໄດ້ຮັບການແນະນຳໃຫ້ສົ່ງເອກະສານ ແລະ ຄຳແນະນຳຕ່າງໆທີ່ສຳຄັນ ທີ່ແປເປັນພາສາອັງກິດ. ນອກຈາກນີ້, ຍັງມີແຜນຈະຍົກລະດັບເວັບໄຊທ໌ LTP ເພື່ອໃຫ້ງ່າຍຕໍ່ການຄົ້ນຫາ ແລະ ປັບປຸງໜ້າຕ່າງໃຫ້ມີຄວາມໜ້າສົນໃຈ. ເຖິງວ່າມີຄວາມພະຍາຍາມໃນການປັບປຸງເພີ່ມເຕີມ ແມ້ກະທັ້ງໃນສະພາບປະຈຸບັນ, ເວັບໄຊທ໌ LTP ເປັນແຫຼ່ງຂໍ້ມູນທີ່ຕິດພັນກັບການຄ້າ ບ່ອນດຽວທີ່ໜ້າເຊື່ອຖື ຊຶ່ງສາມາດເຂົ້າເຖິງໄດ້ທາງອິນເຕີເນັດ ໂດຍບໍ່ມີຂໍ້ຈຳກັດໃດໆ. ສະນັ້ນ, ມາດຕະການດັ່ງກ່າວ ຈຶ່ງຖືກຈັດປະເພດເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ.

#### 2.7.1.3 ການກຳນົດຈຸດສອບຖາມຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນທີ່ຕິດພັນກັບການຄ້າ (ມາດຕາ 1.3)

ສປປ ລາວ ໄດ້ແຈ້ງຈຸດສອບຖາມແຫ່ງຊາດ ຈຳນວນ 2 ຈຸດ, ກົມປູກຝັງ ແມ່ນຈຸດສອບຖາມສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ກົມມາດຕະຖານ ແລະ ວັດແທກ ແມ່ນຈຸດສອບຖາມສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ (TBT). ສອງຂະແໜງການດັ່ງກ່າວ ຍັງໄດ້ຂໍຂໍ້ມູນຈາກຂະແໜງການອື່ນ ຖ້າມີຄວາມຈຳເປັນ ແລະ ສັງລວມເພື່ອຕອບຜູ້ທີ່ສົ່ງຄຳຖາມມາ. ລາຍລະອຽດຂອງຈຸດສອບຖາມດັ່ງກ່າວ ໄດ້ເອົາລົງໃນເວັບໄຊທ໌ LTP ເຖິງວ່າສິ່ງອຳນວຍຄວາມສະດວກ ໄດ້ຖືກນຳໃຊ້ຢ່າງຈຳກັດ ແລະ ບາງເທື່ອ ຕ້ອງໄດ້ຮັບການເຜີຍແຜ່ ກໍ່ຕາມ. ພ້ອມດຽວກັນ, ໃນຂະນະທີ່ບໍ່ມີການເກັບຄ່າທຳນຽມໃນການສະໜອງຂໍ້ມູນ, ແຕ່ກໍ່ບໍ່ມີກຳນົດເວລາ ຫຼື ບໍ່ມີການຮັບປະກັນວ່າ ສອງຈຸດສອບຖາມເຫຼົ່ານີ້ ຈະຕ້ອງຕອບຄຳຖາມ. ທ້າຍສຸດ, ຂະແໜງການທີ່ສຳຄັນ ເຊັ່ນ: ກົມພາສີ, ກົມຂົນສົ່ງ, ກົມອາຫານ ແລະ ຢາ, ກົມຄຸ້ມຄອງບໍ່ແຮ່ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ບໍ່ມີການແຕ່ງຕັ້ງຈຸດສອບຖາມໃດໆ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ກ່າວວ່າບໍ່ມີກຳນົດເວລາໃນການສະໜອງຂໍ້ມູນ ສະນັ້ນ ຈຶ່ງບໍ່ເຫັນວ່າຈຸດສອບຖາມເຫຼົ່ານີ້ ມີຜົນປະໂຫຍດຕໍ່ການຄ້າ. ສະນັ້ນ, ມາດຕະການນີ້ ຈຶ່ງເປັນການຈັດຕັ້ງປະຕິບັດບາງສ່ວນ.

#### 2.7.1.4 ການແຈ້ງລາຍລະອຽດທີ່ກ່າວມາຂ້າງເທິງ ຕໍ່ຄະນະກຳມະການຂອງອົງການ WTO (ມາດຕາ 1.4)

ສປປ ລາວ ໄດ້ແຈ້ງຂໍ້ມູນທີ່ຕິດພັນກັບຂໍ້ຜູກມັດຕ່າງໆພາຍໃຕ້ສັນຍາ WTO-TFA ໃຫ້ແກ່ຄະນະກຳມະການຂອງອົງການ WTO ເມື່ອເຖິງກຳນົດເວລາ. ແຈ້ງການຕ່າງໆທີ່ ສປປ ລາວ ໄດ້ສົ່ງໃຫ້ຄະນະກຳມະການຂອງອົງການ WTO ອາດເຫັນໄດ້ຢູ່ຖານຂໍ້ມູນຂອງ WTO-TFA. ຊຶ່ງລວມມີຄວາມໂປ່ງໃສຂອງບັນດາແຈ້ງການ, ການສະໜອງຂໍ້ມູນສະເພາະຈຸດສອບຖາມທີ່ກຳນົດ, ລິ້ງທີ່ຢູ່ເວັບໄຊທ໌ LTP ແລະ ລາຍລະອຽດອື່ນໆທີ່ເຜີຍແຜ່ຂໍ້ມູນທີ່ຕິດພັນກັບການຄ້າ[29]. ແມ້ກະທັ້ງຂໍ້ຜູກມັດຕ່າງໆທີ່ມອບໃນໝວດ A, B ແລະ C

[29] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/2, ລົງວັນທີ 17 ມັງກອນ 2019.

ແມ່ນລ້ວນແລ້ວແຕ່ຕ້ອງໄດ້ກຳນົດມື້ປະຕິບັດເບື້ອງຕົ້ນ ແລະ ມື້ປະຕິບັດໃຫ້ສຳເລັດ, ການໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ແລະ ການຍ້າຍມາດຕະການ ລະຫວ່າງໝວດ B ແລະ C ກໍຖືກກຳນົດໄວ້ໃນນັ້ນ. ສະນັ້ນ, ມາດຕະການນີ້ ຖືວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ.

**2.7.1.5 ການອຸທອນ ແລະ ການທົບທວນຄືນການແກ້ໄຂຂໍ້ຮ້ອງຮຽນ (ມາດຕາ 4)**

ກົດໝາຍພາສີ ສະບັບປັບປຸງໃໝ່ຂອງ ສປປ ລາວ[30] ອະນຸຍາດໃຫ້ຜູ້ຄ້າ ປະກອບເອກະສານຂໍອຸທອນດ້ານການບໍລິຫານກ່ອນຂະແໜງການຂັ້ນສູງ ຈະທົບທວນຄືນຄຳຕັດສິນທີ່ເຫັນວ່າບໍ່ຍຸຕິທຳ. ຄະນະກຳມະການອຸທອນແຂວງ ນຳໂດຍຫົວໜ້າພາສີແຂວງ ຈະໄຕ່ສວນ ແລະ ຕັດສິນການອຸທອນ (ພາຍໃນ 90 ວັນລັດຖະການ) ຕໍ່ກັບຄຳຕັດສິນ ໂດຍເຈົ້າໜ້າທີ່ທີ່ຢູ່ຂັ້ນຕ່ຳກວ່າຫົວໜ້າພາສີ. ສ່ວນຄະນະກຳມະການອຸທອນຂັ້ນສູນກາງ ແມ່ນຫົວໜ້າກົມພາສີ ເປັນຫົວໜ້າຄະນະ ທີ່ໄດ້ຮັບຄວາມໄວ້ວາງໃຈ ເພື່ອໄຕ່ສວນການອຸທອນ ຕໍ່ກັບຄຳຕັດສິນຂອງຄະນະກຳມະການອຸທອນແຂວງ. ການອຸທອນຕໍ່ກັບຄຳຕັດສິນຂອງຄະນະກຳມະການອຸທອນຂັ້ນສູນກາງ ຈະຍື່ນຕໍ່ສານປະຊາຊົນ. ເຖິງຢ່າງໃດກໍ່ຕາມ, ມາດຕາເຫຼົ່ານີ້ ຍັງບໍ່ທັນມີຜົນບັງຄັບໃຊ້ ເນື່ອງຈາກຍັງກຳລັງຮ່າງລະບຽບການໃຫ້ສາມາດປະຕິບັດໄດ້. ມາດຕາທີ່ຄ້າຍຄືກັນ ຍັງມີຢູ່ໃນກົດໝາຍວ່າດ້ວຍການປ້ອງກັນພືດ ແລະ ກົດໝາຍ ວ່າດ້ວຍສັດຕະວະແພດ ແລະ ການປະມົງ, ແຕ່ຍັງບໍ່ທັນມີຄະດີອຸທອນ ທີ່ເກີດຂຶ້ນເທື່ອ. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ລາຍງານວ່າ ຍັງບໍ່ທັນມີກົນໄກສຳລັບການອຸທອນ ຫຼື ທົບທວນຄືນ ແລະ ເຖິງວ່າມີ ຜູ້ຄ້າກໍ່ມີຄວາມຢ້ານກົວໃນການຂໍອຸທອນຕໍ່ຄຳຕັດສິນຂອງຂະແໜງພາສີ. ຄະດີຕ່າງໆທີ່ເກີດຂຶ້ນ ມັກເປັນລັກສະນະການຮ້ອງຮຽນ ຫຼາຍກວ່າການອຸທອນດ້ານການບໍລິຫານ ແລະ ສະທ້ອນໃຫ້ເຫັນວ່າຍັງບໍ່ທັນມີກົນໄກອຸທອນ. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

**2.7.1.6 ແຈ້ງການທີ່ຈຳເປັນ ສຳລັບການເພີ່ມທະວີການຄວບຄຸມ ຫຼື ການກວດກາ (ມາດຕາ 5.1)**

ບາງຄັ້ງ ໄດ້ມີການເພີ່ມທະວີການກວດກາ ໂດຍຂະແໜງການສາທາລະນະສຸກ ແລະ ກະສິກຳ ເພື່ອຕອບໂຕ້ການລະບາດຂອງພະຍາດ ຫຼື ການຕິດເຊື້ອ. ຕົວຢ່າງ: ໃນບໍ່ດົນມານີ້, ການນຳເຂົ້າອາຫານທະເລ ຈາກປະເທດໄທ ຕ້ອງໄດ້ຮັບການກວດກາຢ່າງເຂັ້ມງວດ. ກົມປູກຝັງ ໄດ້ກວດກາເພື່ອປ້ອງກັນການນຳເຂົ້າແນວພັນມັນຕົ້ນທີ່ມີສັດຕູພືດຕິດມານຳ ຈາກ ສປ ຈີນ ໃນບໍ່ເທົ່າໃດປີກ່ອນໜ້ານີ້. ແຕ່ການເພີ່ມທະວີການກວດການີ້ ຕ້ອງໄດ້ຖືກຖອນອອກໂດຍໄວ ພາຍຫຼັງໄພຂົ່ມຂູ່ໄດ້ຫຼຸດລົງ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ໄດ້ລາຍງານວ່າ ມາດຕະການນີ້ໄດ້ຮັບການຈັດຕັ້ງປະຕິບັດບາງສ່ວນ ແລະ ລວມທັງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ກໍ່ຍັງບໍ່ຮັບຮູ້ແຈ້ງການຕ່າງໆທີ່ໄດ້ຖືກວາງອອກເພື່ອແຈ້ງຜູ້ຄ້າ ກ່ຽວກັບການເພີ່ມທະວີການກວດກາ ຫຼື ການໂຈະຊົ່ວຄາວ ຫຼື ການຢຸດຕິ. ໃນສະຖານະການດັ່ງກ່າວ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ເຫັນໄດ້ຂ້ອນຂ້າງຊັດເຈນວ່າຂາດການປຶກສາຫາລື ກັບພາກທຸລະກິດ ແລະ ຂາດການວາງແຜນເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບຄວາມຈຳເປັນໃນການນຳໃຊ້ມາດຕະການເພີ່ມທະວີການກວດກາ ຊຶ່ງສາມາດແກ້ໄຂໄດ້ໂດຍງ່າຍ.

**2.7.1.7 ການກັກກັນສິນຄ້າ ທີ່ຕ້ອງແຈ້ງຜູ້ຂົນສົ່ງ/ຜູ້ນຳເຂົ້າ/ຜູ້ສົ່ງອອກ ຊາບທັນທີ (ມາດຕາ 5.2)**

ຂະແໜງພາສີ ໄດ້ຖືກຮຽກຮ້ອງໃຫ້ແຈ້ງຜູ້ຄ້າ ຫຼື ຜູ້ບໍລິການແຈ້ງພາສີ ທີ່ໄດ້ຮັບຜົນກະທົບ ໃນກໍລະນີການຂົນສົ່ງສິນຄ້າ ໄດ້ຖືກກັກກັນໂດຍຂະແໜງພາສີ ເພື່ອການກວດກາພິເສດ ຫຼື ການສືບສວນສອບສວນ. ຍັງບໍ່ທັນມີນິຕິກຳ ຫຼື ຄຳແນະນຳ ອັນສະເພາະ ສຳລັບການປະຕິບັດດັ່ງກ່າວ. ຂະແໜງພາສີ ມີແຜນຈະສັງລວມຄຳແນະນຳຕ່າງໆເຂົ້າໃນລະບົບຂອງພວກເຂົາ ເພື່ອໃຫ້ຜູ້ຄ້າທີ່ກ່ຽວຂ້ອງ ໄດ້ຮັບການແຈ້ງ ກ່ຽວກັບການປະຕິບັດດັ່ງກ່າວ ຜ່ານລະບົບ Dashboard. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ໄດ້ລາຍງານວ່າ

[30] ກົດໝາຍ ວ່າດ້ວຍພາສີ ສະບັບໃໝ່ຂອງ ສປປ ລາວ ໄດ້ຖືກປະກາດໃຊ້ໂດຍລັດຖະດຳລັດຂອງປະທານປະເທດ ເລກທີ 138/ປປທ, ລົງວັນທີ 10 ສິງຫາ 2020. ພາກທີ 2 ກ່ຽວຂ້ອງກັບການແກ້ໄຂການອຸທອນ.

ມາດຕະການນີ້ ໄດ້ຮັບການຈັດຕັ້ງປະຕິບັດບາງສ່ວນ ແລະ ໄດ້ຮັບການຢືນຢັນໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໃນເວລາປຶກສາຫາລື ກ່ຽວກັບການປະເມີນແຜນດຳເນີນງານ. ສະນັ້ນ, ຈຶ່ງຖືໄດ້ວ່າ ເປັນການຈັດຕັ້ງປະຕິບັດບາງສ່ວນ. ອົງການ OECD ແລະ ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ລວມເອົາມາດຕາດັ່ງກ່າວເຂົ້າໃນການສຶກສາຂອງພວກເຂົາ.

**2.7.1.8 ລະບຽບສະເພາະ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ສຳລັບດຳເນີນການທາງພາສີ ເພື່ອຈຳກັດ ຄ່າບໍລິການໂດຍປະມານ (ມາດຕາ 6.2)**

ຄ່າທຳນຽມ ແລະ ຄ່າບໍລິການ ທີ່ເກັບໂດຍຂະແໜງພາສີ ໄດ້ຮັບການທົບທວນຄືນໂດຍກົມສ່ວຍສາອາກອນ ເປັນແຕ່ລະໄລຍະ ທີ່ມີການປັບປຸງ. ການທົບທວນຄືນຄັ້ງລ່າສຸດຢູ່ໃນລະຫວ່າງປີ 2018-2021 ແລະ ອັດຕາຄ່າທຳນຽມ ແລະ ບໍລິການ ທີ່ປັບປຸງ ໄດ້ຖືກວາງອອກຕາມລັດຖະບັນຍັດ ເລກທີ 002/ປປທ, ລົງວັນທີ 21 ມິຖຸນາ 2021. ພາກທຸລະກິດ ໄດ້ມີສ່ວນຮ່ວມໃນການທົບທວນຄືນຄ່າທຳນຽມ ແລະ ຄ່າບໍລິການເຫຼົ່ານີ້. ເຖິງຢ່າງໃດກໍ່ຕາມ, ການທົບທວນຄືນຄັ້ງລ່າສຸດ ບໍ່ໄດ້ສົ່ງຜົນໃຫ້ມີການຫຼຸດຜ່ອນ ຫຼື ລົບລ້າງ ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງພາສີ. ໃນທາງກົງກັນຂ້າມ, ອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຊ້ຳພັດເພີ່ມຂຶ້ນໃນບາງກໍລະນີ. ສະພາການຄ້າ ແລະ ອຸດສາຫະກຳ ຍອມຮັບວ່າໄດ້ມີການປຶກສາຫາລືໃນລະຫວ່າງການທົບທວນຄືນ ແຕ່ວ່າການປັບປຸງຄ່າທຳນຽມ ແລະ ຄ່າບໍລິການ ໃຊ້ເວລາດົນເກີນໄປ (3-4 ປີ) ຈຶ່ງຈະສຳເລັດ ແລະ ຄວນຈະເປັນບັນຫາຮີບດ່ວນ. ພວກເຂົາ ຮ້ອງຮຽນກ່ຽວກັບການເກັບຄ່າບໍລິການທຸລະກຳຂອງທ່າບົກທ່ານາແລ້ງ ທີ່ສູງເກີນໄປ, ຊຶ່ງເບິ່ງຄືວ່າຂ້ອນຂ້າງສູງ ເນື່ອງຈາກເປັນການຊຳລະເພີ່ມເຕີມ ຈາກຄ່າບໍລິການດຳເນີນການຜ່ານລະບົບ ASYCUDA ແລະ ລະບົບ LNSW ຖ້າຜູ້ຄ້ານຳໃຊ້ການບໍລິການຂອງທ່າບົກເພື່ອທຸລະກຳໃດໆ[31]. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ຮຽກຮ້ອງໃຫ້ມີເຫດຜົນການໃນການເກັບຄ່າທຳນຽມ ແລະ ຄ່າບໍລິການທັງໝົດ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ຍັງລາຍງານວ່າ ໄດ້ນຳໃຊ້ມາດຕະການດັ່ງກ່າວເປັນສ່ວນໃຫຍ່ ແລະ ສະນັ້ນ ມາດຕະການນີ້ ຈຶ່ງຖືວ່າເປັນການປະຕິບັດ ຢ່າງເຕັມສ່ວນ.

**2.7.1.9 ສິ່ງອຳນວຍຄວາມສະດວກໃຫ້ແກ່ການຍື່ນເອກະສານລ່ວງໜ້າ ສຳລັບການດຳເນີນການກ່ອນສິນຄ້າມາເຖິງດ່ານ (ມາດຕາ 7.1)**

ມາດຕາ 31 ຂອງກົດໝາຍ ວ່າດ້ວຍພາສີ ອະນຸຍາດໃຫ້ຍື່ນເອກະສານແຈ້ງພາສີລ່ວງໜ້າ 7 ວັນ ກ່ອນສິນຄ້າມາຮອດດ່ານ. ດັ່ງນັ້ນ, ຫຼາຍຜູ້ປະກອບການ ໄດ້ຍື່ນເອກະສານແຈ້ງພາສີແບບເລັກໂຕຼນິກ[32] ໃນລະບົບ ASYCUDA ກ່ອນການມາເຖິງຂອງສິນຄ້າ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ແລະ ລວມທັງການສຳຫຼວດຂອງອົງການ UNESCAP ແລະ OECD ໄດ້ສະແດງໃຫ້ເຫັນວ່າມາດຕະການນີ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ເນື່ອງຈາກໄດ້ກຳນົດໃນກົດໝາຍ. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນຕ່າງໆ ຍັງບໍ່ອະນຸຍາດໃຫ້ການດຳເນີນການແຈ້ງພາສີເຫຼົ່ານີ້ ຈົນກວ່າມີການຍື່ນເອກະສານແຈ້ງພາສີ ແລະ ເອກະສານປະກອບ ທີ່ເປັນເຈ້ຍ[33] ລວມທັງເອກະສານຂົນສົ່ງ ຊຶ່ງມີສະເພາະແຕ່ເວລາສິນຄ້າມາຮອດດ່ານ. ກົມພາສີ ກຳລັງທົດລອງລະບົບເຊື່ອມໂຍງຂໍ້ມູນລະຫວ່າງລະບົບ LNSW ແລະ ລະບົບ ASYCUDA (ໃສ່ຊື່ວ່າ: ລະບົບ NSWA+) ຢູ່ດ່ານສາກົນທ່າບົກທ່ານາແລ້ງ ເພື່ອສາມາດຍື່ນເອກະສານແຈ້ງພາສີອອນໄລນ໌ ຜ່ານລະບົບ LNSW ແລະ ໃຊ້ປະໂຫຍດຈາກສິ່ງອຳນວຍຄວາມສະດວກທີ່ມີຢູ່ນັ້ນ ເພື່ອອັບໂຫຼດເອກະສານ

---

[31] ທ່າບົກທ່ານາແລ້ງ ເກັບຄ່າແບບຟອມ ASYCUDA ຈຳນວນ 180,000 ກີບ, ສ່ວນຄ່າບໍລິການລະບົບ LNSW ແມ່ນ 120,000 ກີບ ແລະ ລະບົບ ASYCUDA ແມ່ນ 100,000 ກີບ ສຳລັບການຂົນສົ່ງແຕ່ລະຄັ້ງ. ເບິ່ງຄືວ່າທ່າບົກທ່ານາແລ້ງ ເກັບຄ່າບໍລິການຂ້ອນຂ້າງສູງ ເນື່ອງຈາກພວກເຂົາມີຄ່າບໍລິການຈັດການຕ່າງໆ ຢ່າງຫຼວງຫຼາຍ.

[32] ລະບົບ ASYCUDA ນຳໃຊ້ແບບຂອງເອກະສານແຈ້ງພາສີອາຊຽນ (ACDD) ສຳລັບການຕື່ມຂໍ້ມູນການແຈ້ງພາສີດັ່ງກ່າວ.

[33] ຂັ້ນຕອນທາງພາສີ ເລກທີ 0097/ກພສ, ລົງວັນທີ 06 ມັງກອນ 2017 ກຳນົດໃຫ້ມີການລົງທະບຽນການແຈ້ງພາສີ ພາຍຫຼັງໄດ້ຮັບການເອກະສານແຈ້ງພາສີ ແລະ ເອກະສານປະກອບ ເປັນເຈ້ຍ.

ປະກອບທີ່ເປັນເອເລັກໂຕຼນິກເຂົ້າໃນລະບົບ ເພື່ອສາມາດດຳເນີນການພິຈາລະນາກ່ອນການມາເຖິງຂອງສິນຄ້າ. ລະບົບດັ່ງກ່າວ ຍັງຈະຖືກນຳໃຊ້ສຳລັບການແຈ້ງໃບຂົນສົ່ງສິນຄ້າ ແລະ ການຄວບຄຸມສິນຄ້າ ຢູ່ດ່ານຈົນກວ່າຈະໄດ້ຮັບການກວດປ່ອຍ. ຈະມີການຂະຫຍາຍການນຳໃຊ້ໄປສູ່ດ່ານສາກົນອື່ນ ເຊັ່ນກັນ ຖ້າການທົດລອງດັ່ງກ່າວປະສົບຜົນສຳເລັດ. ຈົນກວ່າຈະສຳເລັດ ແລະ ຂັ້ນຕອນຕ່າງໆໄດ້ຮັບການປັບປຸງ, ມາດຕະການນີ້ ຍັງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ລະບົບດັ່ງກ່າວ ຍັງຕ້ອງເຊື່ອມໂຍງກັບລະບົບ CBTMS[34] ທີ່ນຳໃຊ້ໂດຍບໍລິສັດທ່າບົກທ່ານາແລ້ງ ຢູ່ດ່ານສາກົນສິນຄ້າທ່າບົກທ່ານາແລ້ງ ແລະ ບ່ອນອື່ນ ຊຶ່ງສາມາດສົ່ງຂໍ້ມູນກ່ຽວກັບສິນຄ້າລ່ວງໜ້າ (ACI) ຜ່ານອອນໄລນ໌ ແລະ ຕິດຕາມການເຂົ້າ-ອອກຂອງລົດຂົນສົ່ງ ແລະ ຜູ້ບໍລິການຂົນສົ່ງອື່ນໆ ຢູ່ທ່າບົກທ່ານາແລ້ງ ແບບເອເລັກໂຕຼນິກ. ຂໍ້ມູນການຂົນສົ່ງ ທີ່ໄດ້ຮັບຜ່ານອອນໄລນ໌ ຄວນນຳໃຊ້ໃນໂມດູນ i-Gate, ຄຳສັ່ງຂອງການແຈ້ງໃບຂົນສົ່ງສິນຄ້າຂອງລະບົບ NSWA+. ຕ້ອງມີການສຶກສາຢ່າງລະມັດລະວັງ ກ່ຽວກັບການເຊື່ອມໂຍງລະບົບ LNSW ກັບ ລະບົບ ASYCUDA ແລະ ລະບົບ CBTMS ຂອງທ່າບົກທ່ານາແລ້ງ ໃນລະຫວ່າງການທົດລອງນຳໃຊ້ ກ່ອນການຈັດຕັ້ງປະຕິບັດ ເພື່ອການກວດປ່ອຍທີ່ວ່ອງໄວ ແລະ ການຄວບຄຸມທີ່ມີປະສິດທິພາບ.

**2.7.1.10 ຂໍ້ກຳນົດສຳລັບການເຄື່ອນຍ້າຍສິນຄ້ານຳເຂົ້າ ພາຍໃນປະເທດ ພາຍໃຕ້ການຄວບຄຸມຂອງຂະແໜງພາສີ (ມາດຕາ 9)**

ເພື່ອຫຼີກລ້ຽງສິ່ງກີດຂວາງຢູ່ດ່ານຊາຍແດນ, ສິນຄ້າແມ່ນໄດ້ຮັບອະນຸຍາດໃຫ້ນຳໄປໄວ້ຢູ່ສາງຕູ້ສິນຄ້າທາງບົກ, ເຂດເສດຖະກິດພິເສດ ຫຼື ສາງພັກສິນຄ້າ ແລະ ອື່ນໆ ເພື່ອການກວດປ່ອຍພາຍຫຼັງ ແລະ ຈົນກວ່າຈະຢູ່ພາຍໃຕ້ການຄວບຄຸມຂອງຂະແໜງພາສີ. ລະບອບຜ່ານແດນສິນຄ້າພາຍໃນ ແມ່ນເຊື່ອມຕໍ່ກັບໂມດູນການຂົນສົ່ງ ແລະ ຜ່ານແດນ ທີ່ກຳລັງຖືກພັດທະນາ ເພື່ອການຄວບຄຸມສິນຄ້າທີ່ອະນຸຍາດໃຫ້ເຄື່ອນຍ້າຍໄປໄວ້ສາງຕູ້ສິນຄ້າທາງບົກ, ເຂດເສດຖະກິດພິເສດ, ເຂດໂລຈິສຕິກ ແລະ ອື່ນໆ ຢ່າງມີປະສິດທິພາບ. ໃນຄວາມເປັນຈິງແລ້ວ, ການຄວບຄຸມການຂົນສົ່ງ ແມ່ນໄດ້ຮັບການດຳເນີນການແລ້ວ ຢູ່ດ່ານສາກົນບ່ອນທີ່ມີລະບົບ LNSW ຖືກນຳໃຊ້. ດ້ວຍການເຊື່ອມໂຍງລະຫວ່າງລະບົບ LNSW ແລະ ລະບົບ ASYCUDA, ຈະເຮັດໃຫ້ການຄວບຄຸມຂອງຂະແໜງພາສີ ມີປະສິດທິພາບຫຼາຍຂຶ້ນ. ມາດຕະການນີ້ ແມ່ນບໍ່ໄດ້ລວມເຂົ້າໃນການສຳຫຼວດຂອງອົງການ OECD ແລະ ອົງການສະຫະປະຊາຊາດ, ແຕ່ພົບເຫັນການນຳໃຊ້ມາດຕະການດັ່ງກ່າວບາງສ່ວນ ຕາມການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

**2.7.1.11 ບໍ່ມີການຢືນຢັນການກວດກາສິນຄ້າກ່ອນການຂົນສົ່ງ (ມາດຕາ 10.5)**

ບໍ່ມີການກວດກາກ່ອນການຂົນສົ່ງ ທີ່ກຳນົດໃນກົດໝາຍວ່າດ້ວຍພາສີ ແລະ ບໍ່ໄດ້ຮຽກຮ້ອງໂດຍຂະແໜງພາສີ ສຳລັບການກຳນົດມູນຄ່າແຈ້ງ ແລະ ຈຸດປະສົງອື່ນໆ. ການຈັດຕັ້ງປະຕິບັດຕົວຈິງ ແມ່ນໄດ້ສຳເລັດໃນຫຼາຍປີຜ່ານມາ. ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ພິຈາລະນາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ແມ່ນຈັດເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ແມ່ນຖືເປັນການນຳໃຊ້ມາດຕະການນີ້ເປັນສ່ວນໃຫຍ່. ສະນັ້ນ, ຈຶ່ງຖືວ່າມາດຕະການນີ້ເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ.

[34] ລະບົບຕິດຕາມການຂົນສົ່ງຂ້າມແດນ (CBTMS) ແມ່ນລະບົບຕ່າງຫາກທີ່ນຳໃຊ້ໂດຍທ່າບົກທ່ານາແລ້ງ.

**2.7.1.12 ການນຳໃຊ້ຜູ້ບໍລິການແຈ້ງພາສີ ຕ້ອງບໍ່ເປັນແບບບັງຄັບ ແລະ ຕ້ອງມີລະບຽບການ (ມາດຕາ 10.6)**

ໃນ ສປປ ລາວ, ການນຳໃຊ້ຜູ້ບໍລິການແຈ້ງພາສີ ແມ່ນບໍ່ໄດ້ບັງຄັບ ແລະ ຫຼາຍໆບໍລິສັດ ສາມາດດຳເນີນການແຈ້ງພາສີສຳລັບສິນຄ້າຂອງຕົນດ້ວຍຕົນເອງ. ມີລະບຽບການທີ່ເປັນອັນລະອຽດ[35] ຊຶ່ງຄວບຄຸມໜ້າທີ່ຂອງຜູ້ບໍລິການແຈ້ງພາສີ ແລະ ຜູ້ບໍລິການຂົນສົ່ງ ໂດຍຕ້ອງໄດ້ຮັບອະນຸຍາດ, ແລະ ໂຈະ ຫຼື ຖອນໃບອະນຸຍາດຂອງພວກເຂົາ ໃນກໍລະນີມີການລະເມີດກົດໝາຍພາສີ ຫຼື ຈັນຍາບັນຂອງພວກເຂົາ. ມີຄວາມຈຳເປັນຕ້ອງໄດ້ຈັດກອງປະຊຸມຝຶກອົບຮົມເລື້ອຍໆ ໃຫ້ແກ່ຜູ້ບໍລິການແຈ້ງພາສີ ແລະ ນາຍໜ້າພາສີ ແລະ ຂົນສົ່ງ ໂດຍສະເພາະການຈັດປະເພດ ແລະ ບັນຫາທາງດ້ານຂັ້ນຕອນອື່ນໆ ເພື່ອໃຫ້ສາມາດເພີ່ມທະວີລະດັບທັກສະ ແລະ ປະສິດທິພາບຂອງພວກເຂົາ ສຳລັບການອຳນວຍຄວາມສະດວກໃຫ້ແກ່ການກວດປ່ອຍສິນຄ້າ. ໃນຂະນະທີ່ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ພິຈາລະນາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ຈັດປະເພດເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ພົບວ່າມາດຕະການນີ້ໄດ້ຖືກນຳໃຊ້ເປັນສ່ວນໃຫຍ່. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ.

**2.7.1.13 ການອະນຸຍາດຊົ່ວຄາວຂອງສິນຄ້າ ທີ່ໄດ້ຮັບອະນຸຍາດ ສຳລັບການປຸງແຕ່ງສົ່ງເຂົ້າ ຫຼື ສົ່ງອອກ (ມາດຕາ 10.9)**

ພາກທີ V ຂອງກົດໝາຍ ວ່າດ້ວຍພາສີ ມີຂໍ້ກຳນົດລະອຽດສຳລັບການອະນຸຍາດຊົ່ວຄາວຂອງສິນຄ້າສຳລັບການປຸງແຕ່ງສົ່ງເຂົ້າ ຫຼື ສົ່ງອອກ ໂດຍບໍ່ມີການຊຳລະຄ່າພາສີ. ໄດ້ອະນຸຍາດໃຫ້ພາຍໃຕ້ລະບອບພາສີທີ່ກ່ຽວຂ້ອງ (IM6 ຫຼື IM5) ຊຶ່ງໄດ້ຍົກເວັ້ນການເກັບພາສີ ຈົນກວ່າສິນຄ້າຈະຖືກສົ່ງຄືນໃນເວລາປຸງແຕ່ງ. ເຈົ້າໜ້າທີ່ພາສີ ກວດກາການນຳໃຊ້ສິນຄ້າເຫຼົ່ານີ້ ຕໍ່ກັບສູດຄິດໄລ່ສົ່ງເຂົ້າ-ສົ່ງອອກ ທີ່ກຳນົດໃນແຜນນຳເຂົ້າ ທີ່ໄດ້ຮັບອະນຸມັດໂດຍກະຊວງແຜນການ ແລະ ການລົງທຶນ. ໃນຂະນະທີ່ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ພິຈາລະນາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ໄດ້ຈັດເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ເຫັນວ່າມາດຕະການນີ້ໄດ້ຖືກນຳໃຊ້ເປັນສ່ວນໃຫຍ່. ສະນັ້ນ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ.

[35] ຄຳແນະນຳ ເລກທີ 5916/ກງ, ລົງວັນທີ 25 ພະຈິກ 2021 ໄດ້ຖືກວາງອອກໂດຍລັດຖະມົນຕີກະຊວງການເງິນ ເພື່ອກຳນົດໜ້າທີ່ຂອງຜູ້ບໍລິການແຈ້ງພາສີ ແລະ ກຳນົດຈັນຍາບັນລະອຽດໃຫ້ແກ່ພວກເຂົາ.

### 2.7.2 ການຢັ້ງຢືນຄວາມຖືກຕ້ອງຂອງມາດຕະການທີ່ນອນໃນໝວດ A

ດັ່ງທີ່ກ່າວມາຂ້າງເທິງ, ແຜນດໍາເນີນງານໄດ້ກໍານົດໃຫ້ມີການຢັ້ງຢືນຄວາມຖືກຕ້ອງຂອງມາດຕະການຕ່າງໆໂດຍພາກທຸລະກິດ ແລະ ສະນັ້ນ ເພື່ອຈຸດປະສົງດັ່ງກ່າວ ຈຶ່ງໄດ້ດໍາເນີນການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດໃນປີ 2021 ຊຶ່ງຜົນອອກມາເຫັນວ່າ ຫຼາຍກວ່າ 53% ຂອງມາດຕະການທີ່ນອນໃນໝວດ A ໄດ້ຮັບການຈັດຕັ້ງປະຕິບັດເປັນສ່ວນໃຫຍ່. ຊຶ່ງເກີນ 21% ຂອງການຈັດຕັ້ງປະຕິບັດທີ່ສະແດງຢູ່ໃນເວັບໄຊທ໌ຂອງອົງການ WTO. ບັນດາຂໍ້ຜູກມັດ 6 ມາດຕະການທີ່ນອນໃນໝວດ A ໄດ້ຮັບການລາຍງານໂດຍພາກທຸລະກິດວ່າ ໄດ້ຖືກນໍາໃຊ້ບາງສ່ວນ ທີ່ຕິດພັນຈຸດສອບຖາມ, ຂັ້ນຕອນການອຸທອນ, ການເຄື່ອນຍ້າຍສິນຄ້າພາຍໃຕ້ການຄວບຄຸມຂອງຂະແໜງພາສີ, ແຈ້ງການສໍາລັບການເພີ່ມທະວີການກວດກາ, ການດໍາເນີນການກ່ອນການມາເຖິງຂອງສິນຄ້າ ແລະ ການກັກກັນ. ສິ່ງນີ້ຍັງໄດ້ຮັບການຢືນຢັນຈາກສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ໃນເວລາສົນທະນາ ກ່ຽວກັບການປະເມີນແຜນດໍາເນີນງານ.

### 2.7.3 ການຍ້າຍມາດຕະການທີ່ນອນໃນໝວດ C ມາໝວດ B

ມີທັງໝົດ 6 ມາດຕະການທີ່ຖືກຍ້າຍລະຫວ່າງໝວດຕ່າງໆ. ເບື້ອງຕົ້ນມາດຕະການຍອມຮັບສໍາເນົາເອກະສານ ແມ່ນຍ້າຍຈາກໝວດ B ມາເປັນ ໝວດ C[36] ເນື່ອງຈາກເຫັນວ່າມີຄວາມຕ້ອງການການຊ່ວຍເຫຼືອທາງດ້ານວິຊາການໃນການພັດທະນາຍຸດທະສາດຂອງລັດຖະບານ ເພື່ອປ່ຽນແທນເອກະສານປະກອບທີ່ເປັນເຈ້ຍ ດ້ວຍການດໍາເນີນການທາງເອເລັກໂຕຼນິກ.

ລ່າສຸດ, ມີ 5 ມາດຕະການທີ່ນອນໃນໝວດ C ໄດ້ຖືກຍ້າຍໄປໝວດ B ເນື່ອງຈາກຮັບຮູ້ວ່າລັດຖະບານມີຄວາມສາມາດທີ່ຈໍາເປັນ ໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ໂດຍນໍາໃຊ້ຊັບພະຍາກອນຕົນເອງ ແລະ ບໍ່ຕ້ອງການການສະໜັບສະໜູນໃດໆ ຈາກຜູ້ຮ່ວມພັດທະນາ. ໄດ້ແຈ້ງອົງການ WTO ຕາມນັ້ນ[37]. ມາດຕະການເຫຼົ່ານີ້ ລວມມີ:

1. ການຢັ້ງຢືນຮັບຮອງລ່ວງໜ້າ (ມາດຕາ 3)
2. ຂັ້ນຕອນການທົດສອບ (ມາດຕາ 5.3)
3. ການຈັດສົ່ງດ່ວນ (ມາດຕາ 7.8)
4. ລະບົບແຈ້ງພາສີປະຕູດຽວ (ມາດຕາ 10.4) ແລະ
5. ເສລີພາບໃນການຜ່ານແດນ (ມາດຕາ 11)

ການຍ້າຍເຫຼົ່ານີ້, ສົ່ງຜົນໃຫ້ຈໍານວນມາດຕະການທີ່ນອນໃນໝວດ B ຂອງ ສປປ ລາວ ເພີ່ມຂຶ້ນຈາກ 6 ມາເປັນ 11 ມາດຕະການ ແລະ ເຮັດໃຫ້ມາດຕະການທີ່ນອນໃນໝວດ C ຫຼຸດຈາກ 17 ມາເປັນ 12 ມາດຕະການ. ສອງມາດຕະການທີ່ນອນໃນໝວດ B, ຕົວຢ່າງ ການຢັ້ງຢືນຮັບຮອງລ່ວງໜ້າ ແລະ ເສລີພາບໃນການຜ່ານແດນ ຕ້ອງໄດ້ຈັດຕັ້ງປະຕິບັດພາຍໃນວັນທີ 31 ທັນວາ 2022, ສ່ວນມື້ຕ້ອງໄດ້ຈັດຕັ້ງປະຕິບັດໃຫ້ສໍາເລັດ ຂອງມາດຕະການອື່ນ ເຊັ່ນ: ຂັ້ນຕອນການທົດສອບ ແລະ ການຈັດສົ່ງດ່ວນ ແມ່ນພາຍໃນວັນທີ 31 ທັນວາ 2024 ຄືກັບມື້ໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C[38].

---

[36] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1/Add.2, ລົງວັນທີ 24 ກັນຍາ 2019.

[37] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1/Add.5, ລົງວັນທີ 22 ສິງຫາ 2022.

[38] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1/Add.5, ລົງວັນທີ 22 ສິງຫາ 2022.

### 2.7.4 ແຈ້ງການ ກ່ຽວກັບຂໍ້ຜູກມັດຂອງສັນຍາ WTO-TFA ຕໍ່ອົງການ WTO

ອີງຕາມການປຶກສາຫາລື ກັບ ຂະແໜງການທີ່ກ່ຽວຂ້ອງ, ໄດ້ກໍານົດມື້ຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ເບື້ອງຕົ້ນ ພາຍໃນວັນທີ 31 ທັນວາ 2020 ຊຶ່ງໄດ້ແຈ້ງຕໍ່ອົງການ WTO[39]. ຕໍ່ມາ, ໄດ້ຢືນຢັນມື້ຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ໃຫ້ສໍາເລັດ[40]. ເຊັ່ນດຽວກັນ, ໄດ້ແຈ້ງການກະກຽມທີ່ມີຢູ່ໃຫ້ແກ່ອົງການ WTO ແລະ ມື້ຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C, ພາຍຫຼັງໄດ້ກະກຽມແຜນປະຕິບັດງານ ແລະ ບົດສະເໜີໂຄງການ CF ເພື່ອຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ແລະ ໄດ້ປຶກສາຫາລື ກັບ ຜູ້ຮ່ວມພັດທະນາ ເພື່ອສະໜັບສະໜູນການຊ່ວຍເຫຼືອທາງດ້ານວິຊາການ ສໍາລັບການສ້າງຂີດຄວາມສາມາດທີ່ຕ້ອງການ[41]. ແຈ້ງການ ໄດ້ກໍານົດມື້ຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C ເບື້ອງຕົ້ນ ໃນວັນທີ 31 ທັນວາ 2022 ແລະ ຍັງກໍານົດລາຍລະອຽດການຊ່ວຍເຫຼືອທາງດ້ານວິຊາການທີ່ຕ້ອງການ ຂອງຂະແໜງການທີ່ກ່ຽວຂ້ອງ ສໍາລັບການຈັດຕັ້ງປະຕິບັດມາດຕະການຕ່າງໆ ທີ່ນອນໃນໝວດ C.

### 2.7.5 ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B

ອີງຕາມແຜນດໍາເນີນງານ, ກໍານົດເວລາໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ໄດ້ຮັບການຕົກລົງພາຍຫຼັງການປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງ. ດັ່ງທີ່ກ່າວມາຂ້າງເທິງ, ໄດ້ກໍານົດເວລາໃນການຈັດຕັ້ງປະຕິບັດ ໃນວັນທີ 31 ທັນວາ 2020 ແລະ ຍັງໄດ້ແຈ້ງມື້ຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ໃຫ້ສໍາເລັດ ຕໍ່ອົງການ WTO. ການປະເມີນຄວາມຄືບໜ້າຂອງມາດຕະການສະເພາະ ແມ່ນມີດັ່ງລຸ່ມນີ້:

#### 2.7.5.1 ໂອກາດໃນການປະກອບຄໍາເຫັນ ແລະ ການເຂົ້າເຖິງຂໍ້ມູນ ກ່ອນມີຜົນບັງຄັບໃຊ້ (ມາດຕາ 2.1)

ອີງຕາມກົດໝາຍ ວ່າດ້ວຍການສ້າງນິຕິກໍາ, ໄດ້ກໍານົດໃຫ້ເຜີຍແຜ່ຮ່າງກົດໝາຍ ລົງໃນຈົດໝາຍເຫດລັດຖະການ ເພື່ອຂໍຄໍາເຫັນຈາກສາທາລະນະ ແລະ ຜູ້ຄ້າ ກ່ອນການປະກາດໃຊ້ກົດໝາຍພາຍໃນ 60 ວັນ. ປົກກະຕິແລ້ວ, ຮ່າງລະບຽບການເຫຼົ່ານີ້ ຍັງໄດ້ເອົາລົງໃນເວັບໄຊທ໌ LTP ເພື່ອຂໍຄວາມສົນໃຈຈາກຜູ້ຄ້າ. ນອກຈາກນີ້, ຍັງມີໜັງສືຕ່າງຫາກທີ່ສົ່ງຫາສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ເພື່ອຂໍຄໍາເຫັນໃນເລື່ອງນີ້. ແຕ່ການຮ້ອງຮຽນຂອງພວກເຂົາ ແມ່ນວ່າບໍ່ມີເວລາພຽງພໍໃນການສົ່ງຄໍາເຫັນ ແລະ ມັກເປັນພິທີການຫຼາຍກວ່າ ເນື່ອງຈາກຂໍ້ສະເໜີແນະຕ່າງໆແມ່ນບໍ່ຄ່ອຍໄດ້ຮັບການຈັດຕັ້ງປະຕິບັດ. ກົດໝາຍດັ່ງກ່າວ ຍັງຮຽກຮ້ອງໃຫ້ຂະແໜງການລັດ ແຈ້ງລ່ວງໜ້າຢ່າງໜ້ອຍ 15 ວັນ ກ່ອນແຈ້ງການ ຫຼື ລະບຽບການ ມີຜົນບັງຄັບໃຊ້. ເຖິງຢ່າງໃດກໍ່ຕາມ, ຂໍ້ກໍານົດດັ່ງກ່າວ ບໍ່ຄ່ອຍໄດ້ຮັບການຈັດຕັ້ງປະຕິບັດ. ໃນຂະນະທີ່ການສໍາຫຼວດຂອງອົງການ OECD ພົບວ່າມາດຕະການດັ່ງກ່າວ ມີຂໍ້ຈໍາກັດໃນການຈັດຕັ້ງປະຕິບັດ, ສ່ວນການສໍາຫຼວດຂອງອົງການສະຫະປະຊາຊາດ ໄດ້ລາຍງານວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ. ການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ຖືວ່າເປັນການນໍາໃຊ້ບາງສ່ວນ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ໄດ້ລາຍງານວ່າ: ກົດໝາຍ ແລະ ລະບຽບການອື່ນ ຍັງບໍ່ໄດ້ເຜີຍແຜ່ຕໍ່ສາທາລະນະກ່ອນມີຜົນບັງຄັບໃຊ້. ເນື່ອງຈາກມາດຕະການນີ້ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ, ສະນັ້ນ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ມີຄວາມຈໍາເປັນຕ້ອງໃຫ້ຄວາມສໍາຄັນຫຼາຍຂຶ້ນ ໃນການເຜີຍແຜ່ຮ່າງລະບຽບການລ່ວງໜ້າ ເປັນຢ່າງດີ ກ່ອນມີຜົນບັງຄັບໃຊ້ ເພື່ອໃຫ້ຜູ້ຄ້າມີເວລາພຽງພໍ ໃນການກະກຽມຄວາມພ້ອມຂອງພວກເຂົາ ສໍາລັບຂໍ້ຮຽກຮ້ອງໃໝ່ ແລະ ຂໍຄໍາເຫັນຂອງພວກເຂົາ ກ່ຽວກັບການປ່ຽນແປງທີ່ສະເໜີ.

[39] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1, ລົງວັນທີ 2 ມີນາ 2018.

[40] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1/Add.4, ລົງວັນທີ 5 ສິງຫາ 2020.

[41] ແຈ້ງການຂອງອົງການ WTO ເລກທີ G/TFA/N/LAO/1/Add.1, ລົງວັນທີ 16 ກັນຍາ 2019.

**2.7.5.2 ການປຶກສາຫາລື ກັບ ພາກທຸລະກິດ ຕົວຢ່າງ: ຜູ້ຄ້າ ແລະ ຜູ້ບໍລິການແຈ້ງພາສີ (ມາດຕາ 2.2)**

ຍົກເວັ້ນກົມການນໍາເຂົ້າ ແລະ ສົ່ງອອກ ແລ້ວ, ຂະແໜງການທີ່ກ່ຽວຂ້ອງສ່ວນໃຫຍ່ ຍັງບໍ່ໄດ້ຈັດກອງປະຊຸມປຶກສາຫາລື ກັບ ພາກທຸລະກິດ ຢ່າງເປັນທາງການ. ກົມການນໍາເຂົ້າ ແລະ ສົ່ງອອກ ຈັດກອງປະຊຸມປຶກສາຫາລື ກັບ ພາກທຸລະກິດ ທຸກໆ 6 ເດືອນ ຊຶ່ງປຶກສາຫາລື ກ່ຽວກັບບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກທາງດ້ານການຄ້າ. ເຖິງຢ່າງໃດກໍ່ຕາມ, ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມຄຸ້ມຄອງບໍ່ແຮ່ ແລະ ກົມມາດຕະຖານ ແລະ ວັດແທກ ໄດ້ຈັດກອງປະຊຸມປຶກສາຫາລື ກັບ ພາກທຸລະກິດ ພຽງແຕ່ໜຶ່ງຄັ້ງຕໍ່ປີ. ບົດບັນທຶກກອງປະຊຸມ ໄດ້ຖືກນໍາສົ່ງພາຍຫຼັງກອງປະຊຸມ, ແຕ່ບໍ່ມີວາລະ ຫຼື ບົດບັນທຶກໃດ ເອົາລົງໃນເວັບໄຊທ໌ LTP ຫຼື ຊ່ອງທາງສາທາລະນະອື່ນໆ. ສະນັ້ນ, ບໍ່ມີການສ້າງຕັ້ງກົນໄກການຈັດກອງປະຊຸມກັບພາກທຸລະກິດ ເປັນປົກກະຕິ ແລະ ຂະແໜງການທີ່ກ່ຽວຂ້ອງ ຍົກເວັ້ນກົມການນໍາເຂົ້າ ແລະ ສົ່ງອອກ, ກອງເລຂາ TFCS. ໃນຂະນະການສໍາຫຼວດຂອງອົງການ OECD ພົບວ່າ ມີການຈັດຕັ້ງປະຕິບັດໃນລະດັບຕໍ່າ, ການສໍາຫຼວດຂອງອົງການສະຫະປະຊາຊາດ ລາຍງານວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ ແລະ ການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ຮັບຮູ້ວ່າໄດ້ນໍາໃຊ້ມາດຕະການເປັນສ່ວນໃຫຍ່. ເຖິງຢ່າງໃດກໍ່ຕາມ, ຍ້ອນຂາດການປຶກສາຫາລືເປັນປົກກະຕິ ໂດຍຂະແໜງການທີ່ກ່ຽວຂ້ອງສ່ວນໃຫຍ່, ມາດຕະການນີ້ ຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ຍັງລາຍງານວ່າ ຂະແໜງການທີ່ກ່ຽວຂ້ອງ ບໍ່ໄດ້ຈັດກອງປະຊຸມປຶກສາຫາລືເປັນປົກກະຕິ ແລະ ຖືກເອີ້ນປະຊຸມປີລະຄັ້ງ ຫຼື ຫຼາຍກວ່ານັ້ນ, ມີພຽງການປຶກສາຫາລືລະດັບຍຸດທະສາດເທົ່ານັ້ນ ແຕ່ບໍ່ມີຄວາມເອົາໃຈໃສ່ຕໍ່ກັບບັນຫາການຈັດຕັ້ງປະຕິບັດ.

**2.7.5.3 ລະບຽບທົ່ວໄປ ກ່ຽວກັບການເກັບຄ່າທໍານຽມ ແລະ ຄ່າບໍລິການ (ມາດຕາ 6.1)**

ລາຍລະອຽດຂອງຄ່າທໍານຽມ ແລະ ຄ່າບໍລິການ ແມ່ນກໍານົດໃນລັດຖະບັນຍັດຂອງປະທານປະເທດ[42], ຊຶ່ງໄດ້ຮັບການເຜີຍແຜ່ລົງໃນຈົດໝາຍເຫດລັດຖະການ ແລະ ຍັງໄດ້ເອົາລົງໃນເວັບໄຊທ໌ LTP ແລະ ເວັບໄຊທ໌ຂອງກະຊວງຍຸຕິທໍາ. ໄດ້ມີການທົບທວນຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ກໍານົດໂດຍຂະແໜງການທີ່ກ່ຽວຂ້ອງເປັນແຕ່ລະໄລຍະ ໂດຍກົມສ່ວຍສາອາກອນ ຜ່ານການປຶກສາຫາລື ກັບ ພາກທຸລະກິດ ຕາມທີ່ມີການປັບປຸງ. ອະນຸຍາດໃຫ້ມີເວລາພຽງພໍໃນລະຫວ່າງການເຜີຍແຜ່ຄ່າທໍານຽມທີ່ປັບປຸງໃໝ່ ແລະ ການນໍາໃຊ້ຄ່າທໍານຽມ. ການທົບທວນຄັ້ງສຸດທ້າຍ ສົ່ງຜົນໃຫ້ມີການປັບປຸງຄ່າທໍານຽມ ແລະ ຄ່າບໍລິການເຫຼົ່ານີ້ ຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ, ລົງວັນທີ 21 ມິຖຸນາ 2021. ການປັບປຸງຄ່າທໍານຽມເຫຼົ່ານີ້ສ່ວນໃຫຍ່ແມ່ນເພີ່ມຂຶ້ນ ແທນທີ່ຈະລຶບລ້າງ ຫຼື ຫຼຸດລົງ. ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ລາຍງານວ່າ ການປັບປຸງຄ່າທໍານຽມ ແລະ ຄ່າບໍລິການ ແມ່ນຊ້າຫຼາຍ ເພາະກວ່າຈະສາມາດສໍາເລັດໄດ້ ກໍເຖິງເວລາສໍາລັບການທົບທວນຄັ້ງຕໍ່ໄປ. ພວກເຂົາ ຍັງຮ້ອງຮຽນການເກັບຄ່າບໍລິການບາງອັນຂອງລັດຖະບານ (ເຊັ່ນ: ຄ່າທໍານຽມທ່າບົກທ່ານາແລ້ງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ) ແມ່ນຂ້ອນຂ້າງສູງ ແລະ ບໍ່ທັນມີຄວາມໂປ່ງໃສ[43]. ໃນຂະນະທີ່ການສໍາຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ລວມເອົາມາດຕະການນີ້, ແຕ່ການສໍາຫຼວດຂອງອົງການ OECD ຈັດວ່າເປັນການຈັດຕັ້ງປະຕິບັດຢ່າງຈໍາກັດ. ເຖິງຢ່າງໃດກໍ່ຕາມ, ຖືວ່າທຸກຂໍ້ກໍານົດໃນມາດຕາ 6.1 ຂອງສັນຍາ WTO-TFA ແມ່ນໄດ້ຮັບການປະຕິບັດ, ສະນັ້ນ ມາດຕະການນີ້ ຖືວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ.

---

[42] ຄ່າທໍານຽມ ແລະ ຄ່າບໍລິການ ຂອງຂະແໜງການລັດ ແມ່ນກໍານົດຢູ່ໃນລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

[43] ຄ່າທໍານຽມ ທີ່ເກັບໂດຍທ່າບົກທ່ານາແລ້ງ ບໍ່ແມ່ນການຈັດເກັບຂອງລັດຖະບານ ເນື່ອງຈາກເກັບໂດຍບໍລິສັດຮ່ວມທຶນຂອງລັດຖະບານ. ເຖິງຢ່າງໃດກໍ່ຕາມ, ໄດ້ເພີ່ມຄ່າໃຊ້ຈ່າຍທາງການຄ້າ ແລະ ຖືກລວມເປັນຂໍ້ສະເໜີຂອງພາກທຸລະກິດ ເພື່ອຂໍເຫດຜົນອະທິບາຍ.

**2.7.5.4 ລະບຽບການປັບໃໝ (ມາດຕາ 6.3)**

ການປັບໃໝ ພາຍໃຕ້ກົດໝາຍພາສີ ແມ່ນອີງໃສ່ການຈັດລະດັບການກະທຳຜິດຢ່າງລະອຽດ, ຊຶ່ງເລີ່ມຈາກໃນລະດັບທຳອິດເປັນການຕຳໜິ ແລະ ຕັກເຕືອນ ກໍລະນີເປັນການກະທຳຜິດເລັກໜ້ອຍ ຈົນເຖິງການປັບໃໝ ແລະ ຖືກດຳເນີນຄະດີອາຍາ ໃນກໍລະນີເປັນການກະທຳຜິດທີ່ຮ້າຍແຮງ. ຈຳນວນການປັບໃໝ ຍັງໄດ້ຖືກກຳນົດໃນກົດໝາຍດັ່ງກ່າວ (ມາດຕາ 175 ຂອງກົດໝາຍພາສີ) ຊຶ່ງບໍ່ປ່ຽນແປງ ຍົກເວັ້ນມີເຫດຜົນພຽງພໍ ແລະ ຄວາມຈິງຈະພິສູດເປັນຢ່າງອື່ນ. ເຖິງຢ່າງໃດກໍ່ຕາມ, ຍັງບໍ່ມີຫຼາຍຄະດີ ທີ່ມີການປັບໃໝຂອງຂະແໜງພາສີ. ນອກຈາກນີ້, ກົດໝາຍ ຍັງກຳນົດລະບົບການຈັດລະດັບການປັບໃໝ ຕາມລະດັບ ແລະຄວາມຮຸນແຮງຂອງການລະເມີດຕາມຂໍ້ກຳນົດຂອງສັນຍາ WTO-TFA. ຍັງມີບໍ່ລະບົບທີ່ເປັນແຮງຈູງໃຈໃນການເກັບຄ່າປັບໃໝ ແລະ ປະຕິບັດຕາມຂໍ້ກຳນົດຂອງສັນຍາ WTO-TFA ເປັນສ່ວນໃຫຍ່. ໃນຂະນະທີ່ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ລວມເອົາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ຈັດວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ໄດ້ນຳໃຊ້ມາດຕະການນີ້ເປັນສ່ວນໃຫຍ່. ໃນສະຖານະການນີ້, ມາດຕະການດັ່ງກ່າວ ຖືໄດ້ວ່າເປັນການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ.

**2.7.5.5 ການແຍກການປ່ອຍສິນຄ້າອອກຈາກການກຳນົດສຸດທ້າຍ ກ່ຽວກັບ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ (ມາດຕາ 7.3)**

ມາດຕາ 38 ຂອງກົດໝາຍພາສີ ໄດ້ກຳນົດສະເພາະສຳລັບການປ່ອຍສິນຄ້າກ່ອນການກຳນົດ ກ່ຽວກັບພາສີ ແລະ ອາກອນ. ໄດ້ອະນຸຍາດໃຫ້ປ່ອຍສິນຄ້າ ກ່ອນການແຈ້ງພາສີໃນກໍລະນີເປັນສິນຄ້າເນົ່າເປື່ອຍງ່າຍ ຫຼືເສື່ອມຄຸນນະພາບໄດ້ງ່າຍ, ຫຼື ສິນຄ້າທີ່ນຳໃຊ້ເພື່ອການຄ້າ, ສິນຄ້າກະສິກຳ, ສັດເປັນ ແລະ ສິນຄ້າທີ່ນຳໃຊ້ໃນກໍລະນີສຸກເສີນ ຫຼື ກໍລະນີຮີບດ່ວນອື່ນໆ. ມາດຕະການ 41 ກຳນົດເງື່ອນໄຂໃນການກວດປ່ອຍສິນຄ້າໃນກໍລະນີດັ່ງກ່າວ ໂດຍການຄໍ້າປະກັນ ຫຼື ໜັງສືຄໍ້າປະກັນຂອງທະນາຄານ ເທົ່າກັບມູນຄ່າຂອງພາສີ ແລະອາກອນທີ່ຕ້ອງຈ່າຍ. ຂໍ້ກຳນົດຕ່າງໆຂອງກົດໝາຍພາສີ ສະບັບປັບປຸງ ແມ່ນປະຕິບັດຕາມຂໍ້ຮຽກຮ້ອງຂອງສັນຍາ WTO-TFA ແລະ ທັງການຈັດຕັ້ງປະຕິບັດຕົວຈິງ, ສິນຄ້ານຳເຂົ້າ ແມ່ນໄດ້ຮັບອະນຸຍາດໃຫ້ໄດ້ຮັບການປ່ອຍກ່ອນການປະເມີນ ໃນກໍລະນີເປັນສິນຄ້າເນົ່າເປື່ອຍງ່າຍ, ຢາຊ່ວຍຊີວິດ ຫຼື ກໍລະນີຮີບດ່ວນອື່ນໆ ຊຶ່ງຍັງໄດ້ຮັບການຢືນຢັນໂດຍສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ. ໃນສະຖານະການນີ້, ຖືວ່າມາດຕະການນີ້ ເປັນການປະຕິບັດຢ່າງເຕັມສ່ວນ ເຖິງວ່າຈະເປັນການປະຕິບັດ ຫຼື ນຳໃຊ້ ບາງສ່ວນຕາມການສຳຫຼວດຂອງອົງການ OECD, ສະຫະປະຊາຊາດ ແລະ ຄຳຄິດເຫັນຂອງພາກທຸລະກິດ ກໍ່ຕາມ.

**2.7.5.6 ຂໍ້ກຳນົດສຳລັບການປ່ອຍສິນຄ້າເນົ່າເປື່ອຍງ່າຍ ໂດຍໃຊ້ເວລາທີ່ສັ້ນທີ່ສຸດເທົ່າທີ່ຈະເປັນໄປໄດ້ ຫຼື ການເກັບຮັກສາຂອງພວກເຂົາ (ມາດຕາ 7.9)**

ສິນຄ້າເນົ່າເປື່ອຍງ່າຍ ແມ່ນໄດ້ຮັບບູລິມະສິດໃນການກວດກາ ແລະ ກວດປ່ອຍ. ມາດຕາ 38 ຂອງກົດໝາຍພາສີ ກຳນົດຄວາມຕ້ອງການໃຫ້ສິນຄ້າເນົ່າເປື່ອຍງ່າຍ. ມາດຕາ 28 ຂອງກົດໝາຍພາສີ ມີຂໍ້ກຳນົດສະເພາະ ສຳລັບລະບຽບການກວດປ່ອຍສິນຄ້ານອກໂມງເຮັດວຽກ ຫຼື ວັນພັກ ຕາມການສະເໜີຂອງຜູ້ແຈ້ງພາສີ. ໃນຂະນະທີ່ການສຳຫຼວດຂອງອົງການ OECD ຈັດວ່າເປັນການຈັດຕັ້ງປະຕິບັດໃນລະດັບຕ່ຳ ແລະ ການສຳຫຼວດອົງການສະຫະປະຊາຊາດ ໄດ້ລາຍງານວ່າ ແມ່ນຢູ່ຂັ້ນຕອນການວາງແຜນການຈັດຕັ້ງປະຕິບັດ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ເຫັນວ່າເປັນການນຳໃຊ້ສ່ວນໃຫຍ່. ມີຂໍ້ກຳນົດສະເພາະໃນກົດໝາຍພາສີ ແລະ ໄດ້ຮັບການປະຕິບັດໃນຕົວຈິງ, ສະນັ້ນ ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

#### 2.7.5.7 ການຢັ້ງຢືນຮັບຮອງລ່ວງໜ້າ (ມາດຕາ 3)

ອີງຕາມມາດຕາ 32 ຂອງກົດໝາຍພາສີ, ຜູ້ຄ້າສາມາດຂໍການຢັ້ງຢືນຮັບຮອງລ່ວງໜ້າ ທີ່ກ່ຽວຂ້ອງກັບ ລະຫັດສິນຄ້າ (HS), ມູນຄ່າແຈ້ງພາສີ, ແຫຼ່ງກຳເນີດສິນຄ້າ ແລະ ອື່ນໆ ຊຶ່ງຈະອອກໃຫ້ພາຍໃນ 60 ວັນ ນັບແຕ່ມື້ທີ່ຍື່ນຄຳຮ້ອງ ແລະ ມີອາຍຸການນຳໃຊ້ 3 ປີ. ມີຫຼາຍຂໍ້ກຳນົດ ໄດ້ປະຕິບັດຕາມມາດຕະຖານຂອງ ສັນຍາ WTO-TFA ແລະ ໄດ້ຮັບການປະຕິບັດຕົວຈິງ ເນື່ອງຈາກຂະແໜງພາສີ ໄດ້ສ້າງຕັ້ງອົງການຢັ້ງຢືນ ຮັບຮອງລ່ວງໜ້າ ແລະ ຜູ້ຄ້າ ໄດ້ຍື່ນຄຳຮ້ອງຕໍ່ອົງການດັ່ງກ່າວ. ໃນລະຫວ່າງປີ 2020-2022, ກົມພາສີ ໄດ້ ອອກໃບຢັ້ງຢືນຮັບຮອງລ່ວງໜ້າຫຼາຍເປັນຈຳນວນ 21 ສະບັບ. ເຖິງຢ່າງໃດກໍ່ຕາມ, ທຸກບັນຫາແມ່ນຕິດ ພັນກັບການຈັດລະຫັດສິນຄ້າ ແລະ ບໍ່ສາມາດຮູ້ໄດ້ວ່າ ມີການຂໍຢັ້ງຢືນສຳລັບບັນຫາອື່ນໆ ຫຼື ບໍ່ ຫຼື ມີຈັກຄຳ ຮ້ອງທີ່ຍັງລໍຖ້າການຕອບກັບ. ການສຳຫຼວດຂອງອົງການ OECD ໄດ້ລາຍງານວ່າ ມີການຈັດຕັ້ງປະຕິບັດ ໃນລະດັບຕ່ຳ ແລະ ອົງການສະຫະປະຊາຊາດ ເປັນການຈັດຕັ້ງປະຕິບັດບາງສ່ວນ, ການສຳຫຼວດຄຳຄິດເຫັນ ຂອງພາກທຸລະກິດ ໄດ້ນຳໃຊ້ໃນລະດັບປານກາງ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກກົດໝາຍພາສີ ໄດ້ວາງ ອອກເພື່ອປະຕິບັດຕາມຂໍ້ກຳນົດຂອງສັນຍາ WTO-TFA ແລະ ມີການນຳໃຊ້ຕົວຈິງ, ມາດຕະການນີ້ ຈຶ່ງ ຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

#### 2.7.5.8 ໂອກາດໃນການທົດສອບຄັ້ງທີສອງ (ມາດຕາ 5.3)

ບໍ່ມີຂໍ້ກຳນົດນີ້ຢູ່ໃນກົດໝາຍ ເພື່ອໃຫ້ໂອກາດໃຫ້ມີການທົດສອບຄັ້ງທີສອງ ຫຼື ນຳໄປພິຈາລະນາເພື່ອການ ຕັດສິນໃຈກວດປ່ອຍສິນຄ້າ. ເຖິງຢ່າງໃດກໍ່ຕາມ, ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມອາຫານ ແລະ ຢາ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມຄຸ້ມຄອງບໍ່ແຮ່ ອະນຸຍາດໃຫ້ຜູ້ຄ້າສາມາດທົດສອບຄັ້ງ ທີສອງ ທີ່ເຫັນວ່າຜົນການທົດສອບຈາກເຄື່ອງທົດສອບ ຫຼື ຫ້ອງແລັບຂອງລັດຖະບານ ບໍ່ມີຄວາມເປັນທຳ. ການທົດສອບຄັ້ງທີສອງ ຕ້ອງໄດ້ຮັບການອະນຸຍາດໃນຫ້ອງທົດລອງຂອງລັດຖະບານ ຂອງບັນດາປະເທດ ສະມາຊິກອາຊຽນ ແລະ ຜົນການທົດສອບ ເປັນຂໍ້ມູນໃຫ້ແກ່ການຕັດສິນໃຈກວດປ່ອຍສິນຄ້າ ຄັ້ງສຸດທ້າຍ. ເຖິງວ່າບໍ່ມີລາຍຊື່ຫ້ອງແລັບທີ່ໄດ້ຖືກຮັບຮອງ ຢູ່ໃນເວັບໄຊທ໌ LTP ຫຼື ເວັບໄຊທ໌ຂອງຂະແໜງການທີ່ ກ່ຽວຂ້ອງ, ຈະມີການສະໜອງລາຍຊື່ຂອງແລັບເຫຼົ່ານີ້ ໃຫ້ຜູ້ຄ້າຕາມຄວາມຕ້ອງການ. ການສຳຫຼວດຂອງ ອົງການສະຫະປະຊາຊາດ ລາຍງານວ່າ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ ແລະ ການສຳຫຼວດຄຳຄິດເຫັນຂອງ ພາກທຸລະກິດ ອະທິບາຍວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ໃນກໍລະນີນີ້, ເນື່ອງຈາກບໍ່ມີຂໍ້ກຳນົດທີ່ເປັນ ນິຕິກຳ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ຫຼື ບໍ່ມີຄຳແນະນຳດັ່ງກ່າວ ຫຼື ບໍ່ມີລາຍຊື່ຫ້ອງແລັບທີ່ໄດ້ ຖືກຮັບຮອງ ຢູ່ໃນເວັບໄຊທ໌ LTP, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

#### 2.7.5.9 ການຈັດສົ່ງດ່ວນ (ມາດຕາ 7.8)

ກົດໝາຍພາສີ ອະນຸຍາດໃຫ້ກວດປ່ອຍສິນຄ້ານຳເຂົ້າ ໂດຍບໍ່ມີເສຍພາສີ ຖ້າມູນຄ່າສິນຄ້າຕ່ຳກວ່າ 1,500,000 ກີບ. ແຜນງານການກວດປ່ອຍສິນຄ້າທີ່ສະດວກງ່າຍດາຍ ຍັງໄດ້ຮັບການປະຕິບັດຕາມ ສຳລັບ ສິນຄ້າຜ່ານທາງໄປສະນີ. ເຖິງຢ່າງໃດກໍ່ຕາມ, ສິນຄ້າທີ່ຈັດສົ່ງທາງໄປສະນີ ແມ່ນຕ້ອງປະຕິບັດຂັ້ນຕອນ ການກວດປ່ອຍສິນຄ້າແບບປົກກະຕິ. ສະນັ້ນ, ແຜນງານສຳລັບສິນຄ້າຜ່ານທາງໄປສະນີ ຈຶ່ງຢູ່ໃນຂັ້ນຕອນ ການພັດທະນາ ສຳລັບການກວດປ່ອຍສິນຄ້າທີ່ຈັດສົ່ງໃນຮູບແບບການຄ້າເອເລັກໂຕຼນິກ ທີ່ອ້າງໄວ້ ຕາມຄູ່ ມືແນະນຳຂອງອົງການພາສີໂລກ ກ່ຽວກັບການປ່ອຍການຂົນສົ່ງສິນຄ້າທັນທີ ໂດຍສະເພາະສິນຄ້າທີ່ມີມູນ ຄ່າຕ່ຳ, ສູງກວ່າມູນຄ່າຂັ້ນຕ່ຳ. ການສຳຫຼວດຂອງອົງການ OECD, ອົງການສະຫະປະຊາຊາດ ແລະ ຄຳຄິດ ເຫັນຂອງພາກທຸລະກິດ ອະທິບາຍວ່າມາດຕະການນີ້ ມີການຈັດຕັ້ງປະຕິບັດໃນລະດັບຕ່ຳ, ບາງສ່ວນ ແລະ ຖືກນຳໃຊ້ບາງສ່ວນ ຕາມລຳດັບ. ສະນັ້ນ, ຈຶ່ງຖືເປັນພຽງການຈັດຕັ້ງປະຕິບັດບາງສ່ວນ.

### 2.7.5.10 ລະບົບແຈ້ງພາສີປະຕູດຽວ (ມາດຕາ 10.4)

ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ໄດ້ຖືກເລີ່ມນຳໃຊ້ໃນປີ 2019 ຢູ່ດ່ານຊາຍແດນລາວ-ໄທ ຂົວມິດຕະພາບ 1 (ທ່ານາແລ້ງ) ດ້ວຍວິທີການທີ່ຈຳກັດ ຊຶ່ງເບື້ອງຕົ້ນກວມເອົາພຽງການນຳເຂົ້າ ຍານພາຫະນະ. ສິ່ງອຳນວຍຄວາມສະດວກຂອງລະບົບ ໄດ້ຮັບການຂະຫຍາຍໄປກວມເອົາທຸກລາຍການ ສິນຄ້າ ໃນເດືອນ ກຸມພາ 2021. ລະບົບດັ່ງກ່າວ ຍັງໄດ້ຂະຫຍາຍການນຳໃຊ້ໄປສູ່ດ່ານຊາຍແດນລາວ-ຈີນ ບໍ່ເຕັນ ໃນວັນທີ 23 ພຶດສະພາ 2022 ແລະ ໃນບໍ່ດົນມານີ້ ແມ່ນຂະຫຍາຍໄປຫຼາຍດ່ານຕື່ມ ເຊັ່ນ: ດ່ານຂົວມິດຕະພາບ 3, ດ່ານຂົວມິດຕະພາບ 2, ດ່ານນາເພົ້າ ແລະ ດ່ານແດນສະຫວັນ ໃນວັນທີ 25 ກໍລະກົດ 2022 ແລະ ດ່ານວັງເຕົ່າ ແລະ ດ່ານໜອງນົກຂຽນ ໃນວັນທີ 23 ກັນຍາ 2022. ໃນເວລາດຽວກັນ, ລະບົບ LNSW ຍັງຂະຫຍາຍການນຳໃຊ້ໄປສູ່ເຂດເສດຖະກິດພິເສດ ຢູ່ແຂວງ ຄຳມ່ວນ ແລະ ສະຫວັນນະເຂດ[44]. ໃນຂະນະທີ່ລະບົບ LNSW ຖືກນຳໃຊ້ສຳລັບການກວດປ່ອຍທຸກສິນຄ້າ ຢູ່ດ່ານເຫຼົ່ານີ້, ແຕ່ການນຳໃຊ້ ຍັງຈຳກັດ ຊຶ່ງນອກຈາກກົມພາສີ ແລ້ວ, ມີພຽງ 2 ກົມ ຄື: ກົມການນຳເຂົ້າ ແລະ ສົ່ງອອກ ທີ່ນຳໃຊ້ສຳລັບ ການອອກອະນຸຍາດນຳເຂົ້າ ຍານພາຫະນະ, ນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ ແລະ ກົມຂົນສົ່ງ ທີ່ນຳໃຊ້ ສຳລັບການອອກອະນຸຍາດທາງເຕັກນິກຍານພາຫະນະນຳເຂົ້າ.

ພ້ອມດຽວກັນ, ອີງຕາມບົດລາຍງານທີ່ອອກມາໃນບໍ່ດົນມານີ້ຂອງອົງການ UNESCAP[45] ມີບໍລິສັດທີ່ຈົດ ທະບຽນນຳໃຊ້ລະບົບ LNSW ຢູ່ດ່ານຂົວມິດຕະພາບ 1/ດ່ານທ່ານາແລ້ງ ຈຳນວນ 331 ບໍລິສັດ, ແຕ່ມີພຽງ 142 ບໍລິສັດ ນຳໃຊ້ລະບົບດັ່ງກ່າວ ເນື່ອງຈາກຕ້ອງໄດ້ຊຳລະເພີ່ມເຕີມ ສຳລັບການນຳໃຊ້ລະບົບ LNSW[46]. ກົມອາຫານ ແລະ ຢາ ແມ່ນຂະແໜງການຕໍ່ໄປທີ່ມີແຜນຈະນຳໃຊ້ລະບົບ LNSW ໃນເດືອນ ມັງກອນ 2023 ຫຼັງຈາກນັ້ນ ຈະແມ່ນກົມປູກຝັງ ແລະ ກົມມາດຕະຖານ ແລະ ວັດແທກ. ເຖິງຢ່າງໃດກໍ່ຕາມ, ແຜນການຂະຫຍາຍການນຳໃຊ້ລະບົບ LNSW ແມ່ນຊ້າກວ່າກຳນົດ ແລະ ຍັງບໍ່ທັນຮູ້ວ່າເມື່ອໃດຈະ ສາມາດກວມເອົາທຸກຂະແໜງການ. ລະບົບດັ່ງກ່າວ ຍັງບໍ່ທັນເຊື່ອມໂຍງກັບລະບົບ e-CO ທີ່ນຳໃຊ້ໂດຍ ກົມການນຳເຂົ້າ ແລະ ສົ່ງອອກ ສຳລັບການດຳເນີນການຍື່ນຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບ ເລັກໂຕຼນິກ. ຄວນມີການລິເລີ່ມປັບປຸງຂະບວນການທາງທຸລະກິດຂອງຂະແໜງການ ທີ່ມີແຜນຈະນຳໃຊ້ ລະບົບ LNSW ແລະ ເລີ່ມຂັ້ນຕອນການຈັດການການປ່ຽນແປງ ໄປສູ່ການດຳເນີນຂະບວນການການອອກ ອະນຸຍາດ, ອະນຸມັດ ແລະ ຢັ້ງຢືນ ທາງເອເລັກໂຕຼນິກ.

ດັ່ງທີ່ກ່າວມາຂ້າງເທິງ, ຂະແໜງພາສີ ໄດ້ເລີ່ມທົດລອງນຳໃຊ້ລະບົບ LNSW ສຳລັບການແຈ້ງ ແລະ ປະກອບເອກະສານການແຈ້ງພາສີແບບເອເລັກໂຕຼນິກ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ລະບົບ LNSW ໄດ້ ເຊື່ອມໂຍງກັບລະບົບ ASYCUDA ໂດຍໃສ່ຊື່ເປັນ NSWA+. ສິ່ງອຳນວຍຄວາມສະດວກດັ່ງກ່າວ ຈະ ເຮັດໃຫ້ສາມາດດຳເນີນການແຈ້ງ ແລະ ປະກອບເອກະສານແຈ້ງພາສີ ກ່ອນການມາເຖິງຂອງສິນຄ້າແບບ ບໍ່ນຳໃຊ້ເຈ້ຍຜ່ານລະບົບອອນໄລນ໌ ເມື່ອການທົດລອງນຳໃຊ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ຢູ່

[44] ລະບົບ LNSW ໄດ້ຖືກຂະຫຍາຍການນຳໃຊ້ໄປສູ່ດ່ານຂົວມິດຕະພາບ 3, ດ່ານນາເພົ້າ ແລະ ເຂດເສດຖະກິດພິເສດທ່າແຂກ ໃນວັນທີ 14 ກໍລະກົດ 2022 ແລະ ໄປສູ່ດ່ານຂົວມິດຕະພາບ 2, ດ່ານແດນສະຫວັນ ແລະ ເຂດເສດຖະກິດພິເສດສະຫວັນ-ເຊໂນ ໃນວັນທີ 19 ກໍລະກົດ 2022, ດ່ານວັງເຕົ່າ ໃນວັນທີ 23 ກັນຍາ 2022.

[45] ບົດປະເມີນຄວາມພ້ອມສຳລັບການຄ້າຂ້າມແດນແບບບໍ່ໃຊ້ເຈ້ຍ ໃນ ສປປ ລາວ ສຶກສາໂດຍອົງການ UNESCAP ໃນປີ 2021-2022. ບົດລາຍງານດັ່ງກ່າວ ໄດ້ຖືກເຜີຍແຜ່ໃນເດືອນ ເມສາ 2022.

[46] ອີງຕາມແຈ້ງການຂອງກະຊວງການເງິນ ເລກທີ 0163/ກງ, ລົງວັນທີ 27 ມັງກອນ 2021, ລະບົບ LNSW ໄດ້ຮັບອະນຸຍາດໃຫ້ເກັບ ຄ່າບໍລິການຈຳນວນ 120,000 ກີບ ຕໍ່ທຸກທຸລະກຳ ອີງຕາມສັນຍາສຳປະທານກັບລັດຖະບານ.

ທຸກດ່ານສາກົນ. ລະບົບດັ່ງກ່າວ ຍັງສາມາດນຳໃຊ້ໜ້າທີ່ໃນການກວດປ່ອຍໃບຂົນສົ່ງແບບເອເລັກໂຕຼນິກ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຄວບຄຸມຂອງພາສີ. ເຖິງຢ່າງໃດກໍ່ຕາມ, ລະບົບ NSWA+ ຄວນໄດ້ຮັບການເຊື່ອມໂຍງກັບລະບົບ CBTMS ຂອງທ່າບົກ ສຳລັບການຕິດຕາມຍານພາຫະນະ ແລະ ຕູ້ຄອນເທນເນີທີ່ມີປະສິດທິພາບ ຜ່ານອານາເຂດພາສີ ແລະ ຜ່ານບັນຊີສຳລັບການກວດປ່ອຍທຸກສິນຄ້າ ທີ່ນຳມາດ່ານຊາຍແດນ. ການເຊື່ອມໂຍງດັ່ງກ່າວ ຈະມີຄວາມສຳຄັນສຳລັບການນຳໃຊ້ສິ່ງອຳນວຍຄວາມສະດວກແບບອັດຕະໂນມັດທີ່ເໝາະສົມທີ່ສຸດ ເຂົ້າໃນການກວດປ່ອຍສິນຄ້າຢູ່ດ່ານ. ການສຳຫຼວດຂອງອົງການ OECD ກຳນົດວ່າມາດຕະການດັ່ງກ່າວ ມີການຈັດຕັ້ງປະຕິບັດໃນລະດັບຕ່ຳ, ການສຳຫຼວດຂອງອົງການສະຫະປະຊາຊາດ ແມ່ນການຈັດຕັ້ງປະຕິບັດບາງສ່ວນ ແລະ ສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ແມ່ນການນຳໃຊ້ບາງສ່ວນ. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

#### 2.7.5.11 ເສລີພາບໃນການຜ່ານແດນ (ມາດຕາ 11)

ນັບແຕ່ປີ 2019, ສປປ ລາວ ໄດ້ຈັດຕັ້ງປະຕິບັດສັນຍາ ວ່າດ້ວຍແຜນງານອາຊຽນ ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າຜ່ານແດນ (AFAFGIT) ແລະ ອານຸສັນຍາລະອຽດ 9 ສະບັບ ທີ່ແນະນຳຂະແໜງພາສີ, ຂົນສົ່ງ ແລະ ກັກກັນ ຊຶ່ງເຮັດໃຫ້ສາມາດເຄື່ອນຍ້າຍສິນຄ້າຜ່ານແດນຜ່ານປະເທດແບບບໍ່ມີສິ່ງກີດຂວາງ. ລະບົບຜ່ານແດນພາສີອາຊຽນ (ACTS) ແມ່ນສ່ວນສຳຄັນຂອງລະບົບ AFAFGIT ຊຶ່ງອະນຸຍາດໃຫ້ສິນຄ້າຜ່ານແດນ ສາມາດຜ່ານດິນແດນຂອງບັນດາປະເທດສະມາຊິກອາຊຽນ (ພາຍໃຕ້ການນຳໃຊ້ກົ່ວພາສີ ແລະ ການຄ້ຳປະກັນເທື່ອດຽວ) ແລະ ມີລະບົບການຈັດການທີ່ທັນສະໄໝ ໂດຍບໍ່ຕ້ອງການຍື່ນເອກະສານແຈ້ງພາສີໃນປະເທດທາງຜ່ານ. ສິນຄ້າຜ່ານແດນ ຕ້ອງບໍ່ໄດ້ຮັບການກວດກາ ເພື່ອການປະຕິບັດທີ່ສອດຄ່ອງກັບມາດຕະຖານທາງດ້ານເຕັກນິກ ເຖິງວ່າມີຄວາມຈຳເປັນຕ້ອງໄດ້ຮັບການອະນຸຍາດຜ່ານແດນ ສຳລັບສິນຄ້າທີ່ມີການຈຳກັດ (ຊຶ່ງຕ້ອງໄດ້ຮັບອະນຸຍາດນຳເຂົ້າ) ກໍ່ຕາມ. ສ່ວນໃຫຍ່ແລ້ວ, ການຜ່ານແດນສິນຄ້າປະເພດອາຫານ (ຄ້າຍຄືກັບການອະນຸຍາດນຳເຂົ້າ) ແມ່ນໄດ້ອະນຸຍາດໂດຍແຂວງ.

ສັນຍາ AFAFGIT ຍັງອະນຸຍາດໃຫ້ສິນຄ້າຜ່ານແດນເຄື່ອນຍ້າຍຂ້າມແດນໄດ້ ໂດຍບໍ່ຕ້ອງຄ່ຽນຖ່າຍ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ຫຼາຍປະເທດໄດ້ຮັບອະນຸຍາດໃຫ້ມີການອອກອະນຸຍາດພິເສດຈຳນວນ 500 ສະບັບ ໃຫ້ແກ່ຂົນສົ່ງພາຍໃນປະເທດ (ໂດຍປະຕິບັດຕາມມາດຕະຖານເຕັກນິກ) ເພື່ອໃຫ້ສາມາດເຄື່ອນຍ້າຍສິນຄ້າຜ່ານແດນບັນດາປະເທດສະມາຊິກອາຊຽນ ໄດ້ໂດຍບໍ່ມີສິ່ງກີດຂວາງ. ສປປ ລາວ ໄດ້ອຳນວຍຄວາມສະດວກເປັນຢ່າງດີ ເພື່ອໃຫ້ລົດຂົນສົ່ງຂອງໄທ ແລະ ສສ ຫວຽດນາມ ເຄື່ອນຍ້າຍຂ້າມແດນເຂົ້າມາ ສປປ ລາວ. ໃນຂະນະທີ່ມາດຕະການນີ້ ບໍ່ໄດ້ຖືກກວມໃນການສຳຫຼວດຂອງອົງການ OECD, ການສຳຫຼວດຂອງອົງການສະຫະປະຊາຊາດ ອະທິບາຍວ່າເປັນການຈັດຕັ້ງປະຕິບັດບາງສ່ວນ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ພົບວ່າເປັນການນຳໃຊ້ເປັນສ່ວນໃຫຍ່. ຈາກຂໍ້ຄິດລິເລີ່ມທີ່ໄດ້ດຳເນີນການພາຍໃຕ້ການຄ້າຜ່ານແດນອາຊຽນແບບບໍ່ມີຮອຍຕໍ່, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

### 2.7.6 ການຢັ້ງຢືນຄວາມຖືກຕ້ອງໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ B ຈາກພາກທຸລະກິດ

ດັ່ງທີ່ກ່າວມາຂ້າງເທິງ, ແຜນດຳເນີນງານ ໄດ້ຂໍການຢັ້ງຢືນຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດທຸກມາດຕະການທີ່ນອນໃນສັນຍາ WTO-TFA ຈາກພາກທຸລະກິດ ຊຶ່ງເປັນຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ດີທີ່ສຸດທີ່ໃນການເຮັດ

ແບບນັ້ນ. ສະນັ້ນ, ເພື່ອບັນລຸຈຸດປະສົງດັ່ງກ່າວ, ຈຶ່ງມີການສຳຫຼວດຄຳຄິດເຫັນຂອງພາກທຸລະກິດໃນປີ 2021 ເພື່ອຂໍການປະເມີນຜົນກະທົບ ແລະ ການນຳໃຊ້ບັນດາມາດຕະການທີ່ນອນໃນສັນຍາ WTO-TFA. ການສຳຫຼວດດັ່ງກ່າວ ໄດ້ລາຍງານວ່າ 45% ຂອງມາດຕະການທີ່ນອນໃນໝວດ B ໄດ້ຮັບການຈັດຕັ້ງປະຕິບັດເປັນສ່ວນໃຫຍ່ ຫຼື ນຳໃຊ້ຢ່າງເຕັມສ່ວນ ຊຶ່ງລວມມີມາດຕະການທີ່ກ່ຽວຂ້ອງກັບການປຶກສາຫາລື, ລະບຽບການປັບໄໝ, ສິນຄ້າເນົ່າເປື່ອຍງ່າຍ, ການຢັ້ງຢືນຮັບຮອງລ່ວງໜ້າ ແລະ ເສລີພາບໃນການຜ່ານແດນ.

### 2.7.7 ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C

ມາດຕະການທີ່ນອນໃນໝວດ C ເປັນມາດຕະການ ທີ່ປະເທດຂາດຂີດຄວາມສາມາດ ແລະ ຕ້ອງການການຊ່ວຍເຫຼືອຈາກຜູ້ຮ່ວມພັດທະນາ ໃນການຈັດຕັ້ງປະຕິບັດ. ໃນເບື້ອງຕົ້ນ, ສປປ ລາວ ໄດ້ລະບຸມາດຕະການທີ່ນອນໃນໝວດ C ເປັນຈຳນວນຫຼາຍເຖິງ 16 ມາດຕະການ. ເຖິງຢ່າງໃດກໍ່ຕາມ, ດັ່ງທີ່ໄດ້ກ່າວມາແລ້ວ, ໄດ້ມີການຍ້າຍ 1 ມາດຕະການທີ່ນອນໃນໝວດ B ໄປ ໝວດ C ກ່ອນໜ້ານີ້ ແລະ ມີການຍ້າຍມາດຕະການຈາກໝວດ C ໄປ ໝວດ B ຫຼາຍໆມາດຕະການໃນບໍ່ດົນມານີ້, ໃນນີ້ ມີ 5 ມາດຕະການໄດ້ຍ້າຍຈາກໝວດ C ໄປ ໝວດ B ເນື່ອງຈາກບໍ່ມີຄວາມຕ້ອງການການຊ່ວຍເຫຼືອທາງດ້ານວິຊາການ ສຳລັບການຈັດຕັ້ງປະຕິບັດ. ປະຈຸບັນ, ເຮັດໃຫ້ຈຳນວນມາດຕະການທີ່ນອນໃນໝວດ C ຫຼຸດລົງເຫຼືອ 12 ມາດຕະການ.

ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (LCT) ໄດ້ເລີ່ມໃນປີ 2018 ໂດຍການສະໜັບສະໜູນຂອງທະນາຄານໂລກ ແລະ ຜູ້ຮ່ວມພັດທະນາອື່ນໆ ຊຶ່ງໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການທີ່ຕ້ອງການ ໃຫ້ແກ່ຂະແໜງການທີ່ສຳຄັນໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ໂດຍສະເພາະແມ່ນມາດຕະການທີ່ນອນໃນໝວດ C. ເປົ້າໝາຍຜົນສຳເລັດອັນໜຶ່ງຂອງໂຄງການ LCT ແມ່ນການບັນລຸຂໍ້ຜູກມັດຕາມສັນຍາ WTO-TFA ໃຫ້ໄດ້ 80% ພາຍໃນເວລາສິ້ນສຸດໂຄງການໃນປີ 2024[47]. ເປົ້າໝາຍດັ່ງກ່າວ ຈະຖືກບັນລຸໄດ້ໂດຍຜ່ານບົດສະເໜີໂຄງການ CF ທີ່ພັດທະນາຂຶ້ນໂດຍນຳໃຊ້ແຜນປະຕິບັດງານສະເພາະທີ່ຮ່າງໄວ້ກ່ອນໜ້ານີ້ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການທີ່ນອນໃນໝວດ B ແລະ C. ບົດສະເໜີໂຄງການ CF ມີຈຳນວນຫຼາຍເຖິງ 5 ບົດ ທີ່ໄດ້ຮັບການອະນຸມັດພາຍໃຕ້ໂຄງການ ຊຶ່ງຕິດພັນກັບຂະແໜງການທີ່ສຳຄັນ ເຊັ່ນ: ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຄຸ້ມຄອງບໍ່ແຮ່. ບົດສະເໜີໂຄງການ ກ່ຽວຂ້ອງກັບຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ ໂດຍສຸມໃສ່ແຜນງານການບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ ເພື່ອການກວດກາຢູ່ດ່ານຊາຍແດນຕາມຄວາມສ່ຽງ ແລະ ການກວດສອບຄືນຫຼັງການກວດປ່ອຍສິນຄ້າ. ບົດສະເໜີໂຄງການ CF ຂອງກົມພາສີ ແມ່ນໂຄງການທີ່ກວ້າງທີ່ສຸດ ເນື່ອງຈາກກວມເອົາມາດຕະການທີ່ນອນໃນສັນຍາ WTO-TFA ຈຳນວນ 10 ມາດຕະການ ຊຶ່ງມີ 3 ອົງປະກອບ ຄື: ❶ ການປັບປຸງດ້ານລະບຽບການທີ່ຈຳເປັນ, ❷ ການປັບປຸງຂັ້ນຕອນການກວດກາຢູ່ດ່ານຊາຍແດນ ແລະ ❸ ການປັບປຸງແກ້ໄຂລະບົບ ASYCUDA. ນອກຈາກບົດສະເໜີໂຄງການ CF, ໂຄງການ LCT ຍັງໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອຊ່ວຍຄະນະກຳມະການ NTFC ແລະ ກອງເລຂາ TFCS ໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ຜ່ານການຊ່ວຍເຫຼືອຂອງຊ່ຽວຊານສາກົນ ແລະ ພາຍໃນ. ໂດຍນຳໃຊ້ການສະໜັບສະໜູນຂອງໂຄງການ, ກົມພາສີ ສາມາດປັບປຸງກົດໝາຍພາສີໃນປີ 2020 ໂດຍສອດຄ່ອງກັບສັນຍາ WTO-TFA ແລະ ສັນຍາກຽວໂຕສະບັບປັບປຸງ (RKC) ຂອງອົງການພາສີໂລກ. ຂະແໜງການອື່ນ ຍັງນຳໃຊ້ການຊ່ວຍເຫຼືອທາງດ້ານວິຊາການທີ່ມີຢູ່ພາຍໃຕ້ໂຄງການ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການທີ່ນອນໃນໝວດ C ເຊັ່ນດຽວກັນ.

---

[47] ໂຄງການ LCT ກຳນົດຈຸດປະສົງໃຫ້ບັນລຸຂໍ້ຜູກມັດ 80% ຈາກ 21% ໃນປີ 2018 ຊຶ່ງເປັນປີທີ່ເລີ່ມໂຄງການ.

#### 2.7.7.1 ການບໍລິຫານຄວາມສ່ຽງ (ມາດຕາ 7.4)

ຫຼັກການບໍລິຫານຄວາມສ່ຽງ ແມ່ນຖືກນຳໃຊ້ສຳລັບການກວດກາຢູ່ດ່ານຊາຍແດນໂດຍກົມພາສີ ຜ່ານໂມດູນເລືອກເຟັ້ນທີ່ນອນໃນລະບົບ ASYCUDA. ຂໍ້ມູນຄວາມສ່ຽງ ທີ່ຖືກນຳໃຊ້ໃນໂມດູນດັ່ງກ່າວ ແມ່ນອີງຕາມລະຫັດສິນຄ້າ, ແຫຼ່ງກຳເນີດສິນຄ້າ, ຊື່ຜູ້ສະໜອງ/ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ, ມູນຄ່າແຈ້ງ ແລະ ອື່ນໆ. ຂໍ້ມູນຄວາມສ່ຽງເຫຼົ່ານີ້ ໄດ້ຮັບການປັບປຸງເປັນແຕ່ລະໄລຍະ ອີງຕາມຜົນການນຳໃຊ້ ແລະ ໝາກຜົນສຳເລັດ ແລະ ປັດໄຈອື່ນໆ. ບົດບັນທຶກຄວາມເຂົ້າໃຈຮ່ວມ[48] ໄດ້ຖືກລົງນາມ ລະຫວ່າງ ກົມພາສີ ແລະ ຂະແໜງການທີ່ກ່ຽວຂ້ອງ (ເຊັ່ນ: ກົມອາຫານ ແລະ ຢາ, ກົມປູກຝັງ ແລະ ກົມລ້ຽງສັດ ແລະ ການປະມົງ) ເພື່ອພັດທະນາແຜນງານບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ ໃຫ້ທຸກຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ ສາມາດນຳໃຊ້ຮ່ວມກັນ. ຄະນະກຳມະການບໍລິຫານຄວາມສ່ຽງຮ່ວມ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນຫົວໜ້າກົມພາສີເປັນຫົວໜ້າຄະນະ ແລະ ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ ເປັນຄະນະ ເພື່ອຂັບເຄື່ອນແຜນງານບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ. ຂັ້ນຕອນການປະຕິບັດງານທີ່ເປັນມາດຕະຖານ (SOP) ລະອຽດ ກຳລັງໄດ້ຮັບການພັດທະນາ ເພື່ອດຳເນີນການກວດກາຮ່ວມກັນ ແລະ ການນຳໃຊ້ຂໍ້ມູນຄວາມສ່ຽງທີ່ເຊື່ອມໂຍງໃນໂມດູນເລືອກເຟັ້ນຂອງກົມພາສີ ເພື່ອການກວດປ່ອຍສິນຄ້າຢູ່ຊາຍແດນຕາມຄວາມສ່ຽງ ໂດຍທຸກໜ່ວຍງານທີ່ປະຈຳຢູ່ດ່ານ.

ໂມດູນເລືອກເຟັ້ນ ຈະກຳນົດຊ່ອງສີຂຽວ, ເຫຼືອງ ຫຼື ແດງ ແບບອັດຕະໂນມັດ ເພື່ອການປະຕິບັດຕໍ່ກັບສິນຄ້າທີ່ເໝາະສົມ ບົນພື້ນຖານຂໍ້ມູນຄວາມສ່ຽງທີ່ໄດ້ອັບໂຫຼດລົງໃນໂມດູນດັ່ງກ່າວ. ດ້ວຍການລົບລ້າງການແຊກແຊງດ້ວຍຕົນເອງ, ຈະເຮັດໃຫ້ສາມາດຫຼຸດຜ່ອນການກວດກາສິນຄ້າ ແລະ ຂອບເຂດການສໍ້ລາດບັງຫຼວງ ຢ່າງຫຼວງຫຼາຍ. ສະນັ້ນ, ການກວດກາສິນຄ້າຢູ່ຕາມຊາຍແດນຕາມຄວາມສ່ຽງທີ່ເຊື່ອມໂຍງ ຕ້ອງໄດ້ຖືກນຳໃຊ້ໂດຍໄວຕາມແຜນການທີ່ກຳນົດໄວ້ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍທາງການຄ້າ. ໃນຂະນະທີ່ການສຳຫຼວດຂອງອົງການ OECD ແລະ ອົງການສະຫະປະຊາຊາດ ພົບວ່າມາດຕະການນີ້ໄດ້ຮັບການຈັດຕັ້ງປະຕິບັດບາງສ່ວນ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ພົບວ່າເປັນການນຳໃຊ້ເປັນສ່ວນຫຼາຍ. ເຖິງຢ່າງໃດກໍ່ຕາມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໄດ້ກ່າວວ່າ ຂະແໜງການອື່ນທີ່ບໍ່ແມ່ນຂະແໜງພາສີ ໄດ້ກວດກາທຸກການຂົນສົ່ງສິນຄ້າ ແລະ ລາຍງານວ່າອັດຕາສ່ວນໃນການກວດກາການຂົນສົ່ງສິນຄ້າຂອງຂະແໜງພາສີ ແມ່ນສູງຫຼາຍ ຊຶ່ງລວມທັງສິນຄ້າທີ່ຢູ່ໃນຊ່ອງສີຂຽວ. ເຫດການດັ່ງກ່າວ, ເຫັນວ່າມາດຕະການນີ້ ສາມາດຖືເປັນການຈັດຕັ້ງປະຕິບັດບາງສ່ວນ.

#### 2.7.7.2 ການກວດສອບຄືນຫຼັງການກວດປ່ອຍສິນຄ້າ (ມາດຕາ 7.5)

ກົດໝາຍພາສີສະບັບໃໝ່ ທີ່ປັບປຸງໃນປີ 2020 ໄດ້ມີຂໍ້ກຳນົດ ກ່ຽວກັບການກວດສອບຄືນຫຼັງການກວດປ່ອຍສິນຄ້າ ຢ່າງລະອຽດ. ພ້ອມດຽວກັນ, ໄດ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກກວດສອບຄືນຫຼັງການແຈ້ງພາສີ (PCA) ຢູ່ກົມພາສີ ແລະ ມີອານຸສັນຍາທີ່ໄດ້ຮັບການພັດທະນາ ສຳລັບການດຳເນີນການກວດສອບຄືນຫຼັງການກວດປ່ອຍສິນຄ້າ. ໄດ້ມີການກວດສອບຕາມແຜນການກວດສອບ ທີ່ກະກຽມໄວ້ລ່ວງໜ້າ ອີງຕາມການປ້ອນຂໍ້ມູນຂ່າວສານ. ເຖິງຢ່າງໃດກໍ່ຕາມ, ຍັງບໍ່ທັນຮູ້ ກ່ຽວກັບຄວາມຖີ່ ຫຼື ປະສິດທິພາບຂອງການກວດສອບຄືນຫຼັງການກວດປ່ອຍສິນຄ້າ ເນື່ອງຈາກບໍ່ທັນມີສະຖິຕິທີ່ກຳນົດຈຳນວນກໍລະນີທີ່ປະຕິບັດບໍ່ຖືກຕ້ອງ ຫຼື ຈຳນວນລາຍຮັບທີ່ສູນເສຍ ທີ່ພົບເຫັນໂດຍພະແນກກວດສອບຄືນຫຼັງ

[48] ບົດບັນທຶກຄວາມເຂົ້າໃຈຮ່ວມ ໄດ້ຖືກລົງນາມ ລະຫວ່າງກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມປູກຝັງ ໃນວັນທີ 13 ທັນວາ 2021 ເພື່ອປະສານສົມທົບ ກ່ຽວກັບການກວດກາສິນຄ້າຢູ່ດ່ານຊາຍແດນ ຕາມຄວາມສ່ຽງ ໂດຍນຳໃຊ້ໂມດູນເລືອກເຟັ້ນຂອງລະບົບ ASYCUDA ແລະ ກົນໄກອື່ນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າຂ້າມແດນ.

ການແຈ້ງພາສີ ໃນໄລຍະຜ່ານມາ. ກົມອາຫານ ແລະ ຢາ ຍັງໄດ້ດຳເນີນການກວດສອບການຈຳໜ່າຍພາຍຫຼັງການນຳເຂົ້າ ເປັນປົກກະຕິ, ແຕ່ອີກຄັ້ງທີ່ບໍ່ມີຂໍ້ມູນທີ່ສະແດງເຖິງປະສິດທິພາບຂອງການກວດສອບດັ່ງກ່າວ. ທຸກການສຳຫຼວດ ພົບວ່າມາດຕະການນີ້ ເປັນພຽງການຈັດຕັ້ງປະຕິບັດ/ນຳໃຊ້ ບາງສ່ວນ ເທົ່ານັ້ນ. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

#### 2.7.7.3 ການສ້າງຕັ້ງ ແລະ ການເຜີຍແຜ່ເວລາກວດປ່ອຍສິນຄ້າສະເລ່ຍ (ມາດຕາ 7.6)

ໄດ້ມີການດຳເນີນການສຶກສາເວລາໃນການກວດປ່ອຍສິນຄ້າ (TRS) ຂ້ອນຂ້າງເລື້ອຍໆ ຢູ່ ສປປ ລາວ. ໃນ 5 ປີຜ່ານມາ, ມີການສຶກສາດັ່ງກ່າວ ຈຳນວນ 3 ຄັ້ງ ຄື: ປີ 2017, 2018 ແລະ 2020 ຊຶ່ງສະແດງໃຫ້ເຫັນການປັບປຸງເວລາໃນການກວດປ່ອຍສິນຄ້າ ທີ່ດີຂຶ້ນ. ບົດສຶກສາ TRS ທີ່ໄດ້ສຶກສາໃນປີ 2020 ລາຍງານວ່າ: ເວລາສະເລ່ຍໃນການກວດປ່ອຍສິນຄ້າຢູ່ດ່ານ ແມ່ນ 5 ຊົ່ວໂມງ 7 ນາທີ ຊຶ່ງເປັນຄວາມກ້າວໜ້າທີ່ສຳຄັນ ທຽບໃສ່ປີ 2018 ທີ່ໃຊ້ເວລາ 8 ຊົ່ວໂມງ 10 ນາທີ. ພ້ອມດຽວກັນ, ບົດສຶກສາ TRS ປີ 2020 ຍັງໄດ້ຂະຫຍາຍຂອບເຂດ ເພື່ອສຶກສາເອົາເວລາໃນການອອກອະນຸຍາດ, ອະນຸມັດ, ຢັ້ງຢືນ ແລະ ອື່ນໆ (LPCOs) ສຳລັບການຄ້າຂ້າມແດນ. ເວລາສະເລ່ຍນ້ຳໜັກທີ່ໃຊ້ໃນການອອກ LPCOs ເຫຼົ່ານີ້ ໃນປີ 2020 ແມ່ນ 1 ວັນ 22 ຊົ່ວໂມງ ແລະ 9 ນາທີ ຊຶ່ງເປັນຖານໃນການວັດແທກປະສິດທິພາບ ໃນອານາຄົດ.

ອີງຕາມຜົນການວິເຄາະ, ບົດສຶກສາ TRS ປີ 2020 ຍັງໃຫ້ຂໍ້ສະເໜີແນະຫຼາຍຢ່າງ ສຳລັບການອຳນວຍຄວາມສະດວກໃຫ້ແກ່ການກວດປ່ອຍສິນຄ້າ ແລະ ການອອກ LPCOs. ຜົນການສຶກສາ ໄດ້ອັບໂຫຼດລົງໃນເວັບໄຊທ໌ LTP ເພື່ອເປັນຂໍ້ມູນໃຫ້ແກ່ສາທາລະນະ. ບົດສຶກສາ TRS ຄັ້ງຕໍ່ໄປແມ່ນກຳລັງຢູ່ໃນຂັ້ນຕອນການສຶກສາ ພ້ອມດ້ວຍວິທີການສຶກສາທີ່ໄດ້ຮັບການປັບປຸງໃນປີນີ້[49] ແລະ ອີກອັນໜຶ່ງ ແມ່ນມີແຜນຈະດຳເນີນການສຶກສາໃນປີ 2024 ເພື່ອປະເມີນຜົນກະທົບບັນດາຂໍ້ຄິດລິເລີ່ມໃນການປະຕິຮູບ ຢູ່ປະເທດ. ວິທີການທີ່ໄດ້ປັບປຸງ ມີຈຸດປະສົງເພື່ອເຮັດໃຫ້ບົດສຶກສາ TRS ມີຄວາມໜ້າເຊື່ອຖື ແລະ ເຂັ້ມແຂງຫຼາຍຂຶ້ນ ແລະ ເພື່ອເປັນຂໍ້ມູນຕົວຊີ້ວັດຜົນສຳເລັດທີ່ສຳຄັນ ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າ. ໂຄງການ LCT ໄດ້ຕົກລົງນຳໃຊ້ຂໍ້ມູນຂອງບົດສຶກສາ TRS ເພື່ອການປະເມີນຜົນສຳເລັດຂອງໂຄງການ ແລະ ກຳນົດເປົ້າໝາຍຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້າໃຫ້ໄດ້ 20% ແລະ ຫຼຸດຜ່ອນເວລາໃນການອອກ LPCOs ໃຫ້ໄດ້ 50% ພາຍໃນເວລາສິ້ນສຸດໂຄງການໃນປີ 2024.

ໃນຂະນະທີ່ການສຳຫຼວດຂອງອົງການ OECD ພົບວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ, ການສຳຫຼວດຂອງອົງການສະຫະປະຊາຊາດ ແລະ ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ຖືວ່າເປັນການຈັດຕັ້ງປະຕິບັດ ແລະ ການນຳໃຊ້ ບາງສ່ວນ/ໃນລະດັບປານກາງ ເນື່ອງຈາກຂາດຄວາມຮັບຮູ້ ກ່ຽວກັບຜົນຂອງການສຶກສາ TRS ຍ້ອນບໍ່ໄດ້ຖືກເຜີຍແຜ່ໃນໄລຍະຜ່ານມາ ຊຶ່ງປະຈຸບັນແມ່ນເຜີຍແຜ່ຢູ່ໃນເວັບໄຊທ໌ LTP. ສະນັ້ນ, ເມື່ອພິຈາລະນາເຖິງການສຶກສາ TRS ທີ່ດຳເນີນການເປັນປົກກະຕິ ແລະ ເປັນການປະຕິບັດຕາມຂໍ້ກຳນົດທີ່ມອບໃນສັນຍາ WTO-TFA, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ການສະໜັບສະໜູນຂອງໂຄງການ ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດກິດຈະກຳນີ້. ເຖິງຢ່າງໃດກໍ່ຕາມ, ຕ້ອງມີການພັດທະນາຍຸດທະສາດທີ່ຍືນຍົງ ໂດຍກົມພາສີ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອສືບຕໍ່ດຳເນີນການສຶກສາ TRS ເປັນປົກກະຕິ ພາຍຫຼັງສິ້ນສຸດໂຄງການ.

[49] ໄດ້ສຳເລັດການເກັບກຳຂໍ້ມູນ ສຳລັບບົດສຶກສາ TRS ປີ 2022 ໃນເດືອນ ພະຈິກ 2022 ແລະ ອັບໂຫຼດເພື່ອການວິເຄາະຂໍ້ມູນ. ຜົນການສຶກສາ ຄາດວ່າຈະສຳເລັດໃນຕົ້ນປີ 2023.

### 2.7.7.4 ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບຜູ້ປະກອບການເອອີໂອ (ມາດຕາ 7.7)

ສັນຍາ WTO-TFA ຮຽກຮ້ອງປະເທດສະມາຊິກ ໃຫ້ສິ່ງອຳນວຍຄວາມສະດວກໃນການກວດປ່ອຍສິນຄ້າທີ່ວ່ອງໄວແບບງ່າຍດາຍ ສຳລັບຜູ້ປະກອບການທີ່ມີການຄວບຄຸມພາຍໃນທີ່ດີ, ການແກ້ໄຂທາງການເງິນ ແລະ ການຄໍ້າປະກັນຕ່ອງໂສ້ການສະໜອງ ຊຶ່ງເປັນຜູ້ທີ່ມີຄວາມສ່ຽງຕໍ່າທີ່ຈະປະຕິບັດບໍ່ຖືກຕ້ອງ. ກົດໝາຍພາສີສະບັບໃໝ່ ໄດ້ກຳນົດສິ່ງອຳນວຍຄວາມສະດວກດັ່ງກ່າວ ຢູ່ໝວດ 5, ພາກ II. ອີງຕາມຄຳແນະນຳຂອງກະຊວງການເງິນ ທີ່ວາງອອກໃນປີ 2021[50], ຜູ້ປະກອບການເອອີໂອ ມີສິດໄດ້ຮັບການອຳນວຍຄວາມສະດວກທາງດ້ານການຄ້າ ຫຼາຍຂຶ້ນ. ເຖິງຢ່າງໃດກໍ່ຕາມ, ຄຳແນະນຳດັ່ງກ່າວ ກຳນົດເງື່ອນໄຂເຂັ້ມງວດ ເພື່ອມີສິດໄດ້ຮັບສະຖານະຜູ້ປະກອບການເອອີໂອ. ສະນັ້ນ, ປະຈຸບັນ ຈຶ່ງຍັງບໍ່ທັນມີຜູ້ສະໝັກທີ່ມີເງື່ອນໄຂ ສຳລັບແຜນງານດັ່ງກ່າວ ເຖິງວ່າຈະມີການຈັດກອງປະຊຸມສຳມະນາ ແລະ ຝຶກອົບຮົມຫຼາຍຄັ້ງ ກໍ່ຕາມ. ເປັນທີ່ເຂົ້າໃຈວ່າມີ 1 ຜູ້ສະໝັກ ທີ່ຢູ່ໃນຂັ້ນຕອນການກະກຽມສະຖານທີ່ ເພື່ອປະຕິບັດໃຫ້ໄດ້ຕາມຄຳແນະນຳໃນການຢັ້ງຢືນຄວາມຖືກຕ້ອງ. ແຜນງານຜູ້ປະກອບການເອອີໂອ ຕ້ອງໄດ້ຮັບການທົບທວນຄືນສຳລັບລະບົບການປະຕິບັດຕາມ ແລະ ແຮງຈູງໃຈ ໃຫ້ເປັນແຕ່ລະລະດັບ ແລະ ການສ້າງຄວາມຮັບຮູ້ໃຫ້ຫຼາຍຂຶ້ນ ເພື່ອໃຫ້ເປັນທີ່ນິຍົມ. ນອກຈາກນີ້, ກໍ່ຕ້ອງສ້າງຄວາມເຂັ້ມແຂງວຽກງານການບໍລິຫານຄວາມສ່ຽງ ສຳລັບການປັບປຸງການຈັດການການຈັດຕັ້ງປະຕິບັດຕາມລະບຽບ ພາຍໃຕ້ແຜນງານຜູ້ປະກອບການເອອີໂອ. ໃນຂະນະທີ່ການສຳຫຼວດຂອງອົງການ OECD ແລະ ຄຳຄິດເຫັນຂອງພາກທຸລະກິດ ຖືວ່າເປັນການຈັດຕັ້ງປະຕິບັດທີ່ຈຳກັດ ແລະ ການນຳໃຊ້ບາງສ່ວນ, ສ່ວນການສຳຫຼວດຂອງອົງການສະຫະປະຊາຊາດ ລາຍງານວ່າ ແມ່ນຢູ່ໃນຂັ້ນຕອນການກະກຽມ ແລະ ສະນັ້ນ ຈຶ່ງວ່າມາດຕະການນີ້ ເປັນການຈັດຕັ້ງປະຕິບັດບາງສ່ວນ.

### 2.7.7.5 ການຮ່ວມມືຂອງໜ່ວຍງານທີ່ປະຈຳຢູ່ດ່ານ (ມາດຕາ 8)

ດັ່ງທີ່ກ່າວມາຂ້າງເທິງ, ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການປະສານສົມທົບກັນລະຫວ່າງຂະແໜງການ ໄດ້ຖືກລົງນາມລະຫວ່າງກົມພາສີ ແລະ ຂະແໜງການອື່ນທີ່ມີໜ່ວຍງານປະຈຳດ່ານ (ເຊັ່ນ: ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ) ໃນວັນທີ 13 ທັນວາ 2021 ຊຶ່ງກຳນົດແຜນງານດ້ານນິຕິກຳ ແລະ ການບໍລິຫານ ສຳລັບການຮ່ວມມືລະຫວ່າງຂະແໜງການ ເພື່ອອຳນວຍຄວາມສະດວກໃຫ້ແກ່ການກວດປ່ອຍສິນຄ້າຢູ່ດ່ານຊາຍແດນ. ຂັ້ນຕອນ SOP ລະອຽດ ກຳລັງໄດ້ຮັບການພັດທະນາ ຊຶ່ງຈະນຳມາສູ່ກົນໄກສຳລັບການກວດກາສິນຄ້າຢູ່ດ່ານຕາມຄວາມສ່ຽງ ແລະ ການກວດກາຮ່ວມກັນ ໂດຍນຳໃຊ້ລະບົບອັດຕະໂນມັດຂອງຂະແໜງພາສີ.

ການນຳໃຊ້ສິ່ງອຳນວຍຄວາມສະດວກຮ່ວມກັນ ແລະ ການກວດກາຈຸດດຽວ ຂອງໜ່ວຍງານທີ່ກ່ຽວຂ້ອງປະຈຳດ່ານ ທັງສອງປະເທດ ຢູ່ດ່ານຊາຍແດນລາວ-ຫວຽດນາມ ແດນສະຫວັນ-ລາວບາວ ໄດ້ຮັບການປະຕິບັດງານເປັນເວລາຫຼາຍປີ. ການຂະຫຍາຍໄປສູ່ດ່ານຊາຍແດນລາວ-ໄທ ຂອງແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ ມີຄວາມລ່າຊ້າ ເນື່ອງຈາກຝ່າຍໄທໃຊ້ເວລາໃນການປັບປຸງເນື້ອໃນທີ່ຈຳເປັນ ຢູ່ໃນກົດໝາຍ. ເຖິງຢ່າງໃດກໍ່ຕາມ, ຄວາມພະຍາຍາມເຫຼົ່ານີ້ ໄດ້ຮັບການຟື້ນຟູຄືນ ພາຍໃຕ້ຂໍ້ຄິດລິເລີ່ມໃນການຂອບການຮ່ວມມື ACMECS ຊຶ່ງຈະເກີດໝາກອອກຜົນໃນໄວໆນີ້. ການສຳຫຼວດທັງໝົດ 3 ສະບັບ ຖື

[50] ຄຳແນະນຳຂອງກະຊວງການເງິນ ໄດ້ວາງອອກໃນປີ 2021 ເພື່ອອຳນວຍຄວາມສະດວກໃຫ້ແກ່ແຜນງານຜູ້ປະກອບການເອອີໂອ ໄດ້ກຳນົດກົນໄກລະອຽດໃນການຄັດເລືອກ ແລະ ຮັບຮອງຜູ້ປະກອບການເອອີໂອ ອີງຕາມແຜນງານມາດຕະຖານ SAFE ຂອງອົງການພາສີໂລກ.

ວ່າມາດຕະການນີ້ເປັນການຈັດຕັ້ງປະຕິບັດບາງສ່ວນ ຫຼື ການນຳໃຊ້ໃນລະດັບປານກາງ ແລະ ເນື່ອງຈາກຍັງມີຫຼາຍໆຂໍ້ຄິດລິເລີ່ມທີ່ຍັງຢູ່ໃນຂັ້ນຕອນການດຳເນີນການ, ສະນັ້ນ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ ເທົ່ານັ້ນ.

### 2.7.7.6 ການທົບທວນຂໍ້ຮຽກຮ້ອງທາງດ້ານລະບຽບການ ແລະ ເອກະສານ (ມາດຕາ 10.1)

ຂໍ້ຮຽກຮ້ອງທາງດ້ານລະບຽບການ ແລະ ເອກະສານ ຂອງບັນດາຂະແໜງການທີ່ອອກລະບຽບການຄ້າຂ້າມແດນ ໄດ້ຮັບການທົບທວນຄືນໂດຍຜ່ານການປະເມີນ ແລະ ທົບທວນມາດຕະການ NTMs. ໃນ 5 ປີຜ່ານມາ, ມີມາດຕະການ NTMs ຈຳນວນ 107 ມາດຕະການ ໄດ້ຮັບການທົບທວນຄືນ ພ້ອມດ້ວຍຂໍ້ສະເໜີແນະໃນການຫຼຸດຜ່ອນຂໍ້ຮຽກຮ້ອງທາງດ້ານເອກະສານ ແລະ ການປັບປຸງຂັ້ນຕອນຕ່າງໆ. ໃນເດືອນກຸມພາ 2018, ທ່ານນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງ[51] ເພື່ອຊຸກຍູ້ໃຫ້ຂະແໜງການທີ່ກ່ຽວຂ້ອງ ທົບທວນຄືນຂໍ້ຮຽກຮ້ອງທາງດ້ານລະບຽບການ ແລະ ຂັ້ນຕອນທີ່ຕິດພັນກັບການອອກ LPCOs ແລະ ຫຼຸດຜ່ອນເວລາໃຫ້ໄດ້ຢ່າງໜ້ອຍ 50%. ຕໍ່ມາ, ການສຶກສາ TRS ປີ 2020 ຊຶ່ງໄດ້ວັດແທກເວລາໃນການອອກ LPCOs ຢູ່ 5 ຂະແໜງການ ແລະ ໄດ້ກຳນົດຂໍ້ສະເໜີແນະສະເພາະ ເພື່ອລຶບລ້າງຂັ້ນຕອນທີ່ຊໍ້າຊ້ອນກັນ ເພື່ອຫຼຸດຜ່ອນເວລາໃນການດຳເນີນການລົງ. ເຖິງວ່າການປະຕິບັດແມ່ນຂ້ອນຂ້າງຊ້າ, ແຕ່ຂະແໜງການທີ່ກ່ຽວຂ້ອງ ກຳລັງພິຈາລະນາຂໍ້ສະເໜີແນະເຫຼົ່ານີ້. ຂະແໜງການທີ່ກ່ຽວຂ້ອງ ຕ້ອງຈັດບູລິມະສິດ ແລະ ລະບຸວ່າພວກເຂົາມີແຜນຈະປັບປຸງອັນໃດໃນ 5-10 ປີຂ້າງໜ້າ. ຈຸດປະສົງເຫຼົ່ານີ້ ຕ້ອງໄດ້ຮັບການເຜີຍແຜ່ເພື່ອໃຫ້ການປະຕິບັດຂອງພວກເຂົາສາມາດເຫັນໄດ້ ເພື່ອວັດແທກຜົນປະທົບໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້. ຕົວຢ່າງ: ລະບຽບການ ຫຼື ມາດຕະການ NTMs ໃໝ່ ຕ້ອງໄດ້ຮັບການທົບທວນຄືນຢ່າງເອກະລາດ ເພື່ອປະເມີນວ່າຈະກາຍເປັນສິ່ງກີດຂວາງສຳລັບການອຳນວຍຄວາມສະດວກທາງດ້ານການຄ້າ ຫຼື ບໍ່ ຫຼື ຜົນປະໂຫຍດ ຈະມີຫຼາຍກວ່າການສູນເສຍ ຫຼື ບໍ່. ໃນຂະນະທີ່ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ສຶກສາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ແລະ ຄຳຄິດເຫັນຂອງພາກທຸລະກິດ ແມ່ນເປັນການຈັດຕັ້ງປະຕິບັດໃນລະດັບຕໍ່າ ແລະ ການນຳໃຊ້ໃນລະດັບປານກາງ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ບໍ່ພົບເຫັນມີການປັບປຸງຫຼາຍ ກ່ຽວກັບຂໍ້ຮຽກຮ້ອງດ້ານລະບຽບການ ແລະ ເອກະສານ. ສະນັ້ນ, ມາດຕະການນີ້ ຈຶ່ງຖືໄດ້ວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

### 2.7.7.7 ການຍອມຮັບເອກະສານປະກອບທີ່ເປັນສຳເນົາ (ມາດຕາ 10.2)

ໃນຂະນະທີ່ບໍ່ມີຂໍ້ກຳນົດສະເພາະໃນກົດໝາຍໃດໆ ກ່ຽວກັບວຽກງານດັ່ງກ່າວ, ໃນການຈັດຕັ້ງປະຕິບັດຕົວຈິງ ໜ່ວຍງານປະຈຳດ່ານ ແລະ ຂະແໜງການທີ່ກ່ຽວຂ້ອງ ຍອມຮັບເອກະສານສຳເນົາທີ່ໄດ້ຮັບການຮັບຮອງ ຖ້າເອກະສານຕົ້ນສະບັບ ໄດ້ຖືກຍື່ນຕໍ່ຂະແໜງການອື່ນທີ່ກ່ຽວຂ້ອງ ແລ້ວ. ບາງເອກະສານປະກອບ ເຊັ່ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບອະນຸຍາດນຳເຂົ້າ ແລະ ໃບຢັ້ງຢືນ SPS ຕ້ອງເປັນເອກະສານຕົ້ນສະບັບ ກ່ອນຈະໄດ້ຮັບການກວດປ່ອຍ. ເຖິງຢ່າງໃດກໍ່ຕາມ, ກົມເຕັກໂນໂລຊີ ແລະ ດີຈິຕອນຍອມຮັບເອກະສານພຽງເອກະສານສຳເນົາ ຖ້າເອກະສານຕົ້ນສະບັບ ໄດ້ຖືກສົ່ງພາຍໃນກະຊວງ ແຕ່ບໍ່ຮັບເອກະສານຢ່າງອື່ນ. ເມື່ອໃດທີ່ຍັງກ່ຽວຂ້ອງການນຳເຂົ້າຜ່ານລະບົບ LNSW, ແມ່ນບໍ່ຮຽກຮ້ອງເອກະສານສຳເນົາທີ່ໄດ້ອັບໂຫຼດລົງໃນລະບົບເປັນທີ່ຮຽບຮ້ອຍແລ້ວ ຫຼື ເອກະສານທີ່ອອກໂດຍລະບົບເອງ. ໃນຄວາມເປັນຈິງແລ້ວ ເມື່ອລາຍເຊັນທາງເອເລັກໂຕຼນິກໄດ້ຮັບການຈັດຕັ້ງປະຕິບັດ, ຜູ້ຄ້າສາມາດຍື່ນເອກະສານສຳເນົາທີ່ຖືກຮັບຮອງດ້ວຍຕົນເອງ ພ້ອມກັບລາຍເຊັນເອເລັກໂຕຼນິກ ແລະ ຕາປະທັບດິຈິຕອນ ຊຶ່ງອາດຊ່ວຍ

[51] ຄຳສັ່ງ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ໃຫ້ທິດຊີ້ນຳກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການທົບທວນຄືນ ແລະ ປັບປຸງຂັ້ນຕອນຕ່າງໆ ເພື່ອຫຼຸດຜ່ອນເວລາໃນການອອກອະນຸຍາດ, ອະນຸມັດ ແລະ ຢັ້ງຢືນ ທີ່ຮຽກຮ້ອງ ສຳລັບການຄ້າຂ້າມແດນ ລວມທັງການອຳນວຍຄວາມສະດວກຂັ້ນຕອນການໃນການກວດປ່ອຍສິນຄ້າຢູ່ດ່ານ.

ໃນການຍອມຮັບເອກະສານທີ່ເປັນສຳເນົາ. ໃນຂະນະການສຳຫຼວດທີ່ອົງການ OECD ແລະ ອົງການສະຫະປະຊາຊາດ ພົບວ່າມາດຕະການນີ້ ເປັນການຈັດຕັ້ງປະຕິບັດໃນລະດັບຕ່ຳ/ບາງສ່ວນ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ເຫັນວ່າເປັນການນຳໃຊ້ສ່ວນໃຫຍ່. ເມື່ອພິຈາລະນາວ່າລະບົບ LNSW ມີຂອບເຂດການນຳໃຊ້ທີ່ຈຳກັດ ແລະ ບໍ່ມີຂໍ້ກຳນົດທີ່ເປັນນິຕິກຳເພື່ອສະໜັບສະໜູນ, ຈຶ່ງຖືໄດ້ວ່າມາດຕະການນີ້ເປັນການຈັດຕັ້ງປະຕິບັດບາງສ່ວນ.

### 2.7.7.8 ການນຳໃຊ້ມາດຕະຖານສາກົນ (ມາດຕາ 10.3)

ສປປ ລາວ ໄດ້ເຂົ້າຮ່ວມສັນຍາສາກົນ ກ່ຽວກັບຄວາມກະທັດຮັດ ແລະ ຄວາມເປັນເອກະພາບຂອງຂັ້ນຕອນທາງພາສີ (ສັນຍາກຽວໂຕສະບັບປັບປຸງ ຫຼື ສັນຍາ RKC) ໃນປີ 2016. ກົດໝາຍພາສີ ໄດ້ຮັບການປັບປຸງໃນປີ 2020 ຊຶ່ງໄດ້ມີຂໍ້ກຳນົດທີ່ຈຳເປັນ ໂດຍສອດຄ່ອງກັບສັນຍາ RKC. ອີງຕາມບົດລາຍງານການຈັດຕັ້ງປະຕິບັດຕາມຂໍ້ກຳນົດທີ່ກົມພາສີ ໄດ້ສົ່ງໃຫ້ແກ່ບົດສຶກສາການວິໄຈຂອງອົງການພາສີໂລກ ຄັ້ງລ່າສຸດ, ກົດໝາຍພາສີ ໄດ້ຖືກອ້າງວ່າສອດຄ່ອງກັບຂໍ້ຮຽກຮ້ອງທີ່ວາງອອກ ພາຍໃຕ້ເອກະສານຊ້ອນທ້າຍທົ່ວໄປຂອງສັນຍາ RKC ເຖິງ 96%. ກົດໝາຍດັ່ງກ່າວ ຍັງໄດ້ຖືກປັບປຸງ ເພື່ອປະຕິບັດໃຫ້ສອດຄ່ອງກັບຂໍ້ຜູກມັດທີ່ນອນໃນສັນຍາ WTO-TFA. ຕົວຢ່າງ, ຂໍ້ກຳນົດ ກ່ຽວກັບການຢັ້ງຢືນຮັບຮອງລ່ວງໜ້າ ໄດ້ຖືກປັບປຸງໃຫ້ສອດຄ່ອງກັບມາດຕະຖານຂອງສັນຍາ WTO-TFA. ເຊັ່ນດຽວກັນ, ໄດ້ມີການເພີ່ມຂໍ້ກຳນົດພິເສດໃນດ້ານສິ່ງອຳນວຍຄວາມສະດວກດ້ານຂໍ້ມູນຂ່າວສານຂອງສິນຄ້າລ່ວງໜ້າ ແລະ ຜູ້ປະກອບເອອີໂອ ສຳລັບການປັບປຸງການຄວບຄຸມຂອງພາສີ ໂດຍສອດຄ່ອງກັບແຜນງານຄວາມປອດໄພຂອງມາດຕະຖານເພື່ອຮັບປະກັນ ແລະ ອຳນວຍຄວາມສະດວກທາງດ້ານການຄ້າໂລກ.

ພ້ອມດຽວກັນ, ກົມອາຫານ ແລະ ຢາ ໄດ້ປະຕິບັດຕາມມາດຕະຖານ ແລະ ຄຳແນະນຳທີ່ວາງອອກພາຍໃຕ້ຫຼັກການ Codex Alimentarius ຂອງອົງການອານາໂລກ ແລະ ອົງການອາຫານ ແລະ ກະສິກຳສຳລັບການກວດປ່ອຍສິນຄ້າປະເພດອາຫານ. ຄຽງຄູ່ກັນ, ກົມລ້ຽງສັດ ແລະ ການປະມົງ ໄດ້ນຳໃຊ້ຄຳແນະນຳ ທີ່ວາງອອກໂດຍອົງການໂລກເພື່ອສຸຂະພາບສັດ (WOHA/OIE) ໃນການກຳນົດລະບຽບການນຳເຂົ້າ ແລະ ສົ່ງອອກ ຜະລິດຕະພັນງົວຄວາຍ ແລະ ສັດປີກ. ເຊັ່ນດຽວກັນກັບ ກົມປູກຝັງ ກໍໄດ້ປະຕິບັດຕາມສັນຍາປ້ອງກັນພືດສາກົນ (IPPC) ໃນການສຸ່ມຕົວຢ່າງ ແລະ ກວດປ່ອຍແນວພັນພືດ ແລະ ຢາປາບສັດຕູພືດ ແລະ ອື່ນໆ. ໃນຂະນະທີ່ການສຳຫຼວດຂອງອົງການ OECD ກຳນົດມາດຕະການນີ້ເປັນການຈັດຕັ້ງປະຕິບັດໃນລະດັບຕ່ຳ, ແຕ່ມາດຕະການດັ່ງກ່າວ ບໍ່ໄດ້ຖືກສຶກສາໃນການສຳຫຼວດຂອງອົງການສະຫະປະຊາຊາດ ຫຼື ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ. ເຖິງຢ່າງໃດກໍ່ຕາມ, ເມື່ອພິຈາລະນາວ່າຂະແໜງພາສີ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນ ໄດ້ນຳເອົາມາດຕະຖານສາກົນເຂົ້າໃນກົດໝາຍ ແລະ ການຈັດຕັ້ງປະຕິບັດຕົວຈິງຂອງພວກເຂົາ ຢ່າງກວ້າງຂວາງ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

### 2.7.7.9 ຂັ້ນຕອນທົ່ວໄປ ກ່ຽວກັບດ່ານຊາຍແດນ ແລະ ຂໍ້ຮຽກຮ້ອງທາງດ້ານເອກະສານທີ່ເປັນເອກະພາບ (ມາດຕາ 10.7)

ປົກກະຕິແລ້ວ, ມີຫຼາຍຄຳແນະນຳ ແລະ ຄູ່ມື ທີ່ວາງອອກໂດຍບັນດາກະຊວງ ແລະ ຂະແໜງການ ສຳລັບການປະຕິບັດກົດໝາຍ ແລະ ຂັ້ນຕອນ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ. ບັນດາກົດໝາຍ, ດຳລັດ, ກົດລະບຽບ, ລະບຽບການ ແລະ ຂັ້ນຕອນ ແມ່ນຖືກເຜີຍແຜ່ລົງໃນເວັບໄຊທ໌ LTP ເພື່ອເປັນຂໍ້ມູນທາງໃຫ້ແກ່ຜູ້ຄ້າ ແລະ ເຈົ້າໜ້າທີ່ ເຊັ່ນກັນ ແລະ ຄາດວ່າຈະໄດ້ຮັບການປະຕິບັດເພື່ອຮັບປະກັນໃຫ້ເປັນຂັ້ນຕອນທົ່ວໄປ ກ່ຽວກັບດ່ານຊາຍແດນ. ເຖິງຢ່າງໃດກໍ່ຕາມ, ບາງຄັ້ງໄດ້ຮັບການຮ້ອງ

ຮຽນຈາກຜູ້ຄ້າ ກ່ຽວກັບການປິດເບືອນໃນກ່ຽວກັບຂັ້ນຕອນ ຫຼື ຂໍ້ຮຽກຮ້ອງທາງດ້ານເອກະສານເພີ່ມເຕີມ ສຳລັບການກວດປ່ອຍສິນຄ້າຢູ່ດ່ານຊາຍແດນບາງດ່ານ. ບັນຫາເຫຼົ່ານີ້ ໄດ້ຖືກຍົກຂຶ້ນໃນລະດັບຕ່າງໆຂອງ ຄະນະ NTFC. ໃນຄວາມເປັນຈິງແລ້ວ, ສ່ວນທີ່ສຳຄັນຂອງການປຶກສາຫາລື ໃນກອງປະຊຸມຄະນະກຳມະການ NTFC ກ່ຽວຂ້ອງກັບບັນຫາດັ່ງກ່າວ ຊຶ່ງໄດ້ອອກຄຳແນະນຳທີ່ຈຳເປັນເພື່ອແກ້ໄຂຂໍ້ຂັດແຍ່ງ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າ. ການສຳຫຼວດຂອງອົງການ OECD ແລະ ອົງການສະຫະປະຊາຊາດ ບໍ່ໄດ້ສຶກສາມາດຕະການດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ພົບວ່າເປັນການນຳໃຊ້ເປັນສ່ວນໃຫຍ່ ຊຶ່ງຍັງໄດ້ຮັບການຢືນຢັນຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ[52]. ດ້ວຍເຫດການນີ້, ມາດຕະການດັ່ງກ່າວ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

### 2.7.7.10 ຂໍ້ກຳນົດຂອງການສົ່ງຄືນສິນຄ້າທີ່ຖືກປະຕິເສດ (ມາດຕາ 10.8)

ອີງຕາມຄຳແນະນຳຂອງລັດຖະມົນຕີ ກ່ຽວກັບມາດຕາ 12 ຂອງກົດໝາຍພາສີ, ສິນຄ້າທີ່ເປັນອັນຕະລາຍ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ແມ່ນອະນຸຍາດໃຫ້ສົ່ງກັບຄືນປະເທດຜູ້ສົ່ງອອກ ຕາມສັນຍາບາເຊວ ກ່ຽວກັບການຄວບຄຸມການເຄື່ອນຍ້າຍຜ່ານແດນສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ການຈຳກັດ[53]. ກົມອາຫານ ແລະ ຢາ ຍັງອະນຸຍາດໃຫ້ມີການສົ່ງຄືນ ຫຼື ທຳລາຍ ສິນຄ້າ (ຕາມຄວາມຕ້ອງການຂອງຜູ້ນຳເຂົ້າ) ຖ້າພົບເຫັນວ່າບໍ່ປະຕິບັດຕາມມາດຕະຖານຂອງລາວ. ໃນມາດຕາ 29 ຂອງຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ-ສົ່ງອອກ ແລະ ສົ່ງຜ່ານອາຫານ ທີ່ອອກໂດຍລັດຖະມົນຕີກະຊວງສາທາລະນະສຸກ (ເລກທີ 1166 ປີ 2018) ໄດ້ອະນຸຍາດໃຫ້ມີການສົ່ງຄືນສິນຄ້າທີ່ຖືກປະຕິເສດ. ມີຫຼາຍຕົວຢ່າງ ເຊັ່ນ: ສິນຄ້າປະເພດເຄື່ອງດື່ມ, ນົມ ແລະ ເຄື່ອງສຳອາງ ແມ່ນອະນຸຍາດໃຫ້ສົ່ງກັບຄືນ ພາຍຫຼັງຖືກປະຕິເສດ ຖ້າພົບເຫັນວ່າບໍ່ປະຕິບັດຕາມກົດໝາຍ ຫຼື ມາດຕະຖານຂອງປະເທດ. ໃນຂະນະທີ່ການສຳຫຼວດຂອງອົງການສະຫະປະຊາຊາດ ບໍ່ໄດ້ສຶກສາມາດຕະການນີ້, ແຕ່ການສຳຫຼວດຂອງອົງການ OECD ພົບວ່າມີການຈັດຕັ້ງປະຕິບັດໃນລະດັບຕ່ຳ ແລະ ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ເປັນການນຳໃຊ້ບາງສ່ວນ. ວຽກງານເພີ່ມເຕີມ ກ່ຽວກັບການທົບທວນຄືນລະບຽບການຂອງຂະແໜງການອື່ນ ເຊັ່ນ: ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ແລະ ອື່ນໆ ເພື່ອປະຕິບັດຕາມມາດຕະຖານສາກົນ ແມ່ນກຳລັງໄດ້ຮັບການພິຈາລະນາ ດ້ວຍການສະໜັບສະໜູນຂອງຜູ້ໃຫ້ທຶນ. ໃນສະຖານະການນີ້, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດບາງສ່ວນ.

### 2.7.7.11 ການຮ່ວມມືທາງດ້ານພາສີ (ມາດຕາ 12)

ສປປ ລາວ ໄດ້ເຊັນສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ຫຼາຍສະບັບ ແລະ ບົດບັນທຶກຄວາມເຂົ້າໃຈ ກັບອົງການບໍລິຫານພາສີ ຂອງບັນດາປະເທດສະມາຊິກອາຊຽນ ພ້ອມທັງປະເທດທີ່ສຳຄັນໃນພາກພື້ນ. ສັນຍາເຫຼົ່ານີ້ ກຳນົດກົນໄກການຮ່ວມມື ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ແລະ ສະກັດກັ້ນການລັກລອບ ແລະ ການຄ້າຢາເສບຕິດ. ພະແນກຮ່ວມມືພາສີສາກົນ ໄດ້ຖືກແຕ່ງຕັ້ງເປັນຈຸດປະສານງານ ສຳລັບຈຸດປະສົງດັ່ງກ່າວ. ນອກຈາກນີ້, ຕາມການຮຽກຮ້ອງພາຍໃຕ້ຂໍ້ກຳນົດທີ່ມອບໃນສັນຍາ WTO-TFA, ມາດຕາ 118 ຂອງກົດໝາຍພາສີສະບັບປັບປຸງ ໄດ້ເພີ່ມຂໍ້ກຳນົດສະເພາະ ເພື່ອຄວາມປອດໄພຂອງສະຖິຕິ ແລະ ຂໍ້ມູນຂ່າວສານ ທີ່ສົ່ງໂດຍຜູ້ຄ້າ. ໃນຂະນະທີ່ການສຳຫຼວດຂອງອົງການ OECD ແລະ ຄຳຄິດເຫັນຂອງພາກທຸລະກິດ ຖືເປັນມາດຕະການທີ່ມີການຈັດຕັ້ງປະຕິບັດ/ການນຳໃຊ້ ທີ່ຈຳກັດ/ບາງສ່ວນ, ການສຳຫຼວດຂອງອົງການສະຫະປະຊາຊາດ ຖືວ່າເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ສະນັ້ນ, ມາດຕະການນີ້ ຈຶ່ງຖືວ່າເປັນການຈັດຕັ້ງປະຕິບັດສ່ວນໃຫຍ່.

---

[52] ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ໄດ້ຮ້ອງຮຽນກ່ຽວກັບການປ່ຽນແປງການເກັບຄ່າທຳນຽມ ຢູ່ບາງແຂວງ.

[53] ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ ເລກທີ 3269/ກງ, ລົງວັນທີ 26 ກໍລະກົດ 2021 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍພາສີ.

### 2.7.7.12 ຂໍ້ກຳນົດສຳລັບການຊຳລະທາງເອເລັກໂຕຼນິກ (ມາດຕາ 7.2)

ຂະແໜງພາສີ ໄດ້ອະນຸຍາໃຫ້ຊຳລະຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆແບບເອເລັກໂຕຼນິກ ຜ່ານບັດ Smart Tax ຢູ່ດ່ານຊາຍແດນສາກົນຈຳນວນ 26 ດ່ານ. ເຖິງຢ່າງໃດກໍ່ຕາມ, ການຊຳລະຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການອື່ນ ຍັງບໍ່ໄດ້ຖືກກວມເອົາໂດຍບັດ Smart Tax ແລະ ຊຳລະດ້ວຍເງິນສົດ. ສ່ວນດ່ານອື່ນທີ່ບໍ່ໄດ້ນຳໃຊ້ລະບົບ Smart Tax ແມ່ນສາມາດຊຳລະຄ່າພາສີ-ອາກອນ ໄດ້ຢູ່ເຄົາເຕີ້ຂອງທະນາຄານ BCEL ແລະ LDB ຊຶ່ງອະນຸຍາດໃຫ້ຊຳລະຜ່ານລະບົບ e-banking, ດ້ວຍແຊັກ ຫຼື ເງິນສົດ. ຄ່າທຳນຽມການດຳເນີນການຂອງຂະແໜງພາສີ ແລະ ຂະແໜງການອື່ນ ຢູ່ດ່ານເຫຼົ່ານີ້ ແມ່ນຊຳລະດ້ວຍເງິນສົດຢູ່ເຄົາເຕີ້ຂອງແຕ່ລະຂະແໜງການທີ່ກ່ຽວຂ້ອງ. ເຖິງຢ່າງໃດກໍ່ຕາມ, ລະບົບ LNSW ໃຫ້ສິ່ງອຳນວຍຄວາມສະດວກສຳລັບການຊຳລະຄ່າພາສີ-ອາກອນ ແບບເອເລັກໂຕຼນິກ ພ້ອມທັງການເກັບຄ່າທຳນຽມໃນການອອກອະນຸຍາດໂດຍກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຂົນສົ່ງ ສຳລັບເອກະສານທີ່ອອກອະນຸຍາດຜ່ານລະບົບ LNSW. ແຕ່ຄ່າທຳນຽມໃນການອອກອະນຸຍາດແບບເຈ້ຍຂອງສອງກົມນີ້ ຍັງຕ້ອງຊຳລະດ້ວຍເງິນສົດ. ນອກຈາກນີ້, ມາຮອດປະຈຸບັນ ລະບົບ LNSW ຍັງປະຕິບັດງານຢູ່ພຽງ 9 ດ່ານ ແລະ ເຂດເສດຖະກິດພິເສດ 3 ແຫ່ງ ເທົ່ານັ້ນ ຊຶ່ງຍັງບໍ່ທັນຂະຫຍາຍໄປສູ່ດ່ານອື່ນເປັນສ່ວນໃຫຍ່. ໃນຂະນະທີ່ການສຳຫຼວດຂອງອົງການ OECD ແລະ ອົງການສະຫະປະຊາຊາດ ພົບວ່າມາດຕະການດັ່ງກ່າວ ມີການຈັດຕັ້ງປະຕິບັດທີ່ຈຳກັດ ຫຼື ບາງສ່ວນ, ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ແມ່ນໄດ້ຖືກນຳໃຊ້ເປັນສ່ວນໃຫຍ່ ຊຶ່ງອາດເປັນການພິຈາລະນາທີ່ບໍ່ຖືກຕ້ອງສອດຄ່ອງກັບຄວາມເປັນຈິງ ເນື່ອງຈາກຫຼາຍຂະແໜງການ ຍັງເກັບຄ່າທຳນຽມເປັນເງິນສົດ ແລະ ສິ່ງອຳນວຍຄວາມສະດວກໃນການຊຳລະແບບເອເລັກໂຕຼນິກ ຍັງຈຳກັດ. ໃນເຫດການດັ່ງກ່າວ, ມາດຕະການນີ້ ຈຶ່ງຖືເປັນການຈັດຕັ້ງປະຕິບັດບາງສ່ວນ.

### 2.7.8 ການຢັ້ງຢືນຄວາມຖືກຕ້ອງໃນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C ຈາກພາກທຸລະກິດ

ການຢັ້ງຢືນຄວາມຖືກຕ້ອງຂອງມາດຕະການທີ່ນອນໃນໝວດ C ໄດ້ສຳເລັດໂດຍການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ຊຶ່ງສະຫຼຸບໄດ້ວ່າ ມີຫຼາຍກວ່າ 41% ຂອງມາດຕະການເຫຼົ່ານີ້ ໄດ້ຮັບການຈັດຕັ້ງປະຕິບັດສ່ວນໃຫຍ່ ຫຼື ຢ່າງເຕັມສ່ວນ ແລະ ສ່ວນທີ່ເຫຼືອ ແມ່ນໄດ້ຮັບການຈັດຕັ້ງປະຕິບັດໃນລະດັບປານກາງ ຫຼື ການນຳໃຊ້ບາງສ່ວນ. 5 ມາດຕະການທີ່ນອນໃນໝວດ C ຖືວ່າເປັນການນຳໃຊ້ໃນລະດັບປານກາງໃນການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ ລວມມີການຊຳລະແບບເອເລັກໂຕຼນິກ, ການບໍລິຫານຄວາມສ່ຽງ, ການຍອມຮັບເອກະສານສຳເນົາ, ຂັ້ນຕອນຢູ່ດ່ານຊາຍແດນທີ່ເປັນເອກະພາບ ແລະ ເສລີພາບໃນການຜ່ານແດນ. ເຖິງຢ່າງໃດກໍ່ຕາມ, ຄຳຄິດເຫັນຂອງພາກທຸລະກິດ ກ່ຽວກັບມາດຕະການທີ່ນອນໃນສັນຍາ WTO-TFA ແມ່ນອີງໃສ່ຄວາມຮັບຮູ້ ແລະ ການນຳໃຊ້ຂອງພວກເຂົາເປັນສ່ວນໃຫຍ່ຕໍ່ກັບມາດຕະການນັ້ນໆ ແລະ ເປັນສາເຫດໃຫ້ມາດຕະການຕ່າງໆ ເຊັ່ນ: ການຊຳລະສະສາງທາງເອເລັກໂຕຼນິກ ຫຼື ການບໍລິຫານຄວາມສ່ຽງ ທີ່ຍັງເປັນການຈັດຕັ້ງປະຕິບັດບາງສ່ວນ ແຕ່ຕາມຄຳຄິດເຫັນຂອງພວກເຂົາ ໄດ້ນຳໃຊ້ເປັນສ່ວນໃຫຍ່ ເນື່ອງຈາກພວກເຂົາສາມາດຊຳລະພາສີຜ່ານບັດ Smart Tax ແລະ ມີອັດຕາສ່ວນຂອງສິນຄ້າຈຳນວນໜຶ່ງທີ່ໄດ້ຮັບການກວດປ່ອຍຜ່ານຊ່ອງສີຂຽວ. ໃນທາງກົງກັນຂ້າມ, ບາງມາດຕະການອື່ນ ເຊັ່ນ: ການສຶກສາ TRS ຫຼື ການຮ່ວມມືຂອງຂະແໜງພາສີ ຊຶ່ງໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ/ສ່ວນໃຫຍ່ ແຕ່ຕາມຄຳຄິດເຫັນຂອງພາກທຸລະກິດ ແມ່ນຖືກນຳໃຊ້ໃນລະດັບກາງ ເນື່ອງຈາກພວກເຂົາ ອາດຍັງບໍ່ໄດ້ຮັບຜົນກະທົບໂດຍກົງ ແລະ ຂາດຄວາມຮັບຮູ້ ກ່ຽວກັບມາດຕະການເຫຼົ່ານີ້. ສະນັ້ນ, ຈຶ່ງມີຄວາມສຳຄັນວ່າຈະຮັບປະກັນໃຫ້ພາກທຸລະກິດມີສ່ວນຮ່ວມ ສຳລັບການນຳໃຊ້ປະໂຫຍດຈາກຂໍ້ຄິດລິເລີ່ມໃນການປະຕິຮູບໃດໆ.

### 2.7.9 ສະຫຼຸບການຕີລາຄາການປະເມີນການຈັດຕັ້ງປະຕິບັດສັນຍາ WTO-TFA

ສະຫຼຸບການປະເມີນສຸດທ້າຍຂອງການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ໂດຍສົມທຽບກັບຜົນການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ຢູ່ຂ້າງລຸ່ມນີ້ ເພື່ອການອ້າງອີງຢ່າງໄວວາ:

| ລ/ດ | ມາດຕະການ | ໝວດ | ການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ (2021) | ການປະເມີນແຜນດໍາເນີນງານ TFRM | ສົມທຽບ | ຄໍາເຫັນກ່ຽວກັບຄວາມແຕກຕ່າງ |
|---|---|---|---|---|---|---|
| 1 | ມາດຕາ 1.1 ການເຜີຍແຜ່ | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ສອດຄ່ອງກັນ | |
| 2 | ມາດຕາ 1.2 ຂໍ້ມູນຂ່າວສານຜ່ານອິນເຕີເນັດ (LTP) | A | ຖືກນໍາໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ບໍ່ສອດຄ່ອງກັນ | ເວັບໄຊທ໌ LTP ມີຂໍ້ມູນທຸກຢ່າງທີ່ກ່ຽວຂ້ອງ. ການຕີລາຄາຂອງແຜນດໍາເນີນງານ TFRM ຍັງໄດ້ຮັບການສະໜູນໂດຍການສໍາຫຼວດອື່ນ |
| 3 | ມາດຕາ 1.3 ຈຸດສອບຖາມ (SPS ແລະ TBT) | A | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 4 | ມາດຕາ 1.4 ແຈ້ງການຕໍ່ອົງການ WTO | A | ບໍ່ມີຂໍ້ມູນ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ບໍ່ມີຂໍ້ມູນ | |
| 5 | ມາດຕາ 4 ຂັ້ນຕອນການອຸທອນ ຫຼື ການທົບທວນຄືນ | A | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 6 | ມາດຕາ 5.1 ແຈ້ງການສໍາລັບການເພີ່ມທະວີການຄວບຄຸມ ຫຼື ການກວດກາ | A | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 7 | ມາດຕາ 5.2 ການກັກກັນ | A | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 8 | ມາດຕາ 6.2 ລະບຽບສະເພາະກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການຂອງພາສີ | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ສອດຄ່ອງກັນ | |
| 9 | ມາດຕາ 7.1 ການດໍາເນີນການກ່ອນສິນຄ້າມາຮອດດ່ານ | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດບາງສ່ວນ | ບໍ່ສອດຄ່ອງກັນ | ໃນຂະນະທີ່ມີຂໍ້ກໍານົດສໍາລັບການຍື່ນເອກະສານລ່ວງໜ້າ, ແຕ່ການດໍາເນີນການກ່ອນສິນຄ້າມາຮອດດ່ານ ແມ່ນບໍ່ໄດ້ຮັບອະນຸຍາດ |
| 10 | ມາດຕາ 9 ການເຄື່ອນຍ້າຍສິນຄ້າທີ່ ມີຈຸດປະສົງນໍາເຂົ້າ ພາຍໃຕ້ການຄວບຄຸມຂອງພາສີ | A | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 11 | ມາດຕາ 10.5 ການກວດກາກ່ອນການຂົນສົ່ງ (ບໍ່ມີການກວດກາກ່ອນການຂົນສົ່ງ) | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ສອດຄ່ອງກັນ | |
| 12 | ມາດຕາ 10.6 ການນໍາໃຊ້ນາຍໜ້າພາສີ (ບໍ່ໄດ້ບັງຄັບການນໍາໃຊ້ນາຍໜ້າພາສີ) | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ສອດຄ່ອງກັນ | |
| 13 | ມາດຕາ 10.9 ການອະນຸຍາດຊົ່ວຄາວຂອງສິນຄ້າ ສໍາລັບການປຸງແຕ່ງສົ່ງເຂົ້າ ຫຼື ສົ່ງອອກ | A | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ສອດຄ່ອງກັນ | |

| ລ/ດ | ມາດຕະການ | ໝວດ | ການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ (2021) | ການປະເມີນແຜນດໍາເນີນງານ TFRM | ສົມທຽບ | ຄໍາເຫັນກ່ຽວກັບຄວາມແຕກຕ່າງ |
|---|---|---|---|---|---|---|
| 14 | ມາດຕາ 2.1 ໂອກາດໃນການປະກອບຄໍາເຫັນ ແລະ ຂໍ້ມູນກ່ອນການບັງຄັບໃຊ້ | B | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 15 | ມາດຕາ 2.2 ການປຶກສາຫາລືກັບ ຜູ້ຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ | B | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດບາງສ່ວນ | ບໍ່ສອດຄ່ອງກັນ | ຜົນການສໍາຫຼວດຄໍາຄິດເຫັນຂອງພາກທຸລະກິດ ພົບວ່າເປັນການຈັດຕັ້ງປະຕິບັດເປັນສ່ວນໃຫຍ່ ແຕ່ບໍ່ໄດ້ຮັບການຢືນຢັນຈາກສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ. ການຕີລາຄາຂອງແຜນດໍາເນີນງານ TRFM ໄດ້ຮັບການສະໜັບສະໜູນໂດຍການສໍາຫຼວດຂອງອົງການ OECD. |
| 16 | ມາດຕາ 6.1 ລະບຽບທົ່ວໄປ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ | B | ຖືກນໍາໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ບໍ່ສອດຄ່ອງກັນ | ຄ່າທໍານຽມ ແລະ ຄ່າບໍລິການໄດ້ຖືກເຜີຍແຜ່ຢ່າງກວ້າງຂວາງ ແລະ ໄດ້ຮັບການທົບທວນຄືນເປັນແຕ່ລະໄລຍະ ໃຫ້ສອດຄ່ອງກັບຂໍ້ກໍານົດທີ່ນອນໃນສົນຍາ WTO-TFA. |
| 17 | ມາດຕາ 6.3 ລະບຽບການປັບໃໝ (ລະດັບການປະຕິບັດຕາມລະບຽບທົ່ວໄປຂອງລັດຖະບານ) | B | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ສອດຄ່ອງກັນ | |
| 18 | ມາດຕາ 7.3 ການແຍກການປ່ອຍສິນຄ້າອອກຈາກການກໍານົດສຸດທ້າຍ ກ່ຽວກັບ ພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ | B | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ບໍ່ສອດຄ່ອງກັນ | ມີສິ່ງອໍານວຍຄວາມສະດວກໃນການປ່ອຍສິນຄ້າຕາມຂໍ້ກໍານົດ ແລະ ໄດ້ຖືກນໍາໃຊ້. ຕ້ອງສ້າງຄວາມຮັບຮູ້. |
| 19 | ມາດຕາ 7.9 ສິນຄ້າເນົ່າເປື່ອຍງ່າຍ | B | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ສອດຄ່ອງກັນ | |
| 20 | ມາດຕາ 3 ການຢັ້ງຢືນຮັບຮອງລ່ວງໜ້າ | B | ຖືກນໍາໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ບໍ່ສອດຄ່ອງກັນ | ມີສິ່ງອໍານວຍຄວາມສະດວກໃນການຢັ້ງຢືນຮັບຮອງລ່ວງໜ້າ ແຕ່ບໍ່ໄດ້ນໍາໃຊ້ຫຼາຍ. ຕ້ອງໄດ້ສ້າງຄວາມຮັບຮູ້. |
| 21 | ມາດຕາ 5.3 ຂັ້ນຕອນການທົດສອບ | B | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 22 | ມາດຕາ 7.8 ການຈັດສົ່ງດ່ວນ | B | ຖືກນໍາໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 23 | ມາດຕາ 10.4 ລະບົບແຈ້ງພາສີປະຕູດຽວ | B | ຖືກນໍາໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 24 | ມາດຕາ 11 ເສລີພາບໃນການຜ່ານແດນ | B | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ສອດຄ່ອງກັນ | |
| 25 | ມາດຕາ 7.4 ການບໍລິຫານຄວາມສ່ຽງ | C | ຖືກນໍາໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດບາງສ່ວນ | ບໍ່ສອດຄ່ອງກັນ | ບໍ່ມີຂະແໜງການໃດ ຍົກເວັ້ນຂະແໜງພາສີ ທີ່ໄດ້ກວດກາສິນຄ້າຢູ່ດ່ານຊາຍແດນ ຕາມຄວາມສ່ຽງ. |

| ລ/ດ | ມາດຕະການ | ໝວດ | ການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ (2021) | ການປະເມີນແຜນດຳເນີນງານ TFRM | ສົມທຽບ | ຄຳເຫັນກ່ຽວກັບຄວາມແຕກຕ່າງ |
|---|---|---|---|---|---|---|
| 26 | ມາດຕາ 7.5 ການກວດສອບຄືນຫຼັງການກວດປ່ອຍ | C | ຖືກນຳໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 27 | ມາດຕາ 7.6 ການດຳເນີນ ແລະ ເຜີຍແຜ່ເວລາກວດປ່ອຍສິນຄ້າສະເລ່ຍ | C | ຖືກນຳໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດຢ່າງເຕັມສ່ວນ | ບໍ່ສອດຄ່ອງກັນ | ໄດ້ມີການດຳເນີນການສຶກສາ TRS ເປັນແຕ່ລະໄລຍະ, ແຕ່ຜົນການສຶກສາ ຍັງບໍ່ໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງໃນໄລຍະຜ່ານມາ. ຕ້ອງໄດ້ມີການເຜີຍແຜ່. |
| 28 | ມາດຕາ 7.7 ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າສຳລັບຜູ້ປະກອບເອອີໂອ | C | ຖືກນຳໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 29 | ມາດຕາ 8 ການຮ່ວມມືຂອງຂະແໜງການທີ່ປະຈຳຢູ່ດ່ານຊາຍແດນ | C | ຖືກນຳໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 30 | ມາດຕາ 10.1 ຂໍ້ຮຽກຮ້ອງດ້ານລະບຽບການ ແລະ ເອກະສານ | C | ຖືກນຳໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 31 | ມາດຕາ 10.2 ການຍອມຮັບເອກະສານສຳເນົາ | C | ຖືກນຳໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 32 | ມາດຕາ 10.3 ການນຳໃຊ້ມາດຕະຖານສາກົນ | C | ບໍ່ມີຂໍ້ມູນ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ບໍ່ມີຂໍ້ມູນ | |
| 33 | ມາດຕາ 10.7 ຂັ້ນຕອນທົ່ວໄປກ່ຽວກັບດ່ານຊາຍແດນ ແລະ ຂໍ້ຮຽກຮ້ອງທາງດ້ານເອກະສານທີ່ເປັນເອກະພາບ | C | ຖືກນຳໃຊ້ສ່ວນໃຫຍ່ | ຖືກນຳໃຊ້ສ່ວນໃຫຍ່ | ສອດຄ່ອງກັນ | |
| 34 | ມາດຕາ 10.8 ສິນຄ້າທີ່ຖືກປະຕິເສດ | C | ຖືກນຳໃຊ້ບາງສ່ວນ | ຈັດຕັ້ງປະຕິບັດບາງສ່ວນ | ສອດຄ່ອງກັນ | |
| 35 | ມາດຕາ 12 ການຮ່ວມມືຂອງພາສີ (ການປະສານງານ) | C | ຖືກນຳໃຊ້ໃນລະດັບກາງ | ຈັດຕັ້ງປະຕິບັດສ່ວນໃຫຍ່ | ບໍ່ສອດຄ່ອງກັນ | ເບິ່ງຄືວ່າຜູ້ຄ້າບໍ່ຮັບຮູ້ ກ່ຽວກັບການຄວາມຮ່ວມມືພາສີ ກັບປະເທດອື່ນ. ຕ້ອງໄດ້ເຜີຍແຜ່ວຽກງານດັ່ງກ່າວ ໂດຍສະເພາະສັນຍາສອງຝ່າຍ. |
| 36 | ມາດຕາ 7.2 ການຊຳລະແບບເອເລັກໂຕຼນິກ | C | ຖືກນຳໃຊ້ສ່ວນໃຫຍ່ | ຈັດຕັ້ງປະຕິບັດບາງສ່ວນ | ບໍ່ສອດຄ່ອງກັນ | ການຕີລາຄາຂອງແຜນດຳເນີນງານ TFRM ໄດ້ຮັບການສະໜັບສະໜູນໂດຍການສຳຫຼວດອື່ນໆ. ຂະແໜງການອື່ນ ຍັງເປັນຄ່າທຳນຽມຂອງພວກເຂົາດ້ວຍເງິນສົດ. |

**ຕາຕະລາງທີ 2- ການຕີລາຄາການປະເມີນການຈັດຕັ້ງປະຕິບັດສັນຍາ WTO-TFA ສົມທຽບກັບຜົນການສຳຫຼວດຄຳຄິດເຫັນຂອງພາກທຸລະກິດ**

ວຽກງານການປະເມີນນີ້ ທີ່ໄດ້ກວດສອບທັງຂອບເຂດຂອງຄວາມພະຍາຍາມທີ່ປະຕິບັດໄດ້ ແລະ ຜົນກະທົບຂອງບັນດາຂໍ້ຄິດລິເລີ່ມ ທີ່ໄດ້ຖືກດຳເນີນການ ໄດ້ເປີດເຜີຍວ່າ: ແຜນດຳເນີນງານ TFRM ໄດ້ປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດ 17 ຈາກ 36 ມາດຕະການທີ່ນອນໃນສັນຍາ WTO-TFA. ຕົວຢ່າງ 47% ຂອງມາດຕະການ

ທັງໝົດ ເປັນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ/ເປັນສ່ວນໃຫຍ່ ຊຶ່ງປະກອບມີ 7 ມາດຕະການທີ່ນອນໃນໝວດ A, 6 ມາດຕະການທີ່ນອນໃນໝວດ B, ແລະ 4 ມາດຕະການທີ່ນອນໃນໝວດ C. ອີກ 19 ມາດຕະການທີ່ຍັງເຫຼືອ ແມ່ນການຈັດຕັ້ງປະຕິບັດບາງສ່ວນ ຊຶ່ງຢູ່ຫຼາຍລະດັບຂອງການຈັດຕັ້ງປະຕິບັດ. ໃນນີ້, ບາງມາດຕະການຕ້ອງໄດ້ຮັບການຈັດຕັ້ງໃນໄວໆນີ້ ຖ້າມີການປະຕິບັດທີ່ຈຳເປັນຮ່ວມກັນ ພ້ອມທັງການຕິດຕາມຢ່າງໃກ້ຊິດ.

ສະຫຼຸບການປະເມີນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ໄດ້ສ້າງຂຶ້ນຂ້າງລຸ່ມນີ້ ເພື່ອການສະຫຼຸບຫຍໍ້:

| **ການຕີລາຄາການປະເມີນຕາມໝວດ** | | | ການຈັດຕັ້ງປະຕິບັດເຕັມສ່ວນ | ການຈັດຕັ້ງປະຕິບັດສ່ວນໃຫຍ່ | ການຈັດຕັ້ງປະຕິບັດບາງສ່ວນ |
|---|---|---|---|---|---|
| ໝວດ A | 13 | | 7 | 0 | 6 |
| ໝວດ B | 11 | | 3 | 3 | 5 |
| ໝວດ C | 12 | | 1 | 3 | 8 |
| **ຈຳນວນທັງໝົດ** | **36** | | **11** | **6** | **19** |
| **ອັດຕາສ່ວນ** | | | **30.6%** | **16.7%** | **52.8%** |

**ຕາຕະລາງ 3- ການຕີລາຄາການປະເມີນມາດຕະການທີ່ນອນໃນສັນຍາ WTO-TFA ຕາມໝວດ**

## 3. ຜົນກະທົບ ແລະ ຜົນໄດ້ຮັບ

ຜົນສໍາເລັດທີ່ຍິ່ງໃຫຍ່ທີ່ສຸດຂອງແຜນດໍາເນີນງານ ແມ່ນການບັນລຸຕາມເປົ້າໝາຍຂອງຜົນໄດ້ຮັບ. ຄໍາຊີ້ແຈງກ່ຽວກັບວິໄສທັດໄດ້ຖືກກໍານົດວ່າ ຈຸດສຸມຂອງແຜນດໍາເນີນງານ ແມ່ນການປັບປຸງຄວາມອາດສາມາດໃນການແຂ່ງ ແລະ ການຄ້າ ຂອງ ສປປ ລາວ ໂດຍການຫຼຸດຜ່ອນເວລາທາງດ້ານການຄ້າ (ໃຫ້ໄດ້ 50%) ແລະ ຄ່າໃຊ້ຈ່າຍ (ໃຫ້ໄດ້ 30%) ພາຍໃນປີ 2022. ເພື່ອເຮັດໃຫ້ໄດ້ແນວນັ້ນ, ຈຶ່ງມີຈຸດປະສົງເພື່ອຍົກຄະແນນຂອງປະເທດ ກ່ຽວກັບຕົວຊີ້ວັດການຄ້າຂ້າມແດນຂອງທະນາຄານໂລກ ໃຫ້ເປັນສອງຕົວເລກ ຈາກອັນດັບທີ 124 ມາເປັນອັນດັບທີ່ຕໍ່າກວ່າ ອັນທີ 100 ຫຼື ຫຼາຍກວ່ານັ້ນ (ຕາຕະລາງຂ້າງລຸ່ມ).

ແຜນດໍາເນີນງານ ແມ່ນປະສົບຜົນສໍາເລັດຢ່າງມະຫັດສະຈັນ ໃນການຫຼຸດຜ່ອນເວລາທາງດ້ານການຄ້າໄດ້ 1/3. ຕົວຢ່າງ ຫຼາຍເຖິງ 72% ຊຶ່ງກ່ຽວຂ້ອງກັບການຫຼຸດຜ່ອນເວລາໃນຂັ້ນຕອນການສົ່ງອອກ ຈາກ 226 ຊົ່ວໂມງ ມາເປັນ 69 ຊົ່ວໂມງ ແລະ ການນໍາເຂົ້າ ຈາກ 228 ຊົ່ວໂມງ ມາເປັນ 71 ຊົ່ວໂມງ. ເຮັດໃຫ້ອັນດັບຂອງ ສປປ ລາວ ຫຍັບຂຶ້ນຈາກອັນດັບ 124 ມາເປັນ 78 ໃນການຈັດອັນດັບຂອງໂລກ ກ່ຽວກັບຕົວຊີ້ວັດການຄ້າຂ້າມແດນ ຂອງບົດລາຍງານຂອງທະນາຄານໂລກ ກ່ຽວກັບຄວາມສະດວກໃນການດໍາເນີນທຸລະກິດ ໃນປີ 2020[54].

ເວລາໃນການດໍາເນີນການ ທີ່ຖືເປັນການໃຫ້ຄະແນນຕົວຊີ້ວັດການຄ້າຂ້າມແດນ ປະກອບມີສອງອົງປະກອບ ຄື: ໜຶ່ງ ຕິດພັນກັບເວລາໃນການປະຕິບັດທາງດ້ານເອກະສານ ແລະ ອີກໜຶ່ງອັນໜຶ່ງແມ່ນການກວດປ່ອຍສິນຄ້າຢູ່ດ່ານ. ການປະຕິບັດທາງດ້ານເອກະສານ ແມ່ນອີງໃສ່ການກະກຽມເອກະສານ LPCOs ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ. ອີກຢ່າງໜຶ່ງ, ການກວດປ່ອຍສິນຄ້າ ຕິດພັນກັບການກວດປ່ອຍສິນຄ້ານໍາເຂົ້າ ຫຼື ສົ່ງອອກ ຂອງຂະແໜງພາສີ ແລະ ຂະແໜງການອື່ນທີ່ປະຈໍາຢູ່ດ່ານຊາຍແດນ.

ຄະແນນຕົວຊີ້ວັດການຄ້າຂ້າມແດນຂອງ ສປປ ລາວ ທີ່ກະໂດດສູງຂຶ້ນຢ່າງໜ້າປະຫຼາດໃຈ ສ່ວນໃຫຍ່ເປັນຜົນມາຈາກການຫຼຸດເວລາຫຼວງຫຼາຍໃນການປະຕິບັດທາງດ້ານເອກະສານ ຈາກ 216 ຊົ່ວໂມງ ມາເປັນ 60 ຊົ່ວໂມງ[55]. ນີ້ແມ່ນຜົນຂອງການພະຍາຍາມຮ່ວມກັນໃນການປັບປຸງຂັ້ນຕອນການອອກ LPCOs ຂອງຂະແໜງການທີ່ກ່ຽວຂ້ອງໂດຍສະເພາະກົມການນໍາເຂົ້າ ແລະ ສົ່ງອອກ, ກົມຂົນສົ່ງ ແລະ ກົມຄຸ້ມຄອງບໍ່ແຮ່. ຕົວຢ່າງ: ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ລົບລ້າງໃບອະນຸຍາດນໍາເຂົ້າຊິ້ນສ່ວນຍານພາຫະນະ ແລະ ປັບປຸງ ຂັ້ນຕອນການອອກອະນຸຍາດນໍາເຂົ້າຍານພາຫະນະ ແລະ ນໍ້າມັນເຊື້ອໄຟ ໂດຍນໍາໃຊ້ລະບົບ LNSW[56]. ເຊັ່ນດຽວກັນ, ກົມຄຸ້ມຄອງ ໄດ້ປັບປຸງຂັ້ນຕອນການອະນຸມັດການສົ່ງອອກແຮ່ທາດ. ຄວາມພະຍາຍາມຂອງຂະແໜງພາສີ ແລະ ຂະແໜງການອື່ນທີ່ປະຈໍາຢູ່ດ່ານ ໄດ້ສົ່ງຜົນໃຫ້ສາມາດຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້າ ເຊັ່ນດຽວກັນ ຊຶ່ງຫຼຸດລົງຈາກ 12 ຊົ່ວໂມງ ມາເປັນ 9 ຊົ່ວໂມງ ສໍາລັບການສົ່ງອອກ ແລະ 14 ຊົ່ວໂມງ ມາເປັນ 11 ຊົ່ວໂມງ ສໍາລັບການນໍາເຂົ້າ. ພ້ອມດຽວກັນ, ເພື່ອພັນຂະຫຍາຍຄວາມພະຍາຍາມທີ່ກ່າວມາຂ້າງເທິງ, ໄດ້ມີການຈັດກອງປະຊຸມສໍາມະນາເພື່ອສ້າງຂີດຄວາມສາມາດ ໃຫ້ແກ່ຜູ້ຄ້າ ແລະ ນາຍໜ້າພາສີ ໃຫ້ຮັບຮູ້ ກ່ຽວກັບບັນດາຂໍ້ຄິດລິເລີ່ມການອໍານວຍຄວາມສະດວກທາງດ້ານການຄ້າ

54 ອີງຕາມການສໍາຫຼວດການດໍາເນີນທຸລະກິດ ທີ່ໄດ້ສຶກສາ 190 ປະເທດໃນໂລກໃນປີ 2019.

55 ເວລາໃນການກວດປ່ອຍສິນຄ້າ ກໍຫຼຸດລົງຈາກ 12 ຊົ່ວໂມງ ມາເປັນ 9 ຊົ່ວໂມງ ສໍາລັບການສົ່ງອອກ ແລະ 14 ຊົ່ວໂມງ ມາເປັນ 11 ຊົ່ວໂມງ ສໍາລັບການນໍາເຂົ້າ.

56 ໃບອະນຸຍາດນໍາເຂົ້າຊິ້ນສ່ວນຍານພາຫະນະ ໄດ້ຖືກລົບລ້າງໂດຍຄໍາສັ່ງຂອງລັດຖະມົນຕີ ເລກທີ 0536/ອຄ.ກຂອ, ລົງວັນທີ 10 ເມສາ 2018.

ເພື່ອໃຫ້ພວກເຂົາສາມາດຕອບແບບສອບຖາມການສຳຫຼວດຕົວຊີ້ວັດການຄ້າຂ້າມແດນ ຢ່າງຖືກຕ້ອງ ຖ້າພວກເຂົາໄດ້ຖືກຄັດເລືອກສຳລັບການສຶກສາຄວາມສະດວກໃນການດຳເນີນທຸລະກິດ.

ມີຫຼາຍຂະແໜງການທີ່ໄດ້ຮັບການກະຕຸກຊຸກຍູ້ໃນການຈັດຕັ້ງປະຕິບັດໂດຍກົມການນຳເຂົ້າ ແລະ ສົ່ງອອກ ພາຍຫຼັງນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງ (ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018) ໂດຍການຊຸກຍູ້ໃຫ້ທຸກຂະແໜງການລັດທີ່ກ່ຽວຂ້ອງ ປັບປຸງຂັ້ນຕອນທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກ ເພື່ອຫຼຸດຜ່ອນເວລາໃຫ້ໄດ້ເຄິ່ງໜຶ່ງ ແລະ ຄ່າໃຊ້ຈ່າຍໃຫ້ໄດ້ 30%. ນີ້ເປັນຜົນເຮັດໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຍົກລະດັບວາລະການອຳນວຍຄວາມສະດວກທາງດ້ານການຄ້າໄປສູ່ຂັ້ນນາຍົກລັດຖະມົນຕີ ເພື່ອຂໍການພິຈາລະນາອອກຄຳສັ່ງດັ່ງກ່າວ ຕາມທີ່ໄດ້ກຳນົດເປົ້າໝາຍຢູ່ໃນແຜນດຳເນີນງານ ເພື່ອການຈັດຕັ້ງປະຕິບັດຂອງທຸກຂະແໜງການ ແລະ ໂດຍສະເພາະ ໄດ້ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການນຳພາວຽກງານດັ່ງກ່າວ. ໄດ້ມີການຈັດກອງປະຊຸມສຳມະນາບໍ່ພຽງແຕ່ສຳລັບຂະແໜງການທີ່ກ່ຽວຂ້ອງເທົ່ານັ້ນ, ແຕ່ຍັງສຳລັບພາກທຸລະກິດ ເພື່ອແຈ້ງກ່ຽວກັບຂະບວນການຂອງລັດຖະບານ ດ້ວຍຄວາມມຸ່ງໝັ້ນທີ່ຈະເຮັດໃຫ້ຂັ້ນຕອນທີ່ຕິດພັນກັບການຄ້າຂ້າມແດນ ວ່ອງໄວຂຶ້ນ. ອີງຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ, ທີມງານຂອງກົມການນຳເຂົ້າ ແລະ ສົ່ງອອກ ໄດ້ເຂົ້າພົບບາງຂະແໜງການທີ່ສຳຄັນ ເຊັ່ນ: ກົມຂົນສົ່ງ, ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ກົມຄຸ້ມຄອງບໍ່ແຮ່ ເພື່ອສຶກສາແຜນວາດຂັ້ນຕອນຂອງພວກເຂົາ, ລະບຸສິ່ງອຸດຕັນ ແລະ ຊ່ວຍພວກເຂົາລົບລ້າງສິ່ງອຸດຕັນ ໂດຍສະເພາະບັນຫາທີ່ແກ້ໄຂບັນຫາໄດ້ໄວ ໂດຍບໍ່ຈຳເປັນຕ້ອງໃຊ້ເວລາໃນການແກ້ໄຂຫຼາຍ. ສຳລັບແຜນໄລຍະຍາວ, ແມ່ນເນັ້ນໃສ່ການທົບທວນຄືນມາດຕະການ NTMs ແລະ ການປະຕິບັດຕາມຂໍ້ສະເໜີແນະ. ດັ່ງທີ່ໄດ້ກ່າວມາຂ້າງເທິງ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ລົບລ້າງບາງມາດຕະການ NTMs ທີ່ສຳຄັນ ເຊັ່ນ: ການອອກອະນຸຍາດນຳເຂົ້າຊີມັງ ແລະ ເຫຼັກ ໃນເດືອນ ກັນຍາ 2018 ແລະ ຕໍ່ມາໄດ້ລົບລ້າງໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະທີ່ມາຜະລິດ ໃນເດືອນ ທັນວາ 2019 ແລະ ລົດໄຖນາ ໃນປີ 2021.

ເພື່ອປະເມີນການປະຕິບັດງານ, ແຜນດຳເນີນງານ ໄດ້ກຳນົດໃຫ້ນຳໃຊ້ຂໍ້ມູນກ່ຽວກັບການຄ້າຂ້າມແດນ ຈາກການສຳຫຼວດ EDB ຂອງທະນາຄານໂລກ ຊຶ່ງມີທຸກໆປີ. ເພື່ອຈຸດປະສົງດັ່ງກ່າວ, ການສຳຫຼວດ ໄດ້ວັດແທກສອງຊຸດດັດສະນີ ຊຶ່ງລວມມີເວລາ ແລະ ຄ່າໃຊ້ຈ່າຍສະເລ່ຍໃນການນຳເຂົ້າ ແລະ ສົ່ງອອກ. ອີງຕາມຂໍ້ມູນເວລາ ແລະ ຄ່າໃຊ້ຈ່າຍເຫຼົ່ານີ້, ແມ່ນເອົາຄະແນນສະສົມ ທີ່ກຳນົດໃນອັນດັບເສດຖະກິດຂອງໂລກ ກ່ຽວກັບຕົວຊີ້ວັດການຄ້າຂ້າມແດນ. ການຈັດອັນດັບໂລກ ສະທ້ອນໃຫ້ເຫັນສະຖານະປຽບທຽບໃນການແຂ່ງຂັນທາງດ້ານການຄ້າ ລະຫວ່າງເສດຖະກິດຂອງຫຼາຍປະເທດ.

ເຖິງຢ່າງໃດກໍ່ຕາມ, ການສຶກສາ EDB ໄດ້ຖືກຢຸດຕິພາຍຫຼັງປີ 2020 ແລະ ເຮັດໃຫ້ພວກເຮົາບໍ່ມີຂໍ້ມູນທີ່ຈຳເປັນໃນປີຕໍ່ມາ ເພື່ອປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານ ກ່ຽວກັບທຸກຕົວຊີ້ວັດເຫຼົ່ານີ້. ບົດສຶກສາ TRS ທີ່ດຳເນີນການສຶກສາໂດຍລັດຖະບານລາວ ມີຕົວຊີ້ວັດດັ່ງກ່າວ ແຕ່ມີຂໍ້ມູນສະເພາະທີ່ຕິດພັນກັບເວລາໃນການກວດປ່ອຍສິນຄ້າຢູ່ດ່ານ ແລະ ບົດສຶກສາລ່າສຸດໃນປີ 2020 ໄດ້ສຶກສາເອົາຂໍ້ມູນເວລາໃນການອອກ LPCOs ທີ່ຕິດພັນກັບການນຳເຂົ້າ, ສົ່ງອອກ ແລະ ຜ່ານແດນ. ບົດສຶກສາ TRS ປີ 2022 ໄດ້ຖືກລິເລີ່ມແລ້ວ, ແຕ່ຈະຮູ້ຜົນການສຶກສາໃນເດືອນ ກຸມພາ 2023 ເທົ່ານັ້ນ.

ໃນຂະນະທີ່ຂໍ້ມູນ TRS ກ່ຽວກັບການກວດປ່ອຍສິນຄ້າຢູ່ດ່ານ ແມ່ນສາມາດສົມທຽບກັບການສຳຫຼວດ EDB, ແຕ່ຜົນການສຶກສາການອອກ LPCOs ບໍ່ກົງກັບດັດສະນີຂອງການສຳຫຼວດ EDB ເນື່ອງຈາກບົດສຶກສາ TRS ໄດ້ປະ

ເມີນເວລາໃນການກະກຽມທຸກເອກະສານທີ່ຈຳເປັນສຳລັບການນຳເຂົ້າ ແລະ ສົ່ງອອກ ຊຶ່ງບໍ່ພຽງແຕ່ເອົາຂໍ້ມູນການອອກອະນຸຍາດ ແລະ ອະນຸມັດ ເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກບໍ່ມີຂໍ້ມູນຂອງ EDB, ຂໍ້ມູນຂອງ TRS ກ່ຽວກັບການອອກ LPCOs ຈະຖືກນຳໃຊ້ເປັນຖານເພື່ອວັດແທກຄວາມຄືບໜ້າໃນອານາຄົດ. ອາຍຸສິ້ນສຸດໂຄງການ LCT ໄດ້ຖືກຂະຫຍາຍໄປຈົນເຖິງປີ 2024 ແລະ ໄດ້ຕົກລົງກັນວ່າຈະເອົາຜົນການສຶກສາ TRS ເພື່ອປ່ຽນແທນຜົນການສຳຫຼວດ EDB ເພື່ອວັດແທກຄວາມຄືບໜ້າຂອງບັນດາກິດຈະກຳພາຍໃຕ້ເສົາຄ້ຳທີ 2 ຂອງໂຄງການຊຶ່ງກ່ຽວຂ້ອງກັບການຈັດຕັ້ງປະຕິບັດສັນຍາ WTO-TFA.

ເມື່ອດຳເນີນໄປຕາມຂໍ້ມູນ TRS ກ່ຽວກັບເວລາໃນການກວດປ່ອຍສິນຄ້າຢູ່ດ່ານ ແມ່ນໄດ້ຮັບການປັບປຸງເພີ່ມເຕີມຊຶ່ງໃຊ້ເວລາສະເລ່ຍ 3 ຊົ່ວໂມງ 52 ນາທີ ສຳລັບການສົ່ງອອກ ແລະ 5 ຊົ່ວໂມງ 43 ນາທີ ສຳລັບການນຳເຂົ້າ ໃນປີ 2020 ເມື່ອທຽບກັບ 9 ຊົ່ວໂມງ ສຳລັບການສົ່ງອອກ ແລະ 11 ຊົ່ວໂມງ ສຳລັບການນຳເຂົ້າ ຕາມການສຳຫຼວດ ຂອງ EDB ໃນປີ 2019.

ໂດຍການນຳໃຊ້ຂໍ້ມູນຈາກການສຳຫຼວດ EDB ແລະ TRS, ຄວາມຄືບໜ້າຂອງແຜນດຳເນີນງານ ແມ່ນຢູ່ບົນພື້ນຖານຕົວຊີ້ວັດຄວາມສຳເລັດທີ່ສຳຄັນ (KPI) ຕໍ່ກັບເປົ້າໝາຍທີ່ກຳນົດ ດັ່ງລຸ່ມນີ້

| **ຂົງເຂດຂອງການປະຕິບັດງານ** | **ຂັ້ນຕອນ** | **ປີຖານ (2017)** | | **2019** | | **2019** | **2020** | **ຄາດໝາຍໃນປີ (2022)** | |
|---|---|---|---|---|---|---|---|---|---|
| | | **ຂໍ້ມູນຂອງ EDB** | | | | **ຂໍ້ມູນຂອງ TRS** | | | |
| ຕົວຊີ້ວັດ KPI ທີ່ກຳນົດໃນແຜນດຳເນີນງານ | | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) | ເວລາ (ຊົ່ວໂມງ) | ຄ່າໃຊ້ຈ່າຍ (USD) |
| **ການສົ່ງອອກ** | ການປະຕິບັດທາງດ້ານເອກະສານ | 216 | 235 | 60 | 235 | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| | ການກວດປ່ອຍສິນຄ້າຢູ່ດ່ານ | 12 | 73 | 9 | 140 | 5 ຊມ 16 ນທ | 3 ຊມ 52 ນທ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| | **ລວມ** | **228** | **308** | **69** | **375** | | | **114** | **216** |
| **ການນຳເຂົ້າ** | ການປະຕິບັດທາງດ້ານເອກະສານ | 216 | 115 | 60 | 115 | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| | ການກວດປ່ອຍສິນຄ້າຢູ່ດ່ານ | 14 | 153 | 11 | 224 | 9 ຊມ 16 ນທ | 5 ຊມ 43 ນາທີ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| | **ລວມ** | **230** | **268** | **71** | **339** | | | **115** | **188** |
| **ຕົວຊີ້ວັດການຄ້າຂ້າມແດນໃນບົດລາຍງານ EDB** | | **124** | | **78** | | | | **99 ຫຼື ສູງກວ່າ** | |

ແຫຼ່ງຂໍ້ມູນ: ຄະແນນຕົວຊີ້ວັດການຄ້າຂ້າມແດນຂອງບົດລາຍງານ EDB ໃນປີ 2018 ແລະ 2020 ຂອງ ສປປ ລາວ ແລະ ບົດລາຍງານ TRS ປີ 2019 ແລະ 2020 ຂອງ ສປປ ລາວ.

**ຕາຕະລາງ 4- ຄວາມຄືບໜ້າຂອງແຜນດຳເນີນງານ ຕໍ່ກັບຕົວຊີ້ວັດຜົນສຳເລັດທີ່ສຳຄັນ ແລະ ເປົ້າໝາຍ**

ເບິ່ງຕາມຄະແນນສົມທຽບ ຂອງຕົວຊີ້ວັດການຄ້າຂ້າມແດນໃນບົດລາຍງານ EDB ໃນປີ 2017 ແລະ 2019 ຕາມຕາຕະລາງຂ້າງເທິງ, ສປປ ລາວ ໄດ້ມີຄວາມຄືບໜ້າທີ່ໜ້າປະທັບໃຈ ໃນດ້ານການຫຼຸດຜ່ອນເວລາໃນການສົ່ງອອກ ແລະ ການນຳເຂົ້າ ຊຶ່ງທັງສອງຫຼຸດລົງ ປະມານ 72% ເຮັດໃຫ້ອັນດັບຕົວຊີ້ວັດການຄ້າຂ້າມແດນຂອງໂລກຫຍັບຂຶ້ນມາຢູ່ອັນດັບທີ 78 ຊຶ່ງເກີນເປົ້າໝາຍທີ່ກຳນົດໄວ້ໃນຕົວຊີ້ວັດ KPI ປະມານ 1/4. ອັນດັບຕົວຊີ້ວັດການຄ້າຂ້າມແດນຂອງລາວ ແມ່ນສູງຫຼາຍກວ່າ ສສ ຫວຽດນາມ (ອັນດັບ 100), ກຳປູເຈຍ (ອັນດັບ 115) ແລະ ອິນໂດເນເຊຍ (ອັນດັບ 116) ແລະ ໃກ້ກັບ ສປ ຈີນ (ອັນດັບ 65) ແລະ ໄທ (ອັນດັບ 59) ໃນປີນັ້ນ. ບໍ່ມີຂໍ້ມູນ EDB ພາຍຫຼັງປີ 2019 ເນື່ອງຈາກການສຶກສາດັ່ງກ່າວ ໄດ້ຖືກຢຸດຕິຫຼັງຈາກນັ້ນ. ມັກເປັນທີ່ຖືກຖຽງກັນວ່າການສຶກສາ EDB ໄດ້ສຶກສາເອົາແຕ່ສອງລາຍການສິນຄ້າ ແລະ ສະນັ້ນ ການປັບປຸງໃດໜຶ່ງຂອງການກວດປ່ອຍສິນຄ້າເຫຼົ່ານັ້ນ ຈະເຮັດໃຫ້ຄະແນນເພີ່ມຂຶ້ນ ຢ່າງບໍ່ສົມສ່ວນ. ການວິພາກວິຈານນີ້ ອາດຈະຖືກຕ້ອງໃນລະດັບໜຶ່ງ, ເຖິງຢ່າງໃດກໍ່ຕາມ ໃນກໍລະນີຂອງ ສປປ ລາວ, ການປັບປຸງເວລາໃນການກວດປ່ອຍສິນຄ້າຢູ່ດ່ານ ກໍໄດ້ຮັບການສະໜັບສະໜູນ ໂດຍການສຶກສາ TRS.

ຕົວຢ່າງ: ອີງຕາມຂໍ້ມູນ TRS ທີ່ກຳນົດໃນຕາຕະລາງຂ້າງເທິງ, ເວລາສະເລ່ຍໃນການກວດປ່ອຍສິນຄ້າຢູ່ດ່ານ ໄດ້ຮັບການລາຍງານວ່າແມ່ນ 5 ຊົ່ວໂມງ 16 ນາທີ ສຳລັບການສົ່ງອອກ ແລະ 9 ຊົ່ວໂມງ 10 ນາທີ ສຳລັບການນຳເຂົ້າ ໃນປີ 2019 ຊຶ່ງໄດ້ຮັບການປັບປຸງເປັນ 3 ຊົ່ວໂມງ 52 ນາທີ ສຳລັບການສົ່ງອອກ ແລະ 5 ຊົ່ວໂມງ 43 ນາທີ ສຳລັບການນຳເຂົ້າ ໃນປີ 2020 ຕາມລຳດັບ. ນອກຈາກນີ້, ຍັງສັງເກດໄດ້ວ່າຕົວເລກໃນປີ 2019 ສຳລັບການສົ່ງອອກ ແລະ ການນຳເຂົ້າ ທີ່ເອົາມາຈາກບົດສຶກສາ TRS ແມ່ນດີກວ່າການສຶກສາ EDB ໃນປີ 2019. ບົດສຶກສາ TRS ແມ່ນມີຄວາມໜ້າເຊື່ອຖືຫຼາຍກວ່າ ເນື່ອງຈາກໄດ້ສຶກສາເອົາທຸກລາຍການສິນຄ້າທີ່ໄດ້ຮັບການກວດປ່ອຍຢູ່ 10-12 ດ່ານ ແລະ ສະນັ້ນ ຈຶ່ງມີຖານຕົວຢ່າງທີ່ໃຫຍ່ກວ່າ ແລະ ກະຈາຍຢ່າງກວ້າງຂວາງ.

ນອກຈາກນີ້, ຍັງໄດ້ລະບຸວ່າເວລາໃນການກວດປ່ອຍສິນຄ້າຢູ່ ສປປ ລາວ ຢູ່ໃນລະດັບແນວໜ້າຂອງອາຊຽນ. ພ້ອມດຽວກັນ, ໃນຂະນະທີ່ເວລາໃນການປະຕິບັດທາງດ້ານເອກະສານ ໄດ້ຮັບການປັບປຸງຢ່າງຫຼວງຫຼາຍ, ແຕ່ເວລາຍັງໃຊ້ຍັງສູງຢູ່. ເມື່ອບໍ່ມີການສຶກສາ EDB, ຈຶ່ງໄດ້ຕົກລົງກັນສຶກສາຂໍ້ມູນເວລາໃນການອອກ LPCOs ເຂົ້າໃນການສຶກສາຄືກັນ, ສະນັ້ນ ຈຶ່ງໄດ້ມີການເກັບກຳຂໍ້ມູນດັ່ງກ່າວໃນການສຳຫຼວດ TRS ໃນປີ 2020 ຊຶ່ງໃຊ້ເວລາສະເລ່ຍໃນການອອກ LPCOs ປະມານ 1 ວັນ 22 ຊົ່ວໂມງ 9 ນາທີ. ຕົວເລກດັ່ງກ່າວ ສາມາດນຳໃຊ້ເປັນຖານໃນການວັດແທກຜົນສຳເລັດຂອງການປະຕິບັດທາງດ້ານເອກະສານ ໃນອານາຄົດ ເນື່ອງຈາກໄດ້ຮັບການຕົກລົງໂດຍໂຄງການ LCT. ບົດສຶກສາ TRS ຈະໃຫ້ພວກເຮົາເຫັນພາບປຽບທຽບຂອງຄວາມຄືບໜ້າໃນການປະຕິບັດງານໃນປີ 2020 ທັງການກວດປ່ອຍສິນຄ້າ ແລະ ການອອກ LPCOs.

ໃນທາງກົງກັນຂ້າມກັບການຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້າຢູ່ດ່ານ ທີ່ໂດດເດັ່ນນີ້, ຄ່າໃຊ້ຈ່າຍຂອງການສົ່ງອອກ ແລະ ການນຳເຂົ້າ ທັງສອງຊ້ຳພັດສູງ ແທນທີ່ຈະຫຼຸດລົງ[57]. ຕໍ່ກັບບັນຫານີ້, ການຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້າ ຊຶ່ງມີຄວາມສຳຄັນຈາກມຸມມອງຂອງການຈັດອັນດັບໂລກ ແມ່ນບໍ່ໄດ້ຮັບຄວາມກະຕືລືລົ້ນຫຼາຍຈາກຜູ້ຄ້າ ຊຶ່ງຕ້ອງແບກຫາບຄ່າໃຊ້ຈ່າຍທາງການຄ້າທີ່ເພີ່ມຂຶ້ນ. ດັ່ງທີ່ເຫັນໃນຕາຕະລາງຂ້າງເທິງ, ຄ່າໃຊ້ຈ່າຍໃນການປະຕິບັດທາງດ້ານເອກະສານ ແມ່ນບໍ່ປ່ຽນແປງ, ແຕ່ໄດ້ເພີ່ມຄ່າໃຊ້ຈ່າຍໃນການກວດປ່ອຍສິນຄ້າສົ່ງອອກ ແລະ ນຳເຂົ້າ. ຕົວຢ່າງ ໃນກໍລະນີສົ່ງອອກ ແມ່ນເພີ່ມຈາກ 73 ໂດລາສະຫະລັດ ໃນປີ 2017 ມາເປັນ 140 ໂດລາສະຫະລັດ

[57] ອີງຕາມລາຍລະອຽດໃນບົດລາຍງານ EDB ຂອງທະນາຄານໂລກໃນປີ 2020 ຂອງ ສປປ ລາວ (ໜ້າທີ 49), ຄ່າໃຊ້ຈ່າຍທີ່ຕິດພັນກັບການກວດປ່ອຍ ແລະ ການກວດກາ ຂອງຂະແໜງພາສີ ແລະ ຂະແໜງການທີ່ປະຈຳຢູ່ດ່ານ ແມ່ນປະມານ 85-90% ຂອງຄ່າໃຊ້ຈ່າຍໃນການສົ່ງອອກ ແລະ ນຳເຂົ້າ ທັງໝົດ.

(ເກືອບເທົ່າຕົວ) ໃນປີ 2019 ແລະ ໃນກໍລະນີນໍາເຂົ້າ ເພີ່ມຈາກ 153 ໂດລາສະຫະລັດ ມາເປັນ 224 ໂດລາສະຫະລັດ ໃນໄລຍະເວລາດຽວກັນ. ອີງຕາມການວິເຄາະຜົນການສຶກສາ EDB, ສ່ວນສໍາຄັນທີ່ເຮັດໃຫ້ຄ່າໃຊ້ຈ່າຍເພີ່ມຂຶ້ນ ໃນ ສປປ ລາວ ແມ່ນກ່ຽວກັບຄ່າໃຊ້ຈ່າຍໃນການກວດກາຂອງຂະແໜງການທີ່ກ່ຽວຂ້ອງປະຈໍາດ່ານ. ສະນັ້ນ, ການ ຫຼຸດຜ່ອນການກວດກາສິນຄ້າຕົວຈິງ ໂດຍການນໍາໃຊ້ການກວດກາຢູ່ດ່ານຕາມຄວາມສ່ຽງ ຈະສົ່ງຜົນກະທົບຫຼາຍຕໍ່ ຄ່າໃຊ້ຈ່າຍໃນການກວດປ່ອຍສິນຄ້າຢູ່ດ່ານ. ໃນເມື່ອບໍ່ມີບົດລາຍງານ ຫຼື ການສໍາຫຼວດ ເພີ່ມເຕີມ ເພື່ອໃຫ້ຂໍ້ມູນຄ່າ ໃຊ້ຈ່າຍພາຍຫຼັງປີ 2019, ຂໍ້ມູນທີ່ເປັນຂໍ້ສັງເກດນີ້ ຊີ້ໃຫ້ເຫັນການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍທາງດ້ານທຸລະກໍາຂອງ ການນໍາເຂົ້າ ແລະ ສົ່ງອອກ. ນອກຈາກນີ້, ຄ່າໃຊ້ຈ່າຍໃນການປະຕິບັດທາງດ້ານເອກະສານ ຍັງສູງຢູ່ ເນື່ອງຈາກມີ ມາດຕະການ NTMs ຈໍານວນຫຼາຍ ຊຶ່ງຕ້ອງໄດ້ຮັບການລຶບລ້າງ ຫຼື ປັບປຸງ. ການນໍາໃຊ້ລະບົບ LNSW ເຂົ້າໃນ ການອອກ LPCOs ຈະຍັງຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍໃນການປະຕິບັດທາງດ້ານເອກະສານ.

## 4. ສະຫຼຸບ ແລະ ບົດຮຽນທີ່ຖອດຖອນໄດ້

ຜົນການປະເມີນທີ່ສໍາຄັນ ພ້ອມດ້ວຍບົດຮຽນສໍາຄັນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດແຜນດໍາເນີນງານ TFRM ໄດ້ອະທິບາຍຢູ່ຂ້າງລຸ່ມ:

**4.1 ໂຄງສ້າງທາງດ້ານສະຖາບັນທີ່ເຂັ້ມແຂງ ໄດ້ຖືກພັດທະນາ ເພື່ອຂັບເຄື່ອນແຜນດໍາເນີນງານ TFRM**

ແຜນດໍາເນີນງານວຽກອໍານວຍຄວາມສະດວກທາງດ້ານການຄ້າ ແມ່ນປະສົບຜົນສໍາເລັດໃນການສ້າງຕັ້ງໂຄງສ້າງທາງ ດ້ານສະຖາບັນທີ່ເຂັ້ມແຂງ ໃນຮູບແບບຂອງຄະນະກໍາມະການ NTFC ໂດຍແມ່ນຮອງນາຍົກລັດຖະມົນຕີເປັນ ຫົວໜ້າຄະນະ. ນີ້ແມ່ນເປັນຜົນສໍາເລັດອັນພົ້ນເດັ່ນ ເນື່ອງຈາກບໍ່ຄ່ອຍເຫັນຄະນະກໍາມະການ ທີ່ເປັນຫົວໜ້າໂດຍຜູ້ ບໍລິຫານລະດັບສູງເຊັ່ນນີ້. ການຊີ້ນໍາຂອງທ່ານຮອງນາຍົກລັດຖະມົນຕີ ບໍ່ພຽງແຕ່ກໍານົດໃຫ້ມີອໍານາດໃນການແຊກ ແຊງເທົ່ານັ້ນ, ແຕ່ຍັງສາມາດເຂົ້າເຖິງທ່ານນາຍົກລັດຖະມົນຕີໄດ້ງ່າຍ ໃນການອອກຄໍາແນະນໍາທີ່ຈໍາເປັນ ເພື່ອແກ້ໄຂ ສະຖານະການທີ່ທ້າທາຍທີ່ຮຽກຮ້ອງໃຫ້ຫຼາຍຂະແໜງການ ຈັດຕັ້ງປະຕິບັດ ດັ່ງທີ່ພວກເຮົາໄດ້ເຫັນໃນກໍລະນີການ ກວດກາຕາມເສັ້ນທາງ. ໝາກຜົນເຫຼົ່ານີ້ ສອດຄ່ອງກັບຜົນການສໍາຫຼວດວຽກງານການອໍານວຍຄວາມສະດວກທາງ ດ້ານການຄ້າຂອງອົງການສະຫະປະຊາຊາດ[58] ຊຶ່ງລາຍງານວ່າບັນດາມາດຕະການທີ່ຕິດພັນກັບການກະກຽມທາງດ້ານ ສະຖາບັນ ໂດຍສະເພາະທີ່ກ່ຽວຂ້ອງກັບຄະນະກໍາມະການ NTFC ຫຼື ຄະນະກໍາມະການທີ່ຄ້າຍຄືກັນ ໄດ້ຮັບ ການຈັດຕັ້ງປະຕິບັດຢ່າງກວ້າງຂວາງໃນພາກພື້ນອາຊີ-ປາຊີຟິກ.

**4.2 ໂຄງສ້າງການຕິດຕາມ ແລະ ສະໜັບສະໜູນຂອງຄະນະກໍາມະການ NTFC ຍັງບໍ່ພຽງພໍຫຼາຍ**

ກອງເລຂາ TFCS ມີພະນັກງານຈໍານວນໜຶ່ງ ທີ່ບໍ່ທັນມີຄວາມພ້ອມໃນການຕິດຕາມຕ່າງໆທີ່ກວ້າງຂວາງ ພາຍໃນ ແຜນດໍາເນີນງານນີ້. ເນື່ອງຈາກພະນັກງານບໍ່ພຽງພໍ ແລະ ຂາດກົນໄກການຕິດຕາມທີ່ເຂັ້ມແຂງ, ກອງເລຂາ TFCS ບໍ່ສາມາດສຸມຄວາມຕັ້ງໃຈໃສ່ເຫດການທີ່ມີຄວາມລ່າຊ້າ ຫຼື ລະເລີຍ ໂດຍຂະແໜງການທີ່ກ່ຽວຂ້ອງໃນການຈັດຕັ້ງ ປະຕິບັດກິດຈະກໍາຕ່າງໆທີ່ກໍານົດໃນແຜນດໍາເນີນງານ.

**4.3 ການຕິດຕາມທີ່ອ່ອນແອ ຢູ່ຂະແໜງການທີ່ກ່ຽວຂ້ອງ**

ໃນຂະນະທີ່ບາງມາດຕະການບູລິມະສິດ ເຊັ່ນ: ການຕັ້ງຈຸດກວດກາຕາມເສັ້ນທາງ ຫຼື ການປັບປຸງຂັ້ນຕອນເພື່ອ ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ຂອງຂະບວນການກວດປ່ອຍສິນຄ້າ ຊຶ່ງກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ຕິດຕາມ ເປັນອັນສະເພາະ ໂດຍໄດ້ຮັບຄວາມເອົາໃຈໃສ່ຈາກການນໍາລະດັບສູງ, ແຕ່ມາດຕະການອື່ນ ແມ່ນບໍ່ມີຄວາມຄືບໜ້າ ຫຼາຍເທົ່າທີ່ຄວນ. ເຖິງວ່າຫຼາຍມາດຕະການ ໄດ້ມີຄໍາແນະນໍາທີ່ອອກໂດຍທ່ານນາຍົກລັດຖະມົນຕີ, ແຕ່ການຈັດຕັ້ງ

[58] ການສໍາຫຼວດໂລກຂອງອົງການສະຫະປະຊາຊາດ ກ່ຽວກັບການອໍານວຍຄວາມສະດວກທາງດ້ານການຄ້າແບບດິຈິຕອນ ແລະ ແບບຍືນຍົງ, ອົງການ UNESCAP ໃນປີ 2021.

ປະຕິບັດແມ່ນເຮັດບໍ່ໄດ້ດີ ເນື່ອງຈາກບໍ່ມີການຕິດຕາມ ຫຼື ການລາຍງານ ສໍາລັບການຈັດຕັ້ງປະຕິບັດ. ຂະແໜງການທີ່ກ່ຽວຂ້ອງ ຕ້ອງສ້າງຕັ້ງໜ່ວຍງານ TIU ແລະ ນໍາໃຊ້ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມກິດຈະກໍາຕາມຂະແໜງການ ພາຍໃຕ້ແຜນອໍານວຍຄວາມສະດວກທາງດ້ານການຄ້າ. ການພັດທະນາແຜນງານລະດັບກົມ ຄື: ແຜນປະຕິບັດງານ DAP ຕ້ອງໄດ້ຮັບການຊຸກຍູ້ ເພື່ອຄວາມເປັນເຈົ້າການຂອງຂະແໜງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຕາມຈຸດປະສົງແຜນດໍາເນີນງານ TFRM.

### 4.4 ການຂາດການລາຍງານເປັນປົກກະຕິ

ການລາຍງານ ຫຼື ການຂາດການລາຍງານ ແມ່ນບັນຫາທົ່ວໄປທີ່ພົບພໍ້ໃນການຈັດຕັ້ງປະຕິບັດວຽກງານ. ບໍ່ມີການລາຍງານສະເພາະ ຈາກຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດມາດຕະການ. ແບບຟອມລະອຽດສໍາລັບການລາຍງານ ໄດ້ນໍາສົ່ງໃຫ້ພວກເຂົາໃນໄລຍະລິເລີ່ມການຈັດຕັ້ງປະຕິບັດແຜນດໍາເນີນງານແມ່ນບໍ່ໄດ້ຮັບຮັບການຕິດຕາມໂດຍຂະແໜງການທີ່ກ່ຽວຂ້ອງ ແລະ ບົດລາຍງານຂອງພວກເຂົາ ກ່າວເຖິງບັນຫາຈໍານວນໜຶ່ງ ແທນທີ່ຈະເປັນການລາຍງານແຜນດໍາເນີນງານ ແລະ ກິດຈະກໍາທັງໝົດທີ່ນອນໃນນັ້ນ. ນອກຈາກນີ້, ການລະເລີຍໃນການລາຍງານ ຍັງບໍ່ທັນໄດ້ຍົກຂຶ້ນໃນຄະນະກໍາມະການ NTFC ເພື່ອອອກຄໍາແນະນໍາ ຫຼື ດຶງເອົາຂະແໜງການທີ່ບໍ່ປະຕິບັດ ເພື່ອການປັບປຸງການຈັດຕັ້ງປະຕິບັດ.

### 4.5 ການສ້າງຕັ້ງຄະນະກໍາມະການ PTFC ເປັນບາດກ້າວໃຫຍ່ໃນການສ້າງຄວາມເຂັ້ມແຂງໂຄງສ້າງການບໍລິຫານ ຢູ່ລະດັບແຂວງ

ການສ້າງຕັ້ງຄະນະກໍາມະການ PTFCs ຕາມສາຍຂອງຄະນະກໍາມະການ NTFC ຢູ່ຂັ້ນສູນກາງ ໄດ້ປະກອບສ່ວນຢ່າງແນ່ນອນຕໍ່ກັບໂຄງສ້າງການບໍລິຫານທີ່ເຂັ້ມແຂງກວ່າເກົ່າ ຢູ່ລະດັບແຂວງ. ຄະນະກໍາມະການ PTFCs ປະກອບດ້ວຍທຸກຫົວໜ້າ/ຮອງຫົວໜ້າ ພະແນກການທີ່ກ່ຽວຂ້ອງພາຍໃນແຂວງ ເປັນຄະນະ ແລະ ທ່ານ ຮອງເຈົ້າແຂວງ ເປັນຫົວໜ້າຄະນະ, ຄະນະກໍາມະການ PTFCs ເຫຼົ່ານີ້ ໄດ້ຊ່ວຍການປະສານງານລະຫວ່າງຂະແໜງການຢ່າງຫຼວງຫຼາຍ. ກອງປະຊຸມຂອງຄະນະກໍາມະການ PTFC ແມ່ນມີພະນັກງານກອງເລຂາ TFCS ເຂົ້າຮ່ວມເປັນປົກກະຕິ ໃນນາມຕາງໜ້າກອງເລຂາ TFCS/TFS ຜູ້ທີ່ເພີ່ມບັນຫາສໍາຄັນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດແຜນດໍາເນີນງານ ເຂົ້າໃນວາລະກອງປະຊຸມ. ຫົວໜ້າຄະນະກໍາມະການ PTFC ໄດ້ຮັບການເຊື້ອເຊີນເຂົ້າຮ່ວມກອງປະຊຸມຄະນະກໍາມະການ NTFC ເພື່ອໃຫ້ພວກເຂົາຮັບຮູ້ກ່ຽວກັບບູລິມະສິດ ແລະ ເປົ້າໝາຍຂອງຄະນະກໍາມະການ NTFC ແລະ ສາມາດຍົກບັນຫາຕ່າງໆ ທີ່ຕ້ອງການໃຫ້ຄະນະກໍາມະການ NTFC ເອົາໃຈໃສ່.

### 4.6 ການຮ່ວມມືຂ້າມແດນ ຍັງບໍ່ໄດ້ໃຫ້ຄວາມສໍາຄັນຫຼາຍ

ລະບົບແຈ້ງພາສີປະຕູດຽວອາຊຽນ ສາມາດສ້າງຂຶ້ນດ້ວຍການແລກປ່ຽນຂໍ້ມູນຟອມ D. ເຖິງຢ່າງໃດກໍ່ຕາມ, ກິດຈະກໍາອື່ນພາຍໃຕ້ເສົາຄໍ້ານີ້ຂອງແຜນດໍາເນີນງານ ລວມທັງການຂະຫຍາຍວຽກງານກວດກາຈຸດດຽວ ແລະ ການນໍາໃຊ້ລາຍເຊັນແບບເອເລັກໂຕຼນິກ ຍັງບໍ່ທັນໄດ້ຮັບການລິເລີ່ມ. ເນື່ອງຈາກຍັງຂາດການເຊື່ອມໂຍງກັບອາຊຽນ ແລະ ຂາດຄວາມພະຍາຍາມໃນຂອບພາກພື້ນ ແລະ ຫຼາຍຝ່າຍອື່ນ ເຊັ່ນ: ທະນາຄານພັດທະນາອາຊີ (ADB), ຄະນະກໍາມະການເພື່ອພັດທະນາເສດຖະກິດ ແລະ ສັງຄົມ ຂອງອາຊີ ແລະ ປາຊີຟິກ ຂອງອົງການສະຫະປະຊາຊາດ (UNESCAP), ໜ່ວຍງານເພື່ອການພັດທະນາລະຫວ່າງປະເທດຂອງສະຫະລັດອາເມລິກາ (USAID). ໃນຄວາມເປັນຈິງແລ້ວ, ຂໍ້ຄິດລິເລີ່ມສອງຝ່າຍ ເຊັ່ນ: ອົງການຮ່ວມມືລະຫວ່າງປະເທດຍີ່ປຸ່ນ (JICA) ຫຼື ສໍານັກງານຄວາມຮ່ວມມືພັດທະນາເສດຖະກິດກັບປະເທດເພື່ອນບ້ານ (NEDA) ຕ້ອງໄດ້ປະສານສົມທົບກັບແຜນຍຸດທະສາດອໍານວຍຄວາມສະດວກທາງດ້ານການຄ້າໃນໄລຍະຍາວ ເພື່ອໃຫ້ຄວາມພະຍາຍາມເຫຼົ່ານັ້ນສອດຄ່ອງກັບແຜນງານລວມ ແລະ ບູລິມະສິດຂອງປະເທດ ສໍາລັບການນໍາໃຊ້ຊັບພະຍາກອນໃຫ້ເກີດຜົນປະໂຫຍດສູງສຸດ. ແຜນກິດຈະກໍາ ແລະ ບູລິມະສິດຂອງພວກເຂົາ ຄວນລວມເຂົ້າກັບແຜນຍຸດທະສາດອໍານວຍຄວາມສະດວກທາງດ້ານການຄ້າ ຢ່າງໃກ້ຊິດ ຫຼື ເບິ່ງຄືວ່າພວກເຂົາຈະດໍາເນີນການໄປຄຽງຄູ່ກັນ ໂດຍບໍ່ມີການເຊື່ອມໂຍງ ຫຼື ປະສານງານໃດໆ.

**4.7 ການຮ່ວມມືກັບພາກທຸລະກິດ ຍັງເປັນຄວາມຝັນທີ່ຫ່າງໄກ**

ກົມການນຳເຂົ້າ ແລະ ສົ່ງອອກ ເປັນພຽງກົມດຽວທີ່ຮັບປະກັນການມີສ່ວນຮ່ວມຂອງພາກທຸລະກິດໃນກອງປະຊຸມຂອງພວກເຂົາ. ເຖິງຢ່າງໃດກໍ່ຕາມ, ຂະແໜງການອື່ນ ລົ້ມເຫຼວໃນການນຳເອົາຂໍ້ຄິດລິເລີ່ມທີ່ເປັນເອກະລາດ ເພື່ອມີສ່ວນຮ່ວມກັບພາກທຸລະກິດ. ການພົວພັນກັບພາກທຸລະກິດ ຍັງເປັນປົກກະຕິ ແລະ ດີທີ່ສຸດໃນລະດັບຍຸດທະສາດເມື່ອພວກເຂົາໄດ້ຮັບການເຊື້ອເຊີນເຂົ້າຮ່ວມກອງປະຊຸມປະຈຳປີ. ຂະແໜງການທີ່ກ່ຽວຂ້ອງ ຍັງບໍ່ໄດ້ສ້າງຕັ້ງຄະນະກຳມະການປຶກສາຫາລື ຫຼື ຄະນະກຳມະການວິຊາການ ໂດຍມີຕາງໜ້າພາກທຸລະກິດເຂົ້າຮ່ວມປຶກສາຫາລືເປັນປົກກະຕິ ເຖິງວ່າເປັນຂໍ້ຜູກມັດທີ່ນອນໃນສັນຍາ WTO-TFA ແລະ ຖືກກຳນົດເປັນມາດຕະການບູລິມະສິດກໍ່ຕາມ. ນອກຈາກນີ້, ພາກທຸລະກິດ ກໍ່ຍັງບໍ່ໄດ້ເປັນສະມາຊິກຂອງຄະນະກຳມະການ NTFC ທີ່ເປັນຄະນະກຳມະການສູງສຸດທີ່ຮັບຜິດຊອບວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນປະເທດ. ເຊັ່ນດຽວກັນ, ມາດຕະການທີ່ຕິດພັນກັບການໃຫ້ໂອກາດໃນການປະກອບຄຳເຫັນຕໍ່ຮ່າງລະບຽບການ ລ່ວງໜ້າ ແລະ ການແຈ້ງລ່ວງໜ້າກ່ອນການເພີ່ມທະວີການກວດກາ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ຈຳເປັນຕ້ອງມີຄວາມພະຍາຍາມຫຼາຍຂຶ້ນໃນເລື່ອງນີ້.

**4.8 ແຜນທຸລະກິດທາງເອເລັກໂຕຼນິກ ຈະໃຫ້ຄວາມສຳຄັນຫຼາຍຂຶ້ນພ້ອມກັບລະບົບ LNSW**

ລະບົບອັດຕະໂນມັດຂອງຂະບວນການທີ່ຈະກຳນົດເປັນຍຸດທະສາດເຊື່ອມໂຍງ ແມ່ນກ່ຽວຂ້ອງກັບທຸກພາກສ່ວນທີ່ກ່ຽວຂ້ອງ ຫຼື ອື່ນໆ, ຊຶ່ງຍັງບໍ່ທັນໄດ້ຮັບການລິເລີ່ມ. ຕົວຢ່າງ: ເຖິງວ່າການພັດທະນາລະບຽບການດ້ານວິຊາການກ່ຽວກັບທຸລະກຳທາງເອເລັກໂຕຼນິກ ແລະ ລາຍເຊັນແບບເອເລັກໂຕຼນິກ ແມ່ນສ່ວນໜຶ່ງຂອງແຜນດຳເນີນງານ, ແຕ່ຍັງບໍ່ສາມາດໄດ້ຮັບການຕິດຕາມ ເນື່ອງຈາກຄວາມຮັບຜິດຊອບ ໄດ້ຍ້າຍຈາກກະຊວງໜຶ່ງ ຫາ ກະຊວງໜຶ່ງ ໃນໄລຍະເຄິ່ງທາງ. ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຜິດຊອບການຫັນເປັນດິຈິຕອນຂອງປະເທດໃນປະຈຸບັນຊຶ່ງຄວນໄດ້ຖືກລວມເຂົ້າເປັນສະມາຊິກຂອງຄະນະກຳມະການ NTFC ເພື່ອການມີສ່ວນຮ່ວມຢ່າງໃກ້ຊິດ ໃນຄວາມພະຍາຍາມໃດໜຶ່ງ ເພື່ອກ້າວໄປສູ່ການດຳເນີນການແບບບໍ່ນຳໃຊ້ເຈ້ຍ ແລະ ລະບົບອັດຕະໂນມັດ. ເຊັ່ນດຽວກັນ, ທະນາຄານ ແຫ່ງ ສປປ ລາວ ຄວນຖືກລວມເຂົ້າເປັນຄະນະກຳມະການ NTFC ເພື່ອໃຫ້ການສະໜັບສະໜູນທີ່ຈຳເປັນ ກ່ຽວກັບບັນຫາທີ່ຕິດພັນກັບການຊຳລະແບບເອເລັກໂຕຼນິກ ແລະ ທຸລະກິດກຳທາງເອເລັກໂຕຼນິກ.

**4.9 ມາດຕະການ NTMs ສຳຄັນຈຳນວນໜຶ່ງໄດ້ຖືກລຶບລ້າງ ຍ້ອນການປະຕິຮູບມາດຕະການ NTMs**

ດັ່ງທີ່ອະທິບາຍມາຂ້າງເທິງ, ການທົບທວນຄືນມາດຕະການ NTMs ໄດ້ສົ່ງຜົນໃຫ້ມີການລຶບລ້າງໃບອະນຸຍາດສຳຄັນ ຈຳນວນໜຶ່ງ ເຊັ່ນ: ໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ, ລົດໄຖນາ, ນ້ຳມັນຫຼໍ່ລື່ນ, ເຫຼັກ ແລະ ຊີມັງ ຊຶ່ງເຮັດໃຫ້ປະຢັດເວລາໃນການດຳເນີນການນຳເຂົ້າຢ່າງຫຼວງຫຼາຍ. ຂັ້ນຕອນການສົ່ງອອກ ແລະ ຂໍ້ຮຽກຮ້ອງໃຫ້ມີໃບອະນຸຍາດສົ່ງອອກແຮ່ທາດ ກໍ່ໄດ້ຮັບການປັບປຸງ ຕາມຂໍ້ສະເໜີແນະໃນບົດທົບທວນຄືນມາດຕະການ NTMs ຊຶ່ງເຮັດໃຫ້ຫຼຸດຜ່ອນເວລາໃນການດຳເນີນການສົ່ງອອກ.

**4.10 ການທົບທວນຄືນມາດຕະການ NTMs ບໍ່ບັນລຸຕາມເປົ້າໝາຍ**

ແຜນດຳເນີນງານ ໄດ້ກຳນົດໃຫ້ມີການທົບທວນຄືນມາດຕະການ NTMs ພາຍໃນປີ 2022, ແຕ່ມາຮອດປະຈຸບັນມີ 25% ຂອງມາດຕະການທັງໝົດ ໄດ້ຮັບການທົບທວນຄືນ. ສິ່ງນີ້ ຍັງແມ່ນຂໍ້ຮຽກຮ້ອງພາຍໃຕ້ສັນຍາ ATIGA ຊຶ່ງຮຽກຮ້ອງໃຫ້ ສປປ ລາວ ລຶບລ້າງມາດຕະການ NTBs ພາຍໃນປີ 2018 ແລະ ຕ້ອງໄດ້ຮັບການຕິດຕາມເປັນບູລິມະສິດ. ໄດ້ມີການລິເລີ່ມທີ່ດີໃນປີ 2017-2018 ເມື່ອມີການທົບທວນຄືນຫຼາຍມາດຕະການ NTMs, ແຕ່ເຖິງຢ່າງໃດກໍ່ຕາມ, ບໍ່ໄດ້ມີການສືບຕໍ່ຫຼັງຈາກນັ້ນ ເນື່ອງຈາກຫຼາຍປັດໄຈ ເຊັ່ນ: ຂີດຄວາມສາມາດຂອງຂະແໜງການທີ່ກ່ຽວຂ້ອງ ບໍ່ພຽງພໍ, ຂາດຊັບພະຍາກອນ ແລະ ການລະບາດຂອງພະຍາດ. ມີຄວາມຮູ້ສຶກວ່າໜ້າວຽກທົບທວນຄືນທຸກມາດຕະການ NTMs ໃຫ້ສຳເລັດ ແມ່ນມີຄວາມທ້າທາຍທີ່ຍາກ ເນື່ອງຈາກໃຊ້ເວລາດົນ ແລະ ປະຈຸບັນກອງເລຂາ TFCS ແມ່ນສຸມໃສ່ການປັບປຸງ NTMs ຊຶ່ງເປັນວຽກບູລິມະສິດ ຫຼາຍກວ່າການທົບທວນຄືນ NTMs.

**4.11 ຂໍ້ສະເໜີແນະຂອງບົດທົບທວນຄືນ NTMs ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ**

ຍົກເວັ້ນກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມອຸດສາຫະກຳ ແລະ ຫັດຖະກຳ, ບໍ່ມີຂະແໜງການໃດຍອມຮັບເອົາ ຂໍ້ສະເໜີແນະຂອງບົດທົບທວນຄືນ NTMs ສຳລັບການລຶບລ້າງໃບອະນຸຍາດ/ໃບຢັ້ງຢືນ ເປັນສ່ວນໃຫຍ່. ພວກເຂົາ ລະເລີຍບັນຫາສຳຄັນເຫຼົ່ານີ້ ແລະ ດີທີ່ສຸດແມ່ນການປຽນແປງດ້ານຂັ້ນຕອນຈຳນວນໜຶ່ງ ເທົ່ານັ້ນ. ໜ່ວຍງານເຮັດ ວຽກ NTMs ຄວນປະຊຸມກັນເປັນປົກກະຕິ ເພື່ອກວດສອບບັນຫາທີ່ຍັງຄ້າງຄາ ແລະ ຕັດສິນໃຈໂດຍໄວ ໃນ ການຈັດຕັ້ງປະຕິບັດຕາມກຳນົດເວລາຂອງພວກເຂົາ ໂດຍສະເພາະແມ່ນການລຶບລ້າງມາດຕະການ NTMs ທີ່ບໍ່ມີ ເຫດຜົນພຽງພໍ.

**4.12 ການຊຸກຍູ້ການຈັດຕັ້ງປະຕິບັດສັນຍາ WTO-TFA**

ເນື່ອງຈາກມີການລວມເອົາການຈັດຕັ້ງປະຕິບັດຢ່າງເຕັມສ່ວນຂອງສັນຍາ WTO-TFA ເປັນອັນສະເພາະ, ແຜນດຳ ເນີນງານ ແມ່ນປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດຫຼາຍກວ່າ 47% ຂອງທຸກມາດຕະການທີ່ນອນໃນສັນຍາ WTO-TFA ທັງທີ່ເປັນການຈັດຕັ້ງປະຕິບັດແບບເຕັມສ່ວນ ຫຼື ສ່ວນໃຫຍ່. ມາດຕະການທີ່ນອນໃນໝວດ A ມີ 54% ແລະ ໝວດ B ມີ 55%. ຍັງບໍ່ທັນມີມາດຕະການໃດ ທີ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເນື່ອງຈາກແຜນ ປະຕິບັດໄດ້ຖືກລິເລີ່ມພາຍໃຕ້ແຜນດຳເນີນງານ ເພື່ອຈັດຕັ້ງປະຕິບັດທຸກມາດຕະການທີ່ນອນໃນສັນຍາ WTO-TFA ແລະ ມາດຕະການເຫຼົ່ານີ້ ແມ່ນຢູ່ໃນລະດັບທີ່ຈະຈັດຕັ້ງປະຕິບັດໃຫ້ສຳເລັດທີ່ແຕກຕ່າງກັນ. ບາງມາດຕະການ ແມ່ນຂ້ອນຂ້າງໃກ້ຈະສຳເລັດ ແລະ ອາດຈະບັ ນລຸພາຍໃນສອງສາມເດືອນ.

**4.13 ການສະໜັບສະໜູນຂອງໂຄງການ ໃນການຈັດຕັ້ງປະຕິບັດສັນຍາ WTO-TFA ມີຜົນກະທົບ ທາງບວກ**

ດ້ວຍຈຸດປະສົງເພື່ອຊ່ວຍສະໜັບສະໜູນການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C ຊຶ່ງປະເທດຕ້ອງການ ການຊ່ວຍເຫຼືອທາງດ້ານວິຊາການ, ໂຄງການ LCT ໄດ້ປະສົບຜົນສຳເລັດໃນການນຳເອົາທຸກຂະແໜງການເພື່ອມາ ສຸມໃສ່ການຈັດຕັ້ງປະຕິບັດມາດຕະການທີ່ນອນໃນໝວດ C. ກົນໄກຂອງໂຄງການ CF ພ້ອມກັບງົບປະມານທີ່ ກຳນົດໄວ້ ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ແລະ ມາດຕະການອື່ນທີ່ນອນ ໃນໝວດ C ຢູ່ຂະແໜງການທີ່ສຳຄັນ ໄດ້ມີຄວາມຄືບໜ້າທີ່ດີກວ່າ ເນື່ອງຈາກໄດ້ຮັບການຕິດຕາມໂດຍໜ່ວຍງານ ຈັດຕັ້ງປະຕິບັດໂຄງການ (NIU)/ກົມການນຳເຂົ້າ ແລະ ສົ່ງອອກ (ກອງເລຂາ TFCS) ແລະ ທະນາຄານໂລກ ເປັນ ປົກກະຕິ. ໂຄງການ ຍັງຊ່ວຍສ້າງຂີດຄວາມສາມາດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ເນື່ອງຈາກກອງປະຊຸມສຳມະນາ ສາມາດຈັດຂຶ້ນໄດ້ໃນຂອບເຂດທົ່ວປະເທດ ໂດຍການສະໜັບສະໜູນຂອງໂຄງການ ໃຫ້ແກ່ຄະນະກຳມະການ PTFCs.

**4.14 ການຂາດຄວາມເປັນເຈົ້າການຢູ່ຂະແໜງການທີ່ກ່ຽວຂ້ອງ**

ບົດຮຽນທີ່ສຳຄັນຂອງການຈັດຕັ້ງປະຕິບັດແຜນດຳເນີນງານ TFRM ໄດ້ຮັບຮູ້ວ່າກອງປະຊຸມ ແລະ ກອງປະຊຸມສຳ ມະນາສ້າງຂີດຄວາມສາມາດ ໄດ້ຖືກຈັດຂຶ້ນ ເພື່ອພະນັກງານຂອງຂະແໜງການທີ່ກ່ຽວຂ້ອງ, ແຕ່ພວກເຂົາ ລົ້ມເຫຼວ ໃນການນຳເອົາຂໍ້ຄິດລິເລີ່ມໃນລະດັບຂອງພວກເຂົາ ເນື່ອງຈາກພວກເຂົາບໍ່ມີຄວາມເປັນເຈົ້າການ ໃນການປະຕິບັດ ວຽກງານທີ່ສຳຄັນເຫຼົ່ານີ້. ມີພຽງພະນັກງານຂອງຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມພາສີ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມອາຫານ ແລະ ຢາ ທີ່ໄດ້ສ້າງຕັ້ງໂຄງສ້າງທີ່ຈຳເປັນ (ແຕ່ງຕັ້ງໜ່ວຍງານ TIU) ພາຍໃຕ້ການຊີ້ນຳ ຂອງພະນັກງານອາວຸໂສ (ຂັ້ນຫົວໜ້າ/ຮອງຫົວໜ້າກົມ) ແມ່ນສາມາດເຮັດໃຫ້ມີຄວາມຄືບໜ້າຢ່າງຊັດເຈນ. ຄວາມ ເປັນເຈົ້າການຂອງການຄະນະກົມ ແລະ ຄວາມພະຍາຍາມຢ່າງຕໍ່ເນື່ອງ ໃນການສ້າງຂີດຄວາມສາມາດຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແມ່ນໝາກຫົວໃຈສຳຄັນຕໍ່ກັບການຈັດຕັ້ງປະຕິບັດທີ່ປະສົບຜົນສຳເລັດ ຂອງບັນດາຂໍ້ຄິດລິເລີ່ມວຽກ ງານອຳນວຍຄວາມສະດວກທາງດ້ານການຄ້າພາຍໃຕ້ແຜນດຳເນີນ ຢູ່ຂະແໜງການເຫຼົ່ານີ້.

### 4.15 ລະດັບຄວາມສາມາດທີ່ແຕກຕ່າງກັນຂອງຂະແໜງການ ເຮັດໃຫ້ການປະຕິບັດຮ່ວມກັນມີຄວາມລ່າຊ້າ

ໃນຂະນະທີ່ການເຊື່ອມໂຍງແມ່ນເປັນປະໂຫຍດໃນການຈັດຕັ້ງປະຕິບັດແຜນການເຊື່ອມໂຍງໃດໆ, ແຕ່ຈະມີຄວາມສ່ຽງທີ່ຈະຖືກຢຸດຕິ ຖ້າໜ່ວຍງານທີ່ເປັນຄູ່ຮ່ວມງານ ບໍ່ສາມາດປະຕິບັດວຽກງານໃຫ້ມີຄວາມຄືບໜ້າໄດ້. ສິ່ງນີ້ເຫັນໄດ້ຊັດເຈນ ຈາກການພັດທະນາແຜນງານວຽກງານບໍລິຫານຄວາມສ່ຽງທີ່ເຊື່ອມໂຍງ ຊຶ່ງກົມປູກຝັງ ບໍ່ສາມາດປະຕິບັດວຽກງານໃຫ້ທັນກັບຂະແໜງການອື່ນ ເນື່ອງຈາກຄວາມຈຳກັດທາງຂີດຄວາມສາມາດ ແລະ ການຊັບຊ້ອນພະນັກງານ. ນອກຈາກນີ້, ເນື່ອງຈາກການປະຕິບັດແຜນງານຢູ່ກົມປູກຝັງ ສ່ວນໃຫຍ່ແມ່ນຈຳກັດຢູ່ຂັ້ນແຂວງ, ພວກເຂົາ ຈຶ່ງບໍ່ສາມາດນຳເອົາແຜນງານໄປດຳເນີນການຢ່າງວ່ອງໄວ. ຄວນມີແຜນສຳຮອງອື່ນສຳລັບສະຖານະການດັ່ງກ່າວ ເພື່ອໃຫ້ຂະແໜງການອື່ນສາມາດດຳເນີນການຕໍ່ໄປ ໂດຍບໍ່ມີຂໍ້ຈຳກັດ ຫຼື ອາດກ່ຽວຂ້ອງກັບຫ້ອງການຢູ່ຂັ້ນແຂວງ ໂດຍກົງ ໃນການຈັດຕັ້ງປະຕິບັດ.

### 4.16 ການທົບທວນຄືນກາງສະໄໝ ມີຄວາມສຳຄັນຕໍ່ການແກ້ໄຂທິດທາງໄດ້ຢ່າງຖືກຕ້ອງ

ແຜນດຳເນີນງານ ໄດ້ກຳນົດໃຫ້ມີການທົບທວນຄືນກາງສະໄໝຢ່າງລະອຽດໃນລະຫວ່າງປີ 2020 ຊຶ່ງບໍ່ສາມາດໄດ້ຮັບການດຳເນີນການທົບທວນຄືນ ເນື່ອງຈາກຂໍ້ຈຳກັດຫຼາຍຢ່າງທີ່ເກີດຈາກການລະບາດຂອງພະຍາດ. ການຂາດການທົບທວນຄືນກາງສະໄໝ ເຮັດໃຫ້ຄະນະກຳມະການ NTFC ແລະ ກອງເລຂາ TFS ບໍ່ມີຂໍ້ມູນສຳຄັນທີ່ຈຳເປັນໃນການປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດໃນໄລຍະກາງສະໄໝ ແລະ ປັດໄຈຕ່າງໆທີ່ເປັນສິ່ງກີດຂວາງການຈັດຕັ້ງປະຕິບັດ ເພື່ອໃຫ້ຄະນະກຳມະການ NTFC ແລະ ກອງເລຂາ TFS ແລະ ຄູ່ຮ່ວມຈັດຕັ້ງປະຕິບັດ ສາມາດແກ້ໄຂທິດທາງໄດ້ຢ່າງຖືກຕ້ອງ.

# 5 ຂໍ້ສະເໜີແນະ ແລະ ແຜນໃນຕໍ່ໜ້າ

ອີງຕາມບົດຮຽນທີ່ຖອດຖອນໄດ້, ຂໍ້ສະເໜີທີ່ສຳຄັນຈຳນວນໜຶ່ງ ສຳລັບແຜນຍຸດທະສາດໃນອານາຄົດ ມີດັ່ງລຸ່ມນີ້:

## 5.1 ການສ້າງຄວາມເຂັ້ມແຂງໃຫ້ກອງເລຂາ TFCS

ໃນຂະນະທີ່ກົມການນຳເຂົ້າ ແລະ ສົ່ງອອກ ມີບົດບາດທີ່ໜ້າຊົມເຊີຍ ໃນຖານະເປັນກອງເລຂາ TFCS ແຕ່ຍັງບໍ່ມີຄວາມພ້ອມທີ່ພຽງພໍ. ຈຳເປັນຕ້ອງໄດ້ມີການຈັດສັນຄືນໃໝ່ ດ້ວຍການເພີ່ມພະນັກງານ ແລະ ມີພະນັກງານຂັ້ນຮອງຫົວໜ້າກົມທີ່ໄດ້ຮັບການມອບໝາຍສະເພາະ ເພື່ອຮັບຜິດຊອບການຈັດຕັ້ງປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ດຳເນີນການຕິດຕາມ ແລະ ປະສານງານທັງໝົດທີ່ຈຳເປັນເພື່ອຈຸດປະສົງດັ່ງກ່າວ. ນອກຈາກນີ້, ຕ້ອງມີງົບປະມານທີ່ພຽງພໍໃຫ້ແກ່ກອງເລຂາ ສຳລັບຈຸດປະສົງດັ່ງກ່າວ ເນື່ອງຈາກຈະຕ້ອງໄດ້ປະສານງານກັບຄະນະກຳມະການ PTFCs ຢູ່ບັນດາແຂວງ ແລະ ຕ້ອງສະໜັບສະໜູນຄວາມພະຍາຍາມຂອງພວກເຂົາໃນການຈັດຕັ້ງປະຕິບັດ.

## 5.2 ການສ້າງຄວາມເຂັ້ມແຂງໃນການລາຍງານ ແລະ ຕິດຕາມ

ຕ້ອງຮຽກຮ້ອງໃຫ້ມີການລາຍງານຄວາມຄືບໜ້າເປັນປົກກະຕິ ຈາກທຸກຂະແໜງການທີ່ກ່ຽວຂ້ອງຕາມແບບຟອມທີ່ກຳນົດໄວ້ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂອງທຸກຂະແໜງການທີ່ກ່ຽວຂ້ອງ ຢ່າງໃກ້ຊິດ. ໃນກໍລະນີມີການປະຕິບັດບໍ່ຖືກຕ້ອງ, ບັນຫາດັ່ງກ່າວ ຕ້ອງໄດ້ຖືກຍົກຂຶ້ນໃນກອງປະຊຸມຂອງຄະນະກຳມະການ NTFC. ການພັດທະນາແຜນປະຕິບັດງານ DAP ຍັງເປັນປະໂຫຍດ ເພື່ອບັນລຸຕາມຈຸດປະສົງຂອງແຜນດຳເນີນງານ, ການວາງແຜນ ແລະ ການກຳນົດເວລາ ສຳລັບໜ້າວຽກຕ່າງໆ ຈະຊ່ວຍໃນການຕິດຕາມ. ໜ້າວຽກ ເຊັ່ນ ການຈັດຕັ້ງປະຕິບັດສັນຍາ WTO-TFA ຊຶ່ງເປັນຂໍ້ຜູກມັດທີ່ມີກຳນົດເວລາ ຕ້ອງໄດ້ຮັບການຕິດຕາມຢ່າງໃກ້ຊິດ ໂດຍຄະນະກຳມະການ NTFC ຜ່ານການລາຍງານຄວາມຄືບໜ້າເປັນປົກກະຕິ. ການຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດສັນຍາ WTO-TFA ຕ້ອງເປັນວາລະສຳຄັນໃນກອງປະຊຸມ, ເນັ້ນໜັກສິ່ງທ້າທາຍທີ່ພົບພໍ້ ຫຼື ຄວາມຊັກຊ້າໃນການປະຕິບັດ ໃນສ່ວນຂະແໜງການທີ່ຮັບຜິດຊອບ. ອາດສ້າງຕັ້ງອະນຸກຳມະການເພື່ອຕິດຕາມການຈັດຕັ້ງປະຕິບັດສັນຍາ WTO-TFA ໃນລະຫວ່າງກອງປະຊຸມຂອງຄະນະກຳມະການ NTFC ຊຶ່ງຕ້ອງຊ່ວຍຢ່າງຫ້າວຫັນ ໃນການຈັດຕັ້ງປະຕິບັດສັນຍາ WTO-TFA ແລະ ລາຍງານຄວາມຄືບໜ້າຕໍ່ຄະນະກຳມະການ NTFC.

## 5.3 ກຳນົດໃຫ້ມີການລາຍງານເປັນປົກກະຕິ ຢູ່ຂັ້ນແຂວງ

ໃນຂະນະທີ່ຄະນະກຳມະການ PTFCs ໄດ້ປະກອບສ່ວນໃນການປັບປຸງການປະສານງານຢູ່ຂັ້ນແຂວງ, ແຕ່ຍັງບໍ່ມີການຕິດຕາມການຈັດຕັ້ງປະຕິບັດແຜນດຳເນີນງານທີ່ມີປະສິດທິພາບ ເນື່ອງຈາກບໍ່ມີກົນໄກການລາຍງານທີ່ກຳນົດໄວ້ໃນຢູ່ຂັ້ນແຂວງນັ້ນ. ຄະນະກຳມະການ PTFCs ສຸມໃສ່ປຶກສາຫາລືບັນຫາການຈັດຕັ້ງປະຕິບັດຕົວຈິງ ຫຼາຍກວ່າຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານ TFRM ຫຼື ແມ່ນແຕ່ຄວາມຄືບໜ້າໃນການບັນລຸຕາມເປົ້າໝາຍທີ່ກຳນົດໄວ້ໃນຄຳສັ່ງຂອງທ່ານນາຍົກລັດຖະມົນຕີ. ບໍ່ໄດ້ຮັບການລາຍງານຄວາມຄືບໜ້າໃດໆຈາກຄະນະກຳມະການ PTFCs ກ່ຽວກັບການຈັດຕັ້ງປະຕິບັດແຜນດຳເນີນງານ TFRM ຢູ່ຂັ້ນແຂວງ. ເພື່ອຕິດຕາມການຈັດຕັ້ງປະຕິບັດແຜນວຽກອຳນວຍຄວາມສະດວກທາງດ້ານການຄ້າ, ຕ້ອງມີການກຳນົດໃຫ້ມີການລາຍງານເປັນປົກກະຕິ ເພື່ອແຈ້ງຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ຢູ່ແຂວງ ເປັນແຕ່ລະເດືອນ.

### 5.4 ຍຸດທະສາດທີ່ຊັດເຈນເພື່ອເຊື່ອມໂຍງກັບພາກທຸລະກິດ

ພາກທຸລະກິດ ຕ້ອງໄດ້ຮັບການມີສ່ວນຮ່ວມໃນທຸກລະດັບ ເພື່ອການຮ່ວມມືທີ່ທ້າວທັນໃນການປະຕິຮູບ ໃນການສ້າງນະໂຍບາຍຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການຂອງພວກເຂົາ, ແລະ ພວກເຂົາຈະສາມາດໄດ້ຮັບຜົນປະໂຫຍດ. ການສືບຕໍ່ການມີສ່ວນຮ່ວມ ແລະ ການສ້າງຂີດຄວາມສາມາດໃຫ້ແກ່ພາກທຸລະກິດ ແມ່ນສຳຄັນເພື່ອຄວາມປະສິດທິພາບຂອງບັນດາຂໍ້ຄິດລິເລີ່ມການອຳນວຍຄວາມສະດວກທາງດ້ານການຄ້າ. ສິ່ງນີ້ ຈະນຳໄປສູ່ການນຳໃຊ້ບັນດາມາດຕະການປະຕິຮູບທີ່ດີຂຶ້ນກວ່າເກົ່າ. ບັນຫາພົ້ນເດັ່ນທີ່ຍົກຂຶ້ນໂດຍພາກທຸລະກິດ ຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ຕ້ອງໄດ້ຮັບການສັງລວມຢ່າງລະມັດລະວັງ ແລະ ດຳເນີນການໂດຍຄະນະກຳມະການ NTFC. ບັນຫາເຫຼົ່ານີ້ ຕ້ອງໄດ້ຮັບການຕິດຕາມຢ່າງໃກ້ຊິດ ແລະ ແກ້ໄຂ ໂດຍຜ່ານການປຶກສາຫາລືກັບພາກທຸລະກິດ. ຕ້ອງມີການປະສານສົມທົບກັບກອງເລຂາກອງປະຊຸມທຸລະກິດລາວ (LBF) ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເພື່ອຈັດສັນບັນຫາເຫຼົ່ານີ້ ຢ່າງເໝາະສົມ ແລະ ຫຼີກລ້ຽງຄວາມຊ້ຳຊ້ອນ.

### 5.5 ການດຳເນີນການການຄ້າຂ້າມແດນແບບບໍ່ນຳໃຊ້ເຈ້ຍ ຕ້ອງຖືກນຳໄປສູ່ຈຸດສູນກາງ

ບໍ່ມີຍຸດທະສາດທີ່ຊັດເຈນ ຫຼື ກຳນົດເວລາ ສຳລັບການຫັນເປັນການຄ້າແບບເປັນດີຈີຕອນ, ທຸລະກຳທາງເອເລັກໂຕຼນິກ ແລະ ລາຍເຊັນເອເລັກໂຕຼນິກ ແລະ ອື່ນໆ. ລັດຖະບານ ຄວນໃຫ້ສັດຕະຍະບັນສັນຍາ ວ່າດ້ວຍແຜນງານການອຳນວຍຄວາມສະດວກໃຫ້ແກ່ການຄ້າຂ້າມແດນແບບບໍ່ນຳໃຊ້ເຈ້ຍຂອງອົງການ UNESCAP ເພື່ອໃຫ້ບັນລຸຈຸດປະສົງໃນການເຮັດໃຫ້ຂະບວນການຕ່າງໆທີ່ຕິດພັນກັບການຄ້າຂ້າມແດນ ເປັນແບບອັດຕະໂນມັດ, ລິເລີ່ມທັນທີດ້ວຍການດຳເນີນການແຈ້ງພາສີແບບບໍ່ນຳໃຊ້ເຈ້ຍ ແລະ ຂະຫຍາຍການນຳໃຊ້ລະບົບ LNSW ໄປສູ່ທຸກຂະແໜງການທີ່ສຳຄັນ ລວມທັງການປະກອບເອກະສານສົ່ງອອກ. ສັນຍາດັ່ງກ່າວ ໄດ້ໃຫ້ຄຳແນະນຳເປັນແຕ່ລະຂັ້ນຕອນລະອຽດ ເພື່ອພັດທະນາການຄ້າຂ້າມແດນແບບບໍ່ນຳໃຊ້ເຈ້ຍ.

### 5.6 ການປັບຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ສອດຄ່ອງກັບຂໍ້ຄິດລິເລີ່ມອື່ນໆ ໃນລະດັບຫຼາຍຝ່າຍ ແລະ ສອງຝ່າຍ

ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ຕ້ອງສອດຄ່ອງກັບຂໍ້ຄິດລິເລີ່ມການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ວາງໄວ້ພາຍໃຕ້ອາຊຽນ, ການຮ່ວມມືໃນອານຸພາກລຸ່ມແມ່ນ້ຳຂອງ (GMS), ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB) ແລະ ໂຄງການຊ່ວຍເຫຼືອສອງຝ່າຍອື່ນໆ ສຳລັບການເຊື່ອມສານຄວາມພະຍາຍາມ ແລະ ການນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ. ຕ້ອງລວມເອົາກະຊວງການຕ່າງປະເທດ ເຂົ້າເປັນສະມາຊິກຂອງຄະນະກຳມະການ NTFC ເພື່ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືຢູ່ຊາຍແດນ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ໃນລະດັບສອງຝ່າຍ ແລະ ພາກພື້ນ.

### 5.7 ການເຊື່ອມໂຍງວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ເຂົ້າກັບ ແຜນການຂົນສົ່ງ ແລະ ໂລຈິສຕິກ

ຈາກຜົນສະທ້ອນຂອງການສ້າງຕັ້ງຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ (NTTFC), ວຽກງານຂົນສົ່ງ, ໂລຈິສຕິກ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນໄດ້ຮັບການຂັບເຄື່ອນໄປຄຽງຄູ່ກັນ ໂດຍມີການປະສານງານ ແລະ ການວາງແຜນ ພຽງເລັກໜ້ອຍ. ສະນັ້ນ, ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ຄັ້ງຕໍ່ໄປ ປີ 2023-2027 ຕ້ອງຄຳນຶງເຖິງແຜນການພັດທະນາການຂົນສົ່ງ ແລະ ໂລຈິສຕິກ ເພື່ອຕອບສະໜອງຄວາມຕ້ອງການຂອງວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ໃນທາງກັບກັນ. ຕົວຢ່າງ ແຜນຍຸດທະສາດໃໝ່ ຕ້ອງສຸມໃສ່ການອຳນວຍຄວາມສະດວກໃຫ້ແກ່ສິ່ງອຳນວຍຄວາມຕ່າງໆທີ່ຈະເຂົ້າມາ ເຊັ່ນ: ທ່າບົກ, ສະຖານີຂົນສົ່ງຕູ້ຄອນເທນເນີ້, ສະຖານີລົດໄຟ, ສູນກາງການຂົນສົ່ງຫຼາຍຮູບແບບ ແລະ ອື່ນໆ ເພື່ອໃຊ້ທ່າແຮງບົ່ມຊ້ອນຢ່າງເຕັມຮູບແບບ ແລະ ສະເໜີໃຫ້ເຊື່ອມໂຍງກັບສະຖານີຕູ້ສິນຄ້າ, ເຂດປຸງແຕ່ງການສົ່ງອອກ ແລະ ເຂດເສດຖະກິດພິເສດ.

### 5.8 ຄະນະກຳມະການ NTFC ຕິດຕາມການປະຕິບັດ ກ່ຽວກັບຂໍ້ສະເໜີແນະຂອງການທົບທວນຄືນມາດຕະການ NTM

ມີຂໍ້ສະເໜີແນະຕ່າງໆ ໃນບົດທົບທວນຄືນມາດຕະການ NTMs ທີ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ແລະ ໃນຫຼາຍກໍລະນີ ບໍ່ໄດ້ຮັບການພິຈາລະນາຕັດສິນ. ໂດຍປົກກະຕິແລ້ວ, ຂະແໜງການທີ່ກ່ຽວຂ້ອງ ບໍ່ມີແນວໂນ້ມທີ່ຈະປ່ຽນແປງ ແລະ ເຮັດໃຫ້ຂໍ້ສະເໜີແນະໃນການລົບລ້າງ ຫຼື ປັບປຸງ NTMs ຍັງບໍ່ໄດ້ຖືກຍອມຮັບ. ເພື່ອຕອບໂຕ້ສະຖານະການດັ່ງກ່າວ, ຂໍ້ສະເໜີແນະຂອງການທົບທວນຄືນມາດຕະການ NTMs ຕ້ອງໄດ້ສົ່ງໃຫ້ຄະນະກຳມະການ NTFC ເພື່ອຕັດສິນວ່າ ຖ້າມີຄວາມຈຳເປັນຕ້ອງໃຫ້ຂະແໜງການຍອມຮັບ ແລະ ກຳນົດທິດຊີ້ນຳທີ່ເໝາະສົມ ສຳລັບການປະຕິບັດຕາມເວລາທີ່ກຳນົດໄວ້. ຈະສາມາດປະເມີນຄວາມຮີບດ່ວນຂອງການປະຕິບັດ ແລະ ອາດຢູ່ໃນຖານະເພື່ອຕິດຕາມການຈັດຕັ້ງປະຕິບັດຂອງພວກເຂົາ. ໃນຄວາມເປັນຈິງແລ້ວ, ກົມການນຳເຂົ້າ ແລະ ສົ່ງອອກ ຕ້ອງສົ່ງບົດສະຫຼຸບຂໍ້ສະເໜີຕ່າງໆໃຫ້ແກ່ຄະນະກຳມະການ NTFC ຕາມບົດທົບທວນຄືນມາດຕະການ NTMs ໃນ 5 ປີຜ່ານມາ ພ້ອມກັບຄວາມຄືບໜ້າໃນການປະຕິບັດດັ່ງກ່າວ ຫຼື ລໍຖ້າ ເພື່ອຊີ້ນຳການຈັດຕັ້ງປະຕິບັດຕາມກຳນົດເວລາຂອງພວກເຂົາ. ນອກຈາກນີ້, ໃນອານາຄົດ ຂະແໜງການທີ່ກ່ຽວຂ້ອງຕ້ອງສົ່ງຮ່າງລະບຽບການທັງໝົດ ທີ່ກຳນົດມາດຕະການ NTMs ຫຼື ມາດຕະການ TBT ໃໝ່ ໃຫ້ຄະນະກຳມະການ NTFC ເພື່ອຂໍຄຳເຫັນ/ທິດຊີ້ນຳ ເພື່ອຮັບປະກັນວ່າລະບຽບການ ຫຼື ມາດຕະການເຫຼົ່ານີ້ ຈະບໍ່ກາຍເປັນສິ່ງກີດຂວາງທາງດ້ານການຄ້າ.

### 5.9 ການປະຕິບັດສະເພາະທີ່ແນະນຳ ເພື່ອບັນລຸບັນດາຂໍ້ຜູກມັດທີ່ນອນໃນສັນຍາ WTO-TFA

ທ້າຍສຸດນີ້, ຕ້ອງມີການຊຸກຍູ້ແບບພິເສດ ເພື່ອຈັດຕັ້ງປະຕິບັດບັນດາຂໍ້ຜູກມັດທີ່ນອນໃນສັນຍາ WTO-TFA ໃຫ້ໄດ້ຢ່າງເຕັມສ່ວນ. ເພື່ອບັນລຸຈຸດປະສົງດັ່ງກ່າວ, ບົດສະຫຼຸບ ກ່ຽວກັບຂົງເຂດທີ່ເປັນຊ່ອງຫວ່າງ, ຕ້ອງມີຂະແໜງການຮັບຜິດຊອບ ແລະ ແຜນປະຕິບັດ ເພື່ອຈັດຕັ້ງປະຕິບັດມາດຕະການທີ່ນອນໃນສັນຍາ WTO-TFA ທີ່ຍັງເຫຼືອ ຊຶ່ງໄດ້ກຳນົດຢູ່ໃນຕາຕະລາງຂ້າງລຸ່ມ. ຈຳນວນ 19 ມາດຕະການເຫຼົ່ານີ້ ແມ່ນເປັນການຈັດຕັ້ງປະຕິບັດບາງສ່ວນ. ໃນນີ້, ໝວດ A ມີ 6 ມາດຕະການ, ໝວດ B ມີ 5 ມາດຕະການ ແລະ ໝວດ C ມີ 8 ມາດຕະການ.

| ລ/ດ | ໝວດ ແລະ ຂໍ້ຜູກມັດ | ຂົງເຂດທີ່ເປັນຊ່ອງຫວ່າງ | ຂະແໜງການ ຮັບຜິດຊອບ | ການປະຕິບັດທີ່ແນະນຳ |
|---|---|---|---|---|
| **ໝວດ A** | | | | |
| 1 | ການແຕ່ງຕັ້ງຈຸດສອບຖາມ ໂດຍຂະແໜງການທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນຂ່າວສານທີ່ຕິດພັນກັບການຄ້າ | ມີພຽງກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມມາດຕະຖານ ແລະ ວັດແທກ ທີ່ມີຈຸດສອບຖາມ. ສ່ວນກະຊວງອື່ນໆ ແມ່ນບໍ່ມີ. ນອກຈາກນີ້, ບໍ່ມີຂອບເຂດເວລາທີ່ກຳນົດໃນການຕອບຄຳຖາມ | ກົມພາສີ, ກົມອາຫານ ແລະ ຢາ, ກົມຂົນສົ່ງ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ກົມຄຸ້ມຄອງບໍ່ແຮ່ | ກະຊວງທີ່ກ່ຽວຂ້ອງ ເພື່ອສ້າງຕັ້ງຈຸດສອບຖາມ ແລະ ກຳນົດລະບຽບ ສຳລັບການຕອບຄຳຖາມແບບໄວ ແລະ ຕາມກຳນົດເວລາ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 2 | ຂໍ້ກຳນົດສຳລັບການອຸທອນ ແລະ ການທົບທວນຄືນການແກ້ໄຂຂໍ້ຮ້ອງຮຽນ | ກົດໝາຍພາສີ ສະບັບປັບປຸງ ກຳນົດກົນໄກການອຸທອນ ຕໍ່ກັບຄຳສັ່ງຂອງພາສີແຂວງ ແລະ ຫົວໜ້າກົມພາສີ | ກົມພາສີ | ກົມພາສີ ເພື່ອຮ່າງລະບຽບລະອຽດ ສຳລັບການສະເໜີການອຸທອນ ແລະ ການສ້າງຕັ້ງຄະນະກຳມະການອຸທອນ ຂັ້ນສູນກາງ ແລະ ແຂວງ. |

| ລ/ດ | ໝວດ ແລະ ຂໍ້ຜູກມັດ | ຂົງເຂດທີ່ເປັນຊ່ອງຫວ່າງ | ຂະແໜງການ ຮັບຜິດຊອບ | ການປະຕິບັດທີ່ແນະນຳ |
|---|---|---|---|---|
| 3 | ແຈ້ງການທີ່ຈຳເປັນ ສຳລັບການເພີ່ມທະວີການຄວບຄຸມ ຫຼື ການກວດກາ | ຜູ້ຄ້າບໍ່ໄດ້ຮັບຂໍ້ມູນລ່ວງໜ້າ ກ່ຽວກັບການເພີ່ມທະວີການກວດກາ ຂອງຂະແໜງການທີ່ກ່ຽວຂ້ອງທີ່ປະຈຳດ່ານ | ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ ແລະ ກົມມາດຕະຖານ ແລະ ວັດແທກ | ຈຳເປັນຕ້ອງສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມທຸກຄັ້ງທີ່ມີການອອກແຈ້ງການ ເພື່ອເພີ່ມທະວີການກວດກາ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 4 | ການກັກກັນສິນຄ້າ ທີ່ຕ້ອງແຈ້ງຜູ້ຂົນສົ່ງ/ຜູ້ນຳເຂົ້າ/ຜູ້ສົ່ງອອກ ຊາບທັນທີ | ຜູ້ຄ້າທີ່ກ່ຽວຂ້ອງບໍ່ໄດ້ຮັບຂໍ້ມູນ ຖ້າສິນຄ້າຂອງຕົນ ໄດ້ຖືກກັກກັນ ໂດຍຂະແໜງພາສີ ສຳລັບການສືບສວນສອບສວນ ຫຼື ກວດກາ | ກົມພາສີ | ກົມພາສີ ເພື່ອອອກຄຳແນະນຳສະເພາະ ເພື່ອແຈ້ງຜູ້ຄ້າ ແລະ ນາຍໜ້າພາສີ ຊາບທັນທີ ໃນກໍລະນີສິນຄ້າຖືກກັກກັນ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 5 | ການຍື່ນເອກະສານລ່ວງໜ້າ ແລະ ການດຳເນີນການກ່ອນສິນຄ້າມາຮອດດ່ານ | ໃນຂະນະທີ່ມີສິ່ງອຳນວຍຄວາມສະດວກໃນການຍື່ນເອກະສານແຈ້ງພາສີລ່ວງໜ້າ, ແຕ່ການດຳເນີນການກ່ອນສິນຄ້າມມາຮອດດ່ານ ມີຍັງເປັນໄປບໍ່ໄດ້ ເນື່ອງຈາກໄດ້ຮຽກຮ້ອງໃຫ້ມີການຍື່ນເອກະສານແຈ້ງພາສີ ແລະ ເອກະສານປະກອບເປັນເຈ້ຍທີ່ພິມອອກມາ ເມື່ອສິນຄ້າມາຮອດດ່ານ | ກົມພາສີ | ໃຫ້ລຶບລ້າງຂໍ້ກຳນົດໃນການກວດກາ ແລະ ອະນຸຍາດໃຫ້ມີການອັບໂຫຼດເອກະສານປະກອບທີ່ເປັນສະແກນ ເພື່ອດຳເນີນການແຈ້ງພາສີກ່ອນສິນຄ້າມາຮອດດ່ານ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 6 | ຂໍ້ກຳນົດສຳລັບການເຄື່ອນຍ້າຍສິນຄ້ານຳເຂົ້າມາໃນປະເທດ ພາຍໃຕ້ການຄວບ | ການເຄື່ອນຍ້າຍສິນຄ້ານຳເຂົ້າພາຍໃນປະເທດ ແມ່ນບໍ່ສະດວກ | ກົມພາສີ | ຕ້ອງໄດ້ພັດທະນາລະບົບການຜ່ານແດນພາຍໃນ ທີ່ເຊື່ອມຕໍ່ກັບໂມດູນການຂົນສົ່ງ ແລະ ຜ່ານແດນ ເພື່ອການຄວບຄຸມທີ່ມີປະສິດທິພາບຂອງສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍໄປສະຖານີຂົນສົ່ງຕູ້ຄອນເທນເນີ້, ເຂດເສດຖະກິດພິເສດ, ເຂດໂລຈິສຕິກ ເພື່ອກວດປ່ອຍພາຍຫຼັງ. |
| **ໝວດ B** | | | | |
| 1 | ໂອກາດໃນການປະກອບຄຳເຫັນ ແລະ ຂໍ້ມູນຂ່າວສານກ່ອນມີຜົນບັງຄັບໃຊ້ | ຍົກເວັ້ນກົດໝາຍ ແລະ ລະບຽບການອື່ນໆ ແມ່ນບໍ່ໄດ້ຖືກສົ່ງໃຫ້ສາທາລະນະ ກ່ອນມີຜົນບັງຄັບໃຊ້ | ທຸກຂະແໜງການທີ່ກ່ຽວຂ້ອງ | ກະຊວງຍຸຕິທຳ ຕ້ອງອອກຄຳແນະນຳ ໃຫ້ນຳສົ່ງຮ່າງກົດລະບຽບ ແລະ ລະບຽບການຕ່າງໆລ່ວງໜ້າ ແກ່ພາກທຸລະກິດ ກ່ອນການອອກນິຕິກຳ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |

| ລ/ດ | ໝວດ ແລະ ຂໍ້ຜູກມັດ | ຂົງເຂດທີ່ເປັນຊ່ອງຫວ່າງ | ຂະແໜງການ ຮັບຜິດຊອບ | ການປະຕິບັດທີ່ແນະນຳ |
|---|---|---|---|---|
| 2 | ການປຶກສາຫາລື ກັບ ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ຜູ້ຄ້າ ແລະ ນາຍໜ້າພາສີ | ຍົກເວັ້ນກົມການນຳເຂົ້າ ແລະ ສົ່ງອອກ, ຂະແໜງການສ່ວນໃຫຍ່ ຈັດກອງປະຊຸມກັບພາກທຸລະກິດ ພຽງປີລະຄັ້ງ. | ທຸກຂະແໜງການທີ່ກ່ຽວຂ້ອງ | ທຸກຂະແໜງການ ເພື່ອສ້າງຕັ້ງຄະນະກຳມະການປຶກສາຫາລື ຫຼື ວິຊາການ ໂດຍມີຕາງໜ້າຈາກພາກທຸລະກິດ ເຂົ້າຮ່ວມ ຊຶ່ງຄວນຈັດປະຊຸມໃນທຸກໆໄຕມາດ (ມາດຕະການນີ້ ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 3 | ໂອກາດໃນການທົດສອບຄັ້ງທີສອງ | ໃນຂະນະທີ່ໂອກາດໃນການທົດສອບຄັ້ງທີສອງ ໄດ້ຮັບການຜັນຂະຫຍາຍໂດຍກົມອາຫານ ແລະ ຢາ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມມາດຕະຖານ ແລະ ວັດແທກ ໃຫ້ແກ່ຜູ້ທີ່ບໍ່ໄດ້ຮັບຄວາມເປັນທຳ, ແຕ່ບໍ່ມີຂໍ້ກຳນົດທີ່ເປັນນິຕິກຳ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດດັ່ງກ່າວ. | ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ ແລະ ກົມມາດຕະຖານ ແລະ ວັດແທກ | ຕ້ອງມີຂໍ້ກຳນົດພາຍໃຕ້ກົດໝາຍ ຫຼື ກົດລະບຽບ ເພື່ອໃຫ້ໂອກາດສຳລັບການທົດສອບຄັ້ງທີສອງ ແລະ ການພິຈາລະນາຜົນ ເພື່ອການຕັດສິນໃຈ. |
| 4 | ການຈັດສົ່ງດ່ວນ | ບໍ່ມີແຜນງານສະເພາະ ສຳລັບການກວດປ່ອຍສິນຄ້າຈັດສົ່ງດ່ວນ | ກົມພາສີ | ກົມພາສີ ເພື່ອພັດທະນາຂັ້ນຕອນພິເສດ ສຳລັບການກວດປ່ອຍເຄື່ອງຂອງ, ການຂົນສົ່ງດ່ວນ ແບບໄວ |
| 5 | ລະບົບແຈ້ງພາສີປະຕູດຽວ | ລະບົບ LNSW ກວມເອົາພຽງສອງກົມ ແລະ ໃນຂອບເຂດທີ່ຈຳກັດເຊັ່ນກັນ. ແມ້ກະທັ້ງ ການຂະຫຍາຍຕາມພູມີສາດ (ດ່ານ) ກໍ່ຍັງຈຳກັດຫຼາຍ. | ບໍລິສັດຜູ້ພັດທະນາລະບົບ LNSW, ກົມພາສີ ແລະ ຂະແໜງການອອກອະນຸຍາດອື່ນໆ | ຮີບຮ້ອນຂະຫຍາຍການນຳໃຊ້ລະບົບ LNSW |
| **ໝວດ C** | | | | |
| 1 | ການບໍລິຫານຄວາມສ່ຽງ | ຍົກເວັ້ນກົມພາສີ, ບໍ່ມີຂະແໜງການທີ່ມີໜ່ວຍງານປະຈຳດ່ານອື່ນ ທີ່ນຳໃຊ້ຫຼັກການບໍລິຫານຄວາມສ່ຽງ ເຂົ້າໃນການກວດກາຢູ່ດ່ານຊາຍແດນ. | ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມປູກຝັງ | ກົມພາສີ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອເລີ່ມການກວດກາສິນຄ້າຢູ່ດ່ານ ຕາມຄວາມສ່ຽງ ເພື່ອປ່ຽນແທນການກວດກາແບບ 100%. |
| 2 | ການກວດສອບຄືນຫຼັງການກວດປ່ອຍສິນຄ້າ | ຍົກເວັ້ນກົມພາສີ, ບໍ່ມີຂະແໜງການທີ່ມີໜ່ວຍງານປະຈຳດ່ານອື່ນ ທີ່ຈັດຕັ້ງປະຕິບັດວຽກງານກວດສອບຄືນຫຼັງການກວດປ່ອຍສິນຄ້າ | ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມປູກຝັງ | ກົມພາສີ ເປັນເຈົ້າການສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ກວດສອບຄືນຫຼັງການກວດປ່ອຍສິນຄ້າ, ການກວດກາການຈຳໜ່າຍຫຼັງການນຳເຂົ້າ ເພື່ອຜັນຂະຫຍາຍການນຳໃຊ້ການບໍລິຫານຄວາມສ່ຽງ. |

| ລ/ດ | ໝວດ ແລະ ຂໍ້ຜູກມັດ | ຂົງເຂດທີ່ເປັນຊ່ອງຫວ່າງ | ຂະແໜງການ ຮັບຜິດຊອບ | ການປະຕິບັດທີ່ແນະນຳ |
|---|---|---|---|---|
| 3 | ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບຜູ້ປະກອບເອອີໂອ | ໃນຂະນະທີ່ແຜນງານເອອີໂອ ໄດ້ຮັບການຈັດຕັ້ງປະຕິບັດ, ຍັງບໍ່ທັນມີຜູ້ປະກອບການໃດ ທີ່ໄດ້ເງື່ອນໄຂເພື່ອໄດ້ຮັບການຮັບຮອງໃຫ້ເປັນຜູ້ປະກອບເອອີໂອ. | ກົມພາສີ | ແຜນງານຜູ້ປະກອບການເອອີໂອ ຕ້ອງໄດ້ຮັບການປັບປຸງ ເພື່ອສ້າງເປັນລະດັບຜູ້ປະກອບການເອອີໂອ ທີ່ໄດ້ຮັບຜົນປະໂຫຍດ ອີງຕາມສະຖານະທີ່ພວກເຂົາໄດ້ຮັບອະນຸຍາດ. |
| 4 | ການຮ່ວມມືຂອງຂະແໜງການ ຢູ່ດ່ານຊາຍແດນ | ບໍ່ມີການແລກປ່ຽນຂໍ້ມູນ ຫຼື ການປະສານງານ ລະຫວ່າງຂະແໜງການລັດທີ່ກ່ຽວຂ້ອງ ໃນການກວດປ່ອຍສິນຄ້າ. ການກວດກາຈຸດດຽວ (SSI) ເພື່ອການຮ່ວມມືກັບພາຍໃນຍັງບໍ່ໄດ້ຮັບການຂະຫຍາຍ ນອກຈາກດ່ານແດນສະຫວັນ-ລາວບາວ. | ກົມພາສີ, ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ, ກົມປູກຝັງ ແລະ ກົມມາດຕະຖານ ແລະ ວັດແທກ | ຕ້ອງໄດ້ພັດທະນາຂັ້ນຕອນ SOP ກ່ຽວກັບການບໍລິຫານຄວາມສ່ຽງ ແລະ ການຮ່ວມມືຢູ່ຊາຍແດນ ແລະ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ໂດຍໄວຕາມບົດບັນທຶກຄວາມເຂົ້າໃຈຮ່ວມ ທີ່ໄດ້ເຊັນລົງນາມໃນເດືອນ ທັນວາ 2022. ຕ້ອງຂະຫຍາຍການກວດກາ SSI ໄປສູ່ດ່ານອື່ນ. |
| 5 | ການທົບທວນຄືນຂໍ້ຮຽກຮ້ອງທາງດ້ານລະບຽບການ ແລະ ເອກະສານ | ຕ້ອງມີການທົບທວນຄືນຂໍ້ຮຽກຮ້ອງທາງດ້ານລະບຽບການ ແລະ ເອກະສານ ເພື່ອການກວດປ່ອຍສິນຄ້ານຳເຂົ້າ, ສົ່ງອອກ ແລະ ຜ່ານແດນ ທີ່ວ່ອງໄວ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃຫ້ແກ່ຜູ້ຄ້າ. | ທຸກຂະແໜງການທີ່ກ່ຽວຂ້ອງ | ຂໍ້ສະເໜີແນະຕາມບົດທົບທວນຄືນມາດຕະການ NTMs ແລະ ບົດລາຍງານ TRS ຕ້ອງໄດ້ຮັບການພິຈາລະນາ ເພື່ອເຮັດໃຫ້ຂັ້ນຕອນກະທັດຮັດ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາ. |
| 6 | ການຍອມຮັບເອກະສານປະກອບທີ່ເປັນສຳເນົາ | ຂະແໜງການທີ່ກ່ຽວຂ້ອງ ຕ້ອງຍອມຮັບເອກະສານປະກອບທີ່ເປັນເຈ້ຍ ຫຼື ເອເລັກໂຕນິກ ທີ່ຕ້ອງການຕາມລະບຽບການນຳເຂົ້າ, ສົ່ງອອກ ຫຼື ຜ່ານແດນ ໂດຍສະເພາະຖ້າເອກະສານຕົ້ນສະບັບ ແມ່ນຢູ່ນຳຂະແໜງການອື່ນແລ້ວ. | ທຸກຂະແໜງການທີ່ກ່ຽວຂ້ອງ | ຕ້ອງອອກຄຳແນະນຳຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ເພື່ອຍອມຮັບເອົາເອກະສານສຳເນົາ ຖ້າໄດ້ຮັບການຮັບຮອງໂດຍຂະແໜງການທີ່ຖືເອກະສານຕົ້ນສະບັບ, ແລະ ພ້ອມທັງຍອມຮັບເອົາເອກະສານເອເລັກໂຕນິກ (ມາດຕະການນີ້ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |
| 7 | ຂໍ້ກຳນົດຂອງການສົ່ງຄືນສິນຄ້າທີ່ຖືກປະຕິເສດ | ບາງຂະແໜງການ ອະນຸຍາດໃຫ້ສົ່ງກັບຄືນສິນຄ້າທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບ, ແຕ່ບໍ່ມີຄວາມສອດຄ່ອງ ຫຼື ຂໍ້ມູນເພື່ອສະໜັບສະໜູນ. | ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມມາດຕະຖານ ແລະ ວັດແທກ | ຕ້ອງອອກຄຳແນະນຳທີ່ຊັດເຈນ ເພື່ອອະນຸຍາດໃຫ້ສົ່ງຄືນສິນຄ້າທີ່ປະຕິບັດບໍ່ຖືກຕ້ອງ ແລະ ສະຖິຕິຂອງການອອກອະນຸຍາດດັ່ງກ່າວ ຕ້ອງໄດ້ເກັບກຳໄວ້. (ມາດຕະການນີ້ສາມາດເຮັດໄດ້ໂດຍບໍ່ມີຄວາມຫຍຸ້ງຍາກຫຼາຍ). |

| ລ/ດ | ໝວດ ແລະ ຂໍ້ຜູກມັດ | ຂົງເຂດທີ່ເປັນຊ່ອງຫວ່າງ | ຂະແໜງການ ຮັບຜິດຊອບ | ການປະຕິບັດທີ່ແນະນຳ |
|---|---|---|---|---|
| 8 | ຂໍ້ກຳນົດ ສຳລັບການຊຳລະສະສາງແບບເອເລັກໂຕຼນິກ | ໃນຂະນະທີ່ຂະແໜງພາສີ ສະເໜີສິ່ງອຳນວຍຄວາມສະດວກສຳລັບການຊຳລະສະສາງແບບເອເລັກໂຕຼນິກ ຜ່ານບັດ Smart Tax, ຫຼາຍຂະແໜງການຍັງເກັບຄ່າທຳນຽມຂອງຕົນດ້ວຍເງິນສົດ. ລະບົບ LNSW ສະເໜີສິ່ງອຳນວຍຄວາມສະດວກດັ່ງກ່າວ ແຕ່ການຂະຫຍາຍການນຳໃຊ້ ແມ່ນຊ້າຫຼາຍ. | ທຸກຂະແໜງການທີ່ກ່ຽວຂ້ອງ ຍົກເວັ້ນຂະແໜງພາສີ | ຕ້ອງມີສິ່ງອຳນວຍຄວາມສະດວກ ໃນການຍອມຮັບການຊຳລະຄ່າທຳນຽມ ແລະ ຄ່າບໍລິການອື່ນໆແບບເອເລັກໂຕຼນິກ ໂດຍການປຶກສາຫາລືກັບທະນາຄານ. ແລະ ຕ້ອງໄດ້ຮັບການລິເລີ່ມ ແທນການຊຳລະດ້ວຍເງິນສົດ. |
| | **ຈຳນວນມາດຕະການທີ່ມອບໃນສັນຍາ WTO-TFA ທັງໝົດ ທີ່ເປັນການຈັດຕັ້ງປະຕິບັດບາງສ່ວນ** | **19**<br>(ໝວດ A- 6<br>ໝວດ B- 5 ແລະ<br>ໝວດ C- 8) | | |

**ຕາຕະລາງ 5- ການປະຕິບັດທີ່ຈຳເປັນເພື່ອບັນລຸມາດຕະການທີ່ມອບໃນສັນຍາ WTO-TFA ທີ່ເປັນການຈັດຕັ້ງປະຕິບັດບາງສ່ວນ**

ໃນຂະນະທີ່ບາງມາດຕະການ ທີ່ເປັນມາດຕະການໃຫຍ່ ເຊັ່ນ: ລະບົບແຈ້ງພາສີປະຕູດຽວ, ການຮ່ວມມືຢູ່ດ່ານຊາຍແດນ, ການຊຳລະສະສາງແບບເອເລັກໂຕຼນິກ, ການບໍລິຫານຄວາມສ່ຽງ ແລະ ການກວດສອບຄືນຫຼັງການກວດປ່ອຍ ແລະ ອື່ນໆ ທີ່ຕ້ອງໄດ້ໃຫ້ເວລາ ແລະ ຄວາມພະຍາຍາມ ຈາກຫຼາຍຂະແໜງການໃນການຈັດຕັ້ງປະຕິບັດ, ສ່ວນມາດຕະການອື່ນ ຍັງບໍ່ທັນເປັນສິ່ງທ້າທາຍ ເນື່ອງຈາກໄດ້ມີການປະຕິບັດເປັນສ່ວນຫຼາຍແລ້ວ ແລະ ມາດຕະການດັ່ງກ່າວແມ່ນໃກ້ຈະສຳເລັດ. 8 ມາດຕະການດັ່ງກ່າວ (ໝວດ A ມີ 4 ມາດຕະການ, ໝວດ B ມີ 2 ມາດຕະການ ແລະ ໝວດ C ມີ 2 ມາດຕະການ) ທີ່ໄດ້ຖືກເນັ້ນໜັກເປັນສີຂຽວໃນຕາຕະລາງຂ້າງເທິງ ຊຶ່ງສາມາດປະຕິບັດໄດ້ ໃນສອງສາມເດືອນຂ້າງໜ້າ ຊຶ່ງຈະເຮັດໃຫ້ອັດຕາສ່ວນການຈັດຕັ້ງປະຕິບັດເພີ່ມຂຶ້ນປະມານ 70% ຈາກປະຈຸບັນທີ່ຢູ່ລະດັບ 47.2%. ໃນກໍລະນີໃດໆກໍ່ຕາມ, ຕ້ອງໄດ້ມີການເນັ້ນໜັກເພື່ອບັນລຸທຸກມາດຕະການທີ່ມອບໃນໝວດ A ຊຶ່ງແກ່ຍາວເປັນເວລາດົນນານ ເນື່ອງຈາກຕ້ອງດຳເນີນການໃຫ້ສຳເລັດກ່ອນວັນທີ 22 ກຸມພາ 2018. ພ້ອມດຽວກັນ, 6 ມາດຕະການ ເຊັ່ນ: ການຈັດສິ່ງດ່ວນ, ແຜນງານເອອີໂອ, ການກັກກັນສິນຄ້າ ແລະ ອື່ນໆ ກ່ຽວຂ້ອງພຽງແຕ່ກົມພາສີ ແລະ ຕ້ອງໄດ້ຮັບບູລິມະສິດໃນການຈັດຕັ້ງປະຕິບັດ. ເນັ້ນໜັກວ່າຄະນະກຳມະການ NTFC ຈະຕ້ອງຕິດຕາມມາດຕະການເຫຼົ່ານີ້ ຢ່າງໃກ້ຊິດ ໂດຍໃຫ້ມີການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປັນປົກກະຕິຈາກຂະແໜງການທີ່ຮັບຜິດຊອບ.

ທ້າຍສຸດນີ້, ໂດຍພິຈາລະນາເຖິງຜົນກະທົບທີ່ປະສົບຜົນສຳເລັດຂອງແຜນຍຸດທະສາດ ທີ່ໄດ້ຂຽນຂຶ້ນໃນແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ເຖິງວ່າມີຂໍ້ຈຳກັດທີ່ຮ້າຍແຮງຈາກສະພາບການລະບາດຂອງພະຍາດ ໃນສອງປີທີ່ຜ່ານມາ, ການຮຽນຮູ້ຮ່ວມກັບການປະຕິບັດຂອງສາກົນທີ່ດີ ຈະຖືກນຳໃຊ້ຕໍ່ແຜນຍຸດທະສາດໃນອານາຄົດ ເພື່ອຜົນໄດ້ຮັບທີ່ດີຂຶ້ນກວ່າເກົ່າ.

## ເອກະສານຊ້ອນທ້າຍ

1. ອົງປະກອບຂອງຄະນະກຳມະການ NTFC

ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຮັບການສ້າງຕັ້ງຂຶ້ນ ຕາມຂໍ້ຕົກລົງ ເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018 ໄດ້ແມ່ນທ່ານ ຮອງນາຍົກລັດຖະມົນຕີ ເປັນຫົວໜ້າຄະນະ ແລະ ລວມສະມາຊິກອື່ນໆ ເຊັ່ນ: ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງຫົວໜ້າຄະນະ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ (ທັງຖືກແຕ່ງຕັ້ງເປັນຫົວໜ້າກອງເລຂາ), ຮອງລັດຖະມົນຕີກະຊວງການເງິນ, ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ຮອງລັດຖະມົນຕີກະຊວງສາທາລະນະສຸກ ແລະ ຮອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ.

2. ລາຍລະອຽດຂອງບົດສະເໜີໂຄງການ CF ທີ່ໄດ້ຮັບອະນຸມັດໂດຍການສະໜັບສະໜູນຂອງໂຄງການ LCT

| ລ/ດ | ຂະແໜງການທີ່ກ່ຽວຂ້ອງ | ມູນຄ່າຂອງໂຄງການ CF (ໂດລາສະຫະລັດ) |
|---|---|---|
| 1 | ກົມພາສີ | 830,000 |
| 2 | ກົມອາຫານ ແລະ ຢາ | 452,000 |
| 3 | ກົມການນຳເຂົ້າ ແລະ ສົ່ງອອກ | 517,000 |
| 4 | ກົມປູກຝັງ ແລະ ກົມລ້ຽງສັດ ແລະ ການປະມົງ | 520,000 |
| 5 | ກົມຄຸ້ມຄອງບໍ່ແຮ່ | 184,000 |
| | **ລວມທັງໝົດ** | **2,503,000** |

**ຕາຕະລາງ 6- ມູນຄ່າໂຄງການ CF ຂອງຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ຮັບອະນຸມັດພາຍໃຕ້ໂຄງການ LCT**

## 3. ສ່ວນສຳຄັນຂອງຂໍ້ຄິດລິເລີ່ມຂອງມາດຕະການ NTMs

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 1 | ການອອກໃບອະນຸຍາດນຳເຂົ້າ ສັດ ແລະ ຜະລິດຕະພັນສັດ | ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດ ວ່າດ້ວຍ ການຄຸ້ມຄອງ ການເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບ ສັດ ເລກທີ 230/ລບ, ລົງວັນທີ 4 ມິຖຸນາ 2012<br><br>ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019 | SPS (ຈັດປະເພດໂດຍທີມງານ NTMs) | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ສັດ | **<u>ສຳເລັດ</u>.** ຂັ້ນຕອນ, ແບບຟອມ ແລະ ເອກະສານສຳລັບການອອກອະນຸຍາດ ແລະ ຢັ້ງຢືນການນຳເຂົ້າ ແລະ ສົ່ງອອກ ສັດ ແລະ ຜະລິດຕະພັນສັດ ໄດ້ຮັບການປັບປຸງ ແລະ ກຳນົດລະອຽດໃນຂໍ້ຕົກລົງເລກທີ 0795/ກປ ເພື່ອຮັບປະກັນຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.<br>ໃນເມື່ອກ່ອນ, ມີພຽງດຳລັດ ເລກທີ 230/ລບ ທີ່ກຳນົດຂໍ້ຮຽກຮ້ອງທົ່ວໄປສຳລັບການນຳເຂົ້າ ແລະ ສົ່ງອອກ.<br>ນອກຈາກນີ້, ກົມລ້ຽງສັດ ແລະ ການປະມົງ ແມ່ນຢູ່ໃນຂັ້ນຕອນການຮ່າງລະບຽບການກ່ຽວກັບການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ. |
| 2 | ການອອກໃບອະນຸຍາດສົ່ງອອກ ສັດ ແລະ ຜະລິດຕະພັນສັດ | | | | | |
| 3 | ການອອກໃບຢັ້ງຢືນດ້ານສຸຂະພາບ ຫຼື ສຸຂານາໄມ ເພື່ອສົ່ງອອກ ສັດ ແລະ ຜະລິດຕະພັນສັດ | | | | | |
| 4 | ການອອກໃບອະນຸຍາດນຳເຂົ້າ - ປາ ແລະ ສັດນ້ຳ ປະເພດ II ແລະ III | ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເລກທີ 4211/ກປ, ລົງວັນທີ 29 ພະຈິກ 2019 | SPS (ຈັດປະເພດໂດຍທີມງານ NTMs) | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ສັດ | **<u>ສຳເລັດ</u>.** ຂັ້ນຕອນ, ແບບຟອມ ແລະ ເອກະສານສຳລັບການອອກອະນຸຍາດ ແລະ ຢັ້ງຢືນການນຳເຂົ້າ ແລະ ສົ່ງອອກ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໄດ້ຮັບການປັບປຸງ ແລະ ກຳນົດລະອຽດໃນຂໍ້ຕົກລົງເລກທີ 4211/ກປ ເພື່ອຮັບປະກັນຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.<br>ໃນເມື່ອກ່ອນ, ມີພຽງກົດໝາຍ ວ່າດ້ວຍການປະມົງ ເລກທີ 03/ສພຊ ທີ່ກຳນົດຂໍ້ຮຽກຮ້ອງທີ່ກວ້າງສຳລັບການນຳເຂົ້າ ແລະ ສົ່ງອອກ. |
| 5 | ການອອກໃບຢັ້ງຢືນຄຸນນະພາບນຳເຂົ້າອາຫານສັດ | ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ | ດຳລັດ ວ່າດ້ວຍອາຫານສັດ ເລກທີ 02/ລບ, ລົງວັນທີ 02 ມັງກອນ 2020 | SPS (ຈັດປະເພດໂດຍທີມງານ NTMs) | ເພື່ອຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ແລະ ຄຸນຄ່າທາງໂພສະນາການ ຂອງສັດ | **<u>ສຳເລັດ</u>.** ຂັ້ນຕອນ, ແບບຟອມ ແລະ ເອກະສານສຳລັບການອອກອະນຸຍາດນຳເຂົ້າອາຫານສັດໄດ້ກຳນົດຢ່າງຊັດເຈນ ໃນດຳລັດ ເລກທີ 02/ລບ. ໃນເມື່ອກ່ອນ, ບໍ່ມີລະບຽບການສະເພາະໃນການຄຸ້ມຄອງອາຫານສັດ. |
| 6 | ການອອກໃບຢັ້ງຢືນສຸຂານາໄມ ເພື່ອການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ | ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019.<br><br>ບົດແນະນຳ ກ່ຽວກັບ ຫຼັກການ ແລະ ການຢັ້ງຢືນສຸຂານາໄມພືດ ສຳຫລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ເລກທີ 2880/ກປຝ, ລົງວັນທີ 11 ທັນວາ 2019. | SPS (ຈັດປະເພດໂດຍທີມງານ NTMs) | ເພື່ອປົກປ້ອງສິ່ງແວດລ້ອມ ແລະ ສຸຂະພາບຂອງຄົນ | **<u>ສຳເລັດ</u>.** ຂັ້ນຕອນ, ແບບຟອມ ແລະ ເອກະສານສຳລັບການອອກໃບຢັ້ງຢືນສຸຂານາໄມພືດ ແລະ ຜະລິດຕະພັນພືດສົ່ງອອກ ໄດ້ຮັບການປັບປຸງ ແລະ ກຳນົດຢ່າງຈະແຈ້ງໃນຂໍ້ຕົກລົງ ເລກທີ 2986/ກປ ແລະ ບົດແນະນຳ ເລກທີ 2880/ກປຝ.<br>ໃນເມື່ອກ່ອນ, ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ ກຳນົດພຽງແຕ່ຂໍ້ຮຽກຮ້ອງທົ່ວໄປ ສຳລັບການອອກໃບຢັ້ງຢືນສຸຂານາໄມພືດ. ເຖິງຢ່າງໃດກໍ່ຕາມ, ກົມປູກຝັງ ຈະປັບປຸງບົດແນະນຳ ເລກທີ 2880/ກປ ຄືນ ເມື່ອສຳເລັດມາດຕະຖານ SOP ຂອງຕົນ. |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 7 | ການອອກໃບ ອະນຸຍາດນຳເຂົ້າ - ພືດ, ຜະລິດຕະພັນ ພືດ ແລະ ວັດຖຸຕ້ອງ ຄວບຄຸມ ທີ່ຢູ່ໃນ ບັນຊີຕ້ອງຂໍອະນຸຍາດ | ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂາ ນາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ ກປ, ລົງວັນທີ 28 ມິຖຸນາ 2019.<br><br>ບົດແນະນຳ ກ່ຽວກັບ ການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ເລກທີ 2881/ກປຟ, ລົງວັນທີ 11 ທັນວາ 2019. | SPS (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປ້ອງ ສິ່ງແວດລ້ອມ ແລະ ສຸຂະພາບ ຂອງຄົນ | **<u>ສຳເລັດ</u>**. ຂັ້ນຕອນ, ແບບຟອມ ແລະ ເອກະສານ ສຳລັບການອອກອະນຸຍາດນຳເຂົ້າພືດ ແລະ ຜະລິດຕະພັນພືດ ໄດ້ຮັບການປັບປຸງ ແລະ ກຳນົດຢ່າງຈະແຈ້ງໃນຂໍ້ຕົກລົງ ເລກທີ 2985/ກປ ແລະ ບົດແນະນຳ ເລກທີ 2881/ກປຟ. ໃນເມື່ອກ່ອນ, ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ ກຳນົດ ພຽງແຕ່ຂໍ້ຮຽກຮ້ອງທົ່ວໄປ ສຳລັບການອອກ ອະນຸຍາດນຳເຂົ້າ. ເຖິງຢ່າງໃດກໍ່ຕາມ, ກົມ ປູກຝັງ ຈະປັບປຸງບົດແນະນຳ ເລກທີ 2881/ ກປ ຄືນ ເມື່ອສຳເລັດມາດຕະຖານ SOP ຂອງ ຕົນ. |
| 8 | ການອອກອະນຸມັດ ຮັບຮອງແຜນນຳເຂົ້າ ປະຈຳປີ ຂອງວິສາຫະ ກິດ | ກົມສົ່ງເສີມການ ລົງທຶນ,ກະຊວງ ແຜນການ ແລະ ການລົງທຶນ | ບົດແນະນຳ ວ່າດ້ວຍການໃຫ້ ນະໂຍບາຍສົ່ງເສີມການລົງທຶນດ້ານ ພາສີ ແລະ ອາກອນມູນຄ່າເພີ່ມ ສຳ ລັບ ແຜນນຳເຂົ້າ ຂອງວິສາຫະກິດ ເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 | ມາດຕະການທົ່ວໄປ (ຈັດປະເພດໂດຍ ທີມງານ NTMs) | ເພື່ອສົ່ງເສີມການ ລົງທຶນ ດ້ວຍ ນະໂຍບາຍທາງ ດ້ານພາສີ ແລະ ອາກອນ | **<u>ສຳເລັດ</u>**. ຂັ້ນຕອນ, ແບບຟອມ ແລະ ເອກະສານ ສຳລັບການອະນຸມັດແຜນນຳເຂົ້າ ໄດ້ຮັບການ ປັບປຸງ ແລະ ໄດ້ກຳນົດລະອຽດໃນຂໍ້ຕົກລົງ ເລກທີ 01/ຄລທ.ສ. ໃນເມື່ອກ່ອນ, ການ ອະນຸມັດແຜນນຳເຂົ້າ ໃຊ້ເວລາ 3-6 ເດືອນ. ປະຈຸບັນ, ໃຊ້ເວລາພຽງແຕ່ 7-15 ວັນລັດຖະ ການ (ສຳລັບໂຄງການທົ່ວໄປ) ແລະ 15-22 ວັນ (ສຳລັບໂຄງການເຂື່ອນໄຟຟ້າ ແລະ ບໍ່ແຮ່). ເຖິງຢ່າງໃດກໍ່ຕາມ, ກະຊວງແຜນການ ແລະ ການລົງທຶນ ແມ່ນຢູ່ໃນຂັ້ນຕອນການປະເມີນ ຄືນ ແລະ ປັບປຸງກົດໝາຍ ວ່າດ້ວຍການ ສົ່ງເສີມການລົງທຶນ ເລກທີ 14/ສພຊ. ຈາກ ນັ້ນ, ບົດແນະນຳ ເລກທີ 01/ຄລທ.ສ ອາດຖືກ ປັບປຸງໃຫ້ສອດຄ່ອງ ໃນອານາຄົດ. |
| 9 | ການຢັ້ງຢືນການນຳ ເຂົ້າ ຊິ້ນສ່ວນ ຍານພາຫະນະ | ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຄຳສັ່ງກ່ຽວກັບ ການຍົກເລີກການ ອອກໃບຢັ້ງຢືນນຳເຂົ້າຊິ້ນສ່ວນ ຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ເລກທີ 1848/ ອຄ.ກອຫ, ລົງວັນທີ 26 ທັນວາ 2019 | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ສຳເລັດ</u>**. ໃບຢັ້ງຢືນການນຳເຂົ້າຊິ້ນສ່ວນ ຍານພາຫະນະ ທີ່ອອກໂດຍກົມອຸດສາຫະກຳ ແລະ ຫັດຖະກຳ ໃນເມື່ອກ່ອນ ໄດ້ຖືກລົບລ້າງ ໂດຍຄຳສັ່ງເລກທີ 1848/ອຄ.ກອຫ. |
| 10 | ການອອກໃບ ອະນຸຍາດນຳເຂົ້າ ນ້ຳ ມັນເຊື້ອໄຟ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້ານ້ຳມັນ ເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ເລກທີ 0317/ອຄ, ລົງວັນທີ 21 ມີນາ 2022 | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ສຳເລັດ</u>**. ກົມ ຂອ ໄດ້ປັບປຸງເອກະສານ ຂໍອະນຸຍາດນຳເຂົ້ານ້ຳມັນເຊື້ອໄຟປະເພດຫຼັກ (ແອັດຊັງ, ກາຊວນ ແລະ ອື່ນໆ) ໂດຍແຍກ ອອກເປັນສອງປະເພດຂອງການອອກ ອະນຸຍາດ. ❶ ການນຳເຂົ້າ ເພື່ອຈຳໜ່າຍ ຊຶ່ງ ຮຽກຮ້ອງເອກະສານປະກອບ ຈຳນວນ 4 ຊຸດ. ❷ ການນຳເຂົ້າ ເພື່ອຮັບໃຊ້ໂຄງການ ຊຶ່ງ ຮຽກຮ້ອງເອກະສານ ຈຳນວນ 5 ຊຸດ. ໃນເມື່ອກ່ອນ, ກົມ ຂອ ເຄີຍຮຽກຮ້ອງ ເອກະສານຈຳນວນຫຼາຍກວ່າ 10 ຊຸດ. ຂັ້ນ ຕອນການອອກອະນຸຍາດໄດ້ຮັບການປັບປຸງ ໂດຍນຳໃຊ້ລະບົບ LNSW ໃນປີ 2020 ຊຶ່ງ ປົກກະຕິແມ່ນໃຊ້ເວລາເຄິ່ງວັນໃນການອອກ ໃບອະນຸຍາດ. |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| | | | | | | ນອກຈາກນີ້, ໃບອະນຸຍາດນຳເຂົ້ານ້ຳມັນຫຼໍ່ລື່ນ ໄດ້ຖືກລົບລ້າງ ໂດຍກົມ ຂອ. |
| 11 | ການອອກໃບຢັ້ງຢືນ ການສົ່ງອອກ ຜະລິດຕະພັນໄມ້ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຄຳແນະນຳ ກ່ຽວກັບການສົ່ງອອກ ຜະລິດຕະພັນໄມ້ທຳມະຊາດໄປ ຕ່າງປະເທດ ເລກທີ 0332/ອຄ, ລົງ ວັນທີ 22 ມີນາ 2022 | ໃບອະນຸຍາດແບບບໍ່ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາຊັບ ພະຍາກອນທຳ ມະຊາດ | **<u>ສຳເລັດ</u>.** ຂໍ້ຮຽກຮ້ອງທາງດ້ານເອກະສານສຳລັບ ການອອກອະນຸຍາດສົ່ງອອກໄມ້ຈາກປ່າທຳມະ ຊາດ ໄດ້ຮັບການຫຼຸດຜ່ອນຫຼາຍ ຈາກ 20 ເອກະສານໃນເມື່ອກ່ອນ ເປັນ 8 ເອກະສານ (ໃນນີ້, 3 ເອກະສານປະກອບ ແມ່ນຮຽກຮ້ອງ ສຳລັບຄັ້ງທຳອິດ ຫຼື ຖ້າມີການປ່ຽນແປງ). ຂັ້ນ ຕອນ ແລະ ການກວດກາໄມ້ສົ່ງອອກ ກໍ່ໄດ້ຮັບ ປັບປຸງ, ຈະມີການຢັ້ງຢືນຄວາມຖືກຕ້ອງ ເມື່ອ ໄດ້ຮັບເອກະສານສະເໜີ ແລະ ພາຍຫຼັງມີບົດ ບັນທຶກການກວດກາຕົວຈິງ (ກ່ອນເອົາໄມ້ຂຶ້ນ ລົດ). ໄດ້ກຳນົດຢ່າງຈະແຈ້ງ ກ່ຽວກັບ ບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງ 3 ຂະແໜ ງການ (ພະແນກ ອຄ, ປ່າໄມ້ ແລະ ຊັບສິນ) |
| 12 | ການອອກໃບ ອະນຸຍາດນຳເຂົ້າ ເຄື່ອງບິນແບບບໍ່ມີ ຄົນຂັບທີ່ມີນ້ຳໜັກ ເກີນ 200 ກຣາມ | ກົມການບິນພົນ ລະເຮືອນ, ກະຊວງເຕັກໂນ ໂລຊີ ແລະ ການ ສື່ສານ | ຂໍ້ຕົກລົງ ວ່າດ້ວຍການຢັ້ງຢືນຄື້ນ ຄວາມຖີ່ວິທະຍຸສື່ສານ ສຳລັບເຄື່ອງ ບິນບໍ່ມີຄົນຂັບ, ເລກທີ 1831/ປທສ , ລົງວັນທີ 11 ກັນຍາ 2020 . | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຄວາມໝັ້ນ ຄົງຂອງຊາດ | **<u>ສຳເລັດ</u>.** ການອອກອະນຸຍາດນຳເຂົ້າເຄື່ອງບິນບໍ່ ມີຄົນຂັບທີ່ມີນ້ຳໜັກເກີນ 200 ກຣາມ ຢູ່ ກົມຄື້ນຄວາມຖີ່ ໄດ້ຖືກລົບລ້າງ ແລ້ວ. ກົມຄື້ນ ຄວາມຖີ່ ແມ່ນຮັບຜິດຊອບພຽງແຕ່ການຄຸ້ມ ຄອງ ແລະ ຢັ້ງຢືນການນຳໃຊ້ຄື້ນຄວາມຖີ່ ວິທະຍຸ. ໃນເມື່ອກ່ອນມີ ສອງກົມຮັບຜິດຊອບ ການອອກອະນຸຍາດ ເຄື່ອງບິນບໍ່ມີຄົນຂັບທີ່ ມີນ້ຳໜັກເກີນ 200 ກຣາມ ເຊັ່ນ: ກົມຄື້ນ ຄວາມຖີ່ (ກະຊວງ ຕສ) ແລະ ກົມການບິນພົນ ລະເຮືອນ (ກະຊວງ ຍທຂ). ປະຈຸບັນ, ມີພຽງ ກົມການບິນພົນລະເຮືອນທີ່ຮັບຜິດຊອບອອກ ອະນຸຍາດນຳເຂົ້າ. |
| 13 | ການອອກໃບ ອະນຸຍາດນຳເຂົ້າ ເຄື່ອງສື່ສານໂຟນີ | ກົມຄື້ນຄວາມ ຖີ່, ກະຊວງເຕັກໂນ ໂລຊີ ແລະ ການ ສື່ສານ | ແຈ້ງການ ກ່ຽວກັບການນຳເຂົ້າ, ການຂຶ້ນທະບຽນນຳໃຊ້ອຸປະກອນ ສື່ສານລະບົບໂຟນີ້ ເລກທີ 911/ ປທສ.ຫກ, ລົງວັນທີ 26 ພຶດສະພາ 2020 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຄວາມໝັ້ນ ຄົງຂອງຊາດ | **<u>ສຳເລັດ</u>.** ຂັ້ນຕອນ ແລະ ເອກະສານໃນການ ອອກອະນຸຍາດນຳເຂົ້າອຸປະກອນສື່ສານລະບົບ ໂຟນີ້ ໄດ້ຮັບການປັບປຸງ ແລະ ກຳນົດຊັດເຈນ ໃນຂໍ້ຕົກລົງເລກທີ 911. ເຖິງຢ່າງໃດກໍ່ຕາມ, ກົມ ຂອ ຈະເຮັດວຽກກັບກົມຄື້ນຄວາມຖີ່ຕື່ມ ກ່ຽວກັບການປັບປຸງການອອກອະນຸຍາດນຳເຂົ້າ ເພີ່ມເຕີມ. |
| 14 | ການອອກໃບ ອະນຸຍາດນຳເຂົ້າ ສານເຄມີທີ່ທຳລາຍ ຊັ້ນໂອໂຊນ | ກົມສິ່ງແວດ ລ້ອມ, ກະຊວງ ຊັບພະຍາກອນທຳ ມະຊາດ ແລະ ສິ່ງ ແວດ ລ້ອມ | ຂໍ້ຕົກລົງ ວ່າດ້ວຍການຄວບຄຸມມົນ ລະພິດ ເລກທີ 1687/ກຊສ, ລົງວັນ ທີ 07 ເມສາ 2021 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາ ສິ່ງແວດລ້ອມ | **<u>ສຳເລັດ</u>**. ອີງຕາມຂໍ້ຕົກລົງ ເລກທີ 1686/ກຊສ , ຄຳວ່າ "ສານເຄມີທຳລາຍຊັ້ນໂອໂຊນ" ໄດ້ຖືກ ປ່ຽນມາເປັນ "ສານເຄມີພາຍໃຕ້ອານຸສັນຍາ ມົງຣີອານ". ການນຳເຂົ້າ ໄດ້ຮັບການປັບປຸງ ຈາກການອອກອະນຸ ຍາດທຸກຄັ້ງ ມາເປັນການ ອອກອະນຸຍາດ ນຳເຂົ້າເປັນປີ. |
| 15 | ການອອກໃບຢັ້ງຢືນ ຄຸນນະພາບນຳເຂົ້າ ອຸປະກອນເຄື່ອງໃຊ້ ໄຟຟ້າ ແລະ ເອເລັກ ໂຕຣນິກ | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຄວາມ ປອດໄພຂອງອຸປະກອນເຄື່ອງໃຊ້ ໄຟຟ້າ ແລະ ເອເລັກໂຕຣນິກ ເລກທີ 1573/ກວຕ, ລົງວັນທີ 27 ພະຈິກ 2020 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຮັບປະກັນ ຄຸນນະພາບ ແລະ ມາດຕະຖານ ຕໍ່ຜູ້ ຊົມໃຊ້ | **<u>ສຳເລັດ</u>.** ໃນເດືອນ ມີນາ 2019, ກົມ ມາດຕະຖານ ແລະ ວັດແທກ ໄດ້ແຕ່ງຕັ້ງ ພະນັກງານເພື່ອດຳເນີນການກວດກາ ແລະ ທົດ ສອບຄຸນນະພາບເຄື່ອງໃຊ້ໄຟຟ້າ ແລະ ເອເລັກ ໂຕຣນິກ ຢູ່ດ່ານຂົວມິດຕະພາບ 1 ຊຶ່ງສ້າງ ຄວາມຊັກຊ້າ ແລະ ເພີ່ມຄ່າໃຊ້ຈ່າຍສູງ ໃນ ການນຳເຂົ້າ. ພາຍຫຼັງມີກອງປະຊຸມປຶກສາຫາລື |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| | | | | | | ຫຼາຍຄັ້ງ ທີ່ຈັດຂຶ້ນໂດຍກົມ ຂອ ແລະ ລັດຖະບານ, ໄດ້ຮັບການຕັດສິນໂດຍທ່ານ ຮອງນາຍົກລັດຖະມົນຕີ ເພື່ອຍົກເລີກຖາວອນການກວດກາຄຸນນະພາບ ຢູ່ດ່ານ ແລະ ໃຫ້ດຳເນີນການກວດກາຢູ່ບ່ອນຈຳໜ່າຍແທນ. ສະນັ້ນ, ກົມມາດຕະຖານ ແລະ ວັດແທກ ຈຶ່ງໄດ້ອອກຂໍ້ຕົກລົງ ເລກທີ 1573/ກວຕ ເພື່ອປ່ຽນແທນສະບັບເກົ່າ. |
| 16 | ການອອກໃບ ອະນຸຍາດນຳເຂົ້າ ເຄມີ | ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ເລກທີ 1204/ອຄ.ກອຫ, ລົງວັນທີ 24 ທັນວາ 2020 | TBT (ຈັດປະເພດໂດຍທີມງານ NTMs) | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ຄວາມປອດໄພ ແລະ ສິ່ງແວດລ້ອມ | **<u>ສຳເລັດ</u>**. ຂັ້ນຕອນ, ແບບຟອມ ແລະ ເອກະສານໃນການຈົດທະບຽນ ແລະ ອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຄມີ (ປະເພດ 2, 3, 4) ແມ່ນໄດ້ກຳນົດຢ່າງຊັດເຈນໃນຂໍ້ຕົກລົງ ເລກທີ 1204/ອຄ.ກອຫ ຊຶ່ງເປັນການຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016.<br>ເຖິງຢ່າງໃດກໍ່ຕາມ, ຈະມີການປຶກສາຫາລື ກັນເພີ່ມເຕີມລະຫວ່າງກະຊວງ ອຄ, ກະຊວງສາທາລະນະສຸກ ແລະ ກະຊງ ກປ ກ່ຽວກັບການຄຸ້ມຄອງເຄມີບາງປະເພດ ທີ່ຍັງບໍ່ມີຄວາມເປັນເອກະພາບ. |
| 17 | ການອອກໃບ ອະນຸຍາດສົ່ງອອກ ເຄມີ | | | | | |
| 18 | ການອອກໜັງສື ຢັ້ງຢືນສິດທິພິເສດ ດ້ານອັດຕາພາສີ ສິນຄ້ານຳເຂົ້າ | ກົມພາສີ, ກະຊວງການເງິນ | ຂໍ້ຕົກລົງ ວ່າດ້ວຍ ສືບຕໍ່ການທົດລອງມອບສິດໃຫ້ດ່ານພາສີຊາຍແດນຮັບຮອງການໄດ້ຮັບສິດທິພິເສດດ້ານອັດຕາພາສີ ຕາມກອບສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA-FORM D) ສຳລັບ ການນຳເຂົ້າສິນຄ້າຂອງ 11 ບໍລິສັດ, ເລກທີ 03682/ກພສ, ລົງວັນທີ 30 ກໍລະກົດ 2021. | ມາດຕະການ ທົ່ວໄປ (ຈັດປະເພດໂດຍທີມງານ NTMs) | ເພື່ອຢັ້ງຢືນສິດທິພິເສດທາງດ້ານການຄ້າ ໃຫ້ສອດ ຄ່ອງກັບຂໍ້ຜູກມັດຂອງ ສປປ ລາວ | **<u>ສຳເລັດ</u>**. ອີງຕາມຂໍ້ຕົກລົງ ເລກທີ 03682/ກພສ, ການຢັ້ງຢືນສິດທິພິເສດ ທາງດ້ານການຄ້າ ໄດ້ຮັບການປັບປຸງຈາກການອອກໃຫ້ຢູ່ບ່ອນດຽວ (ຕົວຢ່າງກົມພາສີ). ການຢັ້ງຢືນ ໄດ້ມອບສິດໃຫ້ແກ່ດ່ານຊາຍແດນ ເພື່ອອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ D ພາຍໃຕ້ສັນຍາ ATIGA ໃຫ້ແກ່ 11 ບໍລິສັດ ເພື່ອເປັນການທົດລອງໃນການຈັດຕັ້ງປະຕິບັດວຽກງານຜູ້ປະກອບເອອີໂອ. ກົມພາສີ ຈະຊຸກຍູ້ຜູ້ຄ້າເພື່ອເຂົ້າຮ່ວມແຜນງານຜູ້ປະກອບການເອອີໂອ ໃຫ້ຫຼາຍຂຶ້ນ. |
| 19 | ການອອກໃບ ອະນຸຍາດເຄື່ອນຍ້າຍ ພາຍໃນ ຜະລິດຕະພັນ ຖ່ານຂາວ | ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ຄຳແນະນຳ ກ່ຽວກັບການຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ຕິ້ວ,ການເຄື່ອນຍ້າຍຖ່ານຂາວ ທີ່ຜະລິດມາຈາກໄມ້ຕິ້ວ ພາຍໃນ ແລະ ສົ່ງອອກຕ່າງປະເທດ ເລກທີ 0050/ກປ, ລົງວັນທີ 18 ກັນຍາ 2017 | ມາດຕະການ ທົ່ວໄປ (ຈັດປະເພດໂດຍທີມງານ NTMs) | ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດ | **<u>ສຳເລັດ</u>**. ກົມປ່າໄມ້ ໄດ້ສຳເລັດອອກຄຳແນະນຳເລກທີ 5952/ກປ. ການເຄື່ອນຍ້າຍຖ່ານຂາວພາຍໃນປະເທດ (ເມືອງ ຫາ ເມືອງ, ແຂວງ ຫາ ແຂວງ) ແມ່ນມອບໃຫ້ພະແນກ ກປ ເມືອງ ເປັນຜູ້ອອກອະນຸຍາດ ພຽງຜູ້ດຽວ (ຜ່ານມາແມ່ນອອກອະນຸຍາດ ຢູ່ເມືອງ ແລະ ແຂວງ). ສ່ວນການສົ່ງອອກຖ່ານຂາວ ແມ່ນມອບໃຫ້ພະແນກ ກປ ແຂວງ ເປັນຜູ້ອອກອະນຸຍາດພຽງຜູ້ດຽວ. ສຳລັບການລົງກວດກາຕົວຈິງ ກ່ອນເຄື່ອນຍ້າຍ ແລະ ສົ່ງອອກ ແມ່ນໄດ້ມີການປັບປຸງ ໂດຍມີພຽງແຕ່ຜູ້ຕາງໜ້າຈາກຂະແໜງ ກປ ເທົ່ານັ້ນເຂົ້າຮ່ວມ ແລະ ບໍ່ໃຫ້ເກີນ 3 ທ່ານ (ຜ່ານມາມີຫຼາຍພາກສ່ວນ). |
| 20 | ການອອກໃບຢັ້ງຢືນ ການສົ່ງອອກຖ່ານ ຂາວ | | | ໃບອະນຸຍາດແບບບໍ່ອັດຕະໂນມັດ (ຈັດປະເພດໂດຍທີມງານ NTMs) | | |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 21 | ການອອກໃບຢັ້ງຢືນ ການນຳເຂົ້າ ອຸປະກອນໄອຊີທີ | ກົມເຕັກໂນໂລຊີດິ ຈິຕອນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ | ຂໍ້ຕົກລົງ ວ່າດ້ວຍ ການນຳເຂົ້າ ແລະ ຈຳໜ່າຍ ອຸປະກອນໄອຊີທີ ສະບັບ ເລກທີ 3201/ປທສ, ລົງວັນທີ 16 ພະຈິກ 2016 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພຕໍ່ ຜູ້ຊົມໃຊ້ ແລະ ສັງຄົມ | <u>**ມີຄວາມຄືບໜ້າຫຼາຍ**</u>. ກົມເຕັກໂນໂລຊີດິຈິຕອນ ແມ່ນຢູ່ໃນຂັ້ນຕອນການພັດທະນາລະບົບອອນໄລນ໌ ສຳລັບການອອກອະນຸຍາດນຳເຂົ້າ (ບໍ່ແມ່ນລະບົບ LNSW). ພ້ອມດຽວກັນ, ຍັງຢູ່ໃນຂັ້ນຕອນການປັບປຸງຂໍ້ຕົກລົງເລກທີ 3201/ປທສ.<br>ກົມເຕັກໂນໂລຊີດິຈິຕອນ ໄດ້ຮັບການແນະນຳເພື່ອໃຊ້ລະບົບ LNSW ສຳລັບການອອກອະນຸຍາດນຳເຂົ້າໃນອານາຄົດອັນໃກ້ ເນື່ອງຈາກລະບົບດັ່ງກ່າວ ຈະເຊື່ອມໂຍງການລະບົບກວດປ່ອຍສິນຄ້າຢູ່ດ່ານ (ລະບົບ ASYCUDA) |
| 22 | ການອອກໃບ ອະນຸຍາດດ້ານ ເຕັກນິກນຳເຂົ້າ ຍານພາຫະນະ | ກົມຂົນສົ່ງ, ກະຊວງໂຍທາທິ ການ ແລະ ຂົນສົ່ງ | ກົດໝາຍ ວ່າດ້ວຍຍານພາຫະນະ ທາງບົກ ເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021<br><br>ຂໍ້ກຳນົດ ກ່ຽວກັບ ມາດຕະຖານ ເຕັກນິກຍານພາຫະນະ ແລະ ສິ້ນ ສ່ວນ ຂອງຍານພາຫະນະ ທີ່ຈະໄດ້ ຮັບອະນຸຍາດ ໃຫ້ນຳເຂົ້າມາຂຶ້ນ ທະບຽນ ແລະ ປະກອບເປັນຄັນ ເພື່ອນຳໃຊ້ໃນ ສປປ ລາວ ເລກທີ 4312/ຄຂປກ, ລົງວັນທີ 11 ພະຈິກ 2002. | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຄວາມປອດ ໄພຂອງຜູ້ຊົມໃຊ້ | <u>**ມີຄວາມຄືບໜ້າຫຼາຍ**</u>. ກະຊວງ ຍທຂ ໄດ້ສຳເລັດກົດໝາຍ ເລກທີ 04/ສພຊ ຊຶ່ງເປັນພື້ນຖານໃນການຮ່າງລະບຽບການເພື່ອຜັນຂະຫຍາຍກົດໝາຍ ໂດຍສະເພາະແມ່ນການປັບປຸງການຢັ້ງຢືນທາງດ້ານເຕັກນິກການນຳເຂົ້າຍານພາຫະນະ ແລະ ຊິ້ນສ່ວນຍານພາຫະນະ. ການອອກອະນຸຍາດນຳເຂົ້າຕາມໂມເດລ ຈະຖືກກຳນົດໃນລະບຽບການໃໝ່ ຕາມສັນຍາຮັບຮູ້ຮ່ວມກັນ (MRAs). |
| 23 | ການອອກໃບ ອະນຸຍາດດ້ານ ເຕັກນິກນຳເຂົ້າ ຊິ້ນ ສ່ວນຍານພາຫະນະ | | | | | |
| 24 | ການອອກໃບ ອະນຸຍາດສົ່ງອອກ ເຄື່ອງປ່າຂອງດົງ | ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບ ປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019<br><br>ຂໍ້ຕົກລົງ ວ່າດ້ວຍການກຳນົດບັນຊີ ເຄື່ອງປ່າຂອງດົງ I, II, III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020 | ໃບອະນຸຍາດແບບບໍ່ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາຊັບ ພະຍາກອນທຳ ມະຊາດ | <u>**ມີຄວາມຄືບໜ້າໜ້ອຍ**</u>. ກະຊວງ ກປ ແລະ ກະຊວງສາທາລະນະສຸກ ແມ່ນຢູ່ໃນຂັ້ນຕອນການປຶກສາຫາລື ກ່ຽວກັບການຄຸ້ມຄອງການສົ່ງອອກເຄື່ອງປ່າຂອງດົງທີ່ຊໍ້າຊ້ອນ ເນື່ອງຈາກ ກົດໝາຍ ແລະ ລະບຽບການຂອງແຕ່ລະກະຊວງ ແມ່ນບໍ່ເປັນເອກະພາບກັນ, ໂດຍສະເພາະການຄຸ້ມຄອງເຄື່ອງປ່າຂອງດົງທີ່ຢູ່ໃນບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ.<br>ໃນຂະນະດຽວກັນ, ກະຊວງສາທາລະນະສຸກ ກຳລັງຮ່າງກົດໝາຍ ວ່າດ້ວຍການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເປັນຢາ ຊຶ່ງຈະປ່ຽນແທນ ດຳລັດ ເລກທີ 155/ນຍ. ຮ່າງກົດໝາຍຮັບການປຶກສາຫາລືຫຼາຍຄັ້ງ ແລະ ສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາແລ້ວ. |
| 25 | ການອອກໃບ ອະນຸຍາດເຄື່ອນຍ້າຍ ພາຍໃນ ເຄື່ອງປ່າ ຂອງດົງ | ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ຄຳສັ່ງ ກ່ຽວກັບ ການສ້າງແຜນການ ຂຸດຄົ້ນ, ຄຸ້ມຄອງ ການ ຊື້-ຂາຍ, ການເຄື່ອນຍ້າຍ ແລະ ສົ່ງອອກ ເຄື່ອງ ປ່າຂອງດົງ, ເລກທີ 4266/ກປ, ລົງ ວັນທີ 07 ຕຸລາ 2022. | ມາດຕະການ ທົ່ວ ໄປ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາຊັບ ພະຍາກອນທຳ ມະຊາດ | <u>**ມີຄວາມຄືບໜ້າໜ້ອຍ**</u>. ກົມປ່າໄມ້ ໄດ້ອອກຄຳສັ່ງ ເລກທີ 4266/ກປ, ລົງວັນທີ 07 ຕຸລາ 2022. ເຖິງຢ່າງໃດກໍ່ຕາມ, ຄຳສັ່ງດັ່ງກ່າວ ຍັງບໍ່ໄດ້ກຳນົດລະອຽດ ກ່ຽວກັບຂັ້ນຕອນ, ເອກະສານ ແລະ ແບບຟອມໃນສຳລັບການອອກອະນຸຍາດເຄື່ອນຍ້າຍ ແລະ ສົ່ງອອກ. ກົມ |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| | | | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບ ປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019.<br>ຂໍ້ຕົກລົງ ວ່າດ້ວຍການກຳນົດບັນຊີ ເຄື່ອງປ່າຂອງດົງ I, II, III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020. | | | ຂອ ຈະປະສານກັບກົມປ່າໄມ້ຕື່ມ ກ່ຽວກັບ ບັນຫາສະເພາະນີ້. |
| 26 | ການອອກໃບ ອະນຸຍາດເຄື່ອນຍ້າຍ ພາຍໃນ ໄມ້ທຳມະ ຊາດ | ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ແຈ້ງການ ກ່ຽວກັບການເຄື່ອນຍ້າຍ ໄມ້ ແລະ ເຄື່ອງປ່າຂອງດົງຢູ່ພາຍໃນ ແລະ ການສົ່ງອອກຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ອອກ ຕ່າງປະເທດ ເລກທີ 2522/ກປມ, ລົງວັນທີ 11 ພະຈິກ 2016 | ມາດຕະການ ທົ່ວໄປ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາຊັບ ພະຍາກອນທຳ ມະຊາດ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມປ່າໄມ້ແມ່ນຢູ່ໃນ ຂັ້ນຕອນການປັບປຸງແຈ້ງການ ເລກທີ 2552/ ກປມ ໃຫ້ສອດຄ່ອງກັບກົດໝາຍ ປ່າໄມ້ ເລກ ທີ 64/ສພຊ. |
| 27 | ການອອກໃບ ອະນຸຍາດເຄື່ອນຍ້າຍ ສັດປ່າ ແລະ ພືດປ່າ | ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ຂໍ້ຕົກລົງ ວ່າດ້ວຍການສ້າງ ແລະ ຄຸ້ມ ຄອງ ສວນສັດ, ຟາມສັດປ່າ, ສູນຟື້ນ ຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງ ວັນທີ 08 ກຸມພາ 2019.<br>ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007. | ມາດຕະການ ທົ່ວໄປ (ຈັດປະເພດໂດຍ ທີມງານ NTMs) | ເພື່ອຄວາມຍືນ ຍົງຂອງລະບົບ ນິເວດທຳມະຊາດ ແລະ ປະຕິບັດ ຕາມສົນທິສັນຍາ CITES | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມປ່າໄມ້ແມ່ນຢູ່ໃນ ຂັ້ນຕອນການປັບປຸງກົດໝາຍ ເລກທີ 07/ ສພຊ. |
| 28 | ການອອກໃບ ອະນຸຍາດນຳເຂົ້າ ສັດປ່າ ແລະ ພືດປ່າ | | | SPS (ຈັດປະເພດໂດຍ ທີມງານ NTMs) | | |
| 29 | ການອອກໃບອະນຸ ຍາດສົ່ງອອກ ສັດ ປ່າ ແລະ ພືດປ່າ | | | SPS (ຈັດປະເພດໂດຍ ທີມງານ NTMs) | | |
| 30 | ການອອກໃບ ອະນຸຍາດນຳເຂົ້າ ຍານພາຫະນະ ທາງບົກ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດນຳເຂົ້າ ແລະ ການຈຳໜ່ າຍ ລົດ ຢູ່ ສປປ ລາວ ເລກທີ 0075/ອຄ.ກຂອ | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມ ຂອ ຢູ່ໃນຂັ້ນ ຕອນການປັບປຸງຂໍ້ຕົກລົງ ເລກທີ 0075/ ອຄ.ກຂອ ໂດຍມີຈຸດປະສົງເພື່ອລົບລ້າງໃບ ອະນຸຍາດນຳເຂົ້າເມື່ອລະບົບ E-stat ສາມາດນຳໃຊ້ໄດ້ຢ່າງເຕັມສ່ວນ.<br>ກົມ ຂອ ໄດ້ປັບປຸງການອອກອະນຸຍາດນຳເຂົ້າ ໂດຍນຳໃຊ້ລະບົບ LNSW ນັບແຕ່ປີ 2019 ເປັນຕົ້ນມາ.<br>ນອກຈາກນີ້, ກົມ ຂອ ໄດ້ລົບລ້າງໃບ ອະນຸຍາດນຳເຂົ້າລົດໄຖນາ ຕາມຄຳສັ່ງ ເລກທີ 0982/ອຄ (ປີ 2021) |

| ລ/ດ | ຊື່ມາດຕະການ | ອະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 31 | ການອອກໃບ ອະນຸຍາດນຳເຂົ້າ ອາຍແກັສ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ອາຍແກັສ ຢູ່ ສປປ ລາວ ເລກທີ 0238/ອຄ.ກຂອ | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມ ຂອ ຢູ່ໃນຂັ້ນ ຕອນການປັບປຸງຂໍ້ຕົກລົງ ເລກທີ 0238/ອຄ.ກຂອ ໂດຍມີຈຸດປະສົງເພື່ອລຶບລ້າງໃບ ອະນຸຍາດນຳເຂົ້າເມື່ອລະບົບ E-stat ສາມາດນຳໃຊ້ໄດ້ຢ່າງເຕັມສ່ວນ.<br>ກົມ ຂອ ໄດ້ປັບປຸງການອອກອະນຸຍາດນຳເຂົ້າ ໂດຍນຳໃຊ້ລະບົບ LNSW ນັບແຕ່ປີ 2020 ເປັນຕົ້ນມາ. |
| 32 | ການອອກໃບ ອະນຸຍາດນຳເຂົ້າ ຜະລິດຕະພັນໄມ້ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ໄມ້ ເລກທີ 0451/ອຄ.ກຂອ, ລົງວັນ ທີ 01 ມີນາ 2012. | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມ ຂອ ຢູ່ໃນຂັ້ນ ຕອນການປັບປຸງຂໍ້ຕົກລົງ ເລກທີ 0451/ອຄ.ກຂອ |
| 33 | ການອອກໃບ ອະນຸຍາດນຳເຂົ້າ ເຂົ້າກິນ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ, ລົງ ວັນທີ 01 ມີນາ 2012. | ໃບອະນຸຍາດແບບບໍ່ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອຄ້ຳປະກັນ ສະບຽງອາຫານ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມ ຂອ ໄດ້ສຳເລັດຄຳ ແນະນຳກົນໄກດຸ່ນດ່ຽງເຂົ້າໃນປີ 2021. ປະຈຸ ບັນ, ຢູ່ໃນຂັ້ນຕອນການທົດລອງຈັດຕັ້ງ ປະຕິບັດ ຢູ່ 5 ແຂວງ. ໂຄງການດັ່ງກ່າວ ໄດ້ຮັບ ການສະໜັບສະໜູນໂດຍໂຄງການສົ່ງເສີມ ຄວາມອາດສາມາດທາງດ້ານກະສິກຳຂອງ ທະນາຄານໂລກ. ຫຼັງຈາກນັ້ນ, ກົມ ຂອ ຈະປະ ເມີນຄືນໂຄງການທົດລອງ ທີ່ຈະນຳໃຊ້ສຳລັບ ການປັບປຸງ ຂໍ້ຕົກລົງເລກທີ 0452 ເພື່ອ ຮັບປະກັນສະບຽງອາຫານທີ່ພຽງພໍໃນຂອບ ເຂດທົ່ວປະເທດ. |
| 34 | ການອອກໃບ ອະນຸຍາດສົ່ງອອກ ເຂົ້າກິນ | | | | | |
| 35 | ການອອກໃບຢັ້ງຢືນ ການນຳເຂົ້າ ພາຫະນະ, ເຄື່ອງ ຈັກຊຸດຄົ້ນໄມ້, ກົນ ຈັກລາກແກ່ ແລະ ຂົນສົ່ງໄມ້ | ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະ ກຳ ແລະ ການຄ້າ ແລະ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບ ປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019. | ໃບອະນຸຍາດແບບບໍ່ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປັກ ຮັກສາຊັບ ພະຍາກອນທຳ ມະຊາດ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມ ຂອ ມີແຜນປັບປຸງ ຜັນຂະຫຍາຍ ກົດໝາຍ ສະບັບປັບປຸງ 64/ສພຊ (ປະຈຸບັນຂັ້ນຕອນການຮ່າງເປັນຂໍ້ ຕົກລົງຢູ່) ຄາດວ່າປີ 2023 ຈະສຳເລັດ. |
| 36 | ການອອກໃບ ອະນຸຍາດນຳເຂົ້າ ຜະລິດຕະພັນສິ່ງພິມ | ກົມວັນນະຄະດີ ແລະ ພິມຈຳ ໜ່າຍ, ກະຊວງ ຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍ ຜະລິດຕະພັນສິ່ງພິມ ເລກທີ 518/ຖວທ, ລົງວັນທີ 13 ມິຖຸນາ 2012. | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມວັນນະຄະດີ ແລະ ພິມຈຳໜ່າຍ ພວມຢູ່ໃນຂັ້ນຕອນການປັບປຸງ ກົດໝາຍ ພິມຈຳໜ່າຍ ເລກທີ 05 /ສພຊ, ວັນ ທີ 9 ທັນວາ 2008 ເພື່ອໃຫ້ສອດຄ່ອງກັບ ສະພາບປະຈຸບັນ ຊຶ່ງຄາດວ່າຈະສຳເລັດໃນປີ 2024. ຫຼັງຈາກນັ້ນ, ຈຶ່ງຈະປັບປຸງຂໍ້ຕົກລົງ ເລກທີ 518. |
| 37 | ການອອກໃບ ອະນຸຍາດນຳເຂົ້າ ອາຫານ | ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ | ຂໍ້ຕົກລົງວ່າດ້ວຍການສົ່ງອອກ-ນຳ ເຂົ້າ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018 | SPS (ຈັດປະເພດໂດຍ ທີມງານ NTMs) | ເພື່ອສຸຂະພາບ ແລະ ຄວາມປອດ ໄພຂອງຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>**. ກົມ ອຢ ແມ່ນຢູ່ໃນ ຂັ້ນຕອນການປັບປຸງຂໍ້ຕົກລົງ 1166 ຊຶ່ງຄາດ ວ່າຈະສຳເລັດໃນປີ 2023.<br>ກົມ ອຢ ມີແຜນຈະປັບປຸງຂັ້ນຕອນການອອກ ອະນຸຍາດນຳເຂົ້າ ໂດຍນຳໃຊ້ລະບົບ LNSW ຊຶ່ງຄາດວ່າຈະເລີ່ມທົດລອງນຳໃຊ້ສຳລັບ ອາຫານນຳເຂົ້າ ໃນເດືອນ ມັງກອນ 2023. |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 38 | ການອອກໃບ ອະນຸຍາດນຳເຂົ້າ ຢາ | ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ | ຂໍ້ກຳນົດ ວ່າດ້ວຍ ການຂຶ້ນທະບຽນ ຢາ ເລກທີ 1441/ກຊສ, ລົງວັນທີ 13 ສິງຫາ 2003 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອສຸຂະພາບ ແລະ ຄວາມປອດ ໄພຂອງຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມ ອຢ ໄດ້ອອກຂໍ້ຕົກລົງ ການຈັດທະບຽນຢາພື້ນເມືອງ ເລກທີ 169/ກຊສ, ລົງວັນທີ 25 ມັງກອນ 2022. ເຖິງຢ່າງໃດກໍ່ຕາມ, ການປັບປຸງຂໍ້ກຳນົດ ເລກທີ 1441 ແມ່ນຍັງກຳລັງດຳເນີນການ. |
| 39 | ການອອກໃບ ອະນຸຍາດນຳເຂົ້າ ສານເສບຕິດ, ວັດຖຸ ອອກລິດຕໍ່ຈິດ-ປະສາດ ແລະ ສານ ເຄມີຕົ້ນ | ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຢາ ຫຼື ສານເສບຕິດ, ອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ ເລກທີ 456/ ກຊສ, ລົງວັນທີ 19 ເມສາ 2006 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອສຸຂະພາບ ແລະ ຄວາມປອດ ໄພຂອງຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມ ອຢ ແມ່ນຢູ່ໃນຂັ້ນຕອນການປັບປຸງຂໍ້ຕົກລົງ ເລກທີ 456/ ກຊສ. |
| 40 | ການອອກໃບ ອະນຸຍາດນຳເຂົ້າ ເຄື່ອງດື່ມທີ່ມີທາດ ເຫຼົ້າ | ກົມອານາໄມ ແລະ ສົ່ງເສີມສຸຂະ ພາບ , ກະຊວງ ສາທາລະນະສຸກ | ກົດໝາຍ ວ່າດ້ວຍການຄວບຄຸມ ເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບ ເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອສຸຂະພາບ ແລະ ຄວາມປອດ ໄພຂອງຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມອານາໄມ ແລະ ສົ່ງເສີມສຸຂະພາບ ໄດ້ສຳເລັດຮ່າງດຳລັດ ວ່າດ້ວຍການປັບໄໝເຄື່ອງດື່ມທີ່ມີທາດເຫຼົ້າ, ແລະ ຢູ່ໃນຂັ້ນຕອນການປະສານສົມທົບ ກັບ ກົມ ອຢ ໃນການຮ່າງລະບຽບການອອກອະນຸຍາດນຳເຂົ້າ ເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອຜັນຂະຫຍາຍກົດໝາຍ ເລກທີ 54/ສພຊ. |
| 41 | ການອອກໃບຢັ້ງຢືນ ຄຸນນະພາບນຳເຂົ້າ ວັດສະດຸກໍ່ສ້າງ | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບ ຂອງຜະລິດຕະພັນວັດສະດຸກໍ່ສ້າງ ຢູ່ ສປປ ລາວ ສະບັບເລກທີ 0307/ ກວຕ, ລົງວັນທີ 01 ມີນາ 2018 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຮັບປະກັນ ຄຸນນະພາບ ແລະ ມາດຕະຖານ ຕໍ່ຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມມາດຕະຖານ ແລະ ວັດແທກ ຢູ່ໃນຂັ້ນຕອນການປັບປຸງຂໍ້ຕົກລົງ 0307/ກວຕ. |
| 42 | ການອອກໃບຢັ້ງຢືນ ຄຸນນະພາບນຳເຂົ້າ ນໍ້າມັນເຊື້ອໄຟ | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະ ກຳ ແລະ ການຄ້າ | ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບນໍ້າ ມັນເຊື້ອໄຟ ເລກທີ 0541/ກວຕ, ລົງວັນທີ 08 ມິຖຸນາ 2016 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປ້ອງຜົນ ປະໂຫຍດຂອງ ຊາດ ແລະ ຄວາມປອດໄພ ຂອງຜູ້ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມມາດຕະຖານ ແລະ ວັດແທກ ຢູ່ໃນຂັ້ນຕອນການຮ່າງລະບຽບການ ສຳລັບການດຳເນີນການຄວບຄຸມນໍ້າມັນເຊື້ອ ໄຟ ຫຼັງການນຳເຂົ້າ. |
| 43 | ການອອກອະນຸມັດ ຮັບຮອງ ແຜນນຳເຂົ້າ ສິນຄ້າເຄື່ອງຂອງ ເພື່ອມາຮັບໃຊ້ ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ | ກົມຄຸ້ມຄອງໜີ້ສິນ ສາທາລະນະ, ກະຊວງການເງິນ | ຄຳແນະນຳ ວ່າດ້ວຍ ການຈັດຕັ້ງ ປະຕິບັດນະໂຍບາຍພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ແມ່ນກົມການ ເງິນຕ່າງປະ ເທດ ຮັບຜິດຊອບ-ແຜນ ງານໂຄງການທີ່ນຳໃຊ້ ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກ ຕ່າງປະເທດ ເລກທີ 2560/ກງ, ລົງວັນທີ 09 ສິງຫາ 2016 | ມາດຕະການທົ່ວໄປ (ຈັດປະເພດໂດຍ ທີມງານ NTMs) | ເພື່ອສົ່ງເສີມການ ລົງທຶນ ໂດຍໃຫ້ ນະໂຍບາຍທາງ ດ້ານພາສີ ແລະ ອາກອນ | **<u>ມີຄວາມຄືບໜ້າໜ້ອຍ</u>.** ການປະຕິຮູບນີ້ ໃຊ້ເວລາຂ້ອນຂ້າງດົນ ເນື່ອງຈາກໃນບໍ່ດົນມານີ້ ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ໄດ້ແຍກອອກເປັນ 2 ກົມ. ປະຈຸບັນ, ແມ່ນກົມຄຸ້ມຄອງໜີ້ສິນສາທາລະນະ ເປັນຜູ້ຮັບຜິດຊອບ ອະນຸມັດແຜນນຳເຂົ້າ ເພື່ອຮັບໃຊ້ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ. ກົມ ຂອ ຈະສືບ ປະສານສົມທົບກັບກົມຄຸ້ມຄອງໜີ້ສິນ ສາທາລະນະ ກ່ຽວກັບການປະຕິຮູບດັ່ງກ່າວ. |
| 44 | ການອອກໃບ ອະນຸຍາດນຳເຂົ້າ ຝຸ່ນ | ກົມປູກຝັງ, ກະຊວງ ກປ | ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຄຸ້ມຄອງຝຸ່ນ ໃນ ສປປ ລາວ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຮັບປະກັນ ຄວາມປອດໄພ ຕໍ່ຄົນ, ພືດ ແລະ ສັດ ແລະ ປົກປັກ ຮັກສາ ສິ່ງແວດລ້ອມ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມປູກຝັງ ຢູ່ໃນຂັ້ນ ຕອນການປັບປຸງຂໍ້ຕົກລົງ ເລກທີ 2169/ກປ ໂດຍຍົກລະດັບເປັນດຳລັດ. |

| ລ/ດ | ຊື່ມາດຕະການ | ຂະແໜງການ ຮັບຜິດຊອບ | ນິຕິກຳທີ່ກ່ຽວຂ້ອງ | ປະເພດມາດ ຕະການ | ຈຸດປະສົງ | ຄຳເຫັນ/ສະຖານະ |
|---|---|---|---|---|---|---|
| 45 | ການອອກໃບ ອະນຸຍາດນຳເຂົ້າ ຢາ ປາບສັດຕູພືດ ອັນຕະລາຍປານກາງ | ກົມປູກຝັງ, ກະຊວງ ກປ | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບ ສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອຮັບປະກັນ ຄວາມປອດໄພ ຕໍ່ຄົນ, ພືດ ແລະ ສັດ ແລະ ປົກປັກ ຮັກສາ ສິ່ງແວດລ້ອມ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມປູກຝັງ ຢູ່ໃນຂັ້ນ ຕອນການຮ່າງລະບຽບການ ເພື່ອຜັນຂະຫຍາຍ ເນື້ອໃນດຳລັດ ເລກທີ 258/ລບ. |
| 46 | ການອອກໃບອະນຸ ຍາດນຳເຂົ້າ ຢາປາບ ສັດຕູພືດອັນຕະລາຍ ໜ້ອຍ | | | | | |
| 47 | ການອອກໃບ ອະນຸຍາດນຳເຂົ້າ ຢາ ປາບສັດຕູພືດ ອັນຕະລາຍບໍ່ເປັນພິດ ກະທັນຫັນ | | | | | |
| 48 | ການອອກໃບ ອະນຸຍາດສົ່ງອອກ ຊັບພະຍາກອນທຳມະ ຊາດທີ່ເປັນຢາ | ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ | ດຳລັດ ວ່າດ້ວຍ ຊັບພະຍາກອນທຳມະຊາດ ທີ່ເປັນຢາ (ເຜສັດຊັບພະຍາກອນທຳມະຊາດ) ເລກທີ 155/ນຍ. | ໃບອະນຸຍາດແບບບໍ່ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອປົກປ້ອງ ຊັບພະຍາກອນ ທຳມະຊາດ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກະຊວງ ກປ ແລະ ກະຊວງສາທາລະນະສຸກ ແມ່ນຢູ່ໃນຂັ້ນຕອນ ການປຶກສາຫາລື ກ່ຽວກັບການຄຸ້ມຄອງການ ສົ່ງອອກເຄື່ອງປ່າຂອງດົງທີ່ຊໍ້າຊ້ອນ ເນື່ອງຈາກ ກົດໝາຍ ແລະ ລະບຽບການຂອງແຕ່ລະ ກະຊວງ ແມ່ນບໍ່ເປັນເອກະພາບກັນ, ໂດຍ ສະເພາະການຄຸ້ມຄອງເຄື່ອງປ່າຂອງດົງທີ່ຢູ່ໃນ ບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ. ໃນຂະນະດຽວກັນ, ກະຊວງສາທາລະນະສຸກ ກຳລັງຮ່າງກົດໝາຍ ວ່າດ້ວຍການຄຸ້ມຄອງຊັບ ພະຍາ ກອນທຳມະຊາດທີ່ເປັນຢາ ຊຶ່ງຈະປ່ຽນ ແທນດຳລັດ ເລກທີ 155/ນຍ. ຮ່າງກົດໝາຍ ຮັບການປຶກສາຫາລືຫຼາຍຄັ້ງ ແລະ ສະເໜີຕໍ່ ສະພາແຫ່ງຊາດ ເພື່ອພິຈາລະນາແລ້ວ. |
| 49 | ການອອກໃບ ອະນຸຍາດນຳເຂົ້າ ຜະລິດຕະພັນການ ແພດ | ກົມອາຫານ ແລະ ຢາ, ກະຊວງ ສາທາລະນະສຸກ | ກົດໝາຍ ວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ ເລກທີ 07/ ສພຊ, ລົງວັນທີ 21 ທັນວາ 2011. | TBT (ຈັດປະເພດໂດຍ ທີມງານ NTMs) | ເພື່ອສຸຂະພາບ ແລະ ຄວາມປອດ ໄພຂອງຜູ້ ຊົມໃຊ້ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມ ອຢ ຢູ່ໃນຂັ້ນ ຕອນການຮ່າງລະບຽບການເພື່ອຜັນຂະຫຍາຍ ເນື້ອໃນ ເລກທີ 07/ສພຊ. |
| 50 | ການອອກໃບອະນຸ ຍາດນຳເຂົ້າ ແຮ່ທາດ ແລະ ຜະລິດຕະພັນ ແຮ່ທາດ | ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ | ຂໍ້ຕົກລົງ ວ່າດ້ວຍ ລະບຽບການ ຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012.<br><br>ແຈ້ງການ ກ່ຽວກັບຂັ້ນຕອນການສະເ ໜີແຜນ ການຈຳໜ່າຍ ແລະ ການຈຳ ໜ່າຍຜະລິດຕະ ພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04 ມັງກອນ 2019 | ໃບອະນຸຍາດແບບ ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ເພື່ອເກັບກຳ ສະຖິຕິ | **<u>ມີຄວາມຄືບໜ້າໜ້ອຍ</u>.** ກົມຄຸ້ມຄອງບໍ່ແຮ່ ຢູ່ ໃນຂັ້ນຕອນການປັບປຸງດຳລັດ, ລະບຽບການ ແລະ ແຈ້ງການ ທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກ ຜະລິດຕະພັນແຮ່ທາດ. ກິດຈະກຳເຫຼົ່າ ນີ້ ໄດ້ຮັບການສະໜັບສະໜູນຈາກໂຄງການ CF ພາຍໃຕ້ໂຄງການ LCT. |
| 51 | ການອອກໃບ ອະນຸຍາດສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ ທາດ | | | ໃບອະນຸຍາດແບບ ບໍ່ອັດຕະໂນມັດ (ຈັດປະເພດໂດຍ ທີມງານ NTMs) | ການປົກປ້ອງ ຊັບພະຍາກອນ ທຳມະຊາດ | |

**ຕາຕະລາງ 7- ສະຖານະຂອງຂໍ້ຄິດລິເລີ່ມການປະຕິຮູບມາດຕະການ NTMs**